IDRC CRDI
International Development Research Centre
Centre de recherches pour le développement international

Canada Fund

# ບົດຄົ້ນຄວ້າ

## ກ່ຽວກັບ ຄວາມຮຸນແຮງຢູ່ໃນຄອບຄົວ ແລະ ບົດບາດຍິງ-ຊາຍ ຢູ່ຊົນນະບົດ ສ.ປ.ປ ລາວ

ກຸ່ມພັດທະນາບົດບາດຍິງຊາຍ (GDG)
ວຽງຈັນ, ສປປ ລາວ

ກໍລະກົດ 2004

**ບົດສະຫຼຸບຫຍໍ້**

ໃນກຸ່ມສົນທະນາຂອງແມ່ຍິງທີ່ຖືກຈັດຂຶ້ນສໍາລັບການສໍາຫຼວດຊຸມຊົນນະບົດແບບມີສ່ວນຮ່ວມ (PRA) ໃນບ້ານແຫ່ງໜຶ່ງຂອງແຂວງສາລະວັນ ໃນຊ່ວງປີ 2002 ນັ້ນ, ພວກແມ່ຍິງໄດ້ໃຫ້ຂໍ້ມູນວ່າພວກເຂົາເຈົ້າຖືກຜົວຕີ. ຂໍ້ມູນນີ້ໄດ້ຖືກນໍາມາສົນທະນາກັນ ຢູ່ໃນກອງປະຊຸມຂອງກຸ່ມພັດທະນາບົດບາດຍິງ-ຊາຍ (GDG), ພວກອົງການທັງຫຼາຍທີ່ເປັນສະມາຊິກຂອງກຸ່ມ ໃນເວລານັ້ນບໍ່ມີຄວາມແນ່ໃຈວ່າ ເລື່ອງແບບນັ້ນແມ່ນເລື່ອງຜິດປົກກະຕິຫຼືບໍ່. ແລະກຸ່ມເຫັນວ່າ ຢູ່ໃນປະເທດກໍ່ຍັງບໍ່ໄດ້ມີການຄົ້ນຄວ້າຫຼາຍກ່ຽວກັບ ເລື້ອງນີ້ມາກ່ອນ, ກຸ່ມດັ່ງກ່າວຈຶ່ງໄດ້ຕັດສິນໃຈວ່າຈໍາເປັນຕ້ອງດໍາເນີນການສຶກສາຄົ້ນຄວ້າກ່ຽວກັບເລື່ອງນີ້ ເພື່ອໃຫ້ມີຂໍ້ມູນໄວ້ເປັນພື້ນຖານ ສໍາລັບການແກ້ໄຂບັນຫາດັ່ງກ່າວໃນຂັ້ນຕໍ່ໄປ.

ກຸ່ມຈຶ່ງໄດ້ຕົກລົງເຮັດການສຶກສາຄົ້ນຄ້ວາກ່ຽວກັບເລື່ອງນີ້ດ້ວຍວິທີການດໍາເນີນໃຫ້ເປັນໂຄງການໜຶ່ງຂອງກຸ່ມ. ການສຶກສາຄົ້ນຄວ້າແມ່ນແນໃສ່ ເພື່ອຊອກຮູ້ການແຜ່ລະບາດ, ສາເຫດ ແລະ ຜົນກະທົບຂອງຄວາມຮຸນແຮງໃນຄອບຄົວ ຢູ່ ສປປ ລາວ. ຂໍ້ມູນທີ່ເກັບກໍາໄດ້ ແມ່ນເອົາມາຈາກການສໍາພາດຊາວບ້ານ 967 ຄົນ ເຊິ່ງໃນນັ້ນລວມມີແມ່ຍິງ 515 ຄົນ ແລະຊາຍ 452 ຄົນ, ເຊິ່ງເປັນພວກທີ່ມີຊີວິດແຕ່ງງານ ແລະ ດໍາລົງຊີວິດຢູ່ກັບຄອບຄົວ, ແລະ ຢູ່ໃນເກນອາຍຸ 15 ຫາ 50 ປີ.

ພວກຜູ້ໃຫ້ສໍາພາດທັງໝົດແມ່ນປະຊາຊົນທີ່ອາໃສຢູ່ໃນ 35 ບ້ານຕ່າງໆກັນຂອງ 5 ແຂວງ ຄື: ແຂວງບໍ່ແກ້ວ (6 ບ້ານ), ແຂວງຫຼວງພະບາງ (6 ບ້ານ) , ແຂວງສະຫວັນນະເຂດ (3ບ້ານ), ແຂວງສາລະວັນ (11 ບ້ານ), ນະຄອນຫຼວງວຽງຈັນ (9 ບ້ານ).

ການຄົ້ນຄວ້ານີ້ນໍາໃຊ້ ຄໍານິຍາມກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ ສະຫະປະຊາຊາດ ລະບຸໄວ້ ໂດຍສະພາໃຫຍ່ ເມື່ອວັນທີ 13 ທັນວາ 1993 ຄື:

*"ຄວາມຮຸນແຮງຕໍ່ແມ່ຍິງ ໝາຍເຖິງ ທຸກການກະທໍາທີ່ມີຄວາມຮຸນແຮງຕໍ່ແມ່ຍິງຊຶ່ງພາໃຫ້ເກີດ ຫຼື ຈະພາໃຫ້ເກີດຄວາມເສຍຫາຍ ຕໍ່ຮ່າງກາຍ, ທາງເພດ ຫຼື ທາງດ້ານຈິດໃຈ ຫຼື ທໍລະມານແມ່ຍິງ ລວມທັງ ການນາບຂູ່, ການຂູ່ເຂັນ, ຫຼື ການກີດກັ້ນ ອິດສະລະພາບຢ່າງ ບໍ່ມີເຫດຜົນບໍ່ວ່າຈະເກີດຂື້ນຢູ່ໃນທີ່ ສາທາລະນະ ຫຼື ໃນຊີວິດສ່ວນຕົວກໍ່ຕາມ. ພວກເຮົາ ຕ້ອງເຂົ້າໃຈວ່າ ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ ລວມເຖິງ ບັນຫາດັ່ງຕໍ່ໄປນີ້:*

*ຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ ທີ່ເກີດຂຶ້ນໃນຄອບຄົວ, ລວມທັງ ການທຸບຕີ, ການຂົ່ມເຫງທາງເພດຕໍ່ເດັກຍິງຢູ່ໃນຄອບຄົວ, ຄວາມຮຸນແຮງທີ່ພົວພັນເຖິງສິນສອດ, ການຂົ່ມຂືນຂອງສາມີ, ການທໍາໃຫ້ແມ່ຍິງພິການທາງເພດ ແລະ ການກະທໍາທີ່ພາໃຫ້ ແມ່ຍິງ ເສຍຫາຍທາງຮີດຄອງປະເພນີ, ຄວາມຮຸນແຮງນອກຄູ່ສົມລົດ ແລະ ຄວາມຮຸນແຮງ ທີ່ພົວພັນເຖິງ ການສະແຫວງຫາຜົນປະໂຫຍດສ່ວນຕົວ.*

*ຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ ທີ່ເກີດຂຶ້ນພາຍໃນຊຸມຊົນ ຊຶ່ງລວມ ມີ ການຂົ່ມຂືນ, ການຂົ່ມເຫງທາງເພດ, ການລ່ວງເກີນທາງເພດ ແລະ ການນາບຂູ່ ໃນສະຖານທີ່ ທຳງານ, ໃນສະຖາບັນການສຶກສາ ແລະ ຢູ່ບ່ອນອື່ນໆ, ການຄ້າແມ່ຍິງ ແລະ ການບັງຄັບ ໃຫ້ຄ້າປະເວນີ.*

*ຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ ທີ່ລັດ ເປັນຜູ້ກະທຳຄວາມຜິດເອງ ຫຼື ອະນຸຍາດ ໃຫ້ກະທຳ, ຈະຢູ່ບ່ອນໃດກໍ່ຕາມທີ່ເກີດຂຶ້ນ".*

ແຕ່ວ່າການຄົ້ນຄວ້າຄັ້ງນີ້ ເນັ້ນໜັກໃສ່ຄວາມຮຸນແຮງລະຫວ່າງຜົວ ແລະ ເມຍເປັນຕົ້ນຕໍ. ບໍ່ໄດ້ຂະຫຍາຍ ເນື້ອໃນ ການຄົ້ນຄວ້າໄປເຖິງເດັກຍິງໃນຄອບຄົວ, ບໍ່ຄົ້ນຄວ້າຄວາມຮຸນແຮງທີ່ພົວພັນເຖິງສິນສອດ ແລະ ຄວາມຮຸນແຮງ ນອກຄູ່ສົມລົດ.

ໃນທົ່ວທະວີບອາຊີ, ໂດຍສະເພາະຢູ່ ສປປ ລາວ ມີຫຼາຍຊົນຊາດຊົນເຜົ່າຢູ່ຮ່ວມກັນ, ພວກເຂົາເຈົ້າມີວັດທະນະທຳ ແລະ ວິຖີຊີວິດທີ່ແຕກຕ່າງກັນຫຼາຍ. ສ່ວນໃຫຍ່ຕາມຮີດຕາມຄອງແລ້ວ, ໂດຍທົ່ວໄປ ຜູ້ຊາຍ ແລະ ແມ່ຍິງ ມີບົດ ບາດຕ່າງກັນ ໃນເລື່ອງການແບກຫາບວຽກງານຂອງຄອບຄົວ, ມີການຈຳແນກປະເພດຂອງວຽກ, ມີຄວາມຮັບຜິດ ຊອບລວມຕໍ່ຄອບຄົວຕ່າງກັນ ຢູ່ ສປປ ລາວ, ວັດທະນະທຳ ແລະ ຮີດຄອງປະເພນີ ແມ່ນເປັນວິຖີຊີວິດຂອງຄົນ ລາວ. ຮີດຄອງປະເພນີ ແລະ ພູມປັນຍາຂອງທ້ອງຖິ່ນມີບົດບາດສຳຄັນທີ່ສຸດ ຢູ່ໃນຊີວິດປະຈຳວັນຂອງຄົນສ່ວນ ໃຫຍ່ຢູ່ໃນຊຸມຊົນ. ຢູ່ ສປປ ລາວ, ມີຄຳສຸພາສິດຈາກຮີດຄອງປະເພນີຫຼາຍເລື່ອງ ທີ່ພັນລະນາເຖິງບົດບາດຂອງຜູ້ ຊາຍ ແລະ ແມ່ຍິງ ຢູ່ໃນຄອບຄົວເຊັ່ນ; "ຜູ້ຊາຍຄືແຫ, ແມ່ຍິງຄືຂ້ອງ"; "ຜົວເປັນຊ້າງເທົ້າໜ້າ, ເມຍເປັນຊ້າງເທົ້າ ຫຼັງ"; ແລະ "ຜົວຄືນາຍ ເມຍຄືແຫຼ້ງ". ຄຳເວົ້າເຫຼົ່ານີ້ເສີມສ້າງຄວາມບໍ່ສະເໝີພາບລະຫວ່າງຍິງຊາຍ ແລະ ສ້າງໃຫ້ມີ ຄວາມແຕກຕ່າງ ເກີດຂຶ້ນ ລະຫວ່າງເພດ, ພາໃຫ້ ຜູ້ຊາຍ ມີອຳນາດເໜືອແມ່ຍິງ.

ຜົນຂອງການສຳຫຼວດກ່ຽວກັບຄວາມຮຸນແຮງຢູ່ໃນຄອບຄົວ ຫຼື ຄວາມຮຸນແຮງຕໍ່ແມ່ຍິງຄັ້ງນີ້ ກໍ່ຄ້າຍຄືກັນກັບການ ຄົ້ນຄວ້າແບບດຽວກັນນີ້ ຢູ່ທົ່ວທະວີບອາຊີ, ເພາະມັນຊີ້ໃຫ້ເຫັນວ່າມັນມີຄວາມຮຸນແຮງຫຼາຍປະເພດທີ່ແຕກຕ່າງ ກັນທັງຕໍ່ຮ່າງກາຍ ແລະ ທັງຕໍ່ຈິດໃຈ. ໂດຍທົ່ວໄປແລ້ວ, ແມ່ຍິງສ່ວນຫຼາຍເຂົ້າໃຈແຕ່ພຽງວ່າຄວາມຮຸນແຮງແມ່ນ ການທຸບຕີຮ່າງກາຍເທົ່ານັ້ນ. ແຕ່ເມື່ອເວລາຖືກຊັກຖາມວ່າພວກເຂົາເຄີຍປະເຊີນກັບຄວາມຮຸນແຮງປະເພດໃດແດ່ ຕາມຄຳນິຍາມ ທີ່ໄດ້ໃຫ້ໄວ້ ຢູ່ໃນບົດຖະແຫຼງການຂອງສະຫະປະຊາຊາດກ່ຽວກັບການລົບລ້າງຄວາມຮຸນແຮງຕໍ່ ແມ່ຍິງ ເມື່ອປີ 1993 ນັ້ນ, ເຫັນວ່າ ຜູ້ທີ່ຖືກເຄາະຮ້າຍແມ່ນມີຈຳນວນຫຼວງຫຼາຍ. ຜົນການຄົ້ນຄວ້ານີ້ ຊີ້ໃຫ້ເຫັນວ່າ 45% ຂອງຈຳນວນແມ່ຍິງທີ່ຖືກສຳພາດ ແມ່ນພວກທີ່ຖືກຜົວຂອງເຂົາເຈົ້າໄດ້ໃຊ້ຄວາມຮຸນແຮງໃນຮູບແບບໃດໜຶ່ງ ຕໍ່ເຂົາເຈົ້າຢູ່ສະເໝີ. ອັນນີ້ສະແດງໃຫ້ເຫັນວ່າ ຢູ່ ສປປ ລາວ ເຫດການຄວາມຮຸນແຮງໃນຄອບຄົວ, ໂດຍສະ ເພາະຜົວໃຊ້ຄວາມຮຸນແຮງຕໍ່ເມຍ, ແມ່ນມີຈຳນວນຫຼວງຫຼາຍ.

ໃນຈຳນວນແມ່ຍິງ 515 ຄົນທີ່ໃຫ້ສຳພາດ,

35% ໄດ້ບອກວ່າ ພວກເຂົາເຄີຍປະເຊີນກັບຄວາມຮຸນແຮງທາງຈິດໃຈ,

17% ທີ່ເຄີຍປະເຊີນກັບຄວາມຮຸນແຮງ ຕໍ່ຮ່າງກາຍ.

1,6 % ພວກເຂົາເຄີຍປະເຊີນກັບຄວາມຮຸນແຮງທາງເພດຈາກຜົວ.

1.9% ຖືກຂົ່ມເຫງໃນເວລາຖືພາ ຄື ຖືກທຸບຕີ, ຖືກທາລຸນທາງດ້ານຈິດໃຈ

ມີຫຼາຍສາຍເຫດທີ່ແຕກຕ່າງກັນທີ່ພາໃຫ້ເກີດມີຄວາມຮຸນແຮງ, ແລະ ພາໃຫ້ຄວາມຮຸນແຮງເພີ່ມທະວີຂື້ນ. ຕາມການພັນລະນາຂອງ ແມ່ຍິງທີ່ຖືກເຄາະຮ້າຍ, ສາເຫດ ທີ່ພາໃຫ້ເກີດມີການກະທຳຄວາມຮຸນແຮງຫຼາຍກວ່າໝູ່ ແມ່ນຍ້ອນຜູ້ໃຊ້ຄວາມຮຸນແຮງເມົາເຫຼົ້າ (31%), ຍ້ອນເລື່ອງເງິນໃນຄອບຄົວ (13%) ແລະ ຍ້ອນເລື່ອງໜື້ງກັນເຮັດວຽກເຮັດງານ (13%).

ຄວາມບໍ່ສະເໝີພາບລະຫວ່າງຍິງຊາຍທາງດ້ານເສດຖະກິດຄອບຄົວກໍ່ແມ່ນປັດໃຈໜຶ່ງທີ່ມີອິດທິພົນສູງພາໃຫ້ເກີດມີຄວາມຮຸນແຮງໃນຄອບຄົວໄດ້. ການວິເຄາະຜົນຂອງການສຳຫຼວດ ເພີຍໃຫ້ເຫັນວ່າ ຄວາມຮຸນແຮງ ມັກຈະເກີດຂື້ນ ໃນກໍລະນີທີ່ ແມ່ຍິງມີລາຍຮັບຕ່ຳກວ່າຜູ້ຊາຍ. ມັນບໍ່ພຽງແຕ່ ແມ່ນຄວາມແຕກຕ່າງດ້ານຄວາມອາດສາມາດໃນການສ້າງລາຍຮັບທີ່ພາໃຫ້ເກີດມີ ຄວາມຮຸນແຮງເທົ່ານັ້ນ, ການສຶກສາ ກໍ່ສາມາດເປັນປັດໃຈໜຶ່ງທີ່ພາໃຫ້ເກີດມີຄວາມຮຸນແຮງ ໃນຄອບຄົວໄດ້ເຊັ່ນດຽວກັນ.

ຜົນກະທົບ ຂອງຄວາມຮຸນແຮງຢູ່ໃຄອບຄົວ ທີ່ເຫັນຫຼາຍກວ່າໝູ່ ແລະ ທີ່ສາມາດເຫັນໄດ້ຊັດເຈນ ແມ່ນການທຳຮ້າຍຮ່າງກາຍ. ຢູ່ ສປປ ລາວ, 25% ຂອງ ແມ່ຍິງ ທີ່ຖືກຂົ່ມເຫັງ ແມ່ນຖືກທຳຮ້າຍຕໍ່ຮ່າງກາຍ. ເກືອບໝົດທຸກກໍລະນີ ທີ່ໄດ້ບັນທຶກໄວ້ໃນຊ່ວງເວລາດຳເນີນການຄົ້ນຄວ້ານີ້, ຜູ້ທີ່ຖືກເຄາະຮ້າຍ ມີ ຮອຍຊໍ້າ ແລະ ຮອຍຂູດ.

ໃນຈຳນວນ 57 ຄົນທີ່ຖືກເຄາະຮ້າຍ, ມີ 14 ຄົນຖືກທຳຮ້າຍຈົນເຖິງຂັ້ນຕ້ອງໄດ້ປິ່ນປົວ, ມີ 6 ຄົນຖືກທຸບຕີຈົນໝົດສະຕິ. ນອກຈາກໄດ້ຖືກທຳຮ້າຍທາງດ້ານຮ່າງກາຍແລ້ວ, ແມ່ຍິງມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ສຸຂະພາບຈິດຂອງເຂົາເຈົ້າ; ພວກເຂົາເຈົ້າກາຍເປັນຄົນສັ່ນໆເຊັ່ນໆ, ກັງວົນໃຈ, ຢ້ານຜົວ, ລັງເລໃຈໃນການຕັດສິນບັນຫາ, ບໍ່ມີຄວາມໄວ້ວາງໃຈຕໍ່ຜົວຂອງຕົນອີກຕໍ່ໄປ ແລະ ຕີລາຄາຕົວເອງຕ່ຳ. ແມ່ຍິງ ຫລາຍຄັ້ງຄິດຈະຂ້າຕົວຕາຍແຕ່ວ່າບໍ່ເຮັດ ເພາະຍັງຮັກ ແລະ ເປັນຫວ່ງລູກ.

ຄອບຄົວ ແມ່ນຫົວໃຈຂອງຊີວິດມະນຸດ, ໂດຍສະເພາະຢູ່ໃນ ສປປ ລາວ. ຄອບຄົວ ແມ່ນສະຖານທີ່ ທີ່ມະນຸດສາມາດແລກປ່ຽນຄວາມຮັກໃຫ້ແກ່ກັນ ແລະ ກັນ, ໃຫ້ຄວາມດູແລເບິ່ງແຍງເຊິ່ງກັນ ແລະ ກັນ. ແຕ່ຕວາມເປັນຈິງຊໍ້າພັດພາໃຫ້ແມ່ຍິງຕົກຢູ່ໃນສະພາບຫຍຸ້ງຍາກ ເມື່ອເວລາເຂົາເຈົ້າປະເຊີນກັບຄວາມຮຸນແຮງ ຢູ່ໃນຄອບຄົວທີ່ຕົນຖືວ່າເປັນບ່ອນທີ່ຈະໄດ້ຮັບ ການເບິ່ງແຍງດູແລ. ບັນຫາດັ່ງກ່າວນີ້ເປັນສິ່ງທ້າທາຍທີ່ພົ້ນເດັ່ນ ຢູ່ໃນ ສປປ ລາວ ເພາະຄອບຄົວບໍ່ແມ່ນບ່ອນທີ່ສາມາດແກ້ໄຂໄດ້ທຸກໆ ບັນຫາຂອງແມ່ຍິງ. ຕາມຮີດຄອງປະເພນີລາວຜູ້ອາວຸໂສຢູ່ໃນຄອບຄົວແມ່ນຜູ້ຮັບຜິດຊອບໃນການແກ້ໄຂບັນຫາຕ່າງໆ ຂອງຄອບຄົວ; ດັ່ງນັ້ນ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ

ຄອບຄົວກໍ່ເລີຍຖືກຖືວ່າເປັນເລື່ອງທຳມະດາ, ແລະແມ່ຍິງຈຳນວນຫຼວງຫຼາຍ ກໍ່ເລີຍຢ້ານຖືກວິພາກວິຈານ ວ່າເປັນເມຍບໍ່ດີ ຫຼື ສະມາຊິກຄອບຄົວທີ່ຊົ່ວຊ້າ.

ວັດທະນະທຳຂອງລາວ ມີ ບາງຄຳສຸພາສິດກ່າວວ່າ: *"ແມ່ຍິງທີ່ບໍ່ມີຜົວນີ້ ຄືແຫວນທີ່ວເປົ່າ ພອຍບໍ່ມີຢູ່ຄ້າງເຂົາຊິເອີ້ນວ່າກົ່ວຊືນ"*. ອັນນີ້ສະແດງໃຫ້ເຫັນເຖິງການບັງຄັບໃຫ້ແມ່ຍິງຕ້ອງແຕ່ງງານ ແລະ ສືບຕໍ່ ຢູ່ກັບຜົວຕະຫຼອດໄປ ບໍ່ວ່າສະພາບການຈະເປັນໄປຄືແນວໃດກໍ່ຕາມ. ອັນນີ້ ຊ່ວຍໃຫ້ອະທິບາຍເຫດຜົນວ່າເປັນຫຍັງແມ່ຍິງຈິ່ງສືບຕໍ່ຢູ່ກັບຜົວທີ່ໃຊ້ຄວາມຮຸນແຮງ. ຫຼາຍກວ່າເຄິ່ງໜຶ່ງຂອງຜູ້ທີ່ຖືກເຄາະຮ້າຍຈາກການກະທຳຄວາມຮຸນແຮງໃຫ້ການວ່າພວກເຂົາໜີຈາກເຮືອນໄປ ຍ້ອນປະເຊີນກັບຄວາມຮຸນແຮງ, ສ່ວນໃຫຍ່ແມ່ນຍ້ອນວ່າ ພວກເຂົາບໍ່ສາມາດຈະອົດທົນຢູ່ຕໍ່ໄປໄດ້ອີກ, ແຕ່ວ່າ ແມ່ຍິງເຫຼົ່ານີ້ເກືອບທັງໝົດ ພັດກັບຄືນມາຫາຜົວຂອງຕົນອີກ. ຍິ່ງໄປກວ່ານັ້ນ ໃນກໍລະນີທີ່ແມ່ຍິງປະເຊີນກັບຄວາມຮຸນແຮງໃນຄອບຄົວ, ຊໍ້າພັດໄດ້ຮັບຄຳແນະນຳ ຈາກຄົນໃນຄອບຄົວ ຫຼື ຈາກຄະນະບ້ານວ່າໃຫ້ສືບຕໍ່ ຢູ່ກັບຜົວຕໍ່ໄປ, ໃຫ້ໄປປຶກສາຫາລືກັນກ່ຽວກັບ ບົດບາດ ແລະ ຄວາມຮັບຜິດຊອບ ແລະ ພະຍາຍາມ ປັບປຸງໃຫ້ດີຂຶ້ນ, ໂດຍສະເພາະແມ່ນຈະແນະນຳໃຫ້ແມ່ຍິງປັບປຸງຕົນເອງຫຼາຍກວ່າການແນະນຳຜູ້ຊາຍ.

ບົດລາຍງານສະບັບນີ້
ສະເໜີຜົນການວິເຄາະຂໍ້ມູນລະອຽດຫຼາຍຢ່າງທີ່ອາດສາມາດໃຊ້ເປັນພື້ນຖານສຳລັບການກຳນົດ ວິທີການແກ້ໄຂເພື່ອປ້ອງກັນ ແລະ ຫຼຸດຜ່ອນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ. ພ້ອມດຽວກັນນີ້ ພາກຂອງບົດລາຍງານ ທີ່ສະເໜີ "ຂໍ້ສະຫຼຸບ ແລະ ຄຳແນະນຳຕ່າງໆ" ກໍ່ໄດ້ແນະນຳຄວາມຮັບຜິດຊອບຂອງແຕ່ລະຂັ້ນ, ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ, ໃນການແກ້ໄຂບັນ ຫາເລື່ອງຄວາມຮູນແຮງໃນຄອບຄົວຢູ່ ສປປ ລາວ.
ສຳລັບທ່ານຜູ້ສົນໃຈຄວາມກະຈ່າງແຈ້ງເພີ່ມເຕີມ, ຫຼືໃຫ້ຄຳແນະນຳຕ່າງໆ ກ່ຽວກັບ ການຄົ້ນຄວ້າຄັ້ງນີ້, ກະລຸນນາຕິດຕໍ່ຫ້ອງການກຸ່ມພັດທະນາບົດບາດຍິງ-ຊາຍ (GDG).

**ຄຳຂອບໃຈ**

ກຸ່ມພັດທະນາບົດບາດຍິງ-ຊາຍ (GDG) ຂໍສະແດງຄວາມຂອບອົກຂອບໃຈຢ່າງລົ້ນເຫຼືອ ມາຍັງທ່ານ Stephen McGurk, ຜູ້ອຳນວຍການສຳນັກງານປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີຕາເວັນອອກ ຂອງສູນຄົ້ນຄວ້າເພື່ອການພັດທະນາສາກົນ (IDRC), ປະເທດການາດາ ແລະ ມາຍັງກອງທຶນການາດາ (Canada Fund) ທີ່ໄດ້ໃຫ້ທຶນຮອນແກ່ພວກເຮົາ. ຫາກປາດສະຈາກການໃຫ້ທຶນ, ການສະໜັບສະໜູນ ແລະ ການຜູກພັນຂອງ ສູນຄົ້ນຄວ້າເພື່ອການພັດທະນາສາກົນ ແລະກອງທຶນການາດາ,ກຸ່ມພັດທະນາບົດບາດຍິງ-ຊາຍ ອາດຈະບໍ່ສາມາດຈັດຕັ້ງປະຕິບັດໂຄງການນີ້ໃຫ້ຕະຫຼອດຮອດຝັ່ງໄດ້.

ນອກຈາກນີ້, ພວກເຮົາ ກໍ່ຂໍສະແດງຄວາມຂອບອົກຂອບໃຈມາຍັງ ສະຫະພັນແມ່ຍິງລາວ ທີ່ໄດ້ສະໜັບສະໜູນການຄົ້ນຄວ້າຂອງພວກເຮົາ, ໂດຍສະເພາະແມ່ນ ຊ່ວຍຮັບຮອງເອົາໂຄງການນີ້ ແລະ ຊ່ວຍພວກເຮົາໃນການກະກຽມ ການຄົ້ນຄວ້າ ຢູ່ໃນບັນດາແຂວງ ແລະ ບ້ານ ທີ່ ພວກເຮົາ ລົງໄປເກັບກຳຂໍ້ມູນ.

ຂໍສະແດງຄວາມຂອບອົກຂອບໃຈ ເຊັ່ນດຽວກັນມາຍັງ ໜ່ວຍງານອາສາສະໝັກການາດາ ປະຈຳ ສປປ ລາວ (CUSO), ອົງການມິດຕະພາບແມັນໂນນາຍ ປະຈຳ ສປປ ລາວ (MCC), ອົງການສຸພານິມິດ ປະຈຳ ສປປ ລາວ (WVL), ໂຄງການກະສິກຳຍືນຍົງ ອົງການວີໂກ(VECO) ແລະ ສະຫະພັນແມ່ຍິງ ແຂວງສະຫວັນນະເຂດ ທີ່ໄດ້ເຊື້ອເຊີນພວກເຮົາໄປປະຕິບັດງານ ແລະ ເກັບກຳຂໍ້ມູນຢູ່ບ້ານເປົ້າໝາຍຂອງພວກເພິ່ນ. ພວກເພິ່ນໄດ້ໃຫ້ໂອກາດແກ່ພວກເຮົາໄດ້ພົບປະກັບກຸ່ມເປົ້າໝາຍທັງ ແມ່ຍິງ ແລະ ຜູ້ຊາຍ ຢູ່ຊົນນະບົດ, ເພື່ອປຶກສາຫາລືກ່ຽວກັບຄວາມຮຸນແຮງຢູ່ໃນຊຸມຊົນຂອງເຂົາເຈົ້າ, ແລະ ໂຊກດີ ທີ່ເພິ່ນຈັດເວລາ ໃຫ້ພວກເຮົາໄປປະຕິບັດງານໃນລະຫວ່າງລະດູຝົນ.

ບຸກຄົນ ແລະ ອົງການຈັດຕັ້ງ ຕໍ່ໄປນີ້ໄດ້ສະໝັກໃຈ, ສະຫຼະເວລາ, ໃຫ້ການສະໜັບສະໜູນ ແລະ ຄວາມຮູ້ແກ່ພວກເຮົາ. ອົງການຈັດຕັ້ງສະມາຊິກຂອງ ກຸ່ມພັດທະນາບົດບາດຍິງ-ຊາຍທັງໝົດ ທີ່ໄດ້ສະໜັບສະໜູນການປະຕິບັດງານຕັ້ງແຕ່ເລີ່ມຕົ້ນມາ, ທີມງານຄົ້ນຄວ້າ ຂອງພວກເຮົາທີ່ໄດ້ໃຫ້ຄຳປຶກສາ, ຄຳແນະນຳ ແລະລົງເກັບກຳຂໍ້ມູນຢູ່ພາກສະໜາມ ມີ; ທ່ານນາງ ກຸຫຼາບ ຜຸຍບຸນນີວົງ; ທ່ານນາງ ບຸນຈັນ ຄຳມຸງຄຸນ; ທ່ານນາງ ກົງໃຈ ວິຊາເທບ; ທ່ານນາງ ວິລະດາ ສິດທິສັກ; ທ່ານນາງ ວິມາລາ ເດດວົງສາ; ທ່ານນາງ ມະນີວັນ ແສນຍາວົງ; ທ່ານນາງ ສຸກພະພອນ ພານິດ; ທ່ານນາງ ພູມວິໄລ ສິຣິພັນເດດ; ທ່ານນາງ ອິນນະກອນ ວໍຣະຈັກ; ທ່ານ ສີພະເສີດ ຫຼວງໄຊ; ທ່ານ ຄຳປະເສີດ ແສນຍາວົງ; ທ່ານນາງ Jocelyn Yu; ແລະ ທ່ານນາງ Kelley Powell ຊຶ່ງໄດ້ເປັນຜູ້ປະສານງານກັບອົງການທີ່ໃຫ້ທຶນຕ່າງໆ ແລະ ໃຫ້ທິດຊີ້ນຳໂຄງການນີ້.

ພວກເຮົາ ຂໍຂອບອົກຂອບໃຈ ເຊັ່ນດຽວກັນ ມາຍັງ ທ່ານນາງ Anne Buchan ແລະ ທ່ານນາງ ແກ້ວອຳພອນ ສຸວັນນະພູມ ທີ່ໄດ້ໃຫ້ການຊ່ວຍເຫຼືອໃນການວິເຄາະຂໍ້ມູນ; ແລະ ທ່ານນາງ Zuki Mihyo, ທີ່ປຶກສາກ່ຽວກັບບົດບາດຍິງ-ຊາຍ ອົງການການພັດທະນາ ຂອງປະເທດເນີເທີແລນດ໌ (SVN) ທີ່ໄດ້ຊ່ວຍຮຽບຮຽງ ແລະ ປະກອບສ່ວນ ໃຫ້ແກ່ ບົດລາຍງານນີ້.

ອັນໜຶ່ງອີກທີ່ພວກເຮົາລືມບໍ່ໄດ້ແມ່ນການຊ່ວຍເຫຼືອ ຂອງ Drs. Churnrurtai Kanchanachitra ແລະ Wassana Imem ຈາກ ສະຖາບັນຄົ້ນຄວ້າປະຊາກອນແລະສັງຄົມ ຂອງ ມະຫາວິທະຍາໄລມະຫິດົນ ປະເທດໄທ ທີ່ໄດ້ໃຫ້ ການຝຶກອົບຮົມກ່ຽວກັບການຄົ້ນຄວ້າ, ແລະ ການຊ່ວຍເຫຼືອຂອງ Dr. Bupa Wattana ຈາກຄະນະ ສຶກສາສາດ, ມະຫາວິທະຍາໄລຊຽງໃໝ່ ທີ່ໄດ້ມາດຳເນີນກອງປະຊຸມປຶກສາຫາລື ກ່ຽວກັບການວິເຄາະຂໍ້ມູນ ແລະ ການຂຽນບົດລາຍງານ ທີ່ ນະຄອນຫຼວງວຽງຈັນ.

ກຸ່ມພັດທະນາບົດບາດຍິງ-ຊາຍ ໄດ້ເຫັນຄຸນຄ່າຂອງເວລາ ແລະ ການຜູກພັນ ຂອງທີມງານ GDG. ທີມງານນີ້ປະກອບມີ: ທ່ານນາງ ບຸດສະດີ ຄຸນນຸວົງ ( ຜູ້ປະສານງານGDG), ທ່ານນາງ ສີສະຫວັນ ຄຳມຸງຄຸນ (ຜູ້ຊ່ວຍປະສານງານ) ແລະ ທ່ານນາງ ຄຳຫຼ້າ ພັນດານຸວົງ (ຜູ້ຊ່ວຍຄົ້ນຄວ້າ).

ແລະທ້າຍສຸດ, ແຕ່ກໍ່ມີຄວາມສຳຄັນເໝືອນກັນ, ພວກເຮົາຂໍຂອບອົກຂອບໃຈມາຍັງໝົດທຸກໆ ທ່ານ ທີ່ໄດ້ເສຍສະລະເວລາ ເຂົ້າຮ່ວມ ໃນວຽກງານສຳຫຼວດ ຂອງພວກເຮົາ, ເຂົ້າຮ່ວມສົນທະນາແລກປ່ຽນ ບົດຮຽນ ແລະ ປະສົບການຂອງພວກເພິ່ນ ກັບພວກເຮົາ ກ່ຽວກັບບັນຫາຄວາມຮຸນແຮງຢູ່ໃນຄອບຄົວ. ກຸ່ມພັດທະນາບົດບາດຍິງ-ຊາຍ ຫວັງເປັນຢ່າງຍິ່ງວ່າ ຜົນຂອງການຄົ້ນຄວ້າ ຂອງພວກເຮົາຈະສາມາດເຮັດໃຫ້ຜູ້ອື່ນໆ ໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບຄວາມຮີບຮ້ອນ ໃນການແກ້ໄຂບັນຫາຄວາມຮຸນແຮງໃນຄອບຄົວ. ພວກເຮົາຂໍສະແດງຄວາມນັບຖື ແລະ ເປັນກຽດຢ່າງຍິ່ງ ທີ່ພວກທ່ານມີຄວາມກ້າຫານ ມາເວົ້າລົມ ກ່ຽວກັບ ປະສົບການອັນເຈັບແສບນີ້.

## ຄຳຫຍໍ້

| | |
|---|---|
| ANOVA | ການວິເຄາະການປ່ຽນແປງ |
| APWLD | ກອງປະຊຸມພາກພື້ນອາຊີປາຊີຟິກ ກ່ຽວກັບ ແມ່ຍິງ ແລະ ການພັດທະນາກົດໝາຍ |
| CEDAW | ສົນທິສັນຍາ ວ່າດ້ວຍ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ |
| CPC | ຄະນະກຳມະການແຜນການແລະການຮ່ວມມື |
| GDG | ກຸ່ມພັດທະນາບົດບາດຍິງ-ຊາຍ |
| GRID | ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອ ການພັດທະນາ |
| IDRC | ສູນຄົ້ນຄວ້າ ເພື່ອການພັດທະນາສາກົນປະເທດການາດາ |
| INGO | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ໃນລະດັບສາກົນ |
| LWU | ສູນກາງສະຫະພັນແມ່ຍິງລາວ |
| NCAW | ຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວ |
| NGO | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| NSC | ສູນສະຖິຕິແຫ່ງຊາດ |
| UN | ສະຫະປະຊາຊາດ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNIFEM | ກອງທຶນຂອງສະຫະປະຊາຊາດ ເພື່ອ ການພັດທະນາແມ່ຍິງ |
| VAW | ຄວາມຮຸນແຮງຕໍ່ແມ່ຍິງ |
| WCO | ສຳນັກງານທີ່ປຶກສາແມ່ຍິງ |
| SPSS | ຄອມພິວເຕີສະຖິຕິສຳລັບວິທະຍາສາດສັງຄົມ |

# ສາລະບານ


**ບົດສະຫຼຸບຫຍໍ້** i

**ຄຳຂອບໃຈ** V

**ຄຳສັບຫຍໍ້** Vii

**ສາລະບານ** Viii

**ລາຍການເສັ້ນສະແດງ" ກຣາຟ"** X

**ລາຍການຕາຕະລາງຂໍ້ມູນ** Xi

**1. ພາກສະເໜີ 13**

1.1 ກຸ່ມພັດທະນາບົດບາດຍິງ-ຊາຍແມ່ນຫຍັງ? 13

1.2 ໂຄງການຕ້ານຄວາມຮຸນແຮງຕໍ່ແມ່ຍິງ 13

**2. ຄວາມເປັນມາຂອງການສຶກສາຄົ້ນຄວ້າ 15**

2.1 ນິຍາມ ຂອງ ຄຳວ່າ ຄວາມຮຸນແຮງຕໍ່ແມ່ຍິງ 15

2.2 ຄວາມໝາຍ ຂອງ ຄວາມຮຸນແຮງໃນຄອບຄົວ 16

2.3 ສົນທິສັນຍາ ວ່າດ້ວຍ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ 16

2.4 ສະພາບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນພາກພື້ນ 18

2.5 ສະພາບ ຄວາມຮຸນແຮງຕໍ່ແມ່ຍິງ ຢູ່ ສປປ ລາວ ໃນປະຈຸບັນ 20

2.6 ຂອບເຂດວຽກ ທາງດ້ານນິຕິກຳແລະການຈັດຕັ້ງ ເພື່ອ ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ຢູ່ ສປປ ລາວ 21

**3. ວິທີການຄົ້ນຄວ້າ 26**

3.1 ການກະກຽມ ແລະ ການຝຶກອົບຮົມໃຫ້ແກ່ທີມງານ 26

3.2 ການສຳຫຼວດ ແລະ ການເກັບກຳຂໍ້ມູນ 27

3.3 ການປ້ອນ ແລະ ການວິເຄາະ ຂໍ້ມູນ 28

**4. ສະຖານທີ່ລົງສຳຫຼວດ 29**

4.1 ສະພາບຂອງປະເທດ 29

4.2 ແຂວງບໍ່ແກ້ວ 31

4.3 ແຂວງຫຼວງພະບາງ 33

4.4 ແຂວງວຽງຈັນ – ເມືອງສັງທອງ 34

4.5 ແຂວງ ສະຫວັນນະເຂດ 35

4.6 ແຂວງສາລະວັນ 36

**5. ຜົນຂອງການຄົ້ນຄວ້າ 39**

5.1 ຂໍ້ມູນກ່ຽວກັບປະຊາກອນ ໃນພື້ນທີ່ ທີ່ໄດ້ທຳການສຳຫຼວດ 39

5.2 ສາເຫດທີ່ພາໃຫ້ເກີດມີຄວາມເຄັ່ງຕຶງພາຍໃນຄອບຄົວ 50

5.3 ຄວາມຮຸນແຮງ 56

| | | |
|---|---|---|
| **6.** | **ກໍລະນີສຶກສາ** | **80** |
| 6.1 | ເມືອງສັງທອງ, ນະຄອນຫຼວງວຽງຈັນ | 80 |
| 6.2 | ແຂວງບໍ່ແກ້ວ | 80 |
| 6.3 | ແຂວງບໍ່ແກ້ວ | 80 |
| 6.4 | ແຂວງບໍ່ແກ້ວ | 81 |
| 6.5 | ແຂວງຫຼວງພະບາງ | 81 |
| 6.6 | ແຂວງຫຼວງພະບາງ | 82 |
| 6.7 | ແຂວງສະຫວັນນະເຂດ | 82 |
| 6.8 | ແຂວງສະຫວັນນະເຂດ | 83 |
| **7.** | **ຫົວຂໍ້ເລື່ອງທີ່ສະເໜີສົນທະນາເພື່ອຄົ້ນຄວ້າ** | **84** |
| **8.** | **ຂໍ້ສະຫຼຸບ ແລະ ຄໍາແນະນໍາ ຈາກທີມງານ** | **92** |
| **9.** | **ໃບຊ້ອນທ້າຍ 1- ແບບຟອມສໍາພາດ** | **94** |
| **10.** | **ໃບຊ້ອນທ້າຍ 2- ໝູ່ບ້ານເປົ້າໝາຍ** | **112** |
| 10.1 | ໝູ່ບ້ານໃນແຂວງບໍ່ແກ້ວ | 112 |
| 10.2 | ໝູ່ບ້ານຢູ່ແຂວງຫຼວງພະບາງ | 114 |
| 10.3 | ໝູ່ບ້ານໃນເມືອງສັງທອງ | 117 |
| 10.4 | ໝູ່ບ້ານທີ່ແຂວງສະຫວັນນະເຂດ | 120 |
| 10.5 | ໝູ່ບ້ານທີ່ແຂວງສາລະວັນ | 121 |

## ບັນຊີກຣາຟ


ກຣາຟ 5. 1 ຈຳນວນປະຊາກອນທີ່ໄດ້ສຳຫຼວດໃນແຕ່ລະແຂວງ 39

ກຣາຟ 5. 2 ການແບ່ງຈຳນວນປະຊາກອນທີ່ໄດ້ສຳຫຼວດອອກຕາມເພດ 39

ກຣາຟ 5. 3 ການແບ່ງຕາມເພດ ໃນແຕ່ລະແຂວງ 40

ກຣາຟ 5. 4 ການແບ່ງຕາມອາຍຸຂອງຜູ້ທີ່ຖືກສຳພາດທັງໝົດ 40

ກຣາຟ 5. 5 ການແບ່ງຕາມອາຍຸຂອງຄູ່ສົມລົດຂອງຜູ້ທີ່ຖືກສຳພາດທັງໝົດ 41

ກຣາຟ 5. 6 ອາຍຸ ເມື່ອເວລາແຕ່ງງານຂອງຜູ້ທີ່ຖືກສຳພາດ. 42

ກຣາຟ 5. 7 ລະດັບການສຶກສາ ຂອງ ຜູ້ທີ່ຖືກສຳພາດ 42

ກຣາຟ 5. 8 ລະດັບຂອງການສຶກສາ ຂອງ ຜູ້ທີ່ຖືກສຳພາດ ຄິດໄລ່ເປັນເປີເຊັນ ແລະ
ແບ່ງຕາມເພດ 43

ກຣາຟ 5. 9 ລະດັບການສຶກສາຂອງຄູ່ສົມລົດຂອງຜູ້ທີ່ຖືກສຳພາດ 44

ກຣາຟ 5. 10 ອາຊີບ 44

ກຣາຟ 5. 11 ຜູ້ທີ່ຫາເງິນເຂົ້າຄອບຄົວ 45

ກຣາຟ 5. 12 ຜູ້ທີ່ຫາເງິນເຂົ້າຄອບຄົວໄດ້ຫຼາຍກວ່າ 45

ກຣາຟ 5. 13 ການຢູ່ຮ່ວມກັນໃນຄອບຄົວ 46

ກຣາຟ 5. 14 ຈຳນວນເດັກນ້ອຍໃນຄອບຄົວ 47

ກຣາຟ 5. 15 ເຫດຜົນໃນການອອກໂຮງຮຽນ 48

ກຣາຟ 5. 16 ເຫດຜົນວ່າເປັນຫຍັງລູກສາວຈິ່ງອອກໂຮງຮຽນ ໃນຂະນະທີ່ ລູກຊາຍ
ພັດຍັງສືບຕໍ່ຮຽນ 48

ກຣາຟ 5. 17 ການຄຸມກຳເນີດ 49

ກຣາຟ 5. 18 ບົດບາດຂອງແມ່ຍິງໃນການຕັດສິນບັນຫາ 52

ກຣາຟ 5. 19 ຜົວ ຫຼື ເມຍ ດື່ມເຫຼົ້າ 54

ກຣາຟ 5. 20 ຈຳນວນບັນຫາເກີດຂື້ນເມື່ອເວລາເມົາ 54

ກຣາຟ 5. 21 ຕີກັບຄົນອື່ນ ພາຍຫຼັງຈາກດື່ມເຫຼົ້າ 55

ກຣາຟ 5. 22 ການນອກໃຈກັນ (ຫຼິ້ນຊູ້) 56

ກຣາຟ 5. 23 ເປີເຊັນຂອງກໍລະນີ ທີ່ບໍ່ກ້າປະຕິເສດຄູ່ສົມລົດຂອງຕົນ. 61

ກຣາຟ 5. 24 ອັດຕາສ່ວນຂອງຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ ຢູ່ໃນແຕ່ລະແຂວງ 62

ກຣາຟ 5. 25 ສະພາບທີ່ພາໃຫ້ເກີດມີການໃຊ້ຄວາມຮຸນແຮງ 64

ກຣາຟ 5. 26 ລະດັບການສຶກສາຂອງຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ 65

ກຣາຟ 5. 27 ຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງໜັກໜ່ວງ 70

**ບັນຊີຕາຕະລາງ**


ຕາຕະລາງ 5. 1 ຢາກມີລູກສາວ ຫຼືວ່າ ລູກຊາຍ 50
ຕາຕະລາງ 5. 2 ການເຂົ້າຮ່ວມໃນການຕັດສິນບັນຫາ 50
ຕາຕະລາງ 5. 3 ຜູ້ຕັດສິນສຸດທ້າຍ 51
ຕາຕະລາງ 5. 4 ບັນຫາທີ່ເກີດຂື້ນຕໍ່ການຕັດສິນບັນຫາ 52
ຕາຕະລາງ 5. 5 ບັນຫາທີ່ເກີດຂື້ນຈາກການດື່ມ 55
ຕາຕະລາງ 5. 6 ເຫດການຕ່ອຍຕີກັນ ພາຍຫຼັງການດື່ມເຫຼົ້າ 55
ຕາຕະລາງ 5. 7 ສິດຂອງພັນລະຍາ 57
ຕາຕະລາງ 5. 8 ສິດຂອງຜູ້ຊາຍໃນການທຸບຕີເມຍຂອງຕົນ 55
ຕາຕະລາງ 5. 9 ສິດຂອງແມ່ຍິງໃນການປະຕິເສດການເສບສົມ 58
ຕາຕະລາງ 5. 10 ການກະທຳໂຕ້ຕອບຄືນຕໍ່ການຄວບຄຸມຂອງສາມີ 59
ຕາຕະລາງ 5. 11 ຄວາມໝາຍຂອງຄວາມຮຸນແຮງ 59
ຕາຕະລາງ 5. 12 ການກະທຳໂຕ້ຕອບຄືນເມື່ອຖືກທຸບຕີ 60
ຕາຕະລາງ 5. 13 ຜົວເມຍຕີກັນ 60
ຕາຕະລາງ 5. 14 ຄູ່ສົມລົດນຳໃຊ້ຄວາມຮຸນແຮງ 59
ຕາຕະລາງ 5. 15 ສະພາບທີ່ພາໃຫ້ເກີດມີຄວາມຮຸນແຮງຕໍ່ຮ່າງກາຍ 60
ຕາຕະລາງ 5. 16 ບັນດາປັດໃຈທີ່ພາໃຫ້ຄູ່ສົມລົດນຳໃຊ້ຄວາມຮຸນແຮງ (ການລຽງລຳດັບຕາມ Spearman) 64
ຕາຕະລາງ 5. 17 ປະເພດຄວາມຮຸນແຮງຊຶ່ງຜູ້ທີ່ຖືກສຳພາດເຄີຍໄດ້ຮັບ 66
ຕາຕະລາງ 5. 18 ຄວາມຖີ່ ຂອງ ເຫດການຄວາມຮຸນແຮງຕໍ່ຮ່າງກາຍ 67
ຕາຕະລາງ 5. 19 ການ ບັງຄັບໃຫ້ເສບສົມ 67
ຕາຕະລາງ 5. 20 ຄວາມຮຸນແຮງໃນຊ່ວງໄລຍະເວລາຖືພາ 68
ຕາຕະລາງ 5. 21 ຕົນເອງໃຊ້ຄວາມຮຸນແຮງ 68
ຕາຕະລາງ 5. 22 ບາດເຈັບທີ່ໄດ້ຮັບຈາກຄູ່ສົມລົດ 69
ຕາຕະລາງ 5. 23 ປັດໃຈທີ່ພາໃຫ້ຄູ່ສົມລົດໃຊ້ຄວາມຮຸນແຮງໜັກສຸດຂີດ (ການລຽງລຳດັບຕາມ Spearman) 67
ຕາຕະລາງ 5. 24 ບາດເຈັບທີ່ໄດ້ຮັບຈາກຄວາມຮຸນແຮງໜັກໜ່ວງ 68
ຕາຕະລາງ 5. 25 ການປິ່ນປົວ 72
ຕາຕະລາງ 5. 26 ຜົນກະທົບຕໍ່ສຸຂະພາບທາງກາຍແລະທາງຈິດ 73
ຕາຕະລາງ 5. 27 ຜົນກະທົບຕໍ່ວຽກງານ ຫຼື ກິດຈະກຳຕ່າງ ໆ ທີ່ພາໃຫ້ມີລາຍຮັບ 73
ຕາຕະລາງ 5. 28 ການໂຕ້ຕອບຄືນໂດຍກົງຕໍ່ຄວາມຮຸນແຮງ 74
ຕາຕະລາງ 5. 29 ການໜີອອກຈາກເຮືອນໄປ 75

ຕາຕະລາງ 5. 30 ເຫດຜົນຂອງການກັບຄືນມາເຮືອນ 75
ຕາຕະລາງ 5. 31 ການເລົ່າສູ່ຄົນອື່ນຟັງກ່ຽວກັບຄວາມຮຸນແຮງ 76
ຕາຕະລາງ 5. 32 ເຫດຜົນ ຂອງ ການຂໍຄວາມຊ່ວຍເຫຼືອ 76
ຕາຕະລາງ 5. 33 ເຫດຜົນ ຂອງການບໍ່ຂໍຄວາມຊ່ວຍເຫຼືອ 77
ຕາຕະລາງ 5. 34 ຕ້ອງການໃຫ້ໃຜຊ່ວຍເຫຼືອ 77
ຕາຕະລາງ 5. 35 ການຮັບຮູ້ຂອງລູກກ່ຽວກັບຄວາມຮຸນແຮງ 78
ຕາຕະລາງ 5. 36 ການໂຕ້ຕອບຂອງຄົນອື່ນຕໍ່ຄວາມຮຸນແຮງ 78
ຕາຕະລາງ 5. 37 ການຕອບສະໜອງຂອງແພດໝໍ/ເຈົ້າໜ້າທີ່ສະຫວັດດີການສັງຄົມ 79

# 1. ພາກສະເໜີ

## 1.1 ກຸ່ມພັດທະນາບົດບາດຍິງ-ຊາຍ

ກຸ່ມພັດທະນາບົດບາດຍິງຊາຍ (GDG) ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1991, ເພື່ອເພີ່ມທະວີການຮ່ວມມື ແລະການປະສານງານລະຫວ່າງສູນກາງສະຫະພັນແມ່ຍິງລາວ ກັບ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເກືອບ 20 ອົງການ ທີ່ເຮັດວຽກຢູ່ໃນ ສປປ ລາວ. ໂຄງການນີ້ ແມ່ນຢູ່ພາຍໃຕ້ຄັນຮົ່ມຂອງ ອົງການ CUSO ປະຈຳ ສປປ ລາວ. ຈຸດປະສົງລວມຂອງ GDG ແມ່ນ ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ຢູ່ໃນການພັດທະນາເສດຖະກິດ-ສັງຄົມ ໂດຍແນໃສ່ປັບປຸງຄຸນນະພາບຊີວິດ ແລະຍົກສູງຖານະບົດບາດຂອງແມ່ຍິງໃຫ້ດີຂຶ້ນກວ່າເກົ່າ. ວຽກງານເຫຼົ່ານີ້ຈະສາມາດບັນລຸໄດ້ ໂດຍສຸມໃສ່ການເຮັດວຽກແບບເຄືອຂ່າຍ, ມີການເຜີຍແຜ່ຂໍ້ມູນຂ່າວສານ ແລະ ຈັດຕັ້ງປະຕິບັດໂຄງການທີ່ກະທົບໂດຍກົງເລີຍຕໍ່ຊີວິດການເປັນຢູ່ຂອງປະຊາຊົນລາວ. ນອກຈາກນີ້, GDG ຍັງໃຫ້ການບໍລິການດ້ານຝຶກອົບຮົມກ່ຽວກັບ ບົດບາດຍິງ-ຊາຍໃຫ້ແກ່ພະນັກງານຂອງອົງການຕ່າງໆ ເຊິ່ງເປັນສະມາຊິກ.

## 1.2 ໂຄງການຕ້ານຄວາມຮຸນແຮງຕໍ່ແມ່ຍິງ

ໃນກອງປະຊຸມປຶກສາຫາລື ກ່ຽວກັບ ການສຳຫລວດຊົນນະບົດແບບມີສ່ວນຮ່ວມ (PRA) ຢູ່ໃນຊົນນະບົດແຫ່ງໜຶ່ງຂອງແຂວງສາລະວັນ ໃນປີ 2002 ທີ່ດຳເນີນໂດຍກຸ່ມພັດທະນາບົດບາດຍິງ-ຊາຍນັ້ນ, ໄດ້ຈັດໃຫ້ມີການປຶກສາຫາລືຮ່ວມກັນຂອງພວກແມ່ຍິງຢູ່ຂັ້ນບ້ານ, ເຂົາເຈົ້າ ໄດ້ຍົກບັນຫາຜົວຂອງເຂົາເຈົ້າທຸບຕີ ຂຶ້ນມາສົນທະນາກັນ. ຂໍ້ມູນນີ້ໄດ້ຖືກສົ່ງກັບໃຫ້ໜ່ວຍງານ ທີ່ຮັບຜິດຊອບກ່ຽວກັບ ບົດບາດຍິງຊາຍ ແລະ ການພັດທະນາ. ເຖິງຢ່າງໃດກໍ່ດີ, ອົງການຈັດຕັ້ງສະມາຊິກ ບໍ່ຮູ້ວ່າເຫດການເຫຼົ່ານີ້ແມ່ນເລື່ອງຜິດປົກກະຕິຫຼືບໍ່. ເນື່ອງຈາກວ່າບໍ່ໄດ້ມີການຄົ້ນຄວ້າກ່ຽວກັບ ເລື່ອງ ນີ້ມາກ່ອນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ), ໜ່ວຍງານດັ່ງກ່າວ ຈຶ່ງໄດ້ຕັດສິນໃຈວ່າ ມັນມີຄວາມສຳຄັນ ທີ່ຈະຕ້ອງໄດ້ ດຳເນີນ ໂຄງການສຶກສາຄົ້ນຄວ້າ ເພື່ອເປັນພື້ນຖານໃຫ້ແກ່ການແກ້ໄຂບັນຫາດັ່ງກ່າວນີ້. ສິ່ງທີ່ພົວພັນກັບການຂາດຂໍ້ມູນຂ່າວສານອັນພື້ນຖານ ແມ່ນການຂາດການປູກຈິດສຳນຶກ ໃຫ້ແກ່ສາທາລະນະຊົນ. ໃນປັດຈຸບັນນີ້ ຍັງບໍ່ທັນມີການສຶກສາຄົ້ນຄ້ວາກ່ຽວກັບ ຄວາມຮຸນແຮງລະຫວ່າງ ຍິງ-ຊາຍ ແລະ ບໍ່ມີ ຊັບພະຍາກອນສຳລັບການຍົກລະດັບຈິດສຳນຶກຂອງສາທາລະນະຊົນ. ເມື່ອບໍ່ມີຂໍ້ມູນພຽງພໍ ກໍ່ເປັນການຍາກທີ່ຈະເຮັດໃຫ້ ອົງການຈັດຕັ້ງຂອງລັດ, ອົງການໃຫ້ທຶນ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ມີຄວາມເຂົ້າໃຈ ແລະ ເຫັນໄດ້ຄວາມຕ້ອງການທີ່ເພິ່ງພາອາໃສ, ກຸ່ມສະໜັບສະໜູນ, ຍົກລະດັບຈິດສຳນຶກຂອງສາທາລະນະຊົນ ແລະ ການຊ່ວຍເຫຼືອທາງດ້ານການແພດ ແລະ ທາງດ້ານນິຕິກຳ. ຂໍ້ມູນ ທີ່ຮັບໂຮມໄດ້ໃນຊ່ວງເວລາດຳເນີນໂຄງການນີ້ຈະເປັນຫຼັກຖານ ແລະ ຂໍ້ອ້າງອີງທີ່ຈຳເປັນເພື່ອເລັ່ງໃຫ້ທຸກພາກສ່ວນທີ່ມີຄວາມສົນໃຈ ທັງຈາກພາກສ່ວນລັດ ແລະ ອົງການທີ່ບໍ່ສັງກັດ ລັດຖະບານສະໜັບສະໜູນ ການສ້າງໜ່ວຍງານບໍລິການດັ່ງກ່າວ.

ໂຄງການນີ້ ໄດ້ຖືກຈັດຕັ້ງປະຕິບັດຢູ່ຫຼາຍແຂວງຊຶ່ງໄດ້ຄັດເລືອກເອົາຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ຂອງ ສປປ ລາວ ລວມມີ ແຂວງບໍ່ແກ້ວ, ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະ ນະຄອນຫຼວງ ວຽງຈັນ. ລວມທັງໝົດມີ 35 ບ້ານເປົ້າໝາຍ ຢູ່ໃນບັນດາແຂວງເຫຼົ່ານີ້. ເນື່ອງຈາກວ່າ 70% ຂອງ

ຈຳນວນ ປະຊາກອນທັງໝົດໃນ ສປປ.ລາວ ແມ່ນກຸ່ມຊົນເຜົ່າສ່ວນຕ່າງໆ (ມີເຜົ່າລາວ 30%)[1], ແລະກຸ່ມເຫຼົ່ານີ້ ສ່ວນຫຼາຍ ຈະເປັນກຸ່ມທີ່ມີຕົວແທນນ້ອຍກວ່າກຸ່ມອື່ນ ຢູ່ໃນປະເທດ, ໂຄງການເຮົາຈຶ່ງໄດ້ແນເປົ້າໃສ່ໝູ່ບ້ານເຫຼົ່ານີ້ ສຳລັບການເກັບກຳຂໍ້ມູນ.

ໂຄງການນີ້ ມີ 5 ຈຸດປະສົງຫຼັກດ້ວຍກັນ ຄື:

- ເພື່ອໃຫ້ມີ ຂໍ້ມູນຫຼາຍຂຶ້ນ ທີ່ເປັນເອກກະສານ ຢູ່ໃນປະເທດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ.
- ເພື່ອເຜີຍແຜ່ຂໍ້ມູນເຫຼົ່ານີ້ ໄປຫາປະຊາຊົນທັງຫຼາຍ ໃນເຂດຊົນນະບົດ ແລະ ສະເໜີຄຳແນະນຳວ່າຄວາມຮຸນແຮງໃນຊຸມຊົນນັ້ນຄວນຈະແກ້ໄຂໄດ້ດ້ວຍ ວິທີໃດແດ່.
- ເພື່ອ ຊອກຮູ້ ຄຳແນະນຳຈາກພາກສ່ວນຕ່າງໆ ແລະ ໜ່ວຍງານທັງຫລາຍ ຢູ່ ສປປ ລາວ ກ່ຽວກັບບັນຫານີ້.
- ເພື່ອ ສ້າງໃຫ້ມີເຄືອຂ່າຍ ກັບໜ່ວຍງານອື່ນ, ສ້າງຈິດສຳນຶກ ແລະ ເພີ່ມຄວາມສາມາດ ໃນການນຳເອົາບັນຫາເລື່ອງຄວາມຮຸນແຮງຕໍ່ແມ່ຍິງອອກມາສະເໜີ ຢ່າງຈິງຈັງຕໍ່ສັງຄົມ; ແລະ
- ເພື່ອເພີ່ມທັກສະ ແລະ ຄວາມຮູ້ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທັງຫລາຍ ຫລື ພາກສ່ວນ ທີ່ມີຄວາມສົນໃຈທີ່ຈະເຮັດວຽກ ກ່ຽວກັບ ບັນຫາຄວາມຮຸນແຮງຕໍ່ແມ່ຍິງ (ເຊັ່ນ: ສະຫະພັນແມ່ຍິງລາວ, ອົງການທີ່ເປັນສະມາຊິກ ຂອງ ກຸ່ມ GDG, ລັດຖະກອນ ແລະ ນັກຮຽນນັກສຶກສາ).

[1] ບົດລາຍງານກ່ຽວກັບ ການພັດທະນາມະນຸດແຫ່ງຊາດ ຂອງ ສປປ ລາວ (2001). ອົງການສະຫະປະຊາຊາດເພື່ອການພັດທະນາ.

## 2. ຄວາມເປັນມາຂອງການຄົ້ນຄວ້າ

### 2.1 ນິຍາມ ຂອງ ຄຳວ່າ ຄວາມຮຸນແຮງຕໍ່ແມ່ຍິງ

ເຖິງແມ່ນວ່າ ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ ເຫດການທີ່ເກີດຂຶ້ນຢູ່ໃນທົ່ວໂລກກໍ່ຕາມ, ຫຼາຍຄົນກໍ່ຍັງບໍ່ທັນຮູ້ເລິກເຊິ່ງເຖິງ ນິຍາມຂອງຄຳວ່າ "ຄວາມຮຸນແຮງຕໍ່ແມ່ຍິງ" (VAW). ມັນມີຄວາມສັບສົນ ກໍ່ຍ້ອນວ່າ ຄວາມຮຸນແຮງຕໍ່ແມ່ຍິງ ກະທົບຕໍ່ບຸກຄົນກໍ່ຄືຕໍ່ສັງຄົມ ດ້ວຍຫຼາຍຮູບແບບທີ່ສະຫຼັບສັບຊ້ອນ. ກອງປະຊຸມປຶກສາຫາລືສຳລັບ ພາກພື້ນອາຊີ-ປາຊີຟິກ ກ່ຽວກັບແມ່ຍິງ, ແລະ ການພັດທະນາ ກົດໝາຍ ກ່າວວ່າຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ: "ທຸກການກະທຳ ທີ່ມີການນຳໃຊ້ກຳລັງ ຫຼື ການຂູ່ເຂັນບັງຄັບ, ການກົດຂີ່ຂົ່ມເຫງ ແລະ ສິ່ງເສີມ ການພົວພັນລະຫວ່າງຍິງ-ຊາຍ ໃນຮູບແບບການປົກຄອງທີ່ແບ່ງແຍກເປັນຂັ້ນສູງຂັ້ນຕ່ຳຕາມລຳດັບ"[2]. ບົດຖະແຫຼງການຂອງສະຫະປະຊາຊາດ ກ່ຽວກັບ ການກຳຈັດຄວາມຮຸນແຮງຕໍ່ແມ່ຍິງ ໄດ້ຮັບຮູ້ການກະທົບກະເທືອນຕໍ່ຈິດໃຈ ແລະ ອັນຕະລາຍຂອງ ຄວາມຮຸນແຮງຢູ່ໃນຄອບຄົວ ແລະ ຢູ່ໃນຊຸມຊົນ.

ຖະແຫຼງການຂອງສະຫະປະຊາຊາດ ກ່ຽວກັບການລຶບລ້າງ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ໄດ້ຮັບເອົາໂດຍສະມັດຊາໃຫຍ່ ເມື່ອວັນທີ 13 ທັນວາ 1993 ໃຫ້ນິຍາມ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງດັ່ງນີ້:

ຄວາມຮຸນແຮງຕໍ່ແມ່ຍິງ ໝາຍເຖິງ *"ທຸກການກະທຳທີ່ມີຄວາມຮຸນແຮງຕໍ່ແມ່ຍິງຊຶ່ງພາໃຫ້ເກີດ ຫຼື ຈະພາໃຫ້ເກີດຄວາມເສຍຫາຍ ຕໍ່ຮ່າງກາຍ, ທາງເພດ ຫຼື ທາງດ້ານຈິດໃຈ ຫຼື ທໍລະມານແມ່ຍິງ ລວມທັງການນາບຂູ່, ການຂູ່ເຂັນ, ຫຼື ການກົດກັ້ນ ອິດສະລະພາບ ຢ່າງບໍ່ມີເຫດຜົນບໍ່ວ່າ ຈະເກີດຂຶ້ນຢູ່ໃນທີ່ ສາທາລະນະ ຫຼື ໃນຊີວິດສ່ວນຕົວ"* ພວກເຮົາ ຕ້ອງເຂົ້າໃຈວ່າ ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ ລວມເຖິງ ບັນຫາດັ່ງຕໍ່ໄປນີ້:

*ຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ ທີ່ເກີດຂຶ້ນໃນຄອບຄົວ, ລວມທັງການທຸບຕີ, ການຂົ່ມເຫງທາງເພດຕໍ່ເດັກຍິງຢູ່ໃນຄອບຄົວ, ຄວາມຮຸນແຮງທີ່ພົວພັນເຖິງສິນສອດ, ການຂົ່ມຂືນຂອງສາມີ, ການທຳໃຫ້ແມ່ຍິງພິການທາງເພດ ແລະ ການກະທຳທີ່ພາໃຫ້ ແມ່ຍິງ ເສຍຫາຍທາງຮີດຄອງປະເພນີ, ຄວາມຮຸນແຮງນອກຄູ່ສົມລົດ ແລະ ຄວາມຮຸນແຮງ ທີ່ພົວພັນເຖິງ ການສະແຫວງຫາຜົນປະໂຫຍດສ່ວນຕົວ.*

*ຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ ທີ່ເກີດຂຶ້ນພາຍໃນຊຸມຊົນ ຊຶ່ງລວມ ມີ ການຂົ່ມຂືນ, ການຂົ່ມເຫງທາງເພດ, ການລ່ວງເກີນທາງເພດ ແລະ ການນາບຂູ່ໃນສະຖານທີ່ທຳງານ, ໃນສະຖາບັນການສຶກສາ ແລະ ຢູ່ບ່ອນອື່ນ ໆ, ການຄ້າແມ່ຍິງ ແລະ ການບັງຄັບ ໃຫ້ຄ້າປະເວນີ.*

*ຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈທີ່ລັດເປັນຜູ້ກະທຳຄວາມຜິດເອງ ຫຼື ອະນຸຍາດໃຫ້ກະທຳ, ຈະຢູ່ບ່ອນໃດກໍ່ຕາມທີ່ເກີດຂຶ້ນ".*

---

[2] Pickup, F. Williams, S. and C. Sweetman (2001). ການສິ້ນສຸດຄວາມຮຸນແຮງຕໍ່ແມ່ຍິງ: ຄຳຕອບຂອງຊຸມຊົນ ຕໍ່ລູກຂອງແມ່ຍິງທີ່ຖືກທຸບຕີ, Thousand Oakes CA: Sage Publications

## 2.2 ຄວາມໝາຍ ຂອງ ຄວາມຮຸນແຮງໃນຄອບຄົວ

ຄວາມຮຸນແຮງໃນຄອບຄົວ ແມ່ນ ເປັນການຍາກທີ່ຈະຕີຄວາມໝາຍໄດ້ ເພາະວ່າແມ່ຍິງ ຫຼາຍໆຄົນບໍ່ເຫັນໄດ້ ຫຼື ບໍ່ເຊື່ອວ່າ ຄວາມຮຸນແຮງດັ່ງກ່າວ ແມ່ນການລະເມີດຕໍ່ສິດທິຂອງມະນຸດ. ຄວາມເຊື່ອຖືທາງວັດທະນາທຳໄດ້ສົ່ງເສີມ ໃຫ້ເຊີດຊູ ແລະ ຖືວ່າການຂູ່ເຂັນທາງເພດຂອງຜູ້ຊາຍຕໍ່ແມ່ຍິງ ລວມທັງຮູບແບບອື່ນໆ ຂອງຄວາມຮຸນແຮງ. ແມ່ຍິງບາງຄົນອາດຈະຖືວ່າ ຄວາມຮຸນແຮງ ແມ່ນ ຂໍ້ຜູກພັນຕໍ່ການສົມລົດຂອງສາມີ; “ແມ່ຍິງ ອາດພັດທະນາຍຸດທະສາດຂອງຕົນເອງ ສຳລັບປະເຊີນໜ້າ ກັບຄວາມຮຸນແຮງ, ແລະ ຍຸດທະສາດເຫຼົ່ານີ້ ອາດຈະບໍ່ມີສ່ວນກ່ຽວຂ້ອງໂດຍກົງ ກັບ ການຕີຄວາມໝາຍ ແລະ ການຄັດຄ້ານ ຄວາມຮຸນແຮງ. ເຖິງຢ່າງໃດກໍ່ດີ, ແມ່ຍິງຫຼາຍຄົນກໍ່ຊອກໄດ້ວິທີທາງເຮັດໃຫ້ສາມີ ຫຼື ຜູ້ອື່ນໆ ຮູ້ໄດ້ ຄວາມບໍ່ເພິ່ງພໍໃຈຂອງຕົນ”

ຄວາມໝາຍຂອງຄວາມຮຸນແຮງ ທີ່ນຳໃຊ້ຢູ່ໃນ ບົດຄົ້ນຄວ້ານີ້ແມ່ນເອົາຕາມເນື້ອໃນຂອງຄຳນິຍາມ ຂອງ ສະຫະປະຊາຊາດທີ່ກ່າວໄວ້ວ່າ ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ແມ່ນຄວາມຮຸນແຮງຕໍ່ຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ ທີ່ເກີດຂື້ນຢູ່ໃນຄອບຄົວລວມທັງການທຸບຕີ, ການຂົ່ມເຫງທາງເພດຕໍ່ເດັກນ້ອຍຍິງຢູ່ໃນຄອບຄົວ, ຄວາມຮຸນແຮງທີ່ກ່ຽວຂ້ອງກັບສິນສອດ, ການຂົ່ມຂືນຂອງຄູ່ສົມລົດ, ການທຳໃຫ້ແມ່ຍິງພິການທາງເພດ ແລະ ການເຮັດໃຫ້ແມ່ຍິງເສື່ອມເສຍທາງດ້ານຮີດຄອງປະເພນີ, ຄວາມຮຸນແຮງນອກຄູ່ສົມລົດ ແລະ ຄວາມຮຸນແຮງ ທີ່ພົວພັນເຖິງການສະແຫວງຫາຜົນປະໂຫຍດສ່ວນຕົວ.

## 2.3 ສົນທິສັນຍາ ວ່າດ້ວຍ ການກຳຈັດການຈຳແນກແມ່ຍິງໃນທຸກຮູບການ

ມະຕິຂອງສະມັດຊາໃຫຍ່ສະຫະປະຊາຊາດ ສະບັບ ເລກທີ 34/180 ປີ 1979 ຖືວ່າ ສົນທິສັນຍາ ວ່າດ້ວຍ ການລົບລ້າງ ທຸກຮູບແບບການຈຳແນກຕໍ່ແມ່ຍິງ (CEDAW) ແມ່ນ “ກົດໝາຍສາກົນກ່ຽວກັບສິດທິມະນຸດຂອງ ແມ່ຍິງ”. ສົນທິສັນຍາດັ່ງກ່າວ ບໍ່ພຽງແຕ່ຮຽກຮ້ອງຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ເທົ່ານັ້ນ, ມັນຍັງ ຫ້າມທຸກການກະທຳ ທີ່ເຊີດຊູຄວາມບໍ່ສະເໝີພາບຕໍ່ແມ່ຍິງ. CEDAW ກ່າວວ່າ ພາກສ່ວນລັດຈະຕ້ອງມີມາດຕະການອັນເໝາະສົມ ເພື່ອຮັບປະກັນໃຫ້ແມ່ຍິງ ໄດ້ຊົມໃຊ້ ສິດທິ ແລະ ເສລີພາບອັນພື້ນຖານ ຂອງເຂົາເຈົ້າ ຢ່າງມີຄວາມສະເໝີພາບກັບຜູ້ຊາຍ. ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ ຮູບແບບໜຶ່ງຂອງການຈຳແນກທີ່ໜັກໜ່ວງ.

ສປປ ລາວ ໄດ້ລົງລາຍເຊັນໃສ່ສົນທິສັນຍາ CEDAW ເມື່ອວັນທີ 17 ກໍລະກົດ 1980 ແລະ ໄດ້ຮັບສັດຕະຍາບັນເມື່ອວັນທີ 14 ສິງຫາ 1981. ຈາກການລົງລາຍເຊັນໃສ່ສົນທິສັນຍານັ້ນ, ສປປ ລາວ ຈະຕ້ອງຮັບຜິດຊອບດຳເນີນງານສະເພາະເພື່ອແນໃສ່ກຳຈັດການຈຳແນກ. ພາຍໃຕ້ CEDAW, ແຕ່ລະລັດ ຈະຕ້ອງສົ່ງບົດລາຍງານແຫ່ງຊາດ ກ່ຽວກັບ ມາດຕະການ ທີ່ຕົນໄດ້ດຳເນີນການທຸກໆ 4 ປີ ເພື່ອເປັນການຍິນຍອມຕາມພັນທະຂອງຕົນ. ອີງຕາມພະແນກເພື່ອຄວາມກ້າວໜ້າຂອງແມ່ຍິງ ຂອງ ສະຫະປະຊາຊາດ, ສປປ ລາວ ຕ້ອງສົ່ງບົດລາຍງານໃນວັນທີ 13 ກັນຍາ 1982. ບົດລາຍງານໜຶ່ງ ຊຶ່ງ ສະຫະພັນແມ່ຍິງລາວ ແລະ ກະຊວງການຕ່າງປະເທດຮ່ວມກັນຂຽນ ໄດ້ສົ່ງໄປ ໃນປີ 2003.

ເພື່ອຈັດຕັ້ງປະຕິບັດ ສົນທິສັນຍາ CEDAW ທ່ານ ເກດ ກຽດຕິສັກ, ລັດຖະມົນຕີຊ່ວຍວ່າການກະຊວງ ຍຸຕິທຳໄດ້ໃຫ້ການວ່າ ລັດຖະບານ ແຫ່ງ ສປປ ລາວ ໄດ້ສ້າງຕັ້ງ ຄະນະກຳມະການແມ່ຍິງ ແລະເດັກນ້ອຍ ແຫ່ງຊາດຂຶ້ນ ໃນປີ 1991. ໃນປີ 1993 ກໍ່ໄດ້ມີການສ້າງຕັ້ງ ຄະນະກຳມະການຄ້າຍໆກັນນີ້ຢູ່ໃນ ລະດັບແຂວງ ແລະ ລະດັບເມືອງ. ນອກຈາກນີ້, ລັດຖະບານ ຍັງໄດ້ປັບປຸງແກ້ໄຂກົດໝາຍ ແຮງງານ, ກົດໝາຍອາຍາ ແລະ ກົດໝາຍຄອບຄົວ ເພື່ອໃຫ້ ສອດຄ່ອງກັບ ສົນທິສັນຍາ CEDAW.[3] ການສ້າງກົດໝາຍວ່າດ້ວຍຄວາມຮຸນແຮງໃນຄອບຄົວ ຂອງລັດຖະບານ ກໍ່ຈະຕ້ອງໃຫ້ຍິນຍອມຕາມ ສົນທິສັນຍາ CEDAW ເຊັ່ນດຽວກັນ.

ຄະນະກຳມະການທີ່ກ່ຽວຂ້ອງຂອງສະຫະປະຊາຊາດກວດກາເພື່ອປັບປຸງບົດລາຍງານເຫຼົ່ານີ້ໄດ້ໃຫ້ຄຳແນະນຳລວມ ກ່ຽວກັບ ບັນຫາທີ່ກະທົບກະເທືອນເຖິງແມ່ຍິງເຖິງຂັ້ນທີ່ວ່າ ຈະຕ້ອງໄດ້ໃຫ້ຄວາມເອົາໃຈໃສ່ເພີ່ມເຕີມ. ໃນເມື່ອວ່າ ຢູ່ໃນສົນທິສັນຍາ CEDAW ບໍ່ມີ ຂໍ້ບັນຍັດທີ່ຊັດເຈນ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ແລະການຂົ່ມຂືນຂອງສາມີ, ຄະນະກຳມະການ ຈຶ່ງໄດ້ໃຫ້ຄຳແນະນຳ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ. ຄຳແນະນຳລວມ 19[4], ທີ່ອອກໃນປີ 1992, ໃຫ້ຂໍ້ສັງເກດວ່າ ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ ໜຶ່ງໃນບັນດາວິທີການ ບີບບັງຄັບໃຫ້ແມ່ຍິງຕ້ອງຕົກຢູ່ພາຍໃຕ້ການປົກຄອງຂອງຜູ້ຊາຍ. ຄຳແນະນຳນີ້ກ່າວໄວ້ວ່າ ຄວາມຮຸນແຮງລະຫວ່າງ ຍິງ/ຊາຍພາໃຫ້ສິດທິດັ່ງ ຕໍ່ໄປນີ້ເປັນໂມຄະເຊັ່ນ: "ສິດທິໃນການມີຊີວິດ, ສິດທິໃນການຫຼຸດພົ້ນອອກ ຈາກການທໍລະມານ ຫຼື ຄວາມໂຫດຮ້າຍອຳມະຫິດ, ການປະຕິບັດ ຫຼື ການລົງໂທດ ຢ່າງປ່າເຖື່ອນ ຫຼື ຢ່າງບໍ່ມີມະນຸດສະທຳ, ສິດທິໃນການມີອິດສະ ລະພາບ ແລະ ຄວາມປອດໄພຂອງບຸກຄົນ, ສິດທິ ໃນການໄດ້ຮັບ ການປົກປ້ອງ ຢ່າງສະເໝີພາບກັນ ພາຍໃຕ້ກົດ ໝາຍ, ສິດທິໃນການໄດ້ຮັບຄວາມສະເໝີພາບ ຢູ່ໃນຄອບຄົວ ແລະ ສິດທິ ໃນການມີສຸຂະພາບສົມບູນທາງດ້ານ ຮ່າງກາຍ ແລະ ຈິດໃຈ ຕາມມາດຕະຖານສູງ ສຸດທີ່ ສາມາດບັນລຸໄດ້".

ຄຳແນະນຳລວມ 19[4] ຍັງໄດ້ກ່າວໄວ້ອີກວ່າ: "ມາດຕາ 1 ຂອງສົນທິສັນຍາ ໄດ້ຕີຄວາມໝາຍ ຂອງ **ການຈຳແນກຕໍ່ແມ່ຍິງ**. ຄວາມໝາຍ ຂອງ ການຈຳແນກ ແມ່ນລວມເຖິງ ຄວາມຮຸນແຮງລະຫວ່າງຍິງ-ຊາຍ, ຊຶ່ງແມ່ນ ຄວາມຮຸນແຮງ ທີ່ *ກະທຳຕໍ່ແມ່ຍິງເພາະເປັນແມ່ຍິງ ຫຼື ຄວາມຮຸນແຮງທີ່ກະທົບກະເທືອນ ຕໍ່ ແມ່ຍິງ ຢ່າງບໍ່ມີຄວາມເໝາະສົມ. ອັນນີ້ ແມ່ນລວມເຖິງ ການກະທຳ ທີ່ ພາໃຫ້ມີຄວາມເຈັບແສບ ຫຼື ຄວາມທຸກທໍລະມານ ທາງຈິດໃຈຫຼືທາງເພດ, ພາໃຫ້ມີຄວາມຢ້ານກົວ ຕໍ່ການກະທຳດັ່ງກ່າວ, ການນາບຂູ່ ແລະ ການກີດກັ້ນ ອິດສະລະພາບ. ຄວາມຮຸນແຮງລະຫວ່າງ ຍິງ-ຊາຍ ອາດຈະ ເປັນການຝ່າຝືນຕໍ່ ຂໍ້ບັນຍັດສະເພາະ ຂອງ ສົນທິສັນຍາ ເຖິງແມ່ນວ່າ ຂໍ້ບັນຍັດເຫຼົ່ານີ້ ຈະໄດ້ກ່າວເຖິງ ຄວາມຮຸນແຮງ ໂດຍສະເພາະ ຫຼືບໍ່ ກໍ່ຕາມ"* (ຫຍໍ້ໜ້າ 6).

ຄຳແນະນຳນີ້ ໄດ້ຊີ້ໃຫ້ເຫັນວ່າ ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ ລວມເຖິງ ການກະທຳ ຂອງສ່ວນບຸກຄົນ ເພິ່ນເວົ້າວ່າ: *"ຕາມຮີດຕາມຄອງ ທີ່ຖືວ່າ ແມ່ຍິງຈະຕ້ອງຢູ່ພາຍໃຕ້ການປົກຄອງຂອງ ຜູ້ຊາຍ ຫຼື ຕາມຄອງເດີມ ມີບົດບາດ ເຊີດຊູການກະທຳທີ່ກ່ຽວຂ້ອງກັບ ຄວາມຮຸນແຮງ ຫຼື ການຂົ່ມຂູ່ຢ່າງແຜ່ຫຼາຍ, ເຊັ່ນ ຄວາມຮຸນແຮງ ຢູ່ໃນຄອບຄົວ, ການຂົ່ມເຫງ ຫຼື ການບັງຄັບໃຫ້ແຕ່ງງານ...ເຫດຜົນຂອງການສ້າງ ຄວາມເສຍຫາຍ ຫຼື ການກະທຳດັ່ງກ່າວ ອາດຈະແມ່ນ*

---

[3] "ຄະນະກຳການ ຮັບຮອງເອົາບົດບາດຂອງແມ່ຍິງ, ເດັກນ້ອຍ" Vientiane Times, 20-23 ທັນວາ 2002.

*ການທີ່ຖືວ່າ ຄວາມຮຸນແຮງລະຫວ່າງຍິງ-ຊາຍ ແມ່ນຮູບການໜຶ່ງ ຂອງການປົກປ້ອງ ຫຼື ການຄວບຄຸມແມ່ຍິງ. ຜົນຂອງຄວາມຮຸນແຮງດັ່ງກ່າວ ຕໍ່ຄວາມສົມບູນທາງດ້ານຮ່າງກາຍ ແລະ ຈິດໃຈຂອງ ແມ່ຍິງ ແມ່ນ ການກີດກັ້ນແມ່ຍິງບໍ່ໃຫ້ມີຄວາມສະເໝີພາບ, ບໍ່ໃຫ້ຊົມໃຊ້ ແລະ ບໍ່ໃຫ້ຮູ້ເລື່ອງ ສິດທິມະນຸດ ແລະ ອິດສະລະພາບອັນພື້ນຖານ"*[4].

ອີງຕາມຄຳແນະນຳນີ້, ແຕ່ລະລັດຕ້ອງຮັບຜິດຊອບລາຍງານກ່ຽວກັບສິ່ງທີ່ຕົນໄດ້ເຄື່ອນໄຫວ ຕໍ່ສູ້ກັບຄວາມຮຸນແຮງຕໍ່ແມ່ຍິງ ໃນປະເທດຂອງຕົນ.

ສົນທິສັນຍາ CEDAW ສາມາດ ເປັນເຄື່ອງມືທີ່ມີອະນຸພາບ ໃນການຕໍ່ສູ້ຕ້ານກັບຄວາມຮຸນແຮງຕໍ່ແມ່ຍິງ. ເວລາການສົ່ງເສີມການປະຕິຮູບກົດໝາຍ, ການໃຫ້ການບໍລິການ ຫຼື ການປ່ຽນແປງ ທາງດ້ານນະໂຍບາຍ, ເສດຖະກິດ ແລະ ສັງຄົມ, ປະຊາຊົນ ສາມາດຂໍຮ້ອງໃຫ້ ລັດຖະບານ ຢ່າໄດ້ຫຼົງລືມພັນທະຂອງຕົນພາຍໃຕ້ ສົນທິສັນຍາ CEDAW. ບັນດາ ຂໍ້ບັນຍັດຕ່າງໆ ຢູ່ໃນກົດໝາຍ ແລະ ລັດຖະທຳມະນູນ ຂອງ ປະເທດຕ້ອງໃຫ້ສອດຄ່ອງກັບບັນດາ ຫຼັກການກ່ຽວກັບ ສິດທິມະນຸດ ທີ່ ສາກົນຍອມຮັບໄດ້.

## 2.4 ສະພາບຢູ່ພາກພື້ນ

ກອງປະຊຸມຂົງເຂດອາຊີຕາເວັນອອກສ່ຽງໃຕ້ ກໍ່ຄື ກອງປະຊຸມປຶກສາຫາລືອື່ນໆ ປະຈຳພາກພື້ນ ເປັນຜູ້ນຳໜ້າໃນການຕໍ່ສູ້ ຕ້ານຄວາມຮຸນແຮງຕໍ່ແມ່ຍິງ. ພວກເພິ່ນໄດ້ພະຍາຍາມ ຕໍ່ສູ້ ດ້ວຍການແລກປ່ຽນຍຸດທະສາດນຳກັນ ແລະ ສ້າງກົດໝາຍ ເພື່ອຄວບຄຸມຄວາມຮຸນແຮງຕໍ່ແມ່ຍິງ, ລວມທັງໃນລະດັບພາກພື້ນ ແລະ ໃນລະດັບຊາດ. ໃນເດືອນທັນວາ ປີ 2001, ຕົວແທນຈາກ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ພາກສ່ວນລັດ ຈາກ 4 ປະເທດໃນອະນຸພາກພື້ນອ່າງແມ່ນ້ຳຂອງ (ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ) ຈຳນວນ 48 ທ່ານ ໄດ້ເຕົ້າໂຮມກັນ ທີ່ ນະຄອນຫຼວງພະນົມເປັນ ເພື່ອປຶກສາຫາລືກ່ຽວກັບ ກົດໝາຍ ວ່າດ້ວຍ ຄວາມຮຸນແຮງ ຢູ່ໃນຄອບຄົວ[5]. ສະພາອາຊີ ເພື່ອສິດທິມະນຸດ ແລະ ການພັດທະນາ (Forum-Asia), ສະພາອາຊີ-ປາຊີຟິກ ກ່ຽວກັບກົດໝາຍແມ່ຍິງ ແລະ ການພັດທະນາ (APWLD) ແລະ UNIFEM, ໄດ້ຮ່ວມກັນ ຈັດກອງປະຊຸມປຶກສາລືນີ້ຂຶ້ນ ໂດຍແມ່ນພະນະທ່ານ Mu Sochua, ລັດຖະມົນຕີກະຊວງແມ່ຍິງ ແລະ ນັກຮົບເກົ່າ ຂອງປະເທດ ກຳປູເຈຍ ໃຫ້ກຽດເປັນເຈົ້າພາບ. ເປົ້າໝາຍຂອງກອງປະຊຸມປຶກສາຫາລືນີ້ ແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມປະຊຸມສາມາດ ຮ່າງກົດໝາຍວ່າດ້ວຍ ຄວາມຮຸນແຮງ ລະຫວ່າງ ຍິງ-ຊາຍ ຢູ່ໃນຄອບຄົວ ທີ່ແຈ່ມແຈ້ງ, ຄົບຖ້ວນ ແລະ ສາມາດປົກປ້ອງ ແມ່ຍິງໄດ້ຢ່າງມີປະສິດທິພາບ.

---

[4] CEDAW (1992) ຄວາມຮຸນແຮງຕໍ່ແມ່ຍິງ. ຄຳແນະນຳລາວ ເລກທີ 19, ສະໄໝທີ 11, ເອກະສານສະຫະປະຊາຊາດ CEDAW/C/1992/L.1/Add.15, ນິວຢອກ: ສະຫະປະຊາຊາດ

[5] www.unifemeseasia.org

ຈຸດປະສົງ ສະເພາະຂອງກອງປະຊຸມປຶກສາຫາລືນີ້ແມ່ນເພື່ອ:

- ສ້າງໃຫ້ມີຄວາມເຂົ້າອົກເຂົ້າໃຈ ເປັນອັນໜຶ່ງອັນດຽວກັນກ່ຽວກັບບັນຫາ ຄວາມຮຸນແຮງ ຢູ່ໃນຄອບຄົວ ຢູ່ໃນ ອະນຸພາກພື້ນແມ່ນ້ຳຂອງ,
- ແລກປ່ຽນຍຸດທະສາດຊຶ່ງກັນແລະກັນກັບບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທີ່ມີກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ໃນປະເທດຂອງເຂົາເຈົ້າແລ້ວ,
- ວາງຂອບເຂດວຽກ ສຳລັບ ກົດໝາຍ ວ່າດ້ວຍ ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ຂອງ ແຕ່ລະປະເທດ ສຳລັບ 4 ປະເທດ ອະນຸພາກພື້ນແມ່ນ້ຳຂອງ; ແລະ
- ສ້າງຕັ້ງເຄືອຂ່າຍ ກ່ຽວກັບ ກົດໝາຍ ວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ລະຫວ່າງ ສະມາຊິກລັດຖະສະພາ, ອະທິບໍດີກົມໄອຍະການ, ນັກກົດໝາຍ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.

ສະມາຄົມ ສະມາຊິກລັດຖະສະພາ ຂອງ ປະເທດ ກຳປູເຈຍ ເພື່ອສັນຕິພາບ ແລະ ການພັດທະນາ (CAPPD) ໄດ້ຈັດ ກອງປະຊຸມປຶກສາຫາລື ສຳລັບ ສະມາຊິກລັດຖະສະພາ ຂຶ້ນ ໃນເດືອນມັງກອນ ປີ 2002 ເພື່ອໃຫ້ບັນດາສະມາຊິກລັດຖະສະພາ ມີຄວາມສຳນຶກກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ. ນອກຈາກນີ້, ກອງປະຊຸມປຶກສາຫາລື ດັ່ງກ່າວ ຍັງໄດ້ສ້າງຄວາມດຶງດູດເອົາການສະໜັບສະໜູນ ຈາກຜູ້ຊາຍ.

ຫວຽດນາມ ໄດ້ມີແຜນ ທີ່ຈະເອົາ ສະຫະພັນແມ່ຍິງ ແລະ ສະມາຊິກລັດຖະສະພາ ເຂົ້າຮ່ວມ ໃນການຮ່າງກົດໝາຍວ່າດ້ວຍ ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ສຳລັບ ປະເທດວຽດນາມ.

ຢູ່ປະເທດໄທ, ສະໂມສອນສະມາຊິກຍິງ ຂອງ ລັດຖະສະພາ ຊຶ່ງໄດ້ເຂົ້າຮ່ວມໃນກອງປະຊຸມນັ້ນ, ໄດ້ຮ່ວມກັນກັບຄະນະກຳມະການເພື່ອສິດທິມະນຸດແຫ່ງຊາດ ຈັດກອງປະຊຸມຄັ້ງທຳອິດຂຶ້ນ ເພື່ອຮ່າງກົດໝາຍ ວ່າດ້ວຍ ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ໃນເດືອນ ກຸມພາ ປີ 2001 ໂດຍໄດ້ຮັບການສະໜັບສະໜູນຈາກ UNIFEM. ຄະນະຜູ້ແທນຈາກປະເທດໄທ ໄດ້ແນໃສ່ໃຫ້ໄດ້ຮ່າງກົດໝາຍ ກຽມພ້ອມທີ່ຈະຜ່ານສະພາ ໃນເດືອນ ສິງຫາ 2002.

ຜູ້ຕາງໜ້າ ສປປ ລາວ ໃຫ້ຄຳໝັ້ນສັນຍາວ່າຈະລາຍງານແກ່ ລັດຖະບານຂອງຕົນ ເມື່ອເວລາກັບຄືນນະຄອນຫຼວງວຽງຈັນ. ລັດຖະບານ ແຫ່ງ ສປປ ລາວ ເວົ້າວ່າພວກເພິ່ນຈະມອບໝາຍ ໃຫ້ສະຫະພັນແມ່ຍິງລາວ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆ ເກັບກຳຂໍ້ມູນກ່ຽວກັບ ຄວາມຮຸນແຮງ ຢູ່ໃນ ສປປ ລາວ. ໃນເດືອນ ທັນວາ ປີ 2001, ສະຫະພັນແມ່ຍິງລາວ ໄດ້ວາງແຜນສ້າງທີ່ພັກພາອາໃສໃຫ້ແກ່ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ ແລະ ຜູ້ທີ່ລອດຕາຍຈາກຄວາມຮຸນແຮງຢູ່ໃນຄອບຄົວ, ຊຶ່ງຖືວ່າ ເປັນບາດກ້າວທຳອິດ ໃນການແກ້ໄຂບັນຫາດັ່ງກ່າວນີ້. ໃນປັດຈຸບັນ, ສູນດັ່ງກ່າວໄດ້ຖືກນຳໃຊ້ແລ້ວ.

## 2.5 ສະພາບ ຄວາມຮຸນແຮງຕໍ່ແມ່ຍິງ ຢູ່ ສປປ ລາວ ໃນປັດຈຸບັນ

ໃນເກືອບໝົດທຸກປະເທດໃນໂລກ ແລະ ລວມທັງ ໃນກໍລະນີຂອງ ສປປ ລາວ, ຄວາມຮຸນແຮງຕໍ່ແມ່ຍິງ ຢູ່ໃນຄອບຄົວ ແມ່ນບັນຫາທີ່ໜັກໜ່ວງ ແລະ ສັບຊ້ອນໃນສ່ວນຕົວຂອງບຸກຄົນ ຊຶ່ງມີຄົນຈຳນວນນ້ອຍໜຶ່ງ ເທົ່ານັ້ນທີ່ສົນທະນາ ບັນຫານີ້. ຢູ່ ສປປ ລາວ ແມ່ນ ນ້ອຍໜັກນ້ອຍໜາ ທີ່ຈະເວົ້າເລື່ອງນີ້ ແລະ ການລາຍງານ ຢ່າງເປັນທາງການກໍ່ຍິ່ງເປັນການຍາກ, ໂດຍສະເພາະແມ່ນ ເລື່ອງຄວາມຮຸນແຮງທາງເພດ. ເຫດຜົນຂອງຄວາມມິດງຽບ ດັ່ງກ່າວນີ້ ແມ່ນ ຄວາມເຊື່ອຖື ຂອງ ສັງຄົມ ແລະ ສາຍຕາຂອງຫຼາຍໆ ຄົນເຫັນວ່າ ການລ່ວງເກີນທາງເພດບໍ່ເປັນບັນຫາສຳຄັນພໍທີ່ຈະຍົກຂຶ້ນມາສົນທະນາ. ການປະພຶດທີ່ຮຸນແຮງລະຫວ່າງ ຄູ່ສາມີພັນລະຍາ ໃນສັງຄົມຂອງລາວຖືວ່າແມ່ນບັນຫາພາຍໃນຄອບຄົວ, ໂດຍສະເພາະຖ້າຫາກວ່າ ມັນບໍ່ມີການເສຍຫາຍຫຼາຍແກ່ຜູ້ທີ່ຖືກເຄາະຮ້າຍ, ຊຶ່ງສ່ວນໃຫຍ່ຈະແມ່ນ ຜູ້ຍິງທີ່ໄດ້ຮັບຜົນກະທົບຈາກບັນຫານີ້.

ໃນປີ 1999 ສູນສະຖິຕິແຫ່ງຊາດ ແລະ ສະຫະພັນແມ່ຍິງລາວ ໄດ້ເກັບກຳຂໍ້ມູນຢູ່ໃນ 100 ໝູ່ບ້ານ ຂອງກຳແພງນະຄອນວຽງຈັນ ແລະ ໃນອີກ 3 ແຂວງ. ຂໍ້ມູນດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າເຫດການຄວາມຮຸນແຮງ ຕໍ່ແມ່ຍິງສ່ວນໃຫຍ່ ແມ່ນເກີດຂຶ້ນຢູ່ໃນເຮືອນ. ຢູ່ໃນ 39 ກໍລະນີ ຂອງເຫດການ ແມ່ນການໃຊ້ວາຈາທີ່ຫຍາບຄາຍ, ການທາລຸນຕໍ່ຮ່າງກາຍ, ການທຳຮ້າຍ ຫຼື ການຂົ່ມຂືນ ທີ່ ອຳນາດການປົກຄອງບ້ານ ໄດ້ບັນທຶກໄວ້ໃນລະຫວ່າງ 12 ເດືອນຜ່ານມາ ຂອງການເກັບກຳຂໍ້ມູນນັ້ນ, ເຫັນວ່າ ເຫດການທີ່ເກີດຂຶ້ນຢູ່ໃນເຮືອນ ແມ່ນມີ 32 ກໍລະນີ (82%). ຂໍ້ມູນນີ້ຊີ້ໃຫ້ເຫັນວ່າ ຄວາມຮຸນແຮງ ຢູ່ໃນຄອບຄົວ ເປັນການນາບຂູ່ທີ່ໜັກໜ່ວງ ຕໍ່ແມ່ ຍິງລາວ[6].

ອົງການຈັດຕັ້ງຊາວໜຸ່ມລາວ, ສະຫະພັນແມ່ຍິງລາວ, ກຳແພງນະຄອນວຽງຈັນ ແລະ ອົງການຊ່ວຍເຫຼືອເດັກຂອງປະເທດ ອັງກິດ ໄດ້ດຳເນີນການສຳຫຼວດຊາວໜຸ່ມໂດຍເກັບກຳຂໍ້ມູນນຳ ເດັກນ້ອຍຍິງ ຈຳນວນ 167 ຄົນ ແລະເດັກນ້ອຍຊາຍ ຈຳນວນ 186 ຄົນ ທີ່ມີອາຍຸແຕ່ 13 ປີ ຫາ18 ປີ [7]. ໜຶ່ງໃນບັນດາຄຳຖາມເຈາະຈົ້ມ ແມ່ນໃຫ້ຊາວໜຸ່ມເຫຼົ່ານີ້ ບອກລາຍການບັນຫາທີ່ຖືວ່າເປັນອັນຕະລາຍທີ່ສຸດເຊິ່ງສັງຄົມປະເຊີນໜ້າຢູ່: ເດັກນ້ອຍຍິງ 27.5% ກ່າວວ່າ ການຂົ່ມຂືນທຳຊຳເລົາ ແມ່ນໜຶ່ງໃນຈຳນວນ 10 ບັນຫາ ທີ່ໜັກໜ່ວງທີ່ສຸດ. ການຂົ່ມຂືນ ທຳຊຳເລົາຖືກຈັດລຽງ ຢູ່ໃນອັນດັບທີ3 ລອງມາຈາກການດົມກາວ ແລະ ການຂີ້ລັກມັກສົກ. ເດັກນ້ອຍຍິງ 22.2% ໃຫ້ການວ່າ ບັນຫາ ທີ່ເປັນອັນຕະລາຍຕໍ່ສັງຄົມອີກອັນໜຶ່ງແມ່ນ ການຂາຍປະເວນີ, ຊຶ່ງຕົກຢູ່ໃນອັນດັບທີ 5. ແຕ່ກົງກັນຂ້າມ, ເດັກນ້ອຍຊາຍມີແຕ່ພຽງ 14% ເທົ່ານັ້ນ ທີ່ໃຫ້ການວ່າແມ່ນ ການຂາຍປະເວນີ (ອັນດັບທີ 7) ແລະ ມີແຕ່ພຽງ 8.1% ເທົ່ານັ້ນ ກ່າວວ່າ ແມ່ນການຂົ່ມຂືນທຳຊຳເລົາ (ອັນດັບທີ 9 ຢູ່ໃນບັນຊີ ລາຍການຂອງເດັກນ້ອຍຊາຍ). ຜົນການສຳຫຼວດນີ້ຊີ້ບອກວ່າ ຄວາມຮຸນແຮງ ທາງເພດ ແມ່ນເປັນບັນຫາທີ່ຈະແຈ້ງທີ່ສຸດ ຊຶ່ງແມ່ຍິງລາວຈະຕ້ອງເປັນຫ່ວງ ເປັນໄຍ ລວມທັງ ໃນໄວໜຸ່ມ.

---

[6] ການເຂົ້າຮ່ວມຂອງແມ່ຍິງໃນການຕັດສິນບັນຫາຢູ່ໃນລະດັບບ້ານ, LWU, ສູນ GRID, ທັນວາ 1999

[7] ຟັງສຽງຂອງຊາວໜຸ່ມ. ອົງການຈັດຕັ້ງຊາວໜຸ່ມລາວ (LYU), ສະຫະພັນແມ່ຍິງລາວ (LWU), ກຳແພງນະຄອນວຽງຈັນ ແລະ ອົງການຊ່ວຍເຫຼືອເດັກຂອງອັງກິດ. 1997

ການອົບຮົມບົ່ມສະໝອງ ດ້ວຍແນວຄິດຄອງເດີມ ທີ່ຖືວ່າ ຄວາມຮຸນແຮງຢູ່ໃນຄອບຄົວ ເປັນເລື່ອງທຳມະດາແມ່ນ ເລີ່ມຕົ້ນ ຕັ້ງແຕ່ຍັງໜຸ່ມ. ອີງໃສ່ ການສຳຫຼວດ8 ໃນປີຕໍ່ມາ (1998) ໃນຈຳນວນຊາວໜຸ່ມ 53 ຄົນ, ສ່ວນໃຫຍ່ ເຫັນດີວ່າ *"ຜູ້ຊາຍຕີເມຍ ແມ່ນສິ່ງທີ່ຖືກຕ້ອງ ຖ້າຫາກວ່າ ເມຍຂອງລາວເຮັດຜິດ"*. ເດັກນ້ອຍຍິງ 63% ແລະ ເດັກ ນ້ອຍຊາຍ 45% ເຫັນດີກັບຄຳໃຫ້ການນີ້. ເຫດການນີ້ສາມາດກະທົບກະເທືອນຕໍ່ ບົດລາຍງານ ກ່ຽວກັບ ຄວາມຮຸນ ແຮງ, ເພາະວ່າແມ່ຍິງ ອາດມີຄວາມຮູ້ສຶກວ່າ ຄວາມຮຸນແຮງທີ່ເຂົາເຈົ້າໄດ້ປະສົບນັ້ນ ເປັນເລື່ອງທຳມະດາ ບໍ່ສຳຄັນ ພໍທີ່ຈະກ່າວເຖິງ.

## 2.6 ຂອບເຂດວຽກ ທາງດ້ານນິຕິກຳ ແລະ ການຈັດຕັ້ງ ເພື່ອ ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ຢູ່ ສປປ ລາວ

ຈຸດໝາຍສູ້ຊົນຂອງ ລັດຖະບານ ແຫ່ງ ສປປ ລາວ ແມ່ນ ເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດ ທະນາ ເມື່ອເຖິງປີ 2020, ດ້ວຍການຈັດຕັ້ງປະຕິບັດ ສອງ ຍຸດທະສາດພື້ນຖານ ແຫ່ງການເຕີບໂຕສູງ ທາງດ້ານ ເສດຖະກິດ ທີ່ມີການຕິດພັນກັບ ການບໍລິການສັງຄົມ ແລະ ການຕະຫຼາດ ຢ່າງມີຄວາມສົມສ່ວນ ແລະ ກວ້າງຂວາງ, ໂດຍສະເພາະ ແມ່ນຢູ່ໃນຊົນນະບົດ. ແຜນງານລົບລ້າງຄວາມທຸກຍາກແຫ່ງຊາດ (NPEP) ປີ 2003, ມີບົດບາດ ໃນການສືບຕໍ່ສ້າງສາປະເທດຊາດ ແລະ ສ້າງເງື່ອນໄຂ ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ສິ່ງແວດລ້ອມ ທີ່ເອື້ອອຳນວຍ ໃຫ້ແກ່ການເຕີບໂຕ ແລະ ການພັດທະນາ ແບບຍືນຍົງ ໃນໄລຍະຍາວ ກໍ່ຄື ປະກອບສ່ວນ ເຂົ້າໃນ ການຫຼຸດຜ່ອນຄວາມທຸກຍາກ. ສີ່ຂະແໜງການໃຫຍ່ ບຸລິມະສິດ ຂອງ NPEP ແມ່ນ ຂະແໜງ ກະສິກຳ/ ປ່າໄມ້, ການສຶກສາ, ສາທາລະນະສຸກ ແລະ ໂຄງລ່າງ. ການຈັດຕັ້ງປະຕິບັດ NPEP ແມ່ນບົນຫຼັກການ ການອະນຸລັກ ສິ່ງແວດລ້ອມ ແລະ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ.

ເຖິງແມ່ນວ່າ ລະດັບຄວາມເຂົ້າໃຈກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງຍັງຕ່ຳຢູ່ກໍ່ຕາມ, ລັດຖະບານແຫ່ງ ສປປ ລາວ ກໍ່ໄດ້ສ້າງຕັ້ງ ອົງການຈັດຕັ້ງ ເພື່ອປົກປ້ອງສິດທິຂອງແມ່ຍິງ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ. ຂອບເຂດວຽກທາງດ້ານນິຕິກຳ ແລະ ການຈັດຕັ້ງ ເພື່ອການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ລວມມີ ນະໂຍບາຍ ຂອງ ພັກປະຊາຊົນປະຕິວັດລາວ, ລັດຖະທຳມະນູນ ແລະ ກົດໝາຍຕ່າງ ໆ, ສະຫະພັນແມ່ຍິງລາວ, ແລະ ຄະນະກຳມະການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງລາວ (NCAW)9.

ການພັດທະນາເຫຼົ່ານີ້, ພ້ອມທັງ ການສ້າງ ໂຄງຮ່າງ ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ໄດ້ສ້າງ ເງື່ອນ ໄຂ ທີ່ເອື້ອອຳນວຍໃຫ້ແກ່ແມ່ຍິງທຸກຊົນຊາດຊົນເຜົ່າໄດ້ສາມາດປັບປຸງສະພາບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີ ຂຶ້ນ. ບັນດາ ອົງການຈັດຕັ້ງຂອງພັກ ແລະ ລັດ ເຊັ່ນ ສະຫະພັນແມ່ຍິງລາວ ມີຖານະທີ່ດີກວ່າເກົ່າໃນການປັບປຸງຄວາມ ເປັນເອກະພາບພາຍໃນສັງຄົມໃຫ້ແຂງແກ່ນຂຶ້ນ ພ້ອມທັງໃຫ້ການສຶກສາ ແລະປຸກລະດົມ ແມ່ຍິງໃຫ້ເຂົ້າຮ່ວມຢ່າງ ຫ້າວຫັນໃນການປ້ອງກັນ ແລະສ້າງສາພັດທະນາປະເທດຊາດ. ວຽກງານນີ້ແມ່ນລວມທັງການຊ່ວຍໃຫ້ ແມ່ຍິງລາວ

---

[8] ຟັງຫາງສຽງຂອງຊາວໜຸ່ມ. ອົງການຈັດຕັ້ງຊາວໜຸ່ມລາວ (LYU), ສະຫະພັນແມ່ຍິງລາວ (LWU), ກຳແພງນະຄອນວຽງຈັນ ແລະ ອົງການຊ່ວຍເຫຼືອເດັກຂອງອັງກິດ. 1998

[9] ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 37/ນຍ, 1 ເມສາ, 2003

ທຸກຊົນຊາດຊົນເຜົ່າ ໄດ້ຮັບສິດທິທາງດ້ານນິຕິກຳ ແລະ ສັງຄົມ ໃນການມີ ຄວາມເປັນອິດສະລະພາບ ແລະ ປະຊາທິປະໄຕ.

### *2.6.1 ລັດຖະທຳມະນູນລາວ*

ອີງຕາມລັດຖະທຳມະນູນ ປີ 1991, ສປປ ລາວ ອອກກົດໝາຍໃຫ້ແມ່ຍິງ ມີສິດທິກ່ຽວກັບທີ່ດິນ, ຄອບຄົວ ແລະ ເສດຖະກິດ, ແລະ ສິດທິ ໃນການເຮັດສັນຍາ (ມາດຕາ 7) ແລະ ການຮັບເງິນກູ້ (ມາດຕາ 47). ສິດທິອື່ນໆ ແມ່ນໃຫ້ໄວ້ຢູ່ໃນມາດຕາ 260, ກົດໝາຍແຮງງານ ປີ 1994 ແມ່ນຄືດັ່ງຕໍ່ໄປນີ້: ສິດສະເໝີພາບໃນວຽກເຮັດງານທຳ (ມາດຕາ 2); ເງິນເດືອນເທົ່າທຽມກັນ (ມາດຕາ 39); ປະກັນໄພສັງຄົມ (ມາດຕາ 47 ແລະ 54), ກໍ່ຄື ສິດທິທາງດ້ານການເມືອງ ເພື່ອເຂົ້າຮ່ວມໃນສະພາ, ສ້າງນະໂຍບາຍ ແລະ ກົດໝາຍ; ສິດທິຂອງຄວາມເປັນແມ່ (ມາດຕາ 17 ແລະ 34); ແລະ ໄດ້ຮັບການສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ (ມາດຕາ 25).

### *2.6.2 ກົດໝາຍອາຍາລາວ*

ກົດໝາຍອາຍາລາວ (1992) ບໍ່ໄດ້ເວົ້າເຖິງ ບັນຫາຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວແຕ່ເວົ້າວ່າ ໃນກໍລະນີການກະທຳຜິດຮ້າຍແຮງຕໍ່ສັງຄົມ ຖ້າວ່າບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍກໍຈະດຳເນີນຄະດີບໍ່ໄດ້ຄື: ການທຳຮ້າຍຮ່າງກາຍ ລະຫວ່າງຍາດພີ່ນ້ອງໃກ້ຊິດທີ່ບໍ່ມີບາດເຈັບສາຫັດ ຫຼື ບໍ່ເສຍອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດ, ການລ່ວງລະເມີດສິດທິສ່ວນຕົວ.

ການຂົ່ມຂືນທຳຊຳເລົາ ຖືວ່າເປັນການກະທຳຜິດທາງອາຍາທີ່ຮ້າຍແຮງ, ແລະ ກົດໝາຍໄດ້ກ່າວໄວ້ວ່າບຸກຄົນໃດຫາກໄດ້ໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫຼົບ, ໃຊ້ສິ່ງມຶນເມົາ ຫຼື ໃຊ້ວິທີອື່ນໆທີ່ເຮັດໃຫ້ຜູ້ຍິງທີ່ບໍ່ແມ່ນເມຍຂອງຕົນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອກະທຳຊຳເລົາຈະຖືກລົງໂທດຕັດອິດສະລະພາບແຕ່ສາມປີ ຫາ ຫ້າປີ. (ມາດຕາ 22)

ໃນກໍລະນີທີ່ ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນກະທຳຊຳເລົາ ແມ່ຍິງ ທີ່ມີອາຍຸແຕ່ສິບຫ້າປີ ຫາ ສິບແປດປີ ຫຼື ທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ຫຼື ໃນການປິ່ນປົວຂອງຕົນຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ. ໃນກໍລະນີທີ່ ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນກະທຳຊຳເລົາດ້ວຍວິທີປ່ຽນຍຽນກັນ, ຂົ່ມຂືນກະທຳຊຳເລົາເດັກທີ່ມີອາຍຸຕໍ່າກວ່າສິບຫ້າປີ, ໄດ້ທຳຮ້າຍຮ່າງກາຍແມ່ຍິງ ໃນເວລາຂົ່ມຂືນ ຫຼື ເຮັດໃຫ້ແມ່ຍິງພິການຕະຫຼອດຊີວິດ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ.

ໃນກໍລະນີທີ່ ຜູ້ກະທຳຜິດຫາກໄດ້ຂົ່ມຂືນກະທຳຊຳເລົາແລ້ວ ໄດ້ຂ້າແມ່ຍິງນັ້ນຖິ້ມຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ, ຫຼື ຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ. ມາດຕາ 120 ຂອງກົດໝາຍກ່າວໄວ້ວ່າ "ບຸກຄົນໃດຫາກໄດ້ມີເພດສຳພັນກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕໍ່າກວ່າສິບຫ້າປີຈະຖືກລົງໂທດ ຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ".

ການຂົ່ມຂືນທຳຊຳເລົາລະຫວ່າງຜົວ-ເມຍ, ຊຶ່ງແມ່ນຝ່າຍໜຶ່ງຕ້ອງການຢາກມີເພດສຳພັນ ແຕ່ອີກຝ່າຍໜຶ່ງບໍ່ຕ້ອງການ, ຜູ້ທີ່ຕ້ອງການພັດໃຊ້ກຳລັງ ຊຶ່ງອາດຈະແມ່ນດ້ວຍວາຈາ ຫຼື ຕໍ່ຮ່າງກາຍກໍ່ຕາມ ເບິ່ງແລ້ວຢູ່ ສປປ ລາວ ຍັງຖືວ່າເລື່ອງນີ້ ເປັນເລື່ອງ ບໍ່ຜິດກົດໝາຍເທື່ອ.

### *2.6.3 ຄະນະກຳມະກາ ແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວ.*

ໃນປີ 2002, ສປປ ລາວ ໄດ້ສ້າງຕັ້ງ ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (NCAW)[10], ຊຶ່ງເປັນການຍິນຍອມຕາມ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການກຳຈັດການຈຳແນກແມ່ຍິງ ໃນທຸກຮູບການ (CEDAW)[11]. NCAW ແມ່ນອົງການຈັດຕັ້ງຂອງລັດ ເຊິ່ງມີໜ້າທີ່ອັນຕົ້ນຕໍເປັນເສນາທິການໃຫ້ແກ່ ລັດຖະບານ ໃນການກຳນົດນະໂຍບາຍແຫ່ງຊາດ ແລະ ແຜນດຳເນີນງານເຊີງຍຸດທະສາດ ເພື່ອສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃນທຸກຂົງເຂດ ແລະ ທຸກລະດັບໃນສັງຄົມ. ໃນນາມທີ່ເປັນຈຸດລວມສູນແຫ່ງຊາດ, ຄະນະກຳມະການນີ້ປະສານງານຢ່າງໃກ້ຊິດກັບອຳນາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງ ລັດຖະບານ. ໜ້າທີ່ອັນຕົ້ນຕໍຂອງ NCAW ແມ່ນການສະໜັບສະໜູນ, ສົ່ງເສີມ ແລະ ປົກປ້ອງ ສິດຜົນປະໂຫຍດ ແລະ ສິດທິຂອງແມ່ຍິງ ໃນຊີວິດການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ຄອບຄົວ ໂດຍສອດຄ່ອງກັບ ແນວທາງນະໂຍບາຍຂອງພັກ ແລະ ຂອງລັດ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ, ແລະ ສອດຄ່ອງກັບສົນທິສັນຍາ ສາກົນ ທີ່ ສປປ ລາວ ໄດ້ ເຂົ້າຮ່ວມເປັນພາຄີ.

### *2.6.4 ສະຫະພັນແມ່ຍິງລາວ*

ສະຫະພັນແມ່ຍິງລາວ (LWU) ແມ່ນກົງຈັກແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງລາວ. ສະຫະພັນແມ່ຍິງລາວເປັນພາກສ່ວນໜຶ່ງຢູ່ໃນລະບົບການເມືອງ ຂອງ ສປປ ລາວ ແລະ ມີ ລະບົບສາຍໄຍການຈັດຕັ້ງແຕ່ສູນກາງ ລົງຮອດຮາກຖານ. ສະຫະພັນແມ່ຍິງລາວ ຍັງເປັນຂົວຕໍ່ລະຫວ່າງ ພັກ-ລັດ ແລະ ແມ່ຍິງລາວບັນເຜົ່າ, ບັນດາຊັ້ນຄົນ.

ສະຫະພັນແມ່ຍິງລາວ ສົ່ງເສີມ ແລະ ຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ລັດຖະທຳມະນູນ, ແລະ ກົດໝາຍຂອງລັດ ທີ່ພົວພັນເຖິງຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ. ສະຫະພັນແມ່ຍິງລາວ ຍັງສົ່ງເສີມດ້ານການສຶກສາ, ຝຶກອົບຮົມ ແມ່ຍິງໃຫ້ກາຍເປັນ "ແມ່ຍິງລາວ 3 ດີ"[12] ເພື່ອຄຸນນະພາບຊີວິດອັນສົດໃສຂອງແມ່ຍິງ ແລະ ເດັກນ້ອຍ. ນອກຈາກນີ້, ສະຫະພັນແມ່ຍິງລາວຍັງປົກປ້ອງຜົນປະໂຫຍດຂອງ ແມ່ຍິງລາວ ບັນດາເຜົ່າ, ແລະ ເຂົ້າຮ່ວມໃນການຍົກລະດັບຈິດສຳນຶກໃຫ້ແກ່ສາທາລະນະຊົນກ່ຽວກັບ ສິດທິ ຂອງແມ່ຍິງ. ໂດຍຜ່ານ ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ (GRID), ສະຫະພັນແມ່ຍິງລາວໄດ້ຮ່ວມມືຢ່າງໃກ້ຊິດ ກັບອົງການຈັດຕັ້ງຕ່າງໆ ຂອງລັດເຊັ່ນ: ສູນສະຖິຕິແຫ່ງຊາດ (NSC), ຄະນະກຳ

---

[10] ດຳລັດຂອງນາຍົກລັດຖະມົນຕີ ສະລັບເລກທີ 37/ນຍ ລົງວັນທີ 1 ເມສາ 2003

[11] CEDAW (1992) ຄວາມຮຸນແຮງຕໍ່ແມ່ຍິງ. ຄຳແນະນຳລວມ ເລກທີ. 19, ສະໄໝທີ 11, ເອກະສານ ສະຫະປະຊາຊາດ CEDAW/C/1992/L.1/Add.15, ນິວຢອກ: ສະຫະປະຊາຊາດ

[12] ພົນລະເມືອງທີ່ດີ, ການພັດທະນາທີ່ດີ ແລະ ຄອບຄົວວັດທະນະທຳທີ່ດີ.

ມະການແຜນການ ແລະ ການຮ່ວມມື (CPC) ແລະ ກົມຂໍ້ມູນຂ່າວສານ ແລະ ວັດທະນາທຳ ເພື່ອເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ບົດບາດຍິງ-ຊາຍ, ຍົກລະດັບຈິດສຳນຶກກ່ຽວກັບ ບົດບາດຍິງ-ຊາຍ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ.

ສະຫະພັນແມ່ຍິງລາວ ໄດ້ສ້າງຕັ້ງ ສຳນັກງານທີ່ປຶກສາແມ່ຍິງ (WCO) ພາຍໃຕ້ການອຸປະຖຳ ຂອງ ກົມສິດທິ ແລະຜົນປະໂຫຍດຂອງແມ່ຍິງ. ໃນລະຫວ່າງເດືອນກັນຍາ 2002 ແລະ ສິງຫາ 2003, WCO ໄດ້ໃຫ້ການບໍລິການທີ່ປຶກສາ ຈຳນວນ 122 ກໍລະນີ ແລະ ໄດ້ພົບເຫັນວ່າ ແມ່ຍິງ ໄດ້ມາຮ້ອງທຸກ ກ່ຽວກັບ: ການຂົ່ມຂືນທຳຊຳເລົາ ແລະສຸກຂະພາບສືບເນື່ອງມາຈາກການຂົ່ມຂືນ; ການລວນລາມທາງເພດເດັກ; ການຄ້າມະນຸດ ແລະ/ຫຼື ການຂາຍປະເວນີ; ການທາລຸນຮ່າງກາຍ; ການຖືພາດ້ວຍຄວາມຈຳໃຈ; ແລະ ການບີບບັງຄັບໃຫ້ທຳແທ້ງ (LWU, WCO). ສຳນັກງານທີ່ປຶກສາແມ່ຍິງ ໄດ້ໃຫ້ຄວາມເປັນມິດແກ່ແມ່ຍິງ ແລະ ຊ່ວຍເຫຼືອເຂົາເຈົ້າ ໃນການຂຽນຄຳຮ້ອງທຸກຕໍ່ສານ, ຕິດຕາມ ການເຄື່ອນໄຫວ ແລະ ນຳພາເຂົາເຈົ້າໄປໂຮງໝໍ. ຜ່ານມາ ເຫັນວ່າ ຜົນຂອງເກືອບໝົດທຸກກໍລະນີແມ່ນຢູ່ໃນ ທາງບວກ ເພາະວ່າ ແມ່ຍິງ ໄດ້ຮັບການຊ່ວຍເຫຼືອທັງທາງກາຍແລະໃຈ, ແລະ ໄດ້ຮັບການປົກປ້ອງ ຈາກການສູນເສຍ ຄວາມເຊື່ອໝັ້ນໃນຕົວເອງ, ຜົນປະໂຫຍດ ແລະ ສັກສີ ຂອງ ຕົນ.

ສະຫະພັນແມ່ຍິງ ກຳລັງວາງແຜນຈະດຳເນີນໂຄງການຕ້ານການຄ້າມະນຸດ ແລະ ຄວາມຮຸນແຮງຕໍ່ແມ່ຍິງ. ໂຄງການນີ້ໄດ້ຮັບຄວາມອຸປະຖຳຈາກ UNIFEM ແລະ ຈະເປັນ ພື້ນຖານອັນໜຶ່ງ ໃຫ້ແກ່ການຜ່ານກົດໝາຍ ວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ຢູ່ສະພາແຫ່ງຊາດ ໃນປີ 2005. ໂຄງການຈະເວົ້າເຖິງ 6 ບັນຫາ ຄື:

- ຍົກລະດັບຈິດສຳນຶກໃຫ້ແກ່ສາທາລະນະຊົນ ກ່ຽວກັບການຄ້າມະນຸດ ແລະ ຄວາມຮຸນແຮງຕໍ່ແມ່ຍິງດ້ວຍການນຳໃຊ້ສື່;
- ດຳເນີນການສຳຫຼວດແຫ່ງຊາດ ເລື່ອງຕ້ານການຄ້າມະນຸດ ແລະຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (ຈະຕ້ອງໄດ້ກຳນົດສະຖານທີ່ສຳຫຼວດ)
- ສ້າງໜ່ວຍງານນິຕິກຳ ຮ່ວມກັບສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ອົງການຈັດຕັ້ງຊາວໜຸ່ມ, ແລະ ກະຊວງອື່ນໆ ທີ່ກ່ຽວຂ້ອງ;
- ເຂົ້າຮ່ວມໃນການທັດສະນະສຶກສາຢູ່ຕ່າງປະເທດ ກ່ຽວກັບກົດໝາຍ ເພື່ອຮຽນຮູ້ກ່ຽວກັບ ກົດໝາຍ ທີ່ກ່ຽວຂ້ອງ;
- ຈັດຊຸດຝຶກອົບຮົມກ່ຽວກັບການຮ່າງກົດໝາຍ; ແລະ
- ສ້າງຕັ້ງ ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແຫ່ງຊາດ (NCAW).

ໃນຕົ້ນປີ 1980 ແມ່ຍິງລາວ ໄດ້ເຂົ້າຮ່ວມຈັດຕັ້ງປະຕິບັດນະໂຍບາຍພາຍໃນ ແລະ ຕ່າງປະເທດ ຂອງລັດຖະບານຢ່າງຫ້າວຫັນ ແລະ ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອ ຈາກປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ. ສະຫະພັນແມ່ຍິງລາວ ໄດ້ສົ່ງຕົວແທນຂອງຕົນເຂົ້າຮ່ວມ ກອງປະຊຸມ

ສາກົນ ແລະ ພາກພື້ນ ເພື່ອແມ່ຍິງເປັນຕົ້ນ "ກອງປະຊຸມໂລກກ່ຽວກັບ ທິດສະວັດ ແຫ່ງຄວາມສະເໝີພາບຂອງແມ່ຍິງ, ການພັດທະນາ ແລະ ສັນຕິພາບ". ໃນປີ 2000, ສະມາຊິກ ຂອງສະຫະພັນແມ່ຍິງລາວ ແລະ ອົງການຈັດຕັ້ງບໍ່ສັງກັດລັດຖະບານຕ່າງໆ ຢູ່ໃນພາກພື້ນ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ຂອງເຄືອຂ່າຍອະນຸພາກພື້ນແມ່ນ້ຳຂອງ ກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໂດຍສຸມໃສ່ 4 ບັນຫາ ຄື: ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ; ຄວາມຮຸນແຮງຢູ່ໃນຊຸມຊົນ; ການຄ້າມະນຸດ ແລະ ການບັງຄັບໃຫ້ຂາຍປະເວນີ; ແລະ ການລວນລາມທາງເພດຢູ່ໃນສະຖານທີ່ເຮັດວຽກ.

ປະຈຸບັນ, ສະຫະພັນແມ່ຍິງລາວ ກຳລັງດຳເນີນການສຶກສາຄົ້ນຄວ້າ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ ເຊິ່ງອົງການ UNICEF ເປັນຜູ້ໃຫ້ການສະໜັບສະໜູນ. ໂຄງການນີ້ ແມ່ນແນໃສ່ບັນທຶກຄວາມຖີ່ ແລະ ລະດັບຂອງຄວາມຮຸນແຮງ ແລະ ການຄ້າມະນຸດ ຢູ່ພາຍໃນຄອບຄົວ ຢູ່ ສປປ ລາວ ດ້ວຍການສຳພາດ ຜູ້ຊາຍ ແລະ ແມ່ຍິງ ຂອງຊຸມຊົນຢູ່ໃນ 6 ແຂວງ ຄື: ກຳແພງນະຄອນວຽງຈັນ, ແຂວງຊຽງຂວາງ, ແຂວງຫຼວງນ້ຳທາ, ແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງເຊກອງ.

### *2.6.5 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ*

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ມີການສຶກສາຂະໜາດນ້ອຍກ່ຽວກັບການຄ້າມະນຸດ ແລະ ການທາລຸນທາງເພດຕໍ່ເດັກນ້ອຍ. ກະຊວງດັ່ງກ່າວນີ້ ເປັນປະທານຄະນະກຳມະການ ຫຼາຍຂະແໜງການ ແກ້ໄຂບັນຫາການຄ້າແຮງງານເດັກ ແລະ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບບັນຫານີ້ເຖິງ ສາມ ສີ່ ຄັ້ງ. ເຖິງຢ່າງໃດກໍ່ດີ, ຢູ່ໃນ ສປປ ລາວ. ຍັງຂາດການປູກຈິດສຳນຶກ ແລະ ການເກັບກຳຂໍ້ມູນຢ່າງສະໝ່ຳສະເໝີກ່ຽວກັບບັນຫາຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

### *2.6.6 ອຳນາດການປົກຄອງບ້ານ*

ບັນຫາ ຄວາມຮຸນແຮງ ຢູ່ໃນຄອບຄົວ ແລະ ການຂົ່ມຂືນກະທຳຊຳເລົາ ແມ່ນໄດ້ຖືກຍົກຂຶ້ນ ເປັນຄັ້ງທຳອິດໃນລະດັບຊາດ ເມື່ອປີ 1998, ເຊິ່ງເວລານັ້ນ ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ແລະ ສະຫະພັນແມ່ຍິງລາວ ໂດຍຮ່ວມມືກັບ ສູນສະຖິຕິແຫ່ງຊາດ ເຮັດການສຳຫຼວດຢູ່ 3 ແຂວງ ແລະ ກຳແພງນະຄອນວຽງຈັນ. ຜົນຂອງການສຳຫຼວດຊີ້ໃຫ້ເຫັນວ່າ ແມ່ຍິງ ຈຳນວນ 29 ຄົນ ໃນ 2,399 ຫຼັງຄາເຮືອນ (1.2%) ໄດ້ປະເຊີນກັບຄວາມຮຸນແຮງທາງເພດ ໃນໄລຍະ 12 ເດືອນຜ່ານມານັ້ນ. ອີງໃສ່ການສຳຫຼວດດຽວກັນນີ້, ມີພຽງແຕ່ເຄິ່ງດຽວເທົ່ານັ້ນ (ແມ່ຍິງ ຈຳນວນ15 ຄົນ ໃນ 29 ຄົນ) ໄດ້ລາຍງານ ເຫດການດັ່ງກ່າວໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບເຊັ່ນ: ແມ່ຍິງ ຈຳນວນ 11 ຄົນ ໄດ້ລາຍງານໃຫ້ແກ່ ອຳນາດການປົກຄອງບ້ານ, 2 ຄົນ ລາຍງານໃຫ້ແກ່ ຕຳຫຼວດ ແລະ 2 ຄົນ ລາຍງານສານ.

# 3. ວິທີການສຶກສາຄົ້ນຄວ້າ

## 3.1 ການກະກຽມ ແລະ ການຝຶກອົບຮົມໃຫ້ແກ່ທີມງານ

ກຸ່ມພັດທະນາບົດບາດຍິງ-ຊາຍ (GDG) ໄດ້ແຕ່ງຕັ້ງທີມງານຄົ້ນຄ້ວາ ຊຶ່ງປະກອບດ້ວຍພະນັກງານຂອງ GDG ເອງ ແລະ ຕົວແທນຈາກອົງການຈັດຕັ້ງສະມາຊິກຂອງຕົນ. ທີມງານນີ້ເປັນຂໍກຸນແຈໃນການວາງແຜນ ແລະ ການດຳເນີນການສຶກສາຄົ້ນຄວ້າ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງຢູ່ໃນຄອບຄົວ.

ກ່ອນການວາງແຜນກຳນົດວິທີການຄົ້ນຄ້ວາ, ທີມງານໄດ້ດຳເນີນການເກັບກຳຂໍ້ມູນມືສອງ, ສັງລວມຂໍ້ມູນແຫ່ງຊາດທີ່ກ່ຽວຂ້ອງໃນ ສປປ ລາວ, ນະໂຍບາຍຂອງລັດຖະບານ ແລະ ບັນຫາກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ. ນອກຈາກນີ້, ຍັງໄດ້ເກັບກຳຂໍ້ມູນຂອງພາກພື້ນກໍ່ຄືສາກົນຈາກບັນດາ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ບົດຖະແຫຼງການຂອງສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນ.

ເພື່ອຍົກລະດັບຄວາມອາດສາມາດ ແລະ ຄວາມເຂົ້າໃຈ, ທີມງານເອງໄດ້ຮັບການຝຶກອົບຮົມ ກ່ຽວກັບວິທີການຄົ້ນຄວ້າ ເຊິ່ງໄດ້ຈັດຂຶ້ນທີ່ວຽງຈັນເປັນເວລາ 2 ວັນ ໂດຍມີຄູຝຶກຈາກມະຫາວິທະຍາໄລມະຫິດົນ ປະເທດໄທມາໃຫ້ຄຳອະທິບາຍ ໂດຍສັງເຂບກ່ຽວກັບສະພາບລວມຂອງວິທີການ ແລະ ແນວຄວາມຄິດຂອງວິທະຍາສາດສັງຄົມສຳລັບການຄົ້ນຄວ້າ ບັນຫາ ຄວາມຮຸນແຮງຕໍ່ແມ່ຍິງ (VAW). ຫົວເລື່ອງຂອງການຝຶກອົບຮົມລວມມີ ຄວາມຮູ້ພື້ນຖານກ່ຽວກັບ ບົດບາດຍິງ-ຊາຍ ຢູ່ໃນສັງຄົມ, ບົດຮຽນຂອງແມ່ຍິງກ່ຽວກັບ ຄວາມຮຸນແຮງ, ແລະ ວິທີການອອກແບບແບບສອບຖາມ ແລະ ການເກັບກຳຂໍ້ມູນ. ຕົວຢ່າງ ຂອງບົດຄົ້ນຄວ້າທີ່ຜ່ານມາກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງກໍ່ໄດ້ນຳມາວິເຄາະ ແລະ ສົນທະນາກັນ.

ທີມງານຄົ້ນຄວ້າ ໄດ້ດຳເນີນການທັດສະນະສຶກສາ ເພື່ອແລກປ່ຽນຄຳຄິດຄຳເຫັນ ແລະ ເຕັກນິກ ໃນການຄົ້ນຄວ້າກັບອົງການຈັດຕັ້ງຕ່າງໆ ຢູ່ປະເທດຫວຽດນາມ. ອົງການຈັດຕັ້ງຕ່າງໆທີ່ໄດ້ຢ້ຽມຢາມລວມມີສະພາປະຊາຊົນຫວຽດນາດ, ສະຫະພັນແມ່ຍິງຫວຽດນາມ ແລະ ສະຖາບັນພັດທະນາປະຊາຊົນ ທີ່ນະຄອນຫຼວງ ຮ່າໂນ້ຍ. ໃນຊ່ວງໄລຍະການທັດສະນະສຶກສານີ້, ທີມງານໄດ້ຮຽນຮູ້ກ່ຽວກັບວິທີການ ແລະ ປະສົບການຂອງອົງການຈັດຕັ້ງເຫຼົ່ານີ້ໃນການດຳເນີນການຄົ້ນຄວ້າ, ລວມທັງ ການເກັບກຳຂໍ້ມູນ ແລະ ການປະສານງານໃນການຄົ້ນຄວ້າ.

ທີມງານຄົ້ນຄວ້າໄດ້ຮ່ວມກັນອອກແບບສອບຖາມເພື່ອການສຳພາດ ໂດຍປຽບທຽບກັບແບບສອບຖາມທີ່ຜ່ານມາກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ຈາກບັນດາປະເທດຢູ່ໃນພາກພື້ນພ້ອມທັງປັບປຸງໃຫ້ມີຄວາມເໝາະສົມກັບສະພາບຕົວຈິງຢູ່ໃນລາວ, ສະມາຊິກທີມງານ ແຕ່ລະຄົນກໍ່ໄດ້ນຳເອົາແບບສອບຖາມນີ້ໄປນຳສະເໜີຂໍຄຳຄິດຄຳເຫັນນຳອົງການຈັດຕັ້ງຂອງໃຜມັນ. ຫຼັງຈາກນັ້ນທີມງານ ກໍ່ໄດ້ທຳການທົດສອບແບບສອບຖາມນີ້ຢູ່ ແຂວງສາລະວັນ ແລະ ນະຄອນຫຼວງວຽງຈັນເພື່ອເບິ່ງວ່າມັນເໝາະສົມຫຼືບໍ່. ການປະເມີນຜົນແມ່ນລວມເຖິງການໃຊ້ຖ້ອຍຄຳ, ຄວາມເໝາະສົມ ແລະ ຄວາມເຂົ້າໃຈຄຳຖາມນັ້ນ. ທີມງານໄດ້ພົບປະກັນຢ່າງສະໝ່ຳສະເໝີ ເພື່ອປັບປຸງແບບສອບຖາມໂດຍອີງໃສ່ຄຳຄິດຄຳເຫັນທີ່ໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການທົດສອບເກັບກຳຂໍ້ມູນໃນແຕ່ລະແຂວງ.

ການຝຶກອົບຮົມຄັ້ງທີສອງ ກໍ່ໄດ້ຈັດຂຶ້ນອີກໜຶ່ງວັນເພື່ອເພີ່ມຄວາມອາດສາມາດໃຫ້ແກ່ທີມງານກ່ຽວກັບການວິເຄາະຂໍ້ມູນ ແລະ ການຂຽນບົດລາຍງານ, ໂດຍສະເພາະແມ່ນການນຳໃຊ້ ໂປແກຣມ ສະຖິຕິ ເພື່ອການວິເຄາະທາງວິທະຍາສາດ-ສັງຄົມ. ການຝຶກອົບຮົມນີ້ ແມ່ນສຸມໃສ່ ການວິເຄາະຂໍ້ມູນທາງດ້ານປະລິມານ ເປັນຫຼັກ.

## 3.2 ການສຳຫຼວດ ແລະ ການເກັບກຳຂໍ້ມູນ

### *3.2.1 ແບບສອບຖາມເພື່ອການສຳພາດ*

ແບບສອບຖາມ ທີ່ນຳໃຊ້ຢູ່ໃນການສຳຫຼວດຄັ້ງນີ້ ແມ່ນ ມີທັງເປັນພາສາລາວ ແລະ ພາສາອັງກິດ (ໃບຊ້ອນທ້າຍ 1). ເຖິງຢ່າງໃດກໍ່ດີ, ເມື່ອເວລາສຳພາດ ແມ່ນນຳໃຊ້ແຕ່ພຽງແບບສອບຖາມທີ່ເປັນພາສາລາວເທົ່ານັ້ນ. ການປະຕິບັດງານຢູ່ບາງບ້ານແມ່ນຈຳເປັນຕ້ອງໄດ້ແປພາສາ, ໂດຍສະເພາະຢູ່ແຂວງບໍ່ແກ້ວ, ເພາະວ່າມີໜ້ອຍຄົນທີ່ເວົ້າພາສາ ລາວໄດ້.

ແບບສອບຖາມ ແມ່ນມີທັງສຳລັບຜູ້ຊາຍ ແລະ ແມ່ຍິງ ທີ່ແຕ່ງງານແລ້ວ ແລະ ຖາມເຖິງເລື່ອງຕ່າງໆຕໍ່ໄປນີ້: ຂໍ້ມູນທົ່ວໆໄປ, ການຕັດສິນໃຈຢູ່ໃນຄອບຄົວ, ສຸຂະພາບຈະເລີນພັນພັນ, ສະພາບລູກ, ສະພາບຄູ່ສົມລົດ, ແນວຄວາມຄິດກ່ຽວກັບບົດບາດຍິງ-ຊາຍ, ຄວາມສຳພັນລະຫວ່າງຜົວ-ເມຍ, ການໄດ້ຮັບຄວາມເຈັບປວດ, ຜົນກະທົບ ແລະ ການແກ້ໄຂບັນຫາຕ່າງໆ.

ຜູ້ສຳພາດຕ້ອງບັນທຶກທຸກໆ ກໍລະນີສຶກສາທີ່ເຫັນວ່າເໝາະສົມ. ກໍລະນີສຶກສາເຫຼົ່ານີ້ບັນລະຍາຍເຖິງຊີວິດສ່ວນຕົວຂອງແມ່ຍິງ ແລະ ຜູ້ຊາຍ ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງຢູ່ໃນຄອບຄົວ.

### *3.2.2 ທີມງານ*

ທີມງານສຶກສາ ປະກອບດ້ວຍພະນັກງານຊຶ່ງເປັນຄົນລາວທັງໝົດ. ພະນັກງານ GDG ເຮັດວຽກຮ່ວມກັບພະນັກງານຂອງອົງການຈັດຕັ້ງສະມາຊິກຂອງ GDG, ອາສາສະໝັກ ແລະ ລັດຖະກອນ ຢູ່ໃນແຕ່ລະແຂວງ. ພະນັກງານຂອງ GDG ຮັບຜິດຊອບ ໃນການຮັບປະກັນໃຫ້ການສຳພາດດຳເນີນໄປຢ່າງມີຄວາມລະອຽດລະອໍ ແລະ ກວດເບິ່ງແບບສອບຖາມຄືນ ພາຍຫຼັງການເກັບກຳຂໍ້ມູນ. ສະມາຊິກທີມງານຊ່ວຍສຳພາດ ແລະ ເກັບກຳຂໍ້ມູນ.

### *3.2.3 ການສຸ່ມເອົາຕົວຢ່າງ*

ເນື່ອງຈາກວ່າອີງຕາມນະໂຍບາຍຂອງລັດຖະບານ ແຕ່ລະ ໂຄງການທີ່ຈັດຕັ້ງປະຕິບັດ ຢູ່ໃນ ສປປ ລາວ ຈະຕ້ອງໄດ້ຜ່ານການຮັບຮອງເອົາຈາກລັດຖະບານ, ສະນັ້ນ ການຄັດເລືອກເອົາພື້ນທີ່ເປົ້າໝາຈຶ່ງໄດ້ອີງໃສ່ບັນດາບ້ານເປົ້າໝາຍຂອງໂຄງການທີ່ເປັນອົງການຈັດຕັ້ງສະມາຊິກຂອງ GDG ທີ່ໄດ້ຈັດຕັ້ງປະຕິບັດມາແລ້ວ.

ການຄັດເລືອກເອົາບ້ານ ແມ່ນ ໄດ້ຜ່ານການປຶກສາຫາລືກັບຫົວໜ້າໂຄງການ ຂອງ ອົງການຈັດຕັ້ງສະມາຊິກ. ເຊິ່ງທາງໂຄງການ ໄດ້ແນເປົ້າໝາຍໃສ່ ກຸ່ມແມ່ຍິງ ແລະ ຜູ້ຊາຍທີ່ແຕ່ງງານແລ້ວມີອາຍຸ ຕັ້ງແຕ່ 15 ປີ ຫາ 50 ປີ. ແຕ່ລະຄົນ ທີ່ນອນຢູ່ໃນບັນທັດຖານດັ່ງກ່າວນີ້ຈະມີເລກໝາຍ, ເຊິ່ງແມ່ນຈົກສະຫຼາກເອົາ ເພື່ອໃຫ້ໄດ້ລາຍຊື່ບຸກຄົນ

ທີ່ຈະສຳພາດ. ທີມງານ ໄດ້ວາງແຜນໄວ້ວ່າຈະສຳພາດ ປະມານ 30% ຂອງຈຳນວນ ຄອບຄົວທັງໝົດ, ແຕ່ວ່າ ໃນບ້ານນ້ອຍທີ່ມີຕ່ຳກວ່າ 30 ຫຼັງຄາເຮືອນ ແມ່ນ ທຳການສຳພາດ 50% ຂອງ ຈຳນວນຄອບຄົວທັງໝົດ.

## 3.3 ການປ້ອນ ແລະ ການວິເຄາະ ຂໍ້ມູນ

ຂໍ້ມູນທີ່ເກັບກຳໄດ້ຈາກການສຳພາດ ແມ່ນ ໄດ້ປ້ອນເຂົ້າໃນ ໂປຣແກມ ສະຖິຕິ ເພື່ອການວິເຄາະທາງ ວິທະຍາສາດ-ສັງຄົມ. ກ່ອນໜ້າການວິເຄາະ, ພະນັກງານຕ້ອງຮັບປະກັນໃຫ້ໄດ້ປ້ອນຂໍ້ມູນທັງໝົດ ເຂົ້າຄອມພິວເຕີ ຢ່າງຖືກຕ້ອງ ແລະ ໄດ້ຜ່ານການກວດກາເປັນທີ່ຮຽບຮ້ອຍແລ້ວ.

ການສະຫຼູບສັງລວມ ແລະ ຄວາມຖີ່ ຂອງ ຂໍ້ມູນແມ່ນ ໄດ້ນຳໃຊ້ຄອມພິວເຕີ ກຳນົດປະເພດຂອງຂໍ້ມູນ ແລະ ຂອບເຂດ. ການສົມທຽບຂໍ້ມູນ ແມ່ນໄດ້ນຳໃຊ້ ການວິເຄາະຄວາມປ່ຽນແປງ (ANOVA) ເພື່ອທົດສອບເບິ່ງ ຂໍ້ສົມມຸດຕິຖານທີ່ວ່າ ວິທີຕ່າງໆ ແມ່ນ ເທົ່າທຽມກັນ. ການຈັດລຳດັບ ຂອງ Spearman ໄດ້ຖືກເອົາມານຳໃຊ້ ເພື່ອວັດແທກການພົວພັນລະຫວ່າງ ຕົວແປ ແລະ ລຳດັບຊັ້ນ. Logistic Regression ກໍ່ໄດ້ຖືກເອົາມານຳໃຊ້ ເພື່ອທຳນາຍເບິ່ງລັກສະນະພິເສດ ຫຼື ຜົນໄດ້ຮັບໂດຍອີງໃສ່ຄ່າຂອງບັນດາຕົວແປທຳນາຍ.

# 4. ສະຖານທີ່ລົງສຳຫຼວດ

## 4.1 ສະພາບທົ່ວໄປຂອງປະເທດລາວ

ສປປ ລາວ ແມ່ນປະເທດໜຶ່ງທີ່ບໍ່ມີທາງອອກສູ່ທະເລ ແລະ ມີພື້ນຖານເສດຖະກິດໂດຍອີງໃສ່ດ້ານກະສິກຳເປັນພື້ນຖານ. ສປປ ລາວ ມີຊາຍແດນທິດເໜືອ ຕິດກັບ ສາທາລະນະລັດປະຊາຊົນຈີນ, ທິດໃຕ້ຕິດກັບລາຊະອານາຈັກກຳປູເຈຍ, ທິດຕາເວັນອອກຕິດກັບສາທາລະນະລັດສັງຄົມນິຍົມຫວຽດນາມ, ທິດຕາເວັນຕົກຕິດກັບລາຊະອານາຈັກໄທ ແລະ ທິດຕາເວັນຕົກສ່ຽງເໜືອຕິດກັບສະຫະພາບມຽນມາ. ສປປ ລາວ ມີພົນລະເມືອງທັງໝົດ 5.2 ລ້ານ ຄົນ, ເກືອບທັງໝົດແມ່ນອາໃສຢູ່ໃນເຂດຊົນນະບົດ (80%), ຄວາມໜາແໜ້ນ ແມ່ນ 22 ຄົນ/ຕາກິໂລແມັດ. ມີພົນລະເມືອງຫຼາຍກວ່າ 65% ທີ່ນັບຖືສາດສະໜາພຸດ ແລະ 33% ມີຄວາມເຊື່ອຖືຜີ. ລັດຖະບານຮັບຮູ້ຢ່າງເປັນທາງການວ່າຢູ່ ສປປ ລາວ ມີ 49 ເຜົ່າຊົນ, ໃນນີ້ເຜົ່າລາວກວາມເອົາ 30% ເທົ່ານັ້ນ ຂອງພົນລະເມືອງທັງໝົດ.

ຜູ້ທຸກຍາກ ສ່ວນຫຼາຍ ແມ່ນບັນດາຊົນເຜົ່າທີ່ອາໃສຢູ່ໃນເຂດຫ່າງໄກສອກຫຼີກ ຊຶ່ງເປັນພື້ນທີ່ ທີ່ບໍ່ມີທາງເຂົ້າໄປເຖິງ ແລະ ເຂົາເຈົ້າຫາລ້ຽງຊີບແບບບໍ່ມີຄວາມໝັ້ນຄົງ. ພວກເຂົາອາໃສຢູ່ໃນພື້ນທີ່ປ່າເຂດເນີນສູງ ແລະ ຖາງປ່າເຮັດໄຮ່ ແບບພື້ນເມືອງ (ຖາງປ່າ ແລະ ຈູດ) ແລະ ປູກພືດຜົນໝູນວຽນປະເພດ ເຂົ້າໄຮ່ ແລະ ໝາກສາລີ, ນອກນີ້ກໍ່ທຳການລ່າສັດ ແລະ ເກັບເຄື່ອງປ່າຂອງດົງ, ແລະ ປູກຝິ່ນ. ພວກເຂົາຍັງມີການລ້ຽງສັດ ເຊັ່ນດຽວກັນເປັນຕົ້ນ ໝູ, ໄກ່, ງົວ ແລະ ຄວາຍ.

ຄຸນນະພາບຊີວິດ ຂອງປະຊາຊົນລາວ ແມ່ນຍັງຕ່ຳ. ອາຍຸຍືນສະເລ່ຍຢູ່ໃນປະເທດແມ່ນ 58.7 ປີ. ຢູ່ໃນຊົນນະບົດບາງເຂດ ແມ່ຍິງ ແຕ່ງງານຕັ້ງແຕ່ເມື່ອມີອາຍຸ 18-19 ປີ. ເຖິງຢ່າງໃດກໍດີ, ແມ່ຍິງບາງຊົນເຜົ່າອາດຈະແຕ່ງງານຕັ້ງແຕ່ເມື່ອມີອາຍຸໄດ້ແຕ່ພຽງ 13 ຫຼື 14 ປີ. ພວກເຂົາເລົ່ານັ້ນ ເຮັດວຽກໜັກຕະຫຼອດລວມທັງ ຂະນະທີ່ຖືພາ, ຂາດປະລິມານສານອາຫານທີ່ພຽງພໍ ແລະ ບໍ່ມີສະຖານທີ່ຈະໄປປິ່ນປົວ ເມື່ອເວລາເຈັບເປັນພາໃຫ້ ສຸຂະພາບ ຂອງແມ່ຍິງ ຊຸດໂຊມລົງ. ອັນນີ້ ມັນສ່ອງແສງໃຫ້ເຫັນຢູ່ບ່ອນວ່າ ອັດຕາການຕາຍ ຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ຕໍ່ການເກີດມີຊີວິດແມ່ນ 1000 ຄົນ ຕໍ່ 107ຄົນ ແລະ ອັດຕາການຕາຍຂອງ ແມ່ຕໍ່ການ ເກີດລູກແມ່ນ 100 000 ຄົນ ຕໍ່ 530 ຄົນ[13]. ແມ່ຍິງ ຫຼາຍກວ່າ 85% ເກີດລູກຢູ່ກັບເຮືອນ. ຈຳນວນ ສະເລ່ຍ ຂອງເດັກນ້ອຍ ຕໍ່ ຄອບຄົວແມ່ນຂ້ອນຂ້າງສູງ 5.6 ຄົນ ຍ້ອນວ່າ ການຄຸມກຳເນີດຕ່ຳເຊິ່ງມີພຽງ (32.2%).

ທົ່ວປະເທດ ລະດັບການສຶກສາ ແມ່ນຍັງຕ່ຳ. ນັກຮຽນຢູ່ໃນເຂດຊົນນະບົດຈະຕ້ອງໄດ້ຍ່າງເປັນຊົ່ວໂມງຫຼື ຫຼາຍກວ່າເພື່ອໄປເຂົ້າໂຮງຮຽນ. ສ່ວນຫຼາຍ ພໍ່ແມ່ມັກຈະໃຫ້ລູກຊາຍເປັນຜູ້ໄປໂຮງຮຽນຫຼາຍກວ່າ, ສ່ວນລູກຍິງນັ້ນ ໃຫ້ຊ່ວຍວຽກເຮືອນການຊານ, ເບິ່ງແຍງນ້ອງນ້ອຍ ແລະ ເຮັດວຽກຢູ່ໄຮ່ຢູ່ນາ. ການແຕ່ງງານ ແຕ່ຍັງໜຸ່ມນ້ອຍ ກໍ່ພາໃຫ້ເຂົາເຈົ້າຈຳເປັນຕ້ອງໄດ້ອອກໂຮງຮຽນເຊັ່ນດຽວກັນ, ເພາະວ່າເຂົາເຈົ້າ ຕ້ອງໄດ້ອຸທິດຕົນ ມາຮັບຜິດຊອບວຽກງານໃນຖານະທີ່ເປັນເມຍ ແລະ ເປັນແມ່. ອັດຕາສ່ວນການຮູ້ໜັງສື ຂອງຜູ້ໃຫຍ່ໂດຍລວມແມ່ນ 68.5%, ແຕ່ວ່າອັດຕາສ່ວນການຮູ້ໜັງສືຂອງ ເພດຊາຍ (82%) ແລະ ອັດຕາສ່ວນການຮູ້ໜັງສືຂອງເພດຍິງ (55%) ເຫັນວ່າມີຄວາມແຕກຕ່າງກັນຫຼາຍ. ໃນແຕ່ລະເຜົ່າຊົນ, ຄວາມແຕກຕ່າງຂອງ ອັດຕາສ່ວນການຮູ້ໜັງສືນີ້ກໍ່ບໍ່ຄືກັນ ເຊັ່ນວ່າອັດຕາສ່ວນການຮູ້ໜັງສື ຂອງເຜົ່າລາວລຸ່ມ ແມ່ນ 72.9%, ເຜົ່າກຳມຸ ແມ່ນ 40.9% ແລະ ເຜົ່າລາຮູ ແມ່ນຕ່ຳ 1.6%. ຄວາມແຕກຕ່າງ ກ່ຽວກັບການຮູ້ໜັງສື ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ພາຍໃນແຕ່ລະເຜົ່າ ກໍ່ແມ່ນເຫັນໄດ້ຊັດເຊັ່ນດຽວກັນ

ບົດລາຍງານ ຢູ່ໃນ LECS 2[14] ໄດ້ເຜີຍໃຫ້ເຫັນວ່າ ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແມ່ນມີຄວາມແຕກຕ່າງກັນ. ຜູ້ຊາຍ ມີເວລາຫວ່າງ ແລະ ມີເວລາທ່ອງທ່ຽວຫຼາຍກວ່າແມ່ຍິງ, ແລະ ແມ່ຍິງ ໃຊ້ເວລາເຂົ້າໃນກິດຈະກຳທີ່ສ້າງລາຍຮັບ ແລະ ເຮັດວຽກເຮືອນການຊານຫຼາຍກວ່າຜູ້ຊາຍ ເກືອບໜຶ່ງຊົ່ວໂມງຕໍ່ວັນ. ເດັກນ້ອຍຊາຍໃຊ້ເວລາຢູ່ໂຮງຮຽນ ຫຼື ມີເວລາຫວ່າງຫຼາຍກວ່າເດັກນ້ອຍຍິງ, ສ່ວນເດັກນ້ອຍຍິງນັ້ນ ເຮັດວຽກຫຼາຍກວ່າ ເດັກນ້ອຍຊາຍ ຫຼາຍກວ່າໜຶ່ງຊົ່ວໂມງຕໍ່ວັນ. ຕົວແທນຂອງແມ່ຍິງ ຢູ່ໃນຕຳແໜ່ງນຳພາ ແມ່ນຍັງຢູ່ໃນຂີດຈຳກັດ. ໃນລະດັບຊາດ, ແມ່ຍິງມີແຕ່ພຽງ 6.2% ເທົ່ານັ້ນ, ສ່ວນຢູ່ໃນລະດັບແຂວງ ແມ່ນ 2.1%. ຖ້າເວົ້າ ໃນລະດັບ ທ້ອງຖິ່ນແລ້ວຕົວເລກນີ້ ຍິ່ງຕ່ຳລົງເພາະວ່າລັດຖະກອນມີແມ່ຍິງແຕ່ພຽງ 1.5% ເທົ່ານັ້ນ[15]. ການສຳຫຼວດປະຊາກອນລາວທີ່ເຮັດວຽກງານກະສິກຳ ໃນປີ 1999 ໄດ້ບັນທຶກໄວ້ວ່າ 10% ຄອບຄົວ ຊາວກະສິກອນມີແມ່ຍິງ ເປັນຫົວໜ້າຄອບຄົວ. ເຖິງຢ່າງໃດກໍ່ດີ, ສ່ວນຫຼາຍແລ້ວແມ່ຍິງ ເປັນຫົວໜ້າຄອບຄົວ ແມ່ນຍ້ອນວ່າຜູ້ຊາຍ ໄດ້ອອກໜີຈາກຄອບຄົວໄປ, ຫຼື

[13] ບົດລາຍງານກ່ຽວກັບການພັດທະນາມະນຸດແຫ່ງຊາດ ຂອງ ສປປ ລາວ (2001). ໂຄງການສະຫະປະຊາຊາດເພື່ອການພັດທະນາ

[14] ການສຳຫຼວດ ການໃຊ້ຈ່າຍ ແລະ ການບໍລິໂພກ ຂອງ ລາວ1997/1998, ຄະນະກຳມະການສະຖິຕິແຫ່ງຊາດ

[15] ບົດລາຍງານກ່ຽວກັບການພັດທະນາມະນຸດແຫ່ງຊາດ ຂອງ ສປປ ລາວ (2001). ໂຄງການສະຫະປະຊາຊາດເພື່ອການພັດທະນາ

ວ່າ ເປັນຄົນພິການ ແລະ ບໍ່ສາມາດທີ່ຈະຫາເງິນລ້ຽງຊີບໄດ້. ຄວາມແຕກຕ່າງກັນຂອງຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແມ່ນອີງໃສ່ວັດທະນະທຳ, ການວາງຕົວຂອງຄອບຄົວ, ຄວາມຮັບຜິດຊອບ, ການແບ່ງງານ, ວິຖີການດຳລົງຊີວິດ, ລັກສະນະຂອງຫົວໜ່ວຍຄອບຄົວ ແລະ ໂອກາດໃນການໄດ້ຮັບການສຶກສາ.




## 4.2 ແຂວງບໍ່ແກ້ວ

ແຂວງບໍ່ແກ້ວ ຕັ້ງຢູ່ເຂດພູດອຍທາງພາກເໜືອຂອງ ສປປ ລາວ. ແຂວງນີ້ ມີຊາຍແດນທິດເໜືອຕິດກັບປະເທດຈີນ, ທິດໃຕ້ ຕິດກັບ ແຂວງອຸດົມໄຊ ແລະ ແຂວງຫຼວງພະບາງ, ທິດຕາເວັນຕົກຕິດກັບປະເທດໄທ ແລະ ພະມ້າ, ແລະ ທິດຕາເວັນອອກຕິດກັບແຂວງຫຼວງນ້ຳທາ. ຍ້ອນວ່າແຂວງບໍ່ແກ້ວ ຕັ້ງຢູ່ຈຸດຄົບກັນຂອງ ສີ່ ປະເທດ (ຈີນ, ພະມ້າ, ໄທ ແລະ ສປປ ລາວ), ແຂວງນີ້ຈຶ່ງມີຄວາມອາດສາມາດຂະຫຍາຍຕົວທາງດ້ານເສດຖະກິດ. ໃນອະນາຄົດ, ແຂວງບໍ່ແກ້ວ ຈະກາຍເປັນ ສູນກາງການຄ້າ ແລະ ຈຸດສູນກາງ ຂອງ ການຂົນສົ່ງ ລະຫວ່າງ ປະເທດ.

ແຂວງບໍ່ແກ້ວ ເປັນແຂວງ ທີ່ມີຫຼາຍຊົນເຜົ່າທີ່ແຕກຕ່າງກັນເຊັ່ນ ມົ້ງ, ຢ້າວ, ອາຂ່າ, ລາຮູ ແລະ ກຶມມຸ. ສ່ວນຫຼາຍ ພວກເຂົາ ຈະດຳລົງຊີວິດຢູ່ຊົນນະບົດຕາມພູ ແລະ ຫວ່າງເຂົາ ລຽບຕາມແຄມແມ່ນ້ຳຂອງ. ຫຼາຍຊົນເຜົ່າຍັງມີພາສາ ເປັນຂອງເຂົາເຈົ້າເອງ.

80% ຂອງ ພົນລະເມືອງ ມີອາຊີບເປັນຊາວນາທີ່ທຳມາຫາກິນພໍລ້ຽງຊີບ; ພວກເຂົາທຳການປູກຝັງດ້ວຍການຖາງປ່າເຮັດໄຮ່ ຊຶ່ງໃຫ້ຜົນຜະລິດຕ່ຳ. ພືດຜົນສ່ວນໃຫຍ່ແມ່ນເຂົ້າ ແລະ ໝາກສາລີ. ການພັດທະນາພື້ນຖານໂຄງລ່າງ ແມ່ນໜ້ອຍທີ່ສຸດ, ຖະໜົນຫົນທາງສ່ວນຫຼາຍໃຊ້ໄດ້ແຕ່ລະດູແລ້ງ. ບາງພື້ນທີ່ແມ່ນຕ້ອງໃຊ້ເສັ້ນ ທາງນ້ຳ ເຊິ່ງນຳໃຊ້ເຮືອໄວ ຢ່າງດຽວເທົ່ານັ້ນຈຶ່ງສາມາດເຂົ້າໄປເຖິງໄດ້. ອັດຕາສ່ວນການຕາຍຂອງເດັກນ້ອຍ ແມ່ນ ສູງສົມຄວນຢູ່ໃນແຂວງບໍ່ແກ້ວນີ້ ແລະ ຫຼາຍໆບ່ອນໃນແຂວງ ຍັງບໍ່ທັນມີບ່ອນປິ່ນປົວ ແລະ ບໍ່ມີເສັ້ນທາງຄົມມະນາຄົມເຂົ້າໄປເຖິງ.

ຄົນເຜົ່າລາວລຸ່ມສ່ວນໃຫຍ່ ນັບຖືສາດສະໜາພຸດ, ແຕ່ວ່າພົນລະເມືອງລາວຫຼາຍຊົນເຜົ່າຍັງນັບຖືຜີຖືຢູ່. ການນັບຖືຜີມີບົດບາດສຳຄັນຫຼາຍທີ່ສຸດ ໃນຮີດຄອງປະເພນີ ແລະ ວັດທະນະທຳຂອງເຂົາເຈົ້າ. ບາງຕົວຢ່າງຂອງວັດທະນະທຳ ແລະ ຄວາມເຊື່ອຖື ຕາມປະເພນີຂອງເຂົາເຈົ້າ ມີຄື: ບໍ່ອະນຸຍາດໃຫ້ແມ່ຍິງ ກິນເຂົ້າກ່ອນຜົວ; ສຳລັບຄົນເຜົ່ານີ້ງ ຜູ້ຊາຍ ສາມາດມີເມຍໄດ້ ສອງ ຫຼື ສາມຄົນ ຢູ່ໃນເຮືອນດຽວກັນ; ແມ່ຍິງທີ່ແຕ່ງງານແລ້ວແມ່ນປະຕິບັດຕົນຄືກັບຄົນໃຊ້, ເປັນຜູ້ຜະລິດທາງດ້ານກະສິກຳ ແລະ ເບິ່ງແຍງຄອບຄົວ; ສ່ວນຜູ້ຊາຍທີ່ມີອາຍຸສູງກວ່າໝູ່ຈະເປັນຜູ້ປົກຄອງຄອບຄົວ.

ຢູ່ໃນ ແຂວງບໍ່ແກ້ວ, ການສຶກສາຄົ້ນຄ້ວາ ໄດ້ດຳເນີນຢູ່ໃນ 2 ເມືອງ ເຊິ່ງມີ 6 ໝູ່ບ້ານ (ໃບຊ້ອນທ້າຍ 2).

**ຢູ່ ເມືອງເມິງ ມີ 3 ໝູ່ບ້ານ ໄດ້ເຂົ້າຮ່ວມຄື:**

(i) ບ້ານຫ້ວຍສ້ານ: ຊົນເຜົ່າ ລາຮູ ເຊິ່ງໄດ້ຍ້າຍຈາກພື້ນທີ່ພູດອຍ ໃນປີ 1991 ມາຕັ້ງຖິ່ນຖານ ເປັນບ້ານຢູ່ທີ່ນີ້ ຊຶ່ງຕັ້ງຢູ່ຫ່າງຈາກ ຕົວເມືອງ 28 ກມ. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 610 ຄົນ (ແມ່ຍິງ 305 ຄົນ), 103 ຫຼັງຄາ ແລະ 141 ຄອບຄົວ.

(ii) ບ້ານຈອມແຈ້ງ: ບ້ານນີ້ ຕັ້ງຢູ່ຫ່າງຈາກ ຕົວເມືອງ 21 ກມ ແລະ ໄດ້ສ້າງຕັ້ງມາ ຕັ້ງແຕ່ປີ 1998 ໂດຍຊາວອາຂ່າ. ດຽວນີ້ ມັນແມ່ນບ້ານ ຂອງ ເຜົ່າອາຄ

(iii) ຂ່າ ແລະ ເຜົ່າ ລາຮູ. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 344 ຄົນ (ແມ່ຍິງ 159 ຄົນ), 82 ຫຼັງຄາ ແລະ 85 ຄອບຄົວ.

(iv) ບ້ານຜາດຳ: ບ້ານນີ້ ແມ່ນ ເຜົ່າລື້ ເປັນຜູ້ສ້າງຕັ້ງ ໃນປີ 1975, ເມື່ອເວລາ ເຂົາເຈົ້າ ປົບໜີສົງຄາມ ຢູ່ແຂວງຫຼວງນ້ຳທາ. ບ້ານຜາດຳ ຕັ້ງຢູ່ຫ່າງຈາກຕົວເມືອງ 19 ກມ ແລະ ມີ ພົນລະເມືອງທັງໝົດ ຈຳນວນ 196 ຄົນ (ແມ່ຍິງ 98 ຄົນ), 41 ຫຼັງຄາ ແລະ 45 ຄອບຄົວ.

ຢູ່ ເມືອງປາກທາ, ມີ 3 ໝູ່ບ້ານ ໄດ້ເຂົ້າຮ່ວມ ຄື:

(i) ບ້ານ ຫວ້ຍໂມງ: ເຜົ່າ ກຶມມຸ ເປັນຜູ້ສ້າງຕັ້ງບ້ານນີ້ ໃນປີ 1998 ເມື່ອເວລາ ພວກເຂົາຍ້າຍມາຈາກບ້ານຫ້ວຍໂມງ ເດີມ ມາຕັ້ງຢູ່ທີ່ນີ້, ຊຶ່ງຫ່າງຈາກຕົວເມືອງ 40 ກມ. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 515 ຄົນ (ແມ່ຍິງ 232 ຄົນ), 89 ຫຼັງຄາ ແລະ 99 ຄອບຄົວ.

(ii) ບ້ານ ມົກກະຈອກ: ໃນປີ 1913 ມີ ຜູ້ຊາຍ ຄົນໜຶ່ງ ເດີນທາງມາຈາກ ແຂວງອຸດົມໄຊ ແລະ ເລີ່ມຖາງໄຮ່ເຮັດສວນຢູ່ທີ່ນີ້. ຫຼັງຈາກນັ້ນກໍ່ມີຄອບຄົວ ອື່ນໆໄດ້ຕິດຕາມ ຊາຍຄົນນີ້ມາ ແລ້ວເລີ່ມຕັ້ງບ້ານຢູ່ບ່ອນນີ້ຈົນມາເຖິງປະຈຸບັນນີ້. ບ້ານມົກກະຈອກ ຕັ້ງຢູ່ ຫ່າງຈາກຕົວເມືອງ 33 ກມ ແລະ ມີ ພົນລະເມືອງທັງໝົດ ຈຳນວນ 197 ຄົນ (ແມ່ຍິງ 112 ຄົນ), ມີ 33 ຫຼັງຄາ ແລະ 35 ຄອບຄົວ.

(iii) ບ້ານ ແຄ: ບ້ານນີ້ ໄດ້ຖືກສ້າງຕັ້ງຂື້ນ ເມື່ອປີ 1977, ເຊິ່ງຍ້າຍມາຈາກ ບ້ານຫ້ວຍແຄ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 28 ກມ ແລະ ປະກອບດ້ວຍ ຄົນເຜົ່າກຶມມຸ ແລະ ເຜົ່າລາວລຸ່ມ. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 330 ຄົນ (ແມ່ຍິງ 130 ຄົນ), 44 ຫຼັງຄາ ແລະ 59 ຄອບຄົວ.

## 4.3 ແຂວງຫຼວງພະບາງ

ແຂວງ ຫຼວງພະບາງ ຕັ້ງຢູ່ທາງພາກເໜືອ ຂອງ ສປປ ລາວ ແລະ ມີພົນລະເມືອງທັງໝົດປະມານ 370,000 ຄົນ, ປະກອບດ້ວຍ 12 ຊົນເຜົ່າ. ພົນລະເມືອງ ຫຼາຍກວ່າ 80% ມີອາຊີບ ເປັນຊາວນາ; ພືດຫຼັກທີ່ປູກແມ່ນປະເພດເຂົ້າ, ໝາກສາລີ ແລະ ພືດເສດຖະກິດອື່ນໆ. ພົນລະເມືອງ ສ່ວນໜຶ່ງແມ່ນ ມີອາຊີບທີ່ພົວພັນເຖິງອຸດສາຫະກຳທ່ອງທ່ຽວ ອ້ອມແອ້ມເມືອງຫຼວງພະບາງ ຊຶ່ງເປັນເມືອງມໍລະດົກໂລກຂອງ ອົງການ ຢູແນສໂກ(UNESCO) ແຫ່ງທຳອິດຢູ່ ສປປ ລາວ. ແຕ່ລະປີມີນັກທ່ອງທ່ຽວຈຳນວນຫຼວງຫຼາຍມາຢ້ຽມຢາມ, ຫຼາຍເປັນພິເສດ ແມ່ນໃນໄລຍະບຸນປີໃໝ່ລາວ. ຈຳນວນສະຖານທີ່ທ່ອງທ່ຽວໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນຊຸມປີທີ່ຫາກໍ່ຜ່ານມານີ້.

ແຂວງຫຼວງພະບາງ ມີຫຼາຍຊົນເຜົ່າອາໃສຢູ່ໃນພື້ນທີ່ຫ່າງໄກສອກຫຼີກ ແລະ ຍັງທຸກຍາກຫຼາຍເນື່ອງຈາກວ່າເຂົ້າກິນບໍ່ພຽງພໍ ແລະ ລາຍຮັບຂອງຄອບຄົວຍັງຕ່ຳ. ການຜະລິດເຂົ້າແມ່ນຂຶ້ນກັບທຳມະຊາດ ແລະ ພວກເຂົາຍັງດຳລົງຊີວິດດ້ວຍການຖາງປ່າເຮັດໄຮ່ຢູ່. ແມ່ຍິງຫຼາຍຄົນ ຢູ່ໃນພື້ນທີ່ຫ່າງໄກສອກຫຼີກ ແມ່ນຂາດການສຶກສາ ແລະ ບໍ່ມີກິດຈະກຳທີ່ພໍຈະສ້າງລາຍຮັບໄດ້. ສຳລັບແມ່ຍິງຊົນເຜົ່າທັງຫຼາຍນັ້ນການເປັນຜູ້ນຳພາ ແລະ ຕັດສິນບັນຫາຢູ່ໃນຄອບຄົວຂອງເຂົາເຈົ້າ ແມ່ນຍັງຕ່ຳ ສ່ວນຫຼາຍແມ່ນຂຶ້ນກັບຜູ້ເປັນຜົວ.

ຢູ່ໃນ ແຂວງ ຫຼວງພະບາງ, ການສຶກສາຄົ້ນຄວ້າໄດ້ດຳເນີນຢູ່ໃນ ໜຶ່ງເມືອງ ( ເມືອງ ຊຽງເງິນ) ໃນ 6 ໝູ່ບ້ານ (ໃບຊ້ອນທ້າຍ 2).

(i) ບ້ານ ສີລາເລກ: ບ້ານນີ້ໄດ້ຕັ້ງຂຶ້ນໃນປີ 1974 ເຊິ່ງມີ 40 ຄອບຄົວ ໄດ້ຍ້າຍຈາກແຂວງຊຽງຂວາງ, ບ້ານນີ້ຢູ່ຫ່າງຈາກຕົວເມືອງ 26 ກມ. ປະຊາຊົນ ທີ່ອາໃສ ຢູ່ໃນບ້ານນີ້ ແມ່ນ ຄົນເຜົ່າມົ້ງຂາວ ແລະ ເຜົ່າກຶມມຸ. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 855 ຄົນ (ແມ່ຍິງ 399 ຄົນ), 140 ຄອບຄົວ.

(ii) ບ້ານ ຫ້ວຍຈອງ: ແມ່ນບ້ານ ຂອງ ເຜົ່າກຶມມຸ ຕັ້ງຢູ່ຫ່າງຈາກຕົວເມືອງ 19 ກມ ແລະ ຖືກສ້າງຕັ້ງຂື້ນ ເມື່ອປີ 1993. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 309 ຄົນ (ແມ່ຍິງ 148 ຄົນ), 48 ຄອບຄົວ.

(iii) ບ້ານ ຖິ່ນແກ້ວ: ທຳອິດ ຊາວບ້ານແມ່ນ ເຜົ່າກຶມມຸ ເປັນຜູ້ສ້າງຕັ້ງບ້ານນີ້ຂື້ນ ເມື່ອປະມານ 100 ປີຜ່ານມາແລ້ວ. ນອກຈາກ ເຜົ່າກຶມມຸແລ້ວ, ປັດຈຸບັນນີ້ ຍັງມີ ເຜົ່າມົ້ງ ແລະ ເຜົ່າລາວລຸ່ມ ອາໃສ ຢູ່ໃນບ້ານນີ້. ບ້ານຖິ່ນແກ້ວ ຕັ້ງຢູ່ຫ່າງຈາກຕົວເມືອງ 12 ກມ ແລະ ມີ ພົນລະເມືອງທັງໝົດ ຈຳນວນ 784 ຄົນ (ແມ່ຍິງ 399 ຄົນ), 140 ຄອບຄົວ.

(iv) ບ້ານ ໂພນໄຊ: ຄົນເຜົ່າລາວລຸ່ມ ເປັນຜູ້ສ້າງຕັ້ງບ້ານນີ້ຂື້ນ ໃນປີ 1973 ແລະ ປັດຈຸບັນນີ້ ກໍ່ມີ ເຜົ່າກຶມມຸອາໃສ ຢູ່ນຳກັນ. ບ້ານໂພນໄຊ ຕັ້ງຢູ່ຫ່າງຈາກຕົວເມືອງ 11 ກມ. ບ້ານໂພນໄຊ ມີ ພົນລະເມືອງທັງໝົດ ຈຳນວນ 611 ຄົນ (ແມ່ຍິງ 312 ຄົນ), ມີ 98 ຄອບຄົວ.

(v) ບ້ານ ຫ້ວຍໂຄດ: ບ້ານນີ້ ໄດ້ຖືກສ້າງຕັ້ງຂື້ນ ມາໄດ້ຫຼາຍປີແລ້ວ, ຢູ່ຫ່າງໄກຈາກຕົວເມືອງ 6 ກມ. ຜູ້ສ້າງຕັ້ງ ແມ່ນ ຄົນເຜົ່າລາວລຸ່ມ ທີ່ຍ້າຍມາຈາກ ຊຽງລາຍ ປະເທດໄທ, ແຕ່ວ່າ ດຽວນີ້ ມີ ສາມ ຊົນເຜົ່າອາໃສຢູ່ນຳກັນ ໃນບ້ານນີ້ ຄື ເຜົ່າລາວລຸ່ມ, ກຶມມຸ ແລະ ເຜົ່າຢວນ. ບ້ານນີ້ ມີ ພົນລະເມືອງທັງໝົດ ຈຳນວນ 449 ຄົນ (ແມ່ຍິງ 214 ຄົນ), ແລະມີ 88 ຄອບຄົວ.

(vi) ບ້ານ ໂພນສະຫວ່າງ: ບ້ານນີ້ ໄດ້ຖືກສ້າງຕັ້ງຂື້ນ ເມື່ອປີ 1973 ໂດຍ ຊົນເຜົ່າລາວລຸ່ມ ແລະ ກຶມມຸ. ບ້ານ ໂພນສະຫວ່າງ ມີ ພົນລະເມືອງທັງໝົດ ຈຳນວນ 425 ຄົນ (ແມ່ຍິງ 215 ຄົນ), ແລະມີ 73 ຄອບຄົວ.

## 4.4 ນະຄອນຫຼວງວຽງຈັນ– ເມືອງສັງທອງ

ເມືອງສັງທອງ ແມ່ນ ເມືອງທີ່ທຸກຍາກກວ່າໝູ່ ຢູ່ໃນ ນະຄອນຫຼວງວຽງຈັນ, ແລະ ນອນຢູ່ໃນບັນຊີ ຂອງ 47 ເມືອງ ທີ່ຖືວ່າທຸກຍາກທີ່ສຸດ ຢູ່ໃນ ສປປ ລາວ. ເມືອງສັງທອງ ຕັ້ງຢູ່ດິນຕອນໜຶ່ງລະຫວ່າງພູພະນັງ ແລະ ແມ່ນ້ຳຂອງ. ເມືອງສັງທອງ ມີຊາຍແດນທິດເໜືອຕິດກັບເມືອງຫີນເຫີບ, ທິດໃຕ້ ຕິດກັບ ເມືອງສີໂຄດຕະບອງ, ທິດຕາເວັນອອກ ຕິດກັບ ພູພະນັງ, ແລະ ທິດຕາເວັນຕົກຕິດກັບປະເທດໄທ. ເມືອງນີ້ ມີ 37 ບ້ານ, ປະກອບດ້ວຍ 4,503 ຄອບຄົວ, ແລະ ມີພົນລະເມືອງທັງໝົດຈຳນວນ 23,349 ຄົນ. ເກືອບເຄິ່ງໜຶ່ງຂອງພົນລະເມືອງແມ່ນແມ່ຍິງ (11,434 ຄົນ). ປະຊາຊົນສ່ວນຫຼາຍມີອາຊີບເປັນຊາວນາ ຊຶ່ງສ່ວນໃຫຍ່ທຳການປູກເຂົ້າ. ເມືອງສັງທອງ ຕັ້ງຢູ່ຫ່າງຈາກຕົວເມືອງ ນະຄອນຫຼວງວຽງຈັນ ພຽງ 75 ກິໂລແມັດ ເທົ່ານັ້ນແຕ່ວ່າເສັ້ນທາງເຂົ້າໄປຫາແມ່ນລຳບາກຫຼາຍ. ໃນລະດູແລ້ງ, ປະຊາຊົນອອກຈາກບ້ານໄປຫາວຽກເຮັດງານທຳທີ່ດີກວ່າຢູ່ໃນຕົວເມືອງວຽງຈັນ ຫຼື ຂ້າມຂອງໄປ ປະເທດໄທ. ກິດຈະກຳໜຶ່ງ ທີ່ສ້າງລາຍຮັບໃຫ້ເມືອງໄດ້ແມ່ນ ການສານກະແຕະໄມ້ໄຜ່ ເພື່ອນຳໃຊ້ເຮັດຝາ. ບາງຄັ້ງກໍ່ນຳສິ່ງໄປຂາຍ ທີ່ປະເທດໄທ ຫຼື ຂາຍຢູ່ກັບບ້ານ.

ຢູ່ໃນ ນະຄອນຫຼວງວຽງຈັນການສຶກສາຄົ້ນຄວ້າ ແມ່ນໄດ້ດຳເນີນຢູ່ໃນ ໜຶ່ງເມືອງຄື: (ເມືອງ ສັງທອງ) ເຊິ່ງມີ 9 ບ້ານ (ໃບຊ້ອນທ້າຍ 2).

(i) ບ້ານ ສຳພັນນາ: ບ້ານນີ້ ໄດ້ຖືກສ້າງຕັ້ງມາດົນນານແລ້ວໂດຍຊົນເຜົ່າລາວລຸ່ມ. ບ້ານສຳພັນຕັ້ງຢູ່ຫ່າງຈາກ ຕົວເມືອງ 26 ກມ, ມີ ພົນລະເມືອງທັງໝົດຈຳນວນ 1, 539 ຄົນ (ແມ່ຍິງ 877 ຄົນ), 140 ຄອບຄົວ.

(ii) ບ້ານ ໜອງບົວ: ຖືກສ້າງຕັ້ງຂື້ນ ເມື່ອປີ 1910 ໂດຍ ຄອບຄົວ ທີ່ຍ້າຍມາຈາກປະເທດໄທ ທາງທິດຕະເວັນ ອອກສ່ຽງເໜືອ. ບ້ານນີ້ແມ່ນບ້ານເຜົ່າລາວລຸ່ມ ແລະ ຕັ້ງຢູ່ຫ່າງຈາກຕົວເມືອງ 21 ກມ, ມີພົນລະເມືອງທັງໝົດ ຈຳນວນ 263 ຄົນ (ແມ່ຍິງ 117 ຄົນ), 51 ຫຼັງຄາ ແລະ 58 ຄອບຄົວ.

(iii) ບ້ານ ນາປໍ: ເປັນບ້ານ ເຜົ່າລາວລຸ່ມ ທີ່ຍ້າຍຈາກຫ້ວຍຕົມ ມາສ້າງບ້ານນີ້ເມື່ອປີ 1910. ບ້ານນາປໍ ຕັ້ງຢູ່ຫ່າງຈາກຕົວເມືອງ 25 ກມ ແລະ ມີ ພົນລະເມືອງທັງໝົດ ຈຳນວນ 381 ຄົນ (ແມ່ຍິງ196 ຄົນ), 75 ຫຼັງຄາ.

(iv) ບ້ານ ໄຮໃຕ້: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນມາໄດ້ປະມານ 40 ປີ ແລ້ວ ເຊິ່ງເວລານັ້ນຄອບຄົວເຜົ່າລາວພວນ ຍ້າຍຈາກແຂວງຊຽງຂວາງ ມາຢູ່ທີ່ນີ້ກ່ອນໝູ່. ບ້ານໄຮ່ໃຕ້ ຕັ້ງຢູ່ຫ່າງຈາກຕົວເມືອງ 5 ກມ, ແລະ ມີ ພົນລະເມືອງທັງໝົດ ຈຳນວນ 986 ຄົນ ( ແມ່ຍິງ 497 ຄົນ), 178 ຫຼັງຄາ ແລະ 198 ຄອບຄົວ.

(v) ບ້ານ ທ່ານາຂາມ: ຄົນເຜົ່າລາວລຸ່ມ ສ້າງຕັ້ງບ້ານນີ້ ຫຼາຍກວ່າ 100 ປີ ມາແລ້ວແຕ່ດຽວນີ້ມີເຜົ່າກຶມມຸ ອາໃສຢູ່ນຳກັນ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 2 ກມ ແລະ ມີ ພົນລະເມືອງທັງໝົດຈຳນວນ 523 ຄົນ (ແມ່ຍິງ 252 ຄົນ), ມີ 97 ຫຼັງຄາ ແລະ 100 ຄອບຄົວ.

(vi) ບ້ານ ເພຍລາດ: ທຳອິດ ແມ່ນ ຄອບຄົວ ເຜົ່າລາວພວນ ສ້າງຕັ້ງບ້ານນີ້ມາໄດ້ຫຼາຍກວ່າ 115 ປີ ແລ້ວ. ປະຈຸບັນນີ້ມີ 2 ຊົນເຜົ່າ ອາໃສຢູ່ນຳກັນ ຄືລາວພວນ ແລະ ກຶມມຸ. ບ້ານ ເພຍລາດ ມີ ພົນລະເມືອງທັງໝົດ ຈຳນວນ 1,677 ຄົນ (ແມ່ຍິງ 839 ຄົນ), 314 ຫຼັງຄາ ແລະ 312 ຄອບຄົວ.

(vii) ບ້ານ ຫີນສິ່ວ: ບໍ່ຮູ້ວ່າ ບ້ານນີ້ຖືກສ້າງຕັ້ງໃນປີໃດ, ພຽງແຕ່ຮູ້ວ່າຄົນເຜົ່າກຶມມຸ ເປັນຜູ້ສ້າງມາໄດ້ຫຼາຍປີແລ້ວ. ດຽວນີ້ ມີ ເຜົ່າກຶມມຸ ແລະ ລາວລຸ່ມ ອາໃສຢູ່ນຳກັນໃນບ້ານນີ້. ບ້ານຫີນສິ່ວ ຕັ້ງຢູ່ຫ່າງຈາກຕົວເມືອງ 4 ກມ, ມີ ພົນລະເມືອງທັງໝົດຈຳນວນ 579 ຄົນ (ແມ່ຍິງ 269 ຄົນ), 101 ຫຼັງຄາ ແລະ 105 ຄອບຄົວ.

(viii) ບ້ານ ປາກແຖບ: ຄົນເຜົ່າລາວລຸ່ມ ສ້າງຕັ້ງບ້ານນີ້ ເມື່ອປີ 1982. ບ້ານ ປາກແຖບ ຕັ້ງຢູ່ຫ່າງຈາກຕົວເມືອງ 12 ກມ, ມີ ພົນລະເມືອງທັງໝົດ ຈຳນວນ 531 ຄົນ (ແມ່ຍິງ 265 ຄົນ), 102 ຄົວເຮືອນ ແລະ 104 ຄອບຄົວ.

(ix) ບ້ານ ນາສາວນາງ: ຊຸມຊົນນີ້ ປະກອບດ້ວຍ ສອງ ຊົນເຜົ່າ ຄື ກຶມມຸ ແລະ ລາວລຸ່ມ ຊຶ່ງສ້າງຕັ້ງບ້ານນີ້ຂຶ້ນເມື່ອປີ 1987. ບ້ານ ນາສາວນາງ ຕັ້ງຢູ່ຫ່າງຈາກຕົວເມືອງ 9 ກມ, ມີ ພົນລະເມືອງທັງໝົດ ຈຳນວນ 344 ຄົນ (ແມ່ຍິງ 164 ຄົນ), ມີ 63 ຫຼັງຄາ ແລະ 79 ຄອບຄົວ.

## 4.5 ແຂວງ ສະຫວັນນະເຂດ

ແຂວງ ສະຫວັນນະເຂດ ມີຊາຍແດນທິດຕະເວັນຕົກຕິດກັບປະເທດໄທ, ທິດຕາເວັນອອກຕິດກັບປະເທດວຽດນາມ, ທິດໃຕ້ ຕິດກັບ ແຂວງສາລະວັນ ແລະ ທິດເໜືອຕິດກັບແຂວງຄຳມ່ວນ. ຍ້ອນທີ່ຕັ້ງຂອງແຂວງ ເອື້ອອຳນວຍນີ້ເອງ, ສະຫວັນນະເຂດ ຈຶ່ງໄດ້ກາຍມາເປັນສູນການຄ້າ ແລະ ອຸດສາຫະກຳ ຂອງ ສປປ ລາວ. ເຖິງຢ່າງໃດກໍ່ດີ, ປະຊາຊົນທີ່ອາໃສຢູ່ໃນແຂວງນີ້ ທີ່ຢາກຈະມີຖານະດີ ທາງດ້ານເສດຖະກິດ ຄືກັນກັບຜູ້ທີ່ອາໃສຢູ່ໃນພື້ນທີ່ອື່ນໆ ໄດ້ອົບພະ ຍົບໜີໄປ ປະເທດໄທ ເພື່ອຊອກຫາວຽກເຮັດງານທຳໂດຍບໍ່ຄຳນຶງເຖິງກຽດ ແລະ ສັກສີຂອງຕົນ. ສ່ວນຫຼາຍແມ່ນ ພວກຊາວໜຸ່ມ ທີ່ໄດ້ຮັບອິດທິພົນມາຈາກສື່ຕ່າງໆ ເຊັ່ນ: ໂທລະພາບ, ວິທະຍຸ ແລະສິ່ງພິມອື່ນໆ.

ຊາວໜຸ່ມລາວ ມີຄວາມວ່ອງໄວໃນການປັບຕົວເອງໃຫ້ທັນກັບໂລກສະໄໝໃໝ່ ແລະ ມັກຈະບໍ່ໄດ້ຂໍອະນຸຍາດຈາກພໍ່ແມ່ ກ່ອນການເດີນທາງໄປເຮັດວຽກທີ່ປະເທດໄທ. ອັນນີ້ ເຫັນວ່າເປັນສະພາບທີ່ໜ້າວິຕົກກັງວົນສຳລັບ ຊາວໜຸ່ມເພດຍິງ ທີ່ຂ້າມໄປປະເທດໄທ, ໂດຍບໍ່ໄດ້ຂໍອະນຸຍາດ ຢ່າງເປັນທາງການແມ່ນເປັນອັນຕະລາຍທີ່ສຸດ. ຊາວໜຸ່ມເພດຍິງເຫຼົ່ານີ້ສ່ວນຫຼາຍບໍ່ມີຄວາມຮູ້ຫຍັງເລີຍກ່ຽວກັບ ສິດທິ ຂອງເຂົາເຈົ້າ ແລະ ມີຄວາມສ່ຽງສູງທີ່ຈະຖືກຄົນອື່ນຫຼອກລວງ ແລະຖືກເອົາລັດເອົາປຽບ ຢ່າງບໍ່ມີ ຄວາມຍຸຕິທຳ.

ຢູ່ໃນ ແຂວງ ສະຫວັນນະເຂດ, ການສຶກສາຄົ້ນຄວ້າໄດ້ດຳເນີນຢູ່ໃນ 2 ເມືອງມີ 3 ບ້ານ (ໃບຊ້ອນທ້າຍ 2).

**ຢູ່ ເມືອງຄັນທະບູລີ, ມີໜຶ່ງບ້ານ ໄດ້ເຂົ້າຮ່ວມ:**

(i) ບ້ານ ເຄືອເຂົາກາດ: ບ້ານນີ້ໄດ້ຖືກສ້າງຕັ້ງມາກວ່າ 130 ປີ ແລ້ວ, ເບື້ອງຕົ້ນ ແມ່ນເຜົ່າລາວລຸ່ມມາຢູ່ກ່ອນ ເຊິ່ງມາດ້ວຍເຫດຜົນເພື່ອເຜົ້ານາ
ແຕ່ຫຼັງຈາກນັ້ນກໍ່ໄດ້ມີຫຼາຍຄອບຄົວມາຢູ່ຕື່ມອີກຈົນກາຍເປັນບ້ານຈົນເຖິງປະຈຸບັນນີ້. ບ້ານ ເຄືອເຂົາກາດ ຕັ້ງຢູ່ຫ່າງຈາກຕົວເມືອງ 20 ກມ, ມີ ພົນລະເມືອງທັງໝົດ ຈຳນວນ 1,347 ຄົນ (ແມ່ຍິງ 692 ຄົນ), ປະກອບມີ 218 ຫຼັງຄາ ແລະ 254 ຄອບຄົວ.

**ຢູ່ເມືອງອຸທຸມພອນ, ມີ 2 ບ້ານເຂົ້າຮ່ວມ ຄື:**

(i) ບ້ານ ໂນນວິໄລ: ບ້ານນີ້ໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 1983 ແລະ ຕັ້ງຢູ່ຫ່າງຈາກຕົວເມືອງ 15 ກມ. ບ້ານ ໂນນວິໄລ ມີ ພົນລະເມືອງທັງໝົດ ຈຳນວນ 523 ຄົນ (ແມ່ຍິງ 278 ຄົນ) ປະກອບດ້ວຍ 70 ຫຼັງຄາ ແລະ91 ຄອບຄົວອາໃສຢູ່.

(ii) ບ້ານ ຫົວເມືອງ: ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 3 ກມ ແລະ ໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 1997. ພົນລະເມືອງ ທັງໝົດມີຈຳນວນ 874 ຄົນ (ແມ່ຍິງ 425 ຄົນ), ປະກອບດ້ວຍ 128 ຫຼັງຄາ ແລະ 139 ຄອບຄົວ.

## 4.6 ແຂວງສາລະວັນ

ແຂວງສາລະວັນ ຕັ້ງຢູ່ທາງພາກໃຕ້ຂອງລາວ ແລະ ມີເນື້ອທີ່ທັງໝົດ 1,038,500 ຮຕ. ໄດ້ມີຊາຍແດນທິດຕາເວັນອອກ ຕິດກັບ ແຂວງເຊກອງ ແລະ ປະເທດຫວຽດນາມ, ທິດເໜືອ ຕິດກັບ ແຂວງສະຫວັນນະເຂດ, ທິດໃຕ້ຕິດກັບແຂວງຈຳປາສັກ ແລະ ທິດຕາເວັນຕົກຕິດກັບປະເທດໄທ. ແຂວງສາລະວັນ ອຸດົມຮັ່ງມີ ໄປດ້ວຍ ຊັບພະຍາກອນທຳມະຊາດ ພ້ອມດ້ວຍປ່າດົງດິບທີ່ກວ້າງໃຫຍ່ໄພສານ ເປັນທີ່ຢູ່ອາໃສຂອງສັດປ່ານາໆຊະນິດ. ຢູ່ໃນແຂວງນີ້ມີທົ່ງນາ ແລະ ສວນກາເຟ ກວ້າງສຸດສາຍຕາ.

ມີບາງຄົນ ກໍ່ອອກຈາກແຂວງສາລະວັນ ໄປປະເທດໄທ ເພື່ອຊອກຫາວຽກເຮັດງານທຳທີ່ດີກວ່າ ເພາະວ່າພວກເຂົາບໍ່ສາມາດທີ່ຈະຫາວຽກເຮັດທີ່ມີຄວາມໝັ້ນຄົງໄດ້. ໂດຍສະເພາະແມ່ນພວກຊາວໜຸ່ມ ທີ່ໄດ້ຮັບຜົນສະທ້ອນຈາກສື່ທາງໂທລະພາບ ແລະ ວິທະຍຸຂອງປະເທດໄທ, ເຊິ່ງພາໃຫ້ເຂົາເຈົ້າມີແນວຄິດ ແລະຫາໂອກາດໄປເຮັດວຽກຢູ່ປະເທດໄທ. ບາງຄອບຄົວ ລາຍງານໃຫ້ຊາບວ່າພວກເພິ່ນບໍ່ໄດ້ຮັບຂ່າວຄາວໃດໆຈາກ ລູກຊາຍ ຫຼື ລູກສາວເລີຍຕັ້ງແຕ່ພວກເຂົາໜີໄປປະເທດໄທ.

ຢູ່ ແຂວງ ສາລະວັນ, ການສຶກສາຄົ້ນຄວ້າ ໄດ້ດຳເນີນຢູ່ໃນ 2 ເມືອງ ເຊິ່ງລວມມີ 11 ບ້ານ (ໃບຊ້ອນທ້າຍ 2)

**ຢູ່ເມືອງສາລະວັນ ມີ 9 ບ້ານ ເຂົ້າຮ່ວມ ຄື:**

(i) ບ້ານ ເລີນໂທນ: ບ້ານນີ້ ໄດ້ຖືກສ້າງຕັ້ງ ມາໄດ້ຫຼາຍປີແລ້ວເຊິ່ງບໍ່ມີໃຜຮູ້ໄດ້ວ່າດົນປານໃດ, ແລະ ປະກອບດ້ວຍ 2 ຊົນເຜົ່າໃຫຍ່ ຄື ເຜົ່າກະຕາງ ແລະ ເຜົ່າຕະໂອ້ຍ. ບ້ານ ເລີນໂທນ ຕັ້ງຢູ່ ຫ່າງຈາກຕົວເມືອງ 23 ກມ ແລະ ມີພົນລະເມືອງທັງໝົດ ຈຳນວນ 229 ຄົນ (ແມ່ຍິງ 129 ຄົນ), ປະກອບມີ 40 ຫຼັງຄາ.

(ii) ບ້ານ ແສນວັງນ້ອຍ: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1938 ພາຍຫຼັງທີ່ ໄດ້ມີຫຼາຍຄົນໄດ້ເສຍຊີວິດຢູ່ໃນບ້ານ ແສນວັງເດີມ. ປະຊາຊົນພາຍໃນບ້ານແມ່ນ ເຜົ່າຕະໂອ້ຍ ແລະ ສ່ວຍ. ບ້ານແສນວັງນ້ອຍຕັ້ງຢູ່ຫ່າງຈາກຕົວເມືອງ 27 ກມ ແລະ ມີພົນລະເມືອງທັງໝົດຈຳນວນ 598 ຄົນ (ແມ່ຍິງ 290 ຄົນ), 96 ຄອບຄົວ.

(iii) ບ້ານ ດົງໂກະເໜືອ: ບ້ານນີ້ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1954, ໃນເວລານັ້ນປະຊາຊົນໄດ້ຍ້າຍມາຈາກບ້ານເດີມຂອງເຂົາເຈົ້າຊຶ່ງຫ່າງໄກຈາກບ່ອນນີ້ 1 ກມ. ບ້ານ ດົງໂກະເໜືອ ຕັ້ງຢູ່ຫ່າງຈາກຕົວເມືອງ 24 ກມ, ເຊິ່ງມີພົນລະເມືອງຄື: ເຜົ່າກະຕາງ ທັງໝົດ ຈຳນວນ 416 ຄົນ (ແມ່ຍິງ 216 ຄົນ), ມີ 57 ຫຼັງຄາ ແລະ 78 ຄອບຄົວ.

(iv) ບ້ານ ແບ່ງເຊເສັດ: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1991. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 31 ກມ, ແລະປະກອບມີ ຊົນເຜົ່າດຽວ ຄື: ເຜົ່າສ່ວຍ ມີ ພົນລະເມືອງທັງໝົດ ຈຳນວນ 202 ຄົນ (ແມ່ຍິງ 111 ຄົນ), ມີ 33 ຫຼັງຄາ ແລະ 33 ຄອບຄົວ.

(v) ບ້ານ ດອນຂາວ: ບ້ານນີ້ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1945, ຕັ້ງຢູ່ຫ່າງຈາກຕົວເມືອງ 22 ກມ. ໃນປັດຈຸບັນນີ້ ບ້ານ ດອນຂາວ ມີ ພົນລະເມືອງທັງໝົດ ຈຳນວນ 208 ຄົນ (ແມ່ຍິງ 105 ຄົນ) ມີ 29 ຫຼັງຄາ ແລະ 36 ຄອບຄົວ. ປະຊາຊົນພາຍໃນບ້ານປະກອບມີຊົນເຜົ່າດຽວຄື ຊົນເຜົ່າ ກະຕາງ.

(vi) ບ້ານ ລະນົງ: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1982 ແລະ ປະກອບດ້ວຍ ສາມ ຊົນເຜົ່າດ້ວຍກັນຄື: ກະຕູ, ສ່ວຍ ແລະ ຕະໂອ້ຍ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 36 ກມ ແລະ ມີພົນລະເມືອງທັງໝົດຈຳນວນ 374 ຄົນ (ແມ່ຍິງ 181 ຄົນ), 61 ຫຼັງຄາ ແລະ 68 ຄອບຄົວ.

(vii) ບ້ານ ລະວາງ: ບ້ານນີ້ມີອາຍຸໄດ້ຫຼາຍກວ່າ 60 ປີ ແລ້ວ ແລະ ປະກອບດ້ວຍຊົນເຜົ່າ ຕະໂອ້ຍ, ອາລັກ ແລະ ລາວລຸ່ມ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 32 ກມ. ພົນລະເມືອງທັງໝົດໃນບ້ານມີ 751 ຄົນ (ແມ່ຍິງ 375 ຄົນ), ມີ 131 ຫຼັງຄາ ແລະ 143 ຄອບຄົວ.

(viii) ບ້ານ ຄຽງໂຄ້ງ: ບ້ານນີ້ປະກອບດ້ວຍ 2 ຊົນເຜົ່າຄື ເຜົ່າແງະ ແລະ ຕະໂອ້ຍ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 27 ກມ. ພົນລະເມືອງທັງໝົດໃນບ້ານ ມີ 514 ຄົນ (ແມ່ຍິງ 272 ຄົນ), ມີ 79 ຫຼັງຄາ ແລະ 95 ຄອບຄົວ.

(ix) ບ້ານ ຄອນແລ້ງ: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1977 ແລະ ພົນລະເມືອງທັງໝົດມີ 254 ຄົນ (ແມ່ຍິງ 117 ຄົນ), ມີ 36 ຫຼັງຄາ ແລະ 46 ຄອບຄົວ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 33 ກມ.ປະກອບມີ 3 ເຜົ່າຄື: ເຜົ່າຕະໂອ້ຍ, ເຜົ່າກະຕາງ ແລະເຜົ່າ ລາວລຸ່ມ.

**ທີ່ເມືອງ ວາປີ, ມີ 2 ບ້ານ ເຂົ້າຮ່ວມ ຄື:**

(i) ບ້ານ ຜັກຂະ: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນ ໂດຍເບື້ອງຕົ້ນມີພຽງ 10 ຫຼັງຄາ ເມື່ອປະມານ 30 ປີ ຜ່ານມາແລ້ວ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 13 ກມ, ແລະ ພົນລະເມືອງທັງໝົດ ໃນບ້ານ ມີ 470 ຄົນ (ແມ່ຍິງ 247 ຄົນ), ມີ 83 ຫຼັງຄາ ແລະ 89 ຄອບຄົວ, ປະກອບມີເຜົ່າດຽວຄື ເຜົ່າ ລາວລຸ່ມ.

(ii) ບ້ານ ສະພາດ: ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນມາໄດ້ຫຼາຍກວ່າ 105 ປີ ຜ່ານມາແລ້ວ. ເຊິ່ງແມ່ນບ້ານຂອງຊົນເຜົ່າລາວລຸ່ມລ້ວນ ແລະ ປັດຈຸບັນນີ້ມີພົນລະເມືອງ ທັງໝົດ ຈຳນວນ 759 ຄົນ (ແມ່ຍິງ 380 ຄົນ), ປະກອບມີ 148 ຫຼັງຄາ ແລະ 159 ຄອບຄົວ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 10 ກມ.

# 5. ຜົນຂອງການຄົ້ນຄວ້າ

## 5.1 ຂໍ້ມູນກ່ຽວກັບປະຊາກອນ ໃນພື້ນທີ່ ທີ່ໄດ້ທຳການສຳຫຼວດ

### *5.1.1 ການກະຈາຍລະຫວ່າງແຂວງ*

ໂຄງການສຶກສາຄົ້ນຄວ້ານີ້ ໄດ້ທຳການສຳຫຼວດປະຊາຊົນໃນຊົນນະບົດທັງໝົດ 967 ຄົນ. ຄືດັ່ງໄດ້ສະແດງໃຫ້ເຫັນ ໃນ ກຣາຟ 5. 1, ໄດ້ສຳຫຼວດ 212 ຄົນ (21.9%) ຢູ່ ແຂວງ ສາລະວັນ, 127 ຄົນ (13.1%) ຢູ່ນະຄອນຫຼວງວຽງຈັນ, 309 ຄົນ (32%) ຢູ່ ແຂວງ ຫຼວງພະບາງ, 232 ຄົນ (24%) ຢູ່ ແຂວງບໍ່ແກ້ວ ແລະ 87 ຄົນ (9%) ຢູ່ ແຂວງ ສະຫວັນນະເຂດ.




**ກຣາຟ 5. 1 ຈຳນວນປະຊາກອນທີ່ໄດ້ສຳຫຼວດໃນແຕ່ລະແຂວງ**

### *5.1.2 ການແບ່ງຕາມເພດ*

ໃນຈຳນວນ 967 ຄົນ ທີ່ໄດ້ສຳຫຼວດ, ມີເພດຍິງ ຈຳນວນ 515 ຄົນ (53.3%) ແລະ ເພດຊາຍ ຈຳນວນ 452 ຄົນ (46.7%) (ໃຫ້ເບິ່ງ ກຣາຟ 5. 2).




**ກຣາຟ 5. 2 ການແບ່ງຈຳນວນປະຊາກອນທີ່ໄດ້ສຳຫຼວດອອກຕາມເພດ**

ຢູ່ໃນເກືອບໝົດທຸກແຂວງ ແມ່ນມີການແຕກຕ່າງກັນພຽງເລັກນ້ອຍລະຫວ່າງຈຳນວນ ເພດຍິງ ແລະ ເພດຊາຍທີ່ໄດ້ສຳພາດ (ໃຫ້ເບິ່ງ ກຣາຟ 5. 3). ເຖິງຢ່າງໃດກໍ່ດີ, ຢູ່ແຂວງ ສະຫວັນນະເຂດ, ຜູ້ຊາຍຫຼາຍຄົນໄດ້ອອກໄປເຮັດວຽກ ທາງອື່ນ ແລະ ບໍ່ມີໂອກາດທີ່ຈະໄດ້ສຳພາດພວກເພິ່ນໄດ້, ສະນັ້ນຈຶ່ງເຫັນວ່າມີຈຳນວນເພດຍິງໄດ້ຖືກສຳຫຼວດ ຫຼາຍກວ່າ ເພດຊາຍ (ໃນອັດຕາສ່ວນ 3 : 1 ).




**ກຣາຟ 5. 3 ການແບ່ງຕາມເພດ ໃນແຕ່ລະແຂວງ**

### *5.1.3 ການແບ່ງຕາມອາຍຸ*

ອາຍຸ ຂອງ ຜູ້ທີ່ ຖືກສຳພາດ ແມ່ນ ນັບແຕ່ 15 ປີ ຫາ 50 ປີ (ກຣາຟ 5. 4). ນີ້ ແມ່ນກຸ່ມອາຍຸ ທີ່ໄດ້ຖືກ ຄັດເລືອກເອົາເພື່ອສຳພາດ. ອາຍຸສະເລ່ຍລວມ ແມ່ນ 33.9 ປີ. ອາຍຸສະເລ່ຍ ຂອງ ກຸ່ມແມ່ຍິງ ທີ່ຖືກສຳພາດ ແມ່ນ 32.5 ປີ, ແລະ ອາຍຸສະເລ່ຍ ຂອງ ກຸ່ມຜູ້ຊາຍ ທີ່ຖືກສຳພາດ ແມ່ນ 35.4 ປີ.




**ກຣາຟ 5. 4 ການແບ່ງຕາມອາຍຸຂອງຜູ້ທີ່ຖືກສຳພາດທັງໝົດ**

### *5.1.4 ການແບ່ງຕາມອາຍຸຂອງຜົວ*

ກຸ່ມອາຍຸ ຂອງບຸກຄົນທີ່ຖືກສຳພາດ ແມ່ນໄດ້ຄັດເລືອກເອົາ ຕັ້ງແຕ່ 15 ປີ ຫາ 50 ປີ ແຕ່ວ່າ ເວລາທຳການສຳພາດ ໄດ້ເຫັນວ່າ ຄູ່ສົມລົດ ຂອງບຸກຄົນທີ່ຖືກສຳພາດ ມີອາຍຸຕັ້ງແຕ່ 14 ປີ ຫາ 80 ປີ (ໃຫ້ເບິ່ງກຣາຟ 5. 5). ອາຍຸສະເລ່ຍລວມຂອງ ຄູ່ສົມລົດ ແມ່ນ ຄ້າຍໆກັບອາຍຸສະເລ່ຍລວມຂອງບຸກຄົນທີ່ຖືກສຳພາດ ຄື 33.89 ປີ. ອາຍຸສະເລ່ຍຜູ້ເປັນ ຜົວ ຂອງເພດຍິງຜູ້ທີ່ຖືກສຳພາດ ແມ່ນ 36.6 ປີ, ຊຶ່ງ ມີອາຍຸຕັ້ງແຕ່ 19 ປີ ຫາ 80 ປີ. ອາຍຸສະເລ່ຍຜູ້ເປັນເມຍຂອງເພດຊາຍ ຜູ້ທີ່ຖືກສຳພາດ ແມ່ນ 30.8 ປີ, ຊຶ່ງ ມີອາຍຸຕັ້ງແຕ່ 14 ປີ ຫາ 58 ປີ.

ANOVA ແນະນຳໄວ້ວ່າ ຄູ່ສົມລົດ ມີອາຍຸແຕກຕ່າງກັນຫຼາຍ, ແລະ ຊີ້ໃຫ້ເຫັນວ່າ ຜົວ ເຖົ້າກວ່າ ເມຍ

(F= 88.237, Sig. = 0.000).




**ກຣາຟ 5. 5 ການແບ່ງຕາມອາຍຸຂອງຄູ່ສົມລົດຂອງຜູ້ທີ່ຖືກສຳພາດທັງໝົດ**

### *5.1.5 ອາຍຸເມື່ອເວລາແຕ່ງງານ*

ອາຍຸ ເມື່ອເວລາແຕ່ງງານຂອງບຸກຄົນທີ່ຖືກສຳພາດແມ່ນຕັ້ງແຕ່ 11 ປີ ຫາ 42 ປີ (ໃຫ້ເບິ່ງ ກຣາຟ 5. 6). ອາຍຸສະເລ່ຍລວມເມື່ອເວລາແຕ່ງງານແມ່ນ 20.3 ປີ. ອາຍຸສະເລ່ຍຂອງ ເພດຊາຍ ເມື່ອແຕ່ງງານແມ່ນ 22.5 ປີ ສ່ວນເພດຍິງນັ້ນແມ່ນ 18.3 ປີ. ANOVA ໄດ້ເຜີຍໃຫ້ເຫັນວ່າ ມັນມີຄວາມແຕກຕ່າງກັນຫຼາຍລະຫວ່າງ ອາຍຸ ເມື່ອແຕ່ງງານຂອງເພດຍິງ ແລະ  ເພດຊາຍ (F = 204.319, Sig. = 0.000), ເພດຊາຍຈະມີອາຍຸແກ່ກວ່າເພດຍິງ ເມື່ອເວລາແຕ່ງງານ. ຂໍ້ມູນນີ້ ໄດ້ຢືນຢັນສິ່ງທີ່ສະແດງໃຫ້ເຫັນຂ້າງເທິງນີ້ ວ່າມັນມີຄວາມແຕກຕ່າງກັນຫຼາຍທາງດ້ານອາຍຸລະຫວ່າງ ຜົວ ແລະ ເມຍ.

ການວິເຄາະຍັງໄດ້ຊີ້ໃຫ້ເຫັນວ່າຜູ້ທີ່ມີລະດັບການສຶກສາສູງກວ່າມັກຈະແຕ່ງງານ ເມື່ອມີອາຍຸແກ່ກວ່າຜູ້ທີ່ມີລະດັບການສຶກສາຕໍ່າກວ່າ (ANOVA F = 7.252, Sig. = 0.000).




**ກຣາຟ 5. 6 ອາຍຸ ເມື່ອເວລາແຕ່ງງານ**

### *5.1.6 ການສຶກສາ*

ຄືດັ່ງໄດ້ສະແດງໃຫ້ເຫັນໃນ ກຣາຟ 5. 7, ຜູ້ທີ່ຖືກສໍາພາດຈໍານວນຫຼາຍກວ່າເຄິ່ງໜຶ່ງ (495 ຄົນ, 53.5%) ໄດ້ຮຽນຈົບປະຖົມສຶກສາ. ຈໍານວນ 135 ຄົນ (14.6%) ໄດ້ເຂົ້າໂຮງຮຽນມັດທະຍົມຕົ້ນ, 33 ຄົນ (3.6%) ໄດ້ເຂົ້າໂຮງຮຽນມັດທະຍົມປາຍ, ແລະ 11 ຄົນ (1.2%) ໄດ້ເຂົ້າມະຫາວິທະຍາໄລ. ຜູ້ທີ່ຖືກສໍາພາດຈໍານວນໜຶ່ງສ່ວນສີ່ (252 ຄົນ, 27.2%) ບໍ່ໄດ້ຮັບການສຶກສາເລີຍ.




**ກຣາຟ 5. 7 ລະດັບການສຶກສາ ຂອງ ຜູ້ທີ່ຖືກສໍາພາດ**

ANOVA ໄດ້ເຜີຍໃຫ້ເຫັນວ່າ ມັນມີການພົວພັນກັນຫຼາຍທີ່ສຸດລະຫວ່າງລະດັບການສຶກສາຂອງ ຜູ້ທີ່ຖືກສໍາພາດທັງເພດຍິງ ແລະ ເພດຊາຍ (F = 47.443, Sig = 0.000). ອັນນີ້ ໄດ້ສັງເກດເຫັນວ່າ ເພດຊາຍ ຈະມີລະດັບ

ການສຶກສາ ສູງກວ່າ ເພດຍິງ. ນີ້ໄດ້ສະແດງໃຫ້ເຫັນຢູ່ໃນ ກຣາຟ 5. 8 ຊຶ່ງເຫັນວ່າຈຳນວນ ເພດຍິງ (36%) ທີ່ບໍ່ເຄີຍໄດ້ຮັບການສຶກສາຈັກເທື່ອ ແມ່ນຫຼາຍກວ່າຈຳນວນເພດຊາຍ (17%) ເຖິງສອງເທົ່າ. ເຖິງຢ່າງໃດກໍ່ດີ, ຈຳນວນ ເພດຊາຍ ທີ່ໄດ້ຮັບການສຶກສາໃນລະດັບມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ ແລະ ມະຫາວິທະຍາໄລ ແມ່ນ ສູງກວ່າ ຈຳນວນເພດຍິງ ເຖິງ 2 ເທື່ອ.




**ກຣາຟ 5. 8 ລະດັບຂອງການສຶກສາ ຂອງ ຜູ້ທີ່ຖືກສຳພາດ ຄິດໄລ່ເປັນເປີເຊັນ ແລະ ແບ່ງຕາມເພດ**

ການວິເຄາະ ລະດັບການສຶກສາຂອງ ຄູ່ສົມລົດ ຂອງຜູ້ທີ່ຖືກສຳພາດ (ກຣາຟ 5. 9) ເຜີຍໃຫ້ເຫັນເຖິງຄວາມຄ້າຍຄືກັນ ທາງດ້ານການສຶກສາ ຂອງເພດຍິງແລະ ເພດຊາຍ. ຜູ້ທີ່ຖືກສຳພາດສ່ວນໃຫຍ່ (648 ກໍລະນີ, 71.7%) ຮັບຮູ້ວ່າ ຄູ່ສົມລົດຂອງຕົນມີການສຶກສາໃນລະດັບໃດໜຶ່ງ. ສ່ວນທີ່ເຫຼືອ 257 ກໍລະນີ (28.3%) ບໍ່ມີການສຶກສາ. ເມື່ອເວລາ ແບ່ງຈຳນວນ ຜູ້ທີ່ຖືກສຳພາດອອກຕາມເພດ, ແມ່ຍິງ ສ່ວນໃຫຍ່ຕອບວ່າ ຜົວ ເພິ່ນໄດ້ຮັບການສຶກສາ (361 ກໍລະນີ, 77%) ແລະ ຜູ້ຊາຍສ່ວນໃຫຍ່ຕອບວ່າເມຍຂອງເພິ່ນໄດ້ຮັບການສຶກສາໃນລະດັບໃດໜຶ່ງ (279 ກໍລະນີ, 65.6%).




**ກຣາຟ 5. 9 ລະດັບການສຶກສາຂອງຄູ່ສົມລົດຂອງຜູ້ທີ່ຖືກສຳພາດ**

### *5.1.7 ອາຊີບ*

ເປີເຊັນສ່ວນໃຫຍ່ຂອງຈຳນວນ ຜູ້ທີ່ຖືກສຳພາດ (ເບິ່ງ ກຣາຟ 5. 10) ແມ່ນຊາວນາ (892 ຄົນ, 94.3%). ສ່ວນທີ່ເຫຼືອນັ້ນ ແມ່ນ ທຳການຄ້າເລັກໆ ນ້ອຍໆ (20 ຄົນ, 2.1%), ເປັນນາຍຄູ (5 ຄົນ, 0.5%), ເປັນລັດຖະກອນ (11 ຄົນ, 1.2%), ທຳທຸລະກິດເອກະຊົນ (2 ຄົນ, 0.2%) ແລະ ມີອາຊີບອື່ນໆ (16 ຄົນ, 1.7%).




**ກຣາຟ 5. 10 ອາຊີບ**

### *5.1.8 ເສດຖະກິດຄອບຄົວ*

ເມື່ອເວລາຖາມວ່າ ແມ່ນໃຜເປັນຜູ້ຫາເງິນມາສູ່ຄອບຄົວ, ຜູ້ທີ່ຖືກສຳພາດສ່ວນຫຼາຍໃຫ້ຄຳຕອບວ່າຜົວ ແລະ ເມຍ ຊ່ວຍກັນຫາ (738 ຄົນ, 76.4%), ມີແຕ່ຜົວເທົ່ານັ້ນທີ່ເປັນຄົນຫາມີຈຳນວນ 188 ກໍລະນີ (19.5%), ແລະ ຕອບວ່າມີແຕ່ເມຍຜູ້ດຽວເປັນຄົນຫາຈຳນວນ 24 ກໍລະນີ (2.5%). ສ່ວນຜູ້ທີ່ຖືກສຳພາດ ຈຳນວນ 15 ຄົນ (1.6%) ໄດ້ແນະນຳວ່າມີຄົນອື່ນທີ່ບໍ່ແມ່ນຜົວແມ່ນເມຍ ຊ່ວຍຫາເງິນມາໃຫ້ຄອບຄົວ (ເບິ່ງ ກຣາຟ 5. 11).




**ກຣາຟ 5. 11 ຜູ້ທີ່ຫາເງິນເຂົ້າຄອບຄົວ**

ໃນເຄິ່ງໜຶ່ງຂອງຈຳນວນກໍລະນີ, (482 ກໍລະນີ, 50%) ຜົວຫາເງິນມາໃຫ້ແກ່ຄອບຄົວເປັນສ່ວນໃຫຍ່, ແລະ ມີພຽງ 52 ກໍລະນີເທົ່ານັ້ນ (5.4%) ທີ່ໄດ້ໃຫ້ການວ່າແມ່ນເມຍ ເປັນຜູ້ຫາເງິນມາໃຫ້ແກ່ຄອບຄົວເປັນສ່ວນໃຫຍ່ ແລະ ຕອບວ່າ ຄົນອື່ນປະກອບສ່ວນຢ່າງຫຼວງຫຼາຍໃຫ້ແກ່ລາຍຮັບຂອງຄອບຄົວ14 ຄົນ (1.5%). ສ່ວນທີ່ເຫຼືອ 416 ຄົນ (43.2%) ລາຍງານວ່າທັງສອງ ຜົວ ແລະ ເມຍ ຫາເງິນຊ່ວຍກັນຢ່າງເທົ່າທຽມກັນຊ່ວຍເຫຼືອຄ້ຳຈູນຄອບຄົວຂອງຕົນ (ເບິ່ງ ກຣາຟ 5. 12).




**ກຣາຟ 5. 12 ຜູ້ທີ່ຫາເງິນເຂົ້າຄອບຄົວໄດ້ຫຼາຍກວ່າ**

### *5.1.9 ການຢູ່ຮ່ວມຫຼັງຄາເຮືອນດຽວກັນ*

ຄູ່ຜົວເມຍ ຈຳນວນ ສ່ວນຫຼາຍແມ່ນບໍ່ໄດ້ຢູ່ຮ່ວມເຮືອນດຽວກັນກັບຜູ້ອື່ນໝາຍຄວາມວ່າອອກຢູ່ເຮືອນຕົນເອງ (602 ກໍລະນີ, 66.4%) (ເບິ່ງ ກຣາຟ 5. 13), 149 ກໍລະນີ (16.4%) ຢູ່ຮ່ວມເຮືອນດຽວກັນກັບຄອບຄົວຂອງເມຍ, ແລະ 149 ກໍລະນີ (16.4%) ຢູ່ຮ່ວມເຮືອນດຽວກັນກັບຄອບຄົວຂອງຜົວ. ສ່ວນອີກ 5 ກໍລະນີ (0.8%) ຢູ່ຮ່ວມເຮືອນດຽວກັນ ກັບຄອບຄົວຂອງຄົນອື່ນ.




**ກຣາຟ 5. 13 ການຢູ່ຮ່ວມຫຼັງຄາເຮືອນດຽວກັນ**

### *5.1.10 ຂະໜາດຂອງຄອບຄົວ*

ກຣາຟ 5. 14 ຊີ້ໃຫ້ເຫັນວ່າ ຈຳນວນຂອງເດັກນ້ອຍໃນແຕ່ລະຄອບຄົວແມ່ນ ຢູ່ໃນລະຫວ່າງ 0 ຫາ 11 ຄົນ, ແລະ ມີຄອບຄົວໜຶ່ງທີ່ມີ ລູກ ເຖິງ 20 ຄົນ. ໂດຍສະເລ່ຍຄອບຄົວໜຶ່ງມີ ລູກ 3.6 ຄົນ. ANOVA ເຜີຍໃຫ້ເຫັນວ່າ ຈຳນວນຂອງເດັກນ້ອຍໃນຄອບຄົວໜຶ່ງ ແມ່ນພົວພັນກັນຫຼາຍກັບລະດັບ ການສຶກສາຂອງພໍ່ແມ່ (F = 3.287 Sig. 0.011). ອັນນີ້ໄດ້ໃຫ້ຂໍ້ສັງເກດວ່າຖ້າວ່າຄອບຄົວ ໃດຫາກພໍ່ແມ່ ມີການສຶກສາເຫັນວ່າຈຳນວນລູກຈະໜ້ອຍລົງ.




**ກຣາຟ 5. 14 ຈຳນວນເດັກນ້ອຍໃນຄອບຄົວ**

### *5.1.11 ການສຶກສາຂອງຂອງລູກ*

ຈຳນວນຜູ້ທີ່ຖືກສຳພາດ ຕ່ຳກວ່າເຄິ່ງໜຶ່ງ (249 ຄົນ, 38.4%) ບອກວ່າ ລູກຂອງພວກເພິ່ນໄດ້ອອກໂຮງຮຽນແລ້ວ, ແລະ 399 ກໍລະນີ (61.6%) ບອກວ່າ ລູກຂອງພວກເພິ່ນບໍ່ໄດ້ອອກໂຮງຮຽນຈັກຄົນ. ANOVA ເຜີຍໃຫ້ເຫັນວ່າ ຄອບຄົວທີ່ມີລູກຫຼາຍຄົນຈຳນວນລູກທີ່ອອກໂຮງຮຽນກ່ອນຮຽນຈົບຫຼາຍກວ່າ ຄອບຄົວທີ່ມີລູກແຕ່ພຽງສອງຫຼືສາມຄົນເທົ່ານັ້ນ (F = 11.139, Sig. = 0.000). ມັນບໍ່ມີຄວາມກ່ຽວຂ້ອງລະຫວ່າງ ຈຳນວນເດັກນ້ອຍອອກໂຮງຮຽນ ແລະ ລະດັບການສຶກສາຂອງພໍ່ແມ່ເຂົາເຈົ້າ.

ເຫດຜົນຕົ້ນຕໍ ສອງ ຢ່າງທີ່ພາໃຫ້ເດັກນ້ອຍອອກໂຮງຮຽນມີຄື: ພໍ່ແມ່ບໍ່ມີເງິນທີ່ຈະສົ່ງລູກເຂົ້າໂຮງຮຽນ (137 ກໍລະນີ, 46.3%) ແລະ ເດັກນ້ອຍ ປະຕິເສດທີ່ຈະສືບຕໍ່ໄປໂຮງຮຽນ (137 ກໍລະນີ, 46.3%) (ເບິ່ງ ກຣາຟ 5. 15). ເດັກນ້ອຍ ໃນຄອບຄົວໃຫຍ່ມັກຈະອອກໂຮງຮຽນຫຼາຍກວ່າເດັກນ້ອຍໃນຄອບຄົວນ້ອຍ ຍ້ອນວ່າບໍ່ມີທຶນ (F = 17.795, Sig. = 0.000).

ຄືດັ່ງທີ່ຊີ້ໃຫ້ເຫັນໃນ ກຣາຟ 5. 16, ຜູ້ທີ່ຖືກສຳພາດຈຳນວນ 75 ຄົນ ແຈ້ງໃຫ້ຊາບວ່າ ລູກສາວ ຂອງພວກເພິ່ນອອກໂຮງຮຽນ ແລະ ມີແຕ່ ລູກຊາຍເທົ່ານັ້ນທີ່ຍັງສືບຕໍ່ໄປໂຮງຮຽນ. ເຫດຜົນສ່ວນໃຫຍ່ແມ່ນພວກເພິ່ນບໍ່ມີເງິນພຽງພໍ (28 ກໍລະນີ, 37.3%) ແລະ ມີຄວາມຕ້ອງການຢາກໃຫ້ລູກສາວຊ່ວຍວຽກເຮືອນການຊານ (26 ກໍລະນີ, 34.7%). ສ່ວນ11 ກໍລະນີ (14.7%) ກ່າວວ່າ ລູກສາວ ຂອງພວກເພິ່ນນັ້ນ ບໍ່ຈຳເປັນຕ້ອງມີການສຶກສາກໍ່ໄດ້.




**ກຣາຟ 5. 15 ເຫດຜົນໃນການອອກໂຮງຮຽນ**




**ກຣາຟ 5. 16 ເຫດຜົນວ່າເປັນຫຍັງລູກສາວຈຶ່ງອອກໂຮງຮຽນ ໃນຂະນະທີ່ ລູກຊາຍ ພັດຍັງສືບຕໍ່ຮຽນ**

## *5.1.12 ການວາງແຜນຄອບຄົວ*

ຜູ້ທີ່ຖືກສໍາພາດທັງຍິງ ແລະ ຊາຍ ຈໍານວນ 447 ຄົນ (52.5%) ຕອບວ່າ ພວກເພິ່ນເຄີຍໄດ້ຄຸມກໍາເນີດ, ແລະ 431 ຄົນ (47.3%) ບອກວ່າບໍ່ເຄີຍໄດ້ຄຸມກໍາເນີດ. ANOVA ໄດ້ຊີ້ໃຫ້ເຫັນວ່າມັນບໍ່ມີການພົວພັນກັນຫຍັງຫຼາຍລະຫວ່າງການຄຸມກໍາເນີດ ແລະ ເພດ ຂອງຜູ້ທີ່ຖືກສໍາພາດ. ການວິເຄາະໄດ້ເຜີຍໃຫ້ເຫັນວ່າໃນຈໍານວນຂອງຜູ້ທີ່ຖືກສໍາພາດ, ຜູ້ທີ່ບໍ່ມີການສຶກສາມັກຈະບໍ່ເຄີຍຄຸມກໍາເນີດຈັກເທື່ອ (ANOVA F = 7.965, Sig. = 0.000). ກຣາຟ 5. 17 ຊີ້ໃຫ້ເຫັນວ່າວິທີຄຸມກໍາເນີດສ່ວນໃຫຍ່ແມ່ນການກິນຢາມີເຖິງ 287 ກໍລະນີ (61%). ລອງລົງມາແມ່ນ ການສັກຢາ (27%). ການຄຸມກໍາເນີດດ້ວຍວິທີການອື່ນ ໆ ແມ່ນ ມີເປີເຊັນນ້ອຍທີ່ສຸດ ຈາກຈໍານວນ ຜູ້ທີ່ຖືກ ສໍາພາດ.

ໃນຈຳນວນ 447 ຄົນ ທີ່ໄດ້ຄຸມກຳເນີດ, 166 ຄົນ (38.7%) ເວົ້າວ່າ ຄູ່ສົມລົດຂອງພວກເພິ່ນຕ້ອງການໃຫ້ເຊົານຳໃຊ້ວິທີການຄຸມກຳເນີດ, 263 ຄົນ (61.3%) ຕອບວ່າ ຄູ່ສົມລົດຂອງພວກເພິ່ນບໍ່ເຄີຍບອກໃຫ້ເຊົາໃຊ້ວິທີການຄຸມກຳເນີດຈັກເທື່ອ. ມີຈຳນວນເທົ່າກັນລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ທີ່ຕ້ອງການເຊົາໃຊ້ວິທີການຄຸມກຳເນີດ. ເຖິງຢ່າງໃດກໍ່ດີ, ເມື່ອສົມທຽບເບິ່ງຕາມເພດແລ້ວ ເຫັນວ່າຈຳນວນຜູ້ຊາຍທີ່ຖືກສຳພາດທີ່ຖືກເມຍ ບອກໃຫ້ເຊົາໃຊ້ວິທີການຄຸມກຳເນີດ (55%) ເມື່ອສົມທຽບໃສ່ກັບຈຳນວນ ຜູ້ຊາຍທີ່ເມຍ ບອກໃຫ້ສືບຕໍ່ນຳໃຊ້ການຄຸມກຳເນີດແມ່ນສູງກວ່າ ຈຳນວນແມ່ຍິງທີ່ຖືກສຳພາດ ທີ່ຖືກຜົວບອກໃຫ້ເຊົາໃຊ້ວິທີການຄຸມກຳເນີດ (34%) ເມື່ອສົມທຽບໃສ່ກັບຈຳນວນຜູ້ທີ່ຜົວບອກໃຫ້ສືບຕໍ່ນຳໃຊ້ການຄຸມກຳເນີດ (66%). ສ່ວນອີກ 40 ກໍລະນີ (23.8%) ໄດ້ເຊົາໃຊ້ວິທີການຄຸມກຳເນີດ ເພາະວ່າພວກເພິ່ນຕ້ອງການມີລູກຕື່ມອີກ, ໃນຈຳນວນ 64 ຄົນ (38%) ຕ້ອງການເຊົາຍ້ອນເຫດຜົນອື່ນໆ ແລະມີຈຳນວນ 5 ຄົນ ຄິດວ່າການຄຸມກຳເນີດ ມັນບໍ່ເປັນທຳມະຊາດ.




**ກຣາຟ 5. 17 ການຄຸມກຳເນີດ**

## *5.1.13 ຄວາມຕ້ອງການຢາກຈະມີລູກສາວ ຫຼືວ່າ ລູກຊາຍ*

ໃນຈຳນວນຜູ້ທີ່ຖືກສຳພາດ ມີຫຼາຍກວ່າໝູ່ (368 ຄົນ, 39.1%) ທີ່ຢາກຈະມີລູກກົກເປັນຜູ້ຊາຍ, ຈຳນວນ (309 ຄົນ, 32.9%) ບອກວ່າຢາກໄດ້ ລູກສາວ ເປັນຜູ້ທຳອິດ ແລະ 27.9% (262 ຄົນ) ບອກວ່າບໍ່ສຳຄັນໄດ້ແນວໃດກ່ອນກໍ່ດີ (ຕາຕະລາງ 5.1). ມັນມີທ່າອ່ຽງຫຼາຍທີ່ສຸດສຳລັບຜູ້ຍິງ ແມ່ນຢາກໄດ້ລູກສາວ ແລະ ສຳລັບຜູ້ຊາຍແມ່ນຢາກໄດ້ລູກຊາຍ.

**ຕາຕະລາງ 5.1 ຢາກມີລູກສາວ ຫຼືວ່າ ລູກຊາຍ**

| ຢາກມີລູກຊາຍ ຫຼືວ່າ ລູກສາວ ເມື່ອເວລາຖືພາຄັ້ງທຳອິດ | ແມ່ຍິງ (n = 504) | ຜູ້ຊາຍ (n = 435) | ທັງໝົດ (n = 939) |
|---|---|---|---|
| ລູກຊາຍ | 140 (27.8%) | 228 (52.4%) | 368 (39.1%) |
| ລູກສາວ | 209 (41.5%) | 100 (23%) | 309 (32.9%) |
| ລູກຊາຍ ຫຼືລູກສາວກໍ່ໄດ້ | 155 (30.7%) | 107 (24.6%) | 262 (27.9%) |

ເມື່ອເວລາ ລູກຜູ້ທຳອິດເກີດມາ ແລະ ບໍ່ໄດ້ຕາມເພດທີ່ຕ້ອງການຢາກຈະໄດ້, ໃນກໍລະນີສ່ວນໃຫຍ່ (748 ກໍລະນີ, 94.9%) ແມ່ນບໍ່ມີ ການໂຕ້ຕອບຄືນຫຍັງເລີຍທີ່ບົ່ງບອກເຖິງຄວາມບໍ່ພໍໃຈຈາກຄູ່ສົມລົດ. ຢູ່ໃນ 40 ກໍລະນີ ໃຫ້ການວ່າ ຄູ່ສົມລົດຂອງຕົນ ບໍ່ພໍໃຈ ແລະ ຮ້າຍ ເມື່ອລູກຄົນທຳອິດທີ່ເກີດມາ ບໍ່ໄດ້ຕາມເພດທີ່ຕົນປາດຖະໜາ. ໃນນີ້ 27 ກໍລະນີ (67.5%), ແມ່ນ ຜົວເປັນຜູ້ຮ້າຍ, ແລະ 13 (32.5%) ກໍລະນີ ແມ່ນ ເມຍ ເປັນຜູ້ຮ້າຍ.

## 5.2 ສາເຫດທີ່ພາໃຫ້ເກີດມີຄວາມບໍ່ສະຫງົບສຸກຢູ່ພາຍໃນຄອບຄົວ

### *5.2.1 ການຕັດສິນໃຈ*

ກວ່າ 95% ຂອງຜູ້ທີ່ຖືກສຳພາດ (921 ຄົນ, 95.2%) ຕອບວ່າ ພວກເພິ່ນໄດ້ເຂົ້າຮ່ວມໃນການຕັດສິນໃຈໃນຄອບຄົວ. ໃນ 42 ກໍລະນີ ທີ່ເຫຼືອ ຊຶ່ງບໍ່ໄດ້ເຂົ້າຮ່ວມໃນການຕັດສິນໃຈ, 27 ກໍລະນີ (2.8%) ແມ່ນ ແມ່ຍິງ ແລະ 15 ຄົນ (1.6%) ແມ່ນຜູ້ຊາຍ. ມີຈຳນວນໜ້ອຍໜຶ່ງທີ່ເວົ້າວ່າການຕັດສິນໃຈໃນຄອບຄົວ ແມ່ນ ຄົນອື່ນນອກຈາກຄູ່ຜົວເມຍ ເຊັ່ນ ພໍ່ແມ່ ຂອງຝ່າຍຜົວ ຫຼື ຝ່າຍເມຍ. ກ່ຽວກັບໝົດທຸກໆເລື່ອງ, ທັງຜູ້ຊາຍ ແລະ ແມ່ຍິງ ໄດ້ຕອບວ່າພວກເພິ່ນບໍ່ໄດ້ເຂົ້າຮ່ວມໃນການຕັດສິນໃຈ (ເບິ່ງ ຕາຕະລາງ 5. 2). ເຖິງຢ່າງໃດກໍ່ດີ, ຜູ້ທີ່ຖືກສຳພາດທັງຍິງ ແລະຊາຍໄດ້ເຂົ້າຮ່ວມໜ້ອຍເຕັມທີໃນການຕັດສິນໃຈກ່ຽວກັບການແຕ່ງງານຂອງ ລູກ, ແລະ ການຕັດສິນໃຈກ່ຽວກັບ ເພື່ອນບ້ານໃກ້ຄຽງ. ANOVA ເຜີຍໃຫ້ເຫັນວ່າ ແມ່ຍິງ ທີ່ເຂົ້າຮ່ວມໃນການຕັດສິນໃຈແມ່ນຈະມີສ່ວນພົວພັນກັບກໍລະນີທີ່ທັງສອງຄົນຜົວ-ເມຍ ຫາເງິນຊ່ວຍກັນມາສູ່ຄອບຄົວ, ແທນທີ່ຈະແມ່ນມີແຕ່ ຜູ້ຊາຍ ຝ່າຍດຽວເທົ່ານັ້ນເປັນຜູ້ຫາເງິນລ້ຽງຄອບຄົວ (F = 2.960, Sig. 0.019).

**ຕາຕະລາງ 5. 2 ການເຂົ້າຮ່ວມໃນການຕັດສິນບັນຫາ**

| ເຂົ້າຮ່ວມໃນການຕັດສິນບັນຫາ | ການເຂົ້າຮ່ວມຂອງຜູ້ຍິງ | | | ການເຂົ້າຮ່ວມຂອງຜູ້ຊາຍ | | |
|---|---|---|---|---|---|---|
| | ເຂົ້າ | ບໍ່ເຂົ້າ | ທັງໝົດ | ເຂົ້າ | ບໍ່ເຂົ້າ | ທັງໝົດ |
| ສິ່ງຂອງທີ່ຈຳເປັນສຳລັບຄອບຄົວ | 369 (77%) | 112 (33%) | 481 | 332 (76%) | 103 (24%) | 435 |
| ການສຶກສາຂອງລູກ | 313 (65%) | 166 (35%) | 479 | 270 (62%) | 165 (38%) | 435 |
| ການແຕ່ງງານຂອງລູກ | 212 (44%) | 265 (66%) | 477 | 166 (38%) | 269 (62%) | 435 |
| ການຊື້ ແລະການຂາຍຊັບສິນ | 363 (76%) | 116 (24%) | 479 | 321 (74%) | 113 (26%) | 434 |
| ບັນຫາຂອງການເຮັດວຽກ | 350 (73%) | 128 (27%) | 478 | 298 (69%) | 137 (31%) | 435 |
| ການຜິດຖຽງກັນຂອງເພື່ອນບ້ານໃກ້ຄຽງ | 185 (39%) | 293 (61%) | 478 | 162 (37%) | 273 (63%) | 435 |
| ການໃຊ້ຈ່າຍທີ່ສຳຄັນ | 313 (65%) | 165 (35%) | 478 | 282 (65%) | 153 (35%) | 435 |

| | | | | | | |
|---|---|---|---|---|---|---|
| ທັງໝົດຂ້າງເທິງນັ້ນ | 156 (33%) | 322 (77%) | 478 | 289 (50%) | 289 (50%) | 578 |

ແມ່ຍິງ 48.6% ແລະ ຜູ້ຊາຍ 51.4%.

ຕາຕະລາງ 5. 3 ສະແດງໃຫ້ເຫັນວ່າສ່ວນຫຼາຍຂອງຜູ້ທີ່ຖືກສໍາພາດທັງຍິງ ແລະ ຊາຍ ມີຄວາມຮູ້ສຶກວ່າເມື່ອເວລາເຂົ້າຮ່ວມໃນການຕັດສິນໃຈ ເຂົາເຈົ້າກໍ່ບໍ່ແມ່ນຜູ້ຕັດສິນຄົນສຸດທ້າຍ ໂດຍສະເພາະແມ່ນເລື່ອງທີ່ກ່ຽວກັບການສຶກສາ ແລະ ການແຕ່ງງານ ຂອງ ລູກ, ເລື່ອງຂອງເພື່ອນບ້ານໃກ້ຄຽງ ແລະ ເລື່ອງການໃຊ້ຈ່າຍທີ່ສໍາຄັນ. ໃນ (743 ກໍລະນີ, 80.1%), ຜູ້ທີ່ຖືກສໍາພາດເຊື່ອວ່າ ບົດບາດຂອງແມ່ຍິງ ໃນການຕັດສິນໃຈຄວນເພີ່ມຂຶ້ນ ແລະ (185 ກໍລະນີ, 19.9%) ຄິດວ່າບໍ່ສົມຄວນເພີ່ມບົດບາດຂອງແມ່ຍິງໃນການຕັດສິນໃຈ. ໃນບັນດາຜູ້ທີ່ຕອບວ່າຄວນເພີ່ມບົດບາດຂອງແມ່ຍິງໃນການຕັດສິນໃຈໃຫ້ຫຼາຍກວ່າເກົ່າມີ ແມ່ຍິງ 54.5% ແລະ ຜູ້ຊາຍ 45.5%. ໃນບັນດາຜູ້ທີ່ຕອບວ່າບໍ່ສົມຄວນເພີ່ມບົດບາດຂອງແມ່ຍິງໃນການຕັດສິນໃຈ ມີ ແມ່ຍິງ 48.6% ແລະ ຜູ້ຊາຍ 51.4%.

ຕາຕະລາງ 5. 3 ຜູ້ຕັດສິນສຸດທ້າຍ

| ເຂົ້າຮ່ວມໃນການຕັດສິນບັນຫາ | ຜູ້ຍິງເປັນຜູ້ຕັດສິນ | | | ຜູ້ຊາຍເປັນຜູ້ຕັດສິນ | | |
|---|---|---|---|---|---|---|
| | ແມ່ນ | ບໍ່ແມ່ນ | ທັງໝົດ | ແມ່ນ | ບໍ່ແມ່ນ | ທັງໝົດ |
| ສິ່ງຂອງທີ່ຈໍາເປັນສໍາລັບຄອບຄົວ | 187 (45%) | 224 (55%) | 411 | 99 (29%) | 239 (71%) | 338 |
| ການສຶກສາຂອງລູກ | 83 (20%) | 326 (80%) | 409 | 57 (17%) | 280 (23%) | 337 |
| ການແຕ່ງງານຂອງລູກ | 56 (14%) | 354 (86%) | 410 | 28 (8%) | 309 (92%) | 337 |
| ການຊື້ ແລະການຂາຍຊັບສິນ | 93 (23%) | 317 (77%) | 410 | 68 (20%) | 269 (80%) | 337 |
| ບັນຫາຂອງການເຮັດວຽກ | 108 (26%) | 302 (74%) | 410 | 120 (36%) | 217 (64%) | 337 |
| ບັນຫາຂອງເພື່ອນບ້ານໃກ້ຄຽງ | 48 (12%) | 362 (88%) | 410 | 24 (7%) | 313 (93%) | 337 |
| ການໃຊ້ຈ່າຍທີ່ສໍາຄັນ | 74 (18%) | 336 (82%) | 410 | 51 (15%) | 286 (85%) | 337 |
| ທັງໝົດຂ້າງເທິງນັ້ນ | 40 (10%) | 370 (90%) | 410 | 20 (6%) | 317 (94%) | 337 |

ກຣາຟ 5. 18 ສັງລວມເອົາເຫດຜົນລວມອັນທີໜຶ່ງທີ່ຕ້ອງການໃຫ້ ເພີ່ມບົດບາດຂອງແມ່ຍິງໃນການຕັດໃຈໃຫ້ຫຼາຍຂຶ້ນແມ່ນວ່າ ແມ່ຍິງ ເປັນບຸກຄົນສໍາຄັນຢູ່ໃນຄອບຄົວ (59%). ເຫດຜົນລວມອັນທີສອງແມ່ນວ່າແມ່ຍິງມີຄວາມສາ



ມາດຕັດໃຈໄດ້.

ກຣາຟ 5. 18 ບົດບາດຂອງແມ່ຍິງໃນການຕັດສິນບັນຫາ

ເມື່ອເວລາຖາມກ່ຽວກັບການຕັດສິນໃຈ, 198 ກໍລະນີ (20.8%) ຕອບວ່າ ຄອບຄົວຂອງພວກເພິ່ນເຄີຍມີບັນຫາເກີດຂຶ້ນຕໍ່ການຕັດສິນໃຈ (ເບິ່ງ ຕາຕະລາງ 5. 4), ໃນ 755 ກໍລະນີ (79.7%) ຕອບວ່າ ພວກເພິ່ນບໍ່ເຄີຍມີບັນຫາຫຍັງໝົດ. ສຳລັບຜູ້ທີ່ຕອບວ່າມີບັນຫາເກີດຂຶ້ນນັ້ນ, ເມື່ອເວລາຖາມລາຍລະອຽດຕື່ມກ່ຽວກັບບັນຫາທີ່ເກີດຂຶ້ນ, ທັງຍິງ ແລະຊາຍຕອບວ່າບັນຫາທົ່ວໄປແມ່ນກ່ຽວກັບວຽກພາຍໃນຄອບຄົວ, ເສດຖະກິດຄອບຄົວແລະໜ້າທີ່ວຽກງານ.

**ຕາຕະລາງ 5. 4 ສາເຫດຂອງບັນຫາທີ່ເກີດຂຶ້ນຕໍ່ການຕັດສິນບັນຫາ**

| ມີບັນຫາເກີດຂຶ້ນຕໍ່ການຕັດສິນ ບັນຫາ ກ່ຽວກັບ | ຜູ້ຍິງເປັນຜູ້ຕັດສິນ | | | ຜູ້ຊາຍເປັນຜູ້ຕັດສິນ | | |
|---|---|---|---|---|---|---|
| | ມີ | ບໍ່ມີ | ທັງໝົດ | ມີ | ບໍ່ມີ | ທັງໝົດ |
| ວຽກຄອບຄົວ | 43 (48%) | 47 (52%) | 90 | 23 (26%) | 65 (74%) | 88 |
| ການເພີ່ມຂື້ຍຂອງວຽກເຮືອນ | 9 (10%) | 80 (90%) | 89 | 5 (6%) | 84 (94%) | 89 |
| ເສດຖະກິດຄອບຄົວ | 26 (29%) | 63 (71%) | 89 | 31 (35%) | 57 (65%) | 88 |
| ວຽກເຮັດງານທຳ | 35 (39%) | 54 (61%) | 89 | 42 (48%) | 46 (52%) | 88 |
| ການສຶກສາຂອງລູກ | 5 (6%) | 83 (94%) | 88 | 3 (3%) | 85 (97%) | 88 |
| ສຸຂະພາບຂອງລູກ | 4 (4%) | 85 (96%) | 89 | 2 (2%) | 86 (98%) | 88 |
| ລູກ | 8 (9%) | 81 (91%) | 89 | 5 (6%) | 83 (94%) | 88 |
| ການນອກໃຈກັນ (ຫຼິ້ນຊູ້) | 6 (7%) | 83 (93%) | 89 | 5 (6%) | 83 (94%) | 88 |
| ເພດສຳພັນ ລະຫວ່າງ ຜົວເມຍ | 0 (0%) | 88 (100%) | 88 | 3 (3%) | 85 (97%) | 88 |
| ການດູໝິ່ນປະໝາດ | 1 (1%) | 88 (99%) | 89 | 3 (3%) | 85 (97%) | 88 |

### *5.2.2 ການຕິດເຫຼົ້າ*

ຜູ້ທີ່ຖືກສຳພາດ ໄດ້ຕອບກ່ຽວກັບການດື່ມເຫຼົ້າຂອງຄູ່ສົມລົດຂອງພວກເພິ່ນ. ໂດຍລວມແລ້ວຈຳນວນຜູ້ທີ່ຖືກສຳພາດ ຕ່ຳກວ່າ 2% ໃຫ້ການວ່າ ຄູ່ສົມລົດຂອງພວກເພິ່ນ ດື່ມເຫຼົ້າທຸກວັນ. ຕ່ຳກວ່າ 8% ຕອບວ່າຄູ່ສົມລົດຂອງພວກເພິ່ນ ດື່ມເຫຼົ້າ ຫຼາຍກວ່າໜຶ່ງຄັ້ງຕໍ່ເດືອນ. ຜົວ (65%) ສອງເທື່ອຂອງເມຍ (33%) ດື່ມເຫຼົ້າໃນງານພິເສດເທົ່ານັ້ນ (ເບິ່ງ ກຣາຟ 5. ). ຜົນຂອງການວິເຄາະຊີ້ໃຫ້ເຫັນວ່າສຳລັບຜູ້ທີ່ບໍ່ເຄີຍດື່ມເຫຼົ້າຈັກເທື່ອ, ຈຳນວນແມ່ຍິງ (64%) ແມ່ນ ສາມເທື່ອຂອງຈຳນວນຜູ້ຊາຍ (24%)ທີ່ບໍ່ເຄີຍດື່ມ.

ກຣາຟ 5. ຊີ້ໃຫ້ເຫັນວ່າຜູ້ທີ່ຖືກສຳພາດຈຳນວນຫຼາຍ ເຊື່ອວ່າ ຄູ່ສົມລົດຂອງພວກເພິ່ນດື່ມເຫຼົ້າເມົາ ແຕ່ພຽງໃນງານພິເສດເທົ່ານັ້ນ (53%) ແລະໃນ 37.1% ໄດ້ໃຫ້ຄຳຕອບວ່າຄູ່ສົມລົດຂອງ ພວກເພິ່ນບໍ່ເຄີຍເມົາເຫຼົ້າຈັກເທື່ອ.

ຈາກການສຳພາດເຫັນວ່າຜູ້ຊາຍ ເມົາເຫຼົ້າຫຼາຍເທື່ອກວ່າແມ່ຍິງ (ANOVA F = 32.504, Sig. = 0.000) 11% ຂອງຜູ້ຊາຍ ແມ່ນເມົາເຫຼົ້າຢ່າງຕ່ຳເດືອນລະເທື່ອ, ສ່ວນແມ່ຍິງນັ້ນ ມີແຕ່ພຽງ 1% ທີ່ເມົາເຫຼົ້າ ຢ່າງຕ່ຳເດືອນລະຄັ້ງ. ແມ່ຍິງ ຫຼາຍກວ່າ 50% ແມ່ນບໍ່ເຄີຍເມົາເຫຼົ້າຈັກເທື່ອ, ສ່ວນຜູ້ຊາຍທີ່ບໍ່ເຄີຍເມົາເຫຼົ້າຈັກເທື່ອ ນັ້ນ ມີແຕ່ພຽງ 30%.

ໃນ 24.5% (89 ກໍລະນີ), ຜູ້ທີ່ຖືກສໍາພາດ ມີບັນຫາເກີດຂື້ນ ຍ້ອນວ່າ ຄູ່ສົມລົດ ດື່ມເຫຼົ້າ. ມີ 77 ຄົນ (86.5%) ໃນ 89 ກໍລະນີ ແມ່ນ ແມ່ຍິງເວົ້າ ວ່າຍ້ອນຜົວດື່ມເຫຼົ້າ ແລະ ທີ່ເຫຼືອ 12 ກໍລະນີ ແມ່ນຜູ້ຊາຍ ເວົ້າວ່າ ຍ້ອນເມຍດື່ມເຫຼົ້າ




ຜົວ ເມຍ

**ກຣາຟ 5. 19 ຜົວ ຫຼື ເມຍ ດື່ມເຫຼົ້າ**




ຜົວ ເມຍ

**ກຣາຟ 5. 20 ຈຳນວນບັນຫາເກີດຂຶ້ນເມື່ອເວລາເມົາ**

**ຕາຕະລາງ 5. 5 ບັນຫາທີ່ເກີດຂຶ້ນຈາກການດື່ມ**

| | ຜົວດື່ມເຫຼົ້າ (n = 256) | ເມຍດື່ມເຫຼົ້າ (n = 101) |
|---|---|---|
| ບັນຫາທີ່ເກີດຂຶ້ນ ແມ່ນ ຍ້ອນການດື່ມເຫຼົ້າ | 77 (30%) | 12 (12%) |
| ບັນຫາທີ່ເກີດຂຶ້ນ ບໍ່ແມ່ນຍ້ອນການດື່ມເຫຼົ້າ | 179 (70%) | 89 (88%) |

ຢູ່ໃນ10% ຂອງກໍລະນີ ໄດ້ໃຫ້ການວ່າ ຄູ່ສົມລົດຂອງເພິ່ນ ຕີກັບຜູ້ອື່ນ ພາຍຫຼັງດື່ມເຫຼົ້າ ໃນປີທີ່ຜ່ານມາ. ໃນ 10% ນີ້, 7% ແມ່ນຜົວ ແລະ 3% ແມ່ນເມຍ ທີ່ໄປຕີ ກັບຄົນອື່ນ (ເບິ່ງ ກຣາຟ 5. ).




**ກຣາຟ 5. 21 ຕີກັບຄົນອື່ນ ພາຍຫຼັງຈາກດື່ມເຫຼົ້າ**

**ຕາຕະລາງ 5. 6 ເຫດການຕ່ອຍຕີກັນ ພາຍຫຼັງການດື່ມເຫຼົ້າ**

| ປີກາຍນີ້ ມີເຫດການຕີກັນເກີດຂຶ້ນຈັກເທື່ອ? | ຜົວຕີກັນກັບຄົນອື່ນ (n = 55) | ເມຍຕີກັນກັບຄົນອື່ນ (n = 25) |
|---|---|---|
| ບໍ່ເຄີຍ | 24 (49%) | 18 (72%) |
| 1-2 ເທື່ອ | 5 (9%) | 1 (4%) |
| 3-5 ເທື່ອ | 11 (20%) | 2 (8%) |
| ເລື້ອຍ ໆ | 12 (22%) | 4 (16%) |

## *5.2.3 ຄູ່ສົມລົດນອກໃຈ(ຫຼິ້ນຊູ້)*

ເມື່ອເວລາຖາມ ກ່ຽວກັບການນອກໃຈກັນ (ການຫຼິ້ນຊູ້), ຜູ້ທີ່ຖືກສຳພາດສ່ວນໃຫຍ່ (89%) ທັງຍິງ ແລະ ຊາຍຕອບວ່າ ຄູ່ສົມລົດ ຂອງພວກເພິ່ນບໍ່ເຄີຍນອກໃຈຈັກເທື່ອ (ເບິ່ງ ກຣາຟ 5. ), ໃນ 63 ກໍລະນີ (7%) ຕອບວ່າຄູ່ສົມລົດຂອງເພິ່ນນອກໃຈ.

ຈາກການຖາມເພີ່ມເຕີມເຫັນວ່າໃນ 7% ຫຼື 63 ກໍລະນີທີ່ມີການນອກໃຈຄູ່ສົມລົດນີ້, ເຊິ່ງມີຜູ້ເປັນຜົວ 14 ຄົນ ແລະ ຜູ້ເປັນເມຍ 3 ຄົນ ທີ່ໄດ້ມີລູກກັບຄົນອື່ນ ຫຼືເວົ້າອີກຢ່າງໜຶ່ງ ແມ່ນ ເກີດຈາກການຫຼິ້ນຊູ້.




**ກຣາຟ 5. 22 ຄູ່ສົມລົດນອກໃຈ (ການຫຼິ້ນຊູ້)**

## 5.3 ຄວາມຮຸນແຮງ

### *5.3.1 ຄວາມເຂົ້າໃຈກ່ຽວກັບສິດທິຂອງແມ່ຍິງ*

ທີມງານສຳຫຼວດ ໄດ້ຖາມຜູ້ທີ່ຖືກສຳພາດວ່າພວກເພິ່ນເຫັນດີ ຫຼື ບໍ່ເຫັນດີກັບບັນດາຄຳເວົ້າທີ່ນຳໃຊ້ເພື່ອກຳນົດຄວາມເຂົ້າໃຈກ່ຽວກັບສິດທິຂອງແມ່ຍິງ.ຄຳເວົ້າເຫຼົ່ານີ້ແມ່ນລວມທັງການປຶກສາຫາລືກ່ຽວກັບບົດບາດຂອງຍິງ-ຊາຍ ແລະ ສິດຂອງຜົວທີ່ມີຕໍ່ເມຍ, ໂດຍສະເພາະກ່ຽວກັບສິດຂອງຜົວ ໃນການຂົ່ມເຫງເມຍ. ການວິເຄາະໄດ້ຊີ້ໃຫ້ເຫັນວ່າ ມັນບໍ່ໄດ້ມີການພົວພັນກັນລະຫວ່າງ ລະດັບການສຶກສາ, ອາຍຸ ຫຼື ເພດ ຂອງຜູ້ທີ່ຖືກສຳພາດ ແລະ ພວກເພິ່ນຈະເຫັນດີ ຫຼື ບໍ່ເຫັນດີ ກັບຄຳເວົ້າເຫຼົ່ານັ້ນ.

ຜູ້ທີ່ຖືກສຳພາດສ່ວນໃຫຍ່, ທັງເພດຍິງແລະເພດຊາຍ (ເພດຍິງ 398 ຄົນ, 81% ແລະ ເພດຊາຍ 404 ຄົນ, 91%) ເຫັນດີວ່າມັນມີຄວາມສຳຄັນສຳລັບຜູ້ຊາຍທີ່ຈະຕ້ອງໄດ້ສະແດງໃຫ້ເມຍຕົນເຫັນວ່າຕົນແມ່ນຫົວໜ້າຄົວເຮືອນ.ຕາຕະລາງ 5. 7) ຫຼາຍກວ່າເຄິ່ງໜຶ່ງ (ແມ່ຍິງ 341 ຄົນ, 68% ແລະ ຜູ້ຊາຍ 314 ຄົນ, 71%) ເຊື່ອເຊັ່ນດຽວກັນວ່າ ບັນຫາ ຂອງຄອບຄົວສົມຄວນປຶກສາຫາລືກັນພາຍໃນຄອບຄົວເທົ່ານັ້ນ. ເຖິງຢ່າງໃດກໍ່ດີ, ກົງກັນຂ້າມ, ຜູ້ທີ່ຖືກສຳພາດ ຈຳນວນເກືອບເຄິ່ງໜຶ່ງ (ແມ່ຍິງ 227 ຄົນ, 47% ແລະ ຜູ້ຊາຍ 243 ຄົນ 51%) ໄດ້ໃຫ້ຄຳເຫັນວ່າ: ຖ້າຫາກຜູ້ຊາຍ ປະຕິບັດບໍ່ດີຕໍ່ເມຍ, ສົມຄວນໃຫ້ຄົນອື່ນເຂົ້າມາກ່ຽວຂ້ອງ. ຜູ້ທີ່ຖືກສຳພາດຈຳນວນ 42% (ແມ່ຍິງ 212 ຄົນ, 43% ແລະ ຜູ້ຊາຍ 179 ຄົນ, 41%) ເຫັນດີວ່າມັນແມ່ນໜ້າທີ່ຂອງເມຍ ທີ່ຈະຕ້ອງຕອບສະໜອງທາງເພດໃຫ້ແກ່ຜົວຂອງຕົນ ເຖິງແມ່ນວ່າ ຕົນເອງບໍ່ມີຄວາມ ຕ້ອງການກໍ່ຕາມ. ຕ່ຳກວ່າເຄິ່ງໜຶ່ງ (ແມ່ຍິງ 199 ຄົນ, 40% ແລະ ຜູ້ຊາຍ 193 ຄົນ, 43%) ເຊື່ອວ່າ ເມຍທີ່ດີ ຄວນເຊື່ອຟັງຄວາມຜົວ ເຖິງແມ່ນວ່າ ຕົນບໍ່ເຫັນດີດ້ວຍກໍ່ຕາມ.

**ຕາຕະລາງ 5. 7 ສິດຂອງພັນລະຍາ**

| | ແມ່ຍິງ | | | | ຜູ້ຊາຍ | | | |
|---|---|---|---|---|---|---|---|---|
| | ເຫັນດີ | ບໍ່ເຫັນດີ | ບໍ່ແນ່ໃຈ | ທັງໝົດ | ເຫັນດີ | ບໍ່ເຫັນດີ | ບໍ່ແນ່ໃຈ | ທັງໝົດ |
| ເມຍທີ່ດີ ຕ້ອງເຊື່ອຟັງຄວາມຜົວທຸກເລື່ອງ ເຖິງແມ່ນວ່າ ຕົນເອງບໍ່ເຫັນດີດ້ວຍກໍ່ຕາມ. | 199 (40%) | 300 (59%) | 5 (1%) | 503 | 193 (43%) | 237 (53%) | 16 (4%) | 446 |
| ບັນຫາຄອບຄົວ ຄວນ ປຶກສາຫາລືກັນກັບຄົນ ໃນຄອບຄົວເທົ່ານັ້ນ. | 341 (68%) | 158 (31%) | 3 (1%) | 502 | 314 (71%) | 125 (28%) | 6 (1%) | 445 |
| ຜູ້ຊາຍ ຄວນສະແດງຄວາມເປັນຜູ້ນຳ ໃຫ້ເມຍຂອງຕົນເຫັນໄດ້ວ່າ ຕົນ ແມ່ນຫົວໜ້າ ຂອງ ຄົວເຮືອນ. | 398 (81%) | 94 (18%) | 4 (1%) | 493 | 404 (91%) | 39 (7%) | 3 (1%) | 446 |
| ແມ່ຍິງ ມີສິດເລືອກເພື່ອນຂອງຕົນເອງ ເຖິງແມ່ນວ່າ ຜົວຂອງຕົນ ບໍ່ເຫັນດີດ້ວຍກໍ່ຕາມ. | 196 (40%) | 278 (56%) | 21 (4%) | 495 | 214 (50%) | 208 (49%) | 6 (1%) | 428 |
| ມັນໜ້າທີ່ຂອງເມຍ ທີ່ຈະຕ້ອງຕອບສະໜອງທາງເພດ ໃຫ້ແກ່ຜົວເຖິງວ່າຕົນເອງບໍ່ມີຄວາມຕ້ອງການກໍ່ຕາມ. | 212 (43%) | 260 (53%) | 21 (4%) | 493 | 179 (41%) | 242 (56%) | 12 (3%) | 433 |
| ຖ້າວ່າ ຜົວ ປະຕິບັດຕົນບໍ່ດີ ຕໍ່ເມຍ, ສົມຄວນໃຫ້ຄົນອື່ນເຂົ້າມາກ່ຽວຂ້ອງ. | 227 (47%) | 243 (51%) | 11 (2%) | 481 | 240 (56%) | 182 (43%) | 5 (1%) | 427 |

ຕາຕະລາງ 5. 8 ຊີ້ໃຫ້ເຫັນເຖິງຄວາມຄິດເຫັນຂອງ ແມ່ຍິງ ແລະ ຜູ້ຊາຍ ກ່ຽວກັບສິດຂອງຜູ້ຊາຍ ໃນການຕີເມຍຂອງຕົນ. ຜູ້ທີ່ຖືກສຳພາດສ່ວນໃຫຍ່ບໍ່ເຫັນດີກັບຄຳວ່າຜູ້ຊາຍ ມີສິດຕີເມຍຂອງຕົນໃນເກືອບໝົດທຸກກໍລະນີ. ເຫດຜົນສ່ວນໃຫຍ່ທີ່ເຫັນດີວ່າ ຜູ້ຊາຍ ມີສິດຕີເມຍຂອງຕົນໄດ້ ຖ້າຫາກພົບເຫັນວ່າ ເມຍນອກໃຈຜົວ. ຈຳນວນຂອງແມ່ຍິງທີ່ຖືກສຳພາດ ທີ່ເຫັນດີ ກັບຄຳເວົ້າດັ່ງກ່າວ ແມ່ນສູງກວ່າຈຳນວນ ຂອງຜູ້ຊາຍໜ້ອຍໜຶ່ງ (9%) (ແມ່ຍິງ 205 ຄົນ, 46% ແລະ ຜູ້ຊາຍ 149 ຄົນ, 37%). ນອກຈາກນີ້, ແມ່ຍິງບາງຄົນຍັງເຊື່ອວ່າ ຜູ້ຊາຍມີສິດ ຖ້າຫາກວ່າພວກເພິ່ນບໍ່ຟັງຄວາມຜົວ (172 ກໍລະນີ, 37%) ຫຼື ຖ້າວ່າພວກເພິ່ນປະຕິເສດທີ່ຈະມີເພດສຳພັນກັບຜົວ (111 ກໍລະນີ, 24%). ເພື່ອເປັນການສົມທຽບ, ຜູ້ຊາຍ ມີແຕ່ພຽງ 15% ເທົ່ານັ້ນ ທີ່ເຊື່ອວ່າຕົນມີສິດຕີເມຍ ຖ້າວ່າເມຍບໍ່ຟັງຄວາມ ແລະ 11% ຕອບວ່າ ຖ້າວ່າ ເມຍປະຕິເສດ ທີ່ຈະນອນກັບຕົນ.

**ຕາຕະລາງ 5. 8 ສິດຂອງຜູ້ຊາຍໃນການທຸບຕີເມຍຂອງຕົນ**

| ເວລາໃດ ຜູ້ຊາຍ ມີສິດທຸບຕີເມຍຂອງຕົນ | ແມ່ຍິງ | | | | ຜູ້ຊາຍ | | | |
|---|---|---|---|---|---|---|---|---|
| | ເຫັນດີ | ບໍ່ເຫັນດີ | ບໍ່ແນ່ໃຈ | ທັງໝົດ | ເຫັນດີ | ບໍ່ເຫັນດີ | ບໍ່ແນ່ໃຈ | ທັງໝົດ |
| ຖ້າວ່າ ເມຍບໍ່ເບິ່ງແຍງ ວຽກເຮືອນການຊານ ໃຫ້ເປັນທີ່ເພິ່ງພໍໃຈ ຂອງຜົວ | 92 (19%) | 381 (79%) | 8 (2%) | 481 | 32 (7%) | 391 (91%) | 5 (2%) | 428 |
| ຖ້າວ່າ ເມຍບໍ່ຟັງຄວາມຜົວ | 172 (37%) | 289 (61%) | 8 (2%) | 469 | 63 (15%) | 347 (83%) | 7 (2%) | 417 |
| ຖ້າວ່າ ເມຍປະຕິເສດທີ່ຈະມີເພດສຳພັນກັບຜົວ | 111 (24%) | 348 (74%) | 11 (2%) | 470 | 48 (11%) | 358 (85%) | 14 (4%) | 420 |

| | | | | | | | | |
|---|---|---|---|---|---|---|---|---|
| ຖ້າວ່າເມຍຖາມກ່ຽວກັບແມ່ຍິງຄົນອື່ນ | 73 16%) | 367 (80%) | 14 (4%) | 454 | 25 (6%) | 376 (90%) | 14 (4%) | 415 |
| ຖ້າຜົວສົງໃສວ່າ ເມຍນອກໃຈຜົວ | 67 (15%) | 356 (79%) | 30 (6%) | 453 | 34 (8%) | 327 (79%) | 51 (13%) | 412 |
| ຖ້າຜົວພົບເຫັນວ່າ ເມຍນອກໃຈຜົວ | 205 (46%) | 207 (46%) | 34 (8%) | 446 | 149 (37%) | 227 (56%) | 32 (7%) | 408 |

ຜູ້ທີ່ຖືກສຳພາດ ທັງເພດຍິງ ແລະ ເພດຊາຍ ຈຳນວນຫຼາຍກວ່າເຄິ່ງໜຶ່ງ ເຫັນດີ ວ່າ ແມ່ຍິງມີສິດທີ່ຈະປະຕິເສດການມີເພດສຳພັນຖ້າຫາກວ່າເຂົາເຈົ້າບໍ່ສະບາຍ, ຜົວປະຕິບັດຕົນບໍ່ດີຕໍ່ເຂົາເຈົ້າ ແລະ ຖ້າວ່າຜົວເມົາເຫຼົ້າ (ຕາຕະລາງ 5.9) ເຖິງຢ່າງໃດກໍ່ດີ, ຜູ້ທີ່ຖືກສຳພາດຈຳນວນ ຕ່ຳກວ່າເຄິ່ງໜຶ່ງ (ແມ່ຍິງ 170 ຄົນ, 36% ແລະ ຜູ້ຊາຍ 155 ຄົນ, 36%) ໄດ້ເຫັນດີວ່າ ແມ່ຍິງສາມາດປະຕິເສດ ທີ່ຈະມີເພດສຳພັນກັບຜົວ ຖ້າວ່າ ເຂົາເຈົ້າ ບໍ່ຕ້ອງການ.

**ຕາຕະລາງ 5. 9 ສິດຂອງແມ່ຍິງໃນການປະຕິເສດທີ່ຈະມີເພດສຳພັນກັບຜົວ**

| **ແມ່ຍິງທີ່ແຕ່ງງານແລ້ວ ສາມາດ ປະຕິເສດ ທີ່ຈະມີເພດສຳພັນ ກັບຜົວຂອງຕົນ ເມື່ອເວລາ** | **ແມ່ຍິງ** | | | | **ຜູ້ຊາຍ** | | | |
|---|---|---|---|---|---|---|---|---|
| | ເຫັນດີ | ບໍ່ເຫັນດີ | ບໍ່ແນ່ໃຈ | ທັງໝົດ | ເຫັນດີ | ບໍ່ເຫັນດີ | ບໍ່ແນ່ໃຈ | ທັງໝົດ |
| ລາວບໍ່ຢາກມີເພດສຳພັນ | 170 (36%) | 295 (62%) | 12 (2%) | 477 | 155 (36%) | 258 (60%) | 16 (4%) | 429 |
| ຜົວເມົາເຫຼົ້າ | 241 (51%) | 221 (46%) | 14 (3%) | 476 | 238 (57%) | 163 (39%) | 18 (4%) | 419 |
| ຕົນເອງເປັນໄຂ້ | 276 (58%) | 198 (41%) | 4 (1%) | 478 | 264 (62%) | 157 (37%) | 4 (1%) | 425 |
| ຜົວປະຕິບັດກັບຕົນບໍ່ດີຕໍ່ເມຍ | 246 (52%) | 221 (47%) | 6 (1%) | 473 | 230 (56%) | 170 (41%) | 12 (3%) | 412 |

ຕາຕະລາງ 5. 10 ຊີ້ໃຫ້ເຫັນເຖິງ ຄຳຕອບຂອງແມ່ຍິງ ທີ່ຖືກຜົວຄວບຄຸມ. ຜູ້ທີ່ຖືກສຳພາດ ຈຳນວນເກືອບເຄິ່ງໜຶ່ງ ກ່າວວ່າພວກເພິ່ນຈະຮ້າຍຖ້າວ່າຜົວບໍ່ລ້ຽງດູຫຼືເບິ່ງແຍງພວກເພິ່ນ. ຫຼາຍກວ່າເຄິ່ງໜຶ່ງ (215 ກໍລະນີ, 58%) ຈະຮ້າຍຖ້າວ່າຜົວ ຂອງພວກເພິ່ນບໍ່ປ່ອຍໃຫ້ພົວພັນກັບພໍ່ແມ່ ແລະ ຄອບຄົວ. ຈຳນວນແມ່ຍິງແມ່ນຕ່ຳກວ່າໜ້ອຍໜຶ່ງ (135 ກໍລະນີ, 39%) ທີ່ຮ້າຍ ຖ້າວ່າ ຜົວຂອງ ພວກເພິ່ນຖາມ ກ່ຽວກັບ ຄວາມຊື່ສັດ.

**ຕາຕະລາງ 5. 10 ການກະທຳໂຕ້ຕອບຄືນຕໍ່ການຄວບຄຸມຂອງສາມີ**

| ເຈົ້າຄິດແນວໃດ ຖ້າ ຜົວຂອງເຈົ້າເວົ້າວ່າ | **ຢາກຮ້າຍ/ຕອບໂຕ້** | **ບໍ່ຖືຊາ** | **ທັງໝົດ** |
|---|---|---|---|
| ບໍ່ໃຫ້ພົບປະກັບໝູ່ເພື່ອນຂອງເຈົ້າ | 124 (33%) | 253 (67%) | 377 |
| ຜົວຂອງເຈົ້າ ບໍ່ອະນຸຍາດໃຫ້ ຕິດຕໍ່ພົວພັນກັບພໍ່ແມ່ ຫຼື ຄອບຄົວ | 215 (58%) | 158 (42%) | 373 |
| ເຈົ້າຕ້ອງຂໍອະນຸຍາດ ຈາກຜົວທຸກຄັ້ງ ກ່ອນທີ່ຈະໄປໃສມາໃສ | 78 (22%) | 282 (78%) | 360 |
| ລາວບໍ່ຢາກເບິ່ງແຍງລ້ຽງດູເຈົ້າ ຫຼື ເອົາໃຈໃສ່ຕໍ່ເຈົ້າ | 159 (45%) | 193 (55%) | 352 |

| | | | |
|---|---|---|---|
| ລາວຈະຮ້າຍ ຖ້າວ່າ ເຫັນເຈົ້າ ເວົ້າກັບ ກັບຜູ້ຊາຍຄົນອື່ນ | 119 (34%) | 233 (66%) | 352 |
| ລາວສົງໃສວ່າເຈົ້າບໍ່ຊື່ສັດຢູ່ເລື້ອຍໆ | 135 (39%) | 214 (61%) | 349 |

## 5.3.2 ຄວາມເຂົ້າໃຈກ່ຽວກັບຄວາມຮຸນແຮງ

ຕາຕະລາງ 5. 11 ຊີ້ໃຫ້ເຫັນເຖິງຄວາມເຂົ້າໃຈຂອງຜູ້ທີ່ຖືກສຳພາດກ່ຽວກັບຄວາມໝາຍຂອງຄວາມຮຸນແຮງ. ຄວາມເຂົ້າໃຈໂດຍທົ່ວໄປກ່ຽວກັບຄວາມຮຸນແຮງມີ 3 ດ້ານ ດ້ວຍກັນຄືການທຸບຕີ (ແມ່ຍິງ 305 ຄົນ, 80% ແລະ ຜູ້ຊາຍ 275 ຄົນ, 76%), ການບັງຄັບໃຫ້ມີເພດສຳພັນ (ແມ່ຍິງ 374 ຄົນ, 74% ແລະ ຊາຍ 285 ຄົນ, 74%) ແລະ ຮ້າຍດ່າ (ແມ່ຍິງ 241 ຄົນ, 63% ແລະ ຜູ້ຊາຍ 238 ຄົນ, 66%). ໂດຍທົ່ວໄປແລ້ວ, ຜູ້ທີ່ຖືກສຳພາດ ບໍ່ໄດ້ມອງເຫັນວ່າ ການໃຊ້ແສງຕາຂົ່ມຂູ່ກໍ່ແມ່ນ ຄວາມຮຸນແຮງເໝືອນກັນ.

**ຕາຕະລາງ 5. 11 ຄວາມໝາຍຂອງຄວາມຮຸນແຮງ**

| ນີ້ແມ່ນຄວາມຮຸນແຮງບໍ່? | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ແມ່ນ | ບໍ່ແມ່ນ | ລວມ | ແມ່ນ | ບໍ່ແມ່ນ | ລວມ |
| ການຮ້າຍ, ປ້ອຍ, ດ່າ | 241 (63%) | 140 (37%) | 381 | 238 (66%) | 121 (44%) | 359 |
| ການໃຊ້ແສງຕາຂົ່ມຂູ່ | 151 (39%) | 232 (61%) | 383 | 119 (33%) | 241 (77%) | 360 |
| ການທຸບຕີ | 305 (80%) | 75 (20%) | 380 | 275 (76%) | 85 (24%) | 360 |
| ອື່ນ ໆ | 11 (3%) | 368 (97%) | 379 | 14 (4%) | 344 (96%) | 358 |
| ຖ້າວ່າ ເມຍບໍ່ຕ້ອງການມີເພດສຳພັນກັບຜົວ ແຕ່ ຜົວບັງຄັບ ທຸບຕີ. | 347 (74%) | 119 (26%) | 466 | 285 (70%) | 122 (30%) | 407 |

ທີມງານສຳຫຼວດ ໄດ້ຖາມຜູ້ທີ່ຖືກສຳພາດວ່າພວກເພິ່ນຈະມີການໂຕ້ຕອບແນວໃດຖ້າວ່າຄູ່ສົມລົດ ຂອງພວກເພິ່ນທຸບຕີ (

ຕາຕະລາງ 5. 12). ສ່ວນຫຼາຍຈະຕອບວ່າບໍ່ເຮັດຫຍັງ (ແມ່ຍິງ 133 ຄົນ, 30% ແລະ ຜູ້ຊາຍ 155 ຄົນ, 39%). ຜູ້ອື່ນໆ ຕອບວ່າ ບອກໃຫ້ຄູ່ສົມລົດບໍ່ໃຫ້ທຸບຕີຕົນອີກ ຫຼື ຮ້ອງຂໍໃຫ້ຄົນອື່ນເຂົ້າມາຊ່ວຍ. ແມ່ຍິງປະມານ 13% ແລະ ຜູ້ຊາຍ ປະມານ 8% ເວົ້າວ່າ ຈະສູ້ຄືນຖ້າຫາກວ່າມີຄວາມຮຸນແຮງເກີດຂຶ້ນ.

**ຕາຕະລາງ 5. 12 ການກະທຳໂຕ້ຕອບຄືນເມື່ອຖືກທຸບຕີ**

| ທ່ານຈະເຮັດແນວໃດ ຖ້າວ່າ ຄູ່ສົມລົດຂອງທ່ານທຸບຕີ | ແມ່ຍິງ (n = 444) | ຜູ້ຊາຍ (n = 402) |
|---|---|---|
| ບໍ່ເຮັດຫຍັງ | 133 (30%) | 155 (39%) |
| ບອກລາວວ່າ ເພື່ອໜ້າບໍ່ໃຫ້ເຮັດອີກ | 75 (17%) | 75 (19%) |
| ຮ້ອງຂໍໃຫ້ຜູ້ອື່ນເຂົ້າມາຊ່ວຍ | 64 (14%) | 48 (12%) |
| ໜີຈາກລາວໄປ | 49 (11%) | 38 (9%) |
| ຕີລາວຄືນ | 59 (13%) | 33 (8%) |
| ອື່ນ ໆ | 8 (2%) | 7 (2%) |

| | | |
|---|---|---|
| ບໍ່ຮູ້ວ່າຈະເຮັດແນວໃດ | 56(13%) | 46 (11%) |

ຂໍ້ມູນ ຢູ່ໃນ ຕາຕະລາງ 5. 13 ຊີ້ໃຫ້ເຫັນເຖິງ ຄວາມຖີ່ຂອງການຜິດຖຽງກັນ ລະຫວ່າງ ຜົວເມຍ. ແມ່ຍິງຫຼາຍກວ່າ ສາມສິບເປີເຊັນ (33%) ຕອບວ່າ ການຜິດຖຽງກັນເກີດຂື້ນບາງຄັ້ງບາງຄາວ, ສ່ວນຜູ້ຊາຍນັ້ນ ແມ່ນ 43%. ແມ່ຍິງ ປະມານ 20% ແລະ ຜູ້ຊາຍ 14% ເວົ້າວ່າ ການຜິດຖຽງກັນກັບຄູ່ສົມລົດຂອງຕົນ ເກີດຂື້ນ ບາງຄັ້ງ ແລະ ມີແຕ່ພຽງ ສອງສາມເປີເຊັນເທົ່ານັ້ນ ທີ່ກ່າວວ່າ ການຜິດຖຽງກັນ ແມ່ນເກີດຂື້ນເປັນປົກກະຕິ.

**ຕາຕະລາງ 5. 13 ຜົວເມຍຜິດຖຽງກັນ**

| ທ່ານ ກັບ ຄູ່ສົມລົດຂອງທ່ານ ເຄີຍຜິດຖຽງກັນ ເລື້ອຍ ໆ ບໍ່? | ແມ່ຍິງ<br>(n = 488) | ຜູ້ຊາຍ<br>(n = 420) |
|---|---|---|
| ບໍ່ເຄີຍ | 212 (43%) | 177 (42%) |
| ມີໜ້ອຍເທື່ອທີ່ສຸດ | 161 (33%) | 183 (43%) |
| ມີເປັນບາງຄັ້ງ | 96 (20%) | 57 (14%) |
| ເລື້ອຍ ໆ | 19 (4%) | 3 (1%) |

ທີມງານສຳຫຼວດ ຖາມຜູ້ທີ່ຖືກສຳພາດວ່າ ພວກເພິ່ນຢ້ານຄູ່ສົມລົດ ຈະຮ້າຍ ຫຼື ຕີ ບໍ? ຖ້າພວກເພິ່ນຫາກບໍ່ເຫັນ ດີນຳ (ເບິ່ງ ກຣາຟ 5. ). ຜູ້ທີ່ຖືກສຳພາດສ່ວນໃຫຍ່ (554 ຄົນ, 59.7%) ຕອບວ່າພວກເພິ່ນຢ້ານ, ສ່ວນ 371 ຄົນ ໃນຈຳນວນທັງໝົດ ເວົ້າວ່າພວກເພິ່ນບໍ່ຢ້ານ. ໃນຈຳນວນກໍລະນີ ທີ່ບໍ່ກ້າປະຕິເສດຄູ່ສົມລົດຂອງຕົນນັ້ນມີແມ່ຍິງ 199 ຄົນ (53.6%) ແລະ ຜູ້ຊາຍ 172 ຄົນ (46.4%).




**ກຣາຟ 5. 23 ເປີເຊັນຂອງກໍລະນີ ທີ່ບໍ່ກ້າປະຕິເສດຄູ່ສົມລົດຂອງຕົນ.**

### 5.3.3 ຄວາມຮຸນແຮງ

ຜູ້ທີ່ຖືກສຳພາດຈຳນວນ 64 ຄົນ (7.1%) ໄດ້ຮັບຮູ້ວ່າ ຜ່ານມາພວກເພິ່ນໄດ້ຕີຄູ່ສົມລົດເພາະວ່າເຂົາເຈົ້າບໍ່ເຫັນດີກັບການຕັດສິນໃຈຂອງພວກເພິ່ນ. ເຖິງຢ່າງໃດກໍ່ດີ, ຜູ້ທີ່ຖືກສຳພາດສ່ວນໃຫຍ່ (899 ຄົນ, 92.9%) ບໍ່ເຄີຍຕີຄູ່ສົມລົດຈັກເທື່ອເມື່ອເວລາເຂົາເຈົ້າບໍ່ເຫັນດີກັບການຕັດສິນໃຈຂອງພວກເພິ່ນ. ມີຈຳນວນ 2 ຄົນ ທີ່ຈື່ບໍ່ໄດ້ວ່າພວກເພິ່ນ ເຄີຍຕີຄູ່ສົມລົດ ເມື່ອເວລາເຂົາເຈົ້າບໍ່ເຫັນດີ ຫຼື ບໍ່. ເມື່ອເວລາສົມທຽບຜູ້ທີ່ຖືກສຳພາດຊາຍ ແລະ ຜູ້ທີ່ຖືກສຳພາດຍິງໃສ່ກັນເຫັນໄດ້ວ່າທັງສອງເພດ ຍິງ ແລະ ຊາຍ ໄດ້ຕີຄູ່ສົມລົດຂອງພວກເພິ່ນກ່ອນໜ້ານີ້, ແຕ່ວ່າຈຳນວນຜູຊາຍຕີເມຍ (10% ຂອງຈຳນວນກຳລະນີ) ຫຼາຍກວ່າຈຳນວນຜູ້ຍິງຕີຜົວ (6%). ຂໍ້ມູນຢູ່ໃນຕາຕະລາງ ຕາຕະລາງ 5. 14 ຊີ້ໃຫ້ເຫັນວ່າຜູ້ທີ່ຖືສຳພາດຈຳນວນເກືອບເຄິ່ງໜຶ່ງ (ແມ່ຍິງ 211 ຄົນ, 45% ແລະ ຜູ້ຊາຍ 188 ຄົນ, 44%) ເຄີຍໄດ້ຕົກເປັນເຫຍື່ອຂອງຄວາມຮຸນແຮງ ໃນຮູບແບບໃດໜຶ່ງຈາກຄູ່ສົມລົດຂອງພວກເພິ່ນມາແລ້ວ.

**ຕາຕະລາງ 5. 14 ຄູ່ສົມລົດນຳໃຊ້ຄວາມຮຸນແຮງ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ລວມ | ເຄີຍ | ບໍ່ເຄີຍ | ລວມ |
| ເຄີຍຕີຄູ່ສົມລົດຍ້ອນວ່າ ລາວບໍ່ເຫັນດີນຳ | 26 (5%) | 447 (95%) | 473 | 38 (9%) | 387 (91%) | 425 |
| ຜ່ານມາເຈົ້າເຄີຍຕີຄູ່ສົມລົດຂອງຕົນ | 28 (6%) | 422 (94%) | 450 | 40(10%) | 373 (90%) | 413 |
| ຄູ່ສົມລົດ ເຄີຍໃຊ້ຄວາມຮຸນແຮງ ໃນຮູບແບບໃດໜຶ່ງກັບຕົນ | 211 (45%) | 255 (55%) | 466 | 188 (44%) | 240 (66%) | 428 |

ການວິເຄາະທາງສະຖິຕິ ໄດ້ເຜີຍໃຫ້ເຫັນວ່າມັນມີຄວາມແຕກຕ່າງກັນຫຼາຍທາງດ້ານອັດຕາສ່ວນຂອງຈຳນວນຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງໃນແຕ່ລະແຂວງ (Rho = 0.071, Sig. = 0.035). ແຂວງສາລະວັນມີອັດຕາສ່ວນຕ່ຳກວ່າໝູ່ 31.1% (52 ຄົນ) ຂອງຈຳນວນຜູ້ທີ່ຖືກສຳພາດ ຊຶ່ງເຄີຍຕົກເປັນເຫຍື່ອຂອງ ຄວາມຮຸນແຮງ. ຕິດຕາມມາແມ່ນ ແຂວງບໍ່ແກ້ວ (42.6%, 98 ຄົນ), ກຳແພງນະຄອນວຽງຈັນ (44%, 48 ຄົນ). ທັງສອງແຂວງ ສະຫວັນນະເຂດ ແລະ ຫຼວງພະບາງ ມີອັດຕາສ່ວນຄວາມຮຸນແຮງສູງກວ່າໝູ່ຢ່າງເຫັນໄດ້ຊັດ ຄື (47%, 40 ຄົນ) ແລະ (52.7%, 161 ຄົນ) ຕາມລຳດັບ.

**ກຣາຟ 5. 24 ອັດຕາສ່ວນຂອງຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ ຢູ່ໃນແຕ່ລະແຂວງ**



ໃນຈຳນວນແມ່ຍິງ ທີ່ຕອບວ່າຜົວໄດ້ໃຊ້ຄວາມຮຸນແຮງຕໍ່ພວກເພິ່ນ, ສາເຫດທີ່ຄືກັນຫຼາຍກວ່າໝູ່ ຊຶ່ງເຊື່ອວ່າມັນພາໃຫ້ມີຄວາມຮຸນແຮງຕໍ່ຮ່າງກາຍ ແມ່ນ ຜົວເມົາເຫຼົ້າ (24 ກໍລະນີ, 31%), ບັນຫາທີ່ພົວພັນເຖິງເງິນ ແລະ ວຽກງານ (10 ກໍລະນີ, 13%) (ເບິ່ງແລະ ບັນຫາເງິນ (5 ກໍລະນີ, 13%).

ຕາຕະລາງ 5. 15, ກຣາຟ 5. ). ເມື່ອສົມທຽບໃສ່ກັບຈຳນວນຜູ້ຊາຍ ທີ່ຕອບວ່າ ເມຍໄດ້ໃຊ້ຄວາມຮຸນແຮງຕໍ່ພວກເພິ່ນ, ເຫັນວ່າມີ ສາມ ສາເຫດທີ່ຄືກັນຫຼາຍກວ່າໝູ່ ຊຶ່ງພາໃຫ້ເກີດມີຄວາມຮຸນແຮງຕໍ່ຮ່າງກາຍ ແມ່ນ ບັນຫາທີ່ພົວພັນເຖິງວຽກງານ (12 ກໍລະນີ, 30%), ບັນຫາຄອບຄົວ (7 ກໍລະນີ, 18%) ແລະ ບັນຫາເງິນ (5 ກໍລະນີ, 13%).

ຕາຕະລາງ 5. 15 ສະພາບທີ່ພາໃຫ້ເກີດມີຄວາມຮຸນແຮງຕໍ່ຮ່າງກາຍ

| **ສະພາບທີ່ພາໃຫ້ເກີດມີຄວາມຮຸນແຮງ** | ແມ່ຍິງ (n = 76) | **ຜູ້ຊາຍ (n = 39)** |
|---|---|---|
| ຍ້ອນບໍ່ມີເຫດຜົນ | 4 (5%) | 2 (5%) |
| ຍ້ອນຄູ່ສົມລົດເມົາເຫຼົ້າ | 24 (31%) | 6 (15%) |
| ຍ້ອນບັນຫາເງິນ | 10 (13%) | 5 (13%) |
| ຍ້ອນບັນຫາວຽກເຮັດ | 10 (13%) | 12 (30%) |
| ຍ້ອນເມຍບໍ່ແຕ່ງຢູ່ຄົວກິນ | 5 (7%) | 1 (3%) |
| ບັນຫາຄອບຄົວ | 9 (12%) | 7 (18%) |
| ຄວາມຫຶງຫວງ | 5 (7%) | 4 (10%) |
| ປະຕິເສດການມີເພດສຳພັນ | 1 (1%) | 0 (0%) |
| ບໍ່ຟັງຄວາມ | 1 (1%) | 1 (3%) |
| ຢາເສບຕິດ | 2 (3%) | 0 (0%) |
| ອື່ນ ໆ | 5 (7%) | 1 (3%) |

ທີມງານຄົ້ນຄວ້າ ໄດ້ທຳການວິເຄາະທາງດ້ານສະຖິຕິ ກ່ຽວກັບ ຂໍ້ມູນ ເພື່ອຊອກຫາ ບັນດາ ປັດໃຈ ທີ່ມີສ່ວນເຮັດໃຫ້ຄູ່ສົມລົດ ນຳໃຊ້ ຄວາມຮຸນແຮງ.

ຕາຕະລາງ 5. 16 ໄດ້ສະຫຼຸບສັງລວມ ຂໍ້ມູນເຫຼົ່ານີ້. ການວິເຄາະດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າມັນມີການພົວພັນກັນຫຼາຍທີ່ສຸດ ລະຫວ່າງ ຜົວເມຍ ທີ່ມີຄວາມຮຸນແຮງ ແລະ ຈຳນວນເທື່ອເມົາເຫຼົ້າຂອງຄູ່ສົມລົດ (Rho = 0.155, Sig. = 0.000). ອັນນີ້ໄດ້ໃຫ້ຂໍ້ສັງເກດວ່າ ຄູ່ສົມລົດທີ່ເມົາເຫຼົ້າເລື້ອຍໆ ມັກຈະໃຊ້ຄວາມຮຸນແຮງຫຼາຍກວ່າຄູ່ສົມລົດທີ່ບໍ່ເມົາເຫຼົ້າ. ອັນນີ້ ແມ່ນກົງກັນກັບການລາຍງານຂອງຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງຢູ່ໃນ ກຣາຟ 5. ທີ່ໄດ້ແນະນຳໃຫ້ວ່າການເມົາເຫຼົ້າ ແມ່ນໜຶ່ງ ໃນບັນດາປັດໃຈ ທີ່ຄືກັນຫຼາຍກວ່າໝູ່ ທີ່ພາໃຫ້ເກີດມີຄວາມຮຸນແຮງ.




*ຄວາມຮຸນແຮງຕໍ່ແມ່ຍິງ* *ຄວາມຮຸນແຮງຕໍ່ຜູ້ຊາຍ*

**ກຣາຟ 5. 25 ສະພາບທີ່ພາໃຫ້ເກີດມີການໃຊ້ຄວາມຮຸນແຮງ**

**ຕາຕະລາງ 5. 16 ບັນດາປັດໃຈທີ່ພາໃຫ້ຄູ່ສົມລົດນຳໃຊ້ຄວາມຮຸນແຮງ (ການລຽງລຳດັບຕາມ Spearman)**

| ປັດໃຈ | Rho | ຕົວເລກຄວາມສຳຄັນ | ຄວາມສຳຄັນ* |
|---|---|---|---|
| ເພດຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 896) | 0.009 | 0.783 | ບໍ່ຫຼາຍ |
| ອາຍຸ ຂອງຜູ້ ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 896) | 0.006 | 0.864 | ບໍ່ຫຼາຍ |
| **ລະດັບການສຶກສາ ຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 861)** | **0.084** | **0.013** | **ຫຼາຍ** |
| ອາຍຸ ຂອງຜູ້ ທີ່ເຄີຍເປັນເຫຍື່ອ ເມື່ອແຕ່ງງານ (n = 889) | 0.034 | 0.315 | ບໍ່ຫຼາຍ |
| ອາຊີບ ຂອງຜູ້ ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 892) | 0.036 | 0.277 | ບໍ່ຫຼາຍ |
| ຢູ່ຮ່ວມກັນກັບຄອບຄົວອື່ນ(n = 861) | 0.50 | 0.144 | ບໍ່ຫຼາຍ |
| ຈຳນວນຂອງເດັກນ້ອຍ (n = 866) | 0.003 | 0.938 | ບໍ່ຫຼາຍ |
| **ຜູ້ທີ່ປະກອບສ່ວນໃຫ້ເສດຖະກິດຄອບຄົວຫຼາຍກວ່າໝູ່ (n = 893)** | **0.066** | **0.047** | **ຫຼາຍ** |
| ຜູ້ເປັນເຫຍື່ອ ເຂົ້າຮ່ວມໃນການຕັດສິນບັນຫາ (n = 896) | 0.026 | 0.445 | ບໍ່ຫຼາຍ |
| ອາຍຸ ຂອງ ຄູ່ສົມລົດ (n = 839) | 0.000 | 0.995 | ບໍ່ຫຼາຍ |
| ລະດັບການສຶກສາຂອງຄູ່ສົມລົດ (n = 840) | 0.015 | 0.660 | ບໍ່ຫຼາຍ |
| ອາຊີບຂອງຄູ່ສົມລົດ (n = 812) | 0.017 | 0.635 | ບໍ່ຫຼາຍ |
| ຄູ່ສົມລົດດື່ມເຫຼົ້າເລື້ອຍ ໆ ສ່ຳໃດ (n = 877) | 0.066 | 0.051 | ບໍ່ຫຼາຍ |
| **ຄູ່ສົມລົດເມົາເຫຼົ້າເລື້ອຍ ໆ ສ່ຳໃດ (n = 561)** | **0.155** | **0.000** | **ຫຼາຍ ທີ່ສຸດ** |

*ຫຼາຍ = <0.05, ຫຼາຍທີ່ສຸດ = < 0.01*




**ກຣາຟ 5. 26 ລະດັບການສຶກສາຂອງຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ**

ການວິເຄາະໄດ້ໃຫ້ຂໍ້ຄິດວ່າ ມັນມີການພົວພັນກັນໃນທາງລົບຫຼາຍລະຫວ່າງລະດັບການສຶກສາຂອງຜູ້ທີ່ຖືກສຳພາດ ແລະ ຄວາມຮຸນແຮງ. ຈຳນວນຜູ້ທີ່ບໍ່ໄດ້ຮັບການສຶກສາ ຈະມີໂອກາດໄດ້ຮັບການກະທຳຄວາມຮຸນແຮງໜ້ອຍກວ່າ ຈຳນວນຜູ້ທີ່ມີລະດັບການສຶກສາທີ່ສູງ (Rho = 0.084, 0.013) (ເບິ່ງ ກຣາຟ 5. ). ນອກຈາກນີ້, ຍັງເຫັນວ່າ ມັນມີການພົວພັນແບບທຳມະດາລະຫວ່າງ ຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ ແລະ ຄູ່ສົມລົດເປັນຜູ້ປະກອບ ສ່ວນ ໃຫ້ແກ່ເສດຖະກິດຄອບຄົວຫຼາຍກວ່າ (Rho = 0.066, Sig. = 0.047). ອັນນີ້ ໝາຍຄວາມວ່າຄວາມ ຮຸນແຮງ ມັກຈະເກີດຂຶ້ນເມື່ອເວລາ ຜົວ ເປັນຜູ້ປະກອບສ່ວນ ໃຫ້ແກ່ເສດຖະກິດຄອບຄົວຫຼາຍກວ່າ ເມຍ. ນອກ ຈາກນີ້ອີກ, ຍັງເຫັນວ່າ ມັນມີການພົວພັນຫຼາຍລະຫວ່າງ ຄວາມຮຸນແຮງ ແລະ ການມີຄວາມຮັກນອກຄູ່ສົມລົດ (Rho = 0.080, Sig. = 0.019). ອັນນີ້ກໍ່ພາໃຫ້ຄິດວ່າຄູ່ສົມລົດທີ່ ມີຄວາມຮັກນອກຄູ່ສົມລົດຈະກາຍເປັນຄົນມີ ຄວາມຮຸນແຮງ. ມັນບໍ່ມີການພົວພັນເລີຍລະຫວ່າງ ຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ ແລະ ເພດຂອງເຂົາເຈົ້າ (Rho = 0.009, Sig. = 0.783).

ທີມງານຄົ້ນຄວ້າ ໄດ້ທຳການວິເຄາະເພີ່ມເຕີມໂດຍນຳໃຊ້ logistic regression ເພື່ອສ້າງຕົວແບບສຳລັບການ ຄາດຄະເນ ເບິ່ງວ່າ ຄວາມຮຸນແຮງເກີດຂຶ້ນ ໃນສະພາບການໃດ. ການວິເຄາະ ໄດ້ລວມເອົາແຕ່ພຽງໜຶ່ງປັດໃຈ ເທົ່ານັ້ນ ຈາກການເກັບກຳຂໍ້ມູນເຂົ້າໃສ່ໃນຕົວແບບ. ປັດໃຈນັ້ນແມ່ນ ຄູ່ສົມລົດເມົາເຫຼົ້າເລື້ອຍໆສ່ຳໃດ (B= 0.399 Wald. = 15.501 Sig. = 0.000). ຕົວແບບນີ້ ຄາດຄະເນວ່າຜູ້ໃດມັກເມົາເຫຼົ້າເລື້ອຍໆ ຈະມັກໃຊ້ ຄວາມຮຸນແຮງ ຕໍ່ຄູ່ສົມລົດຂອງຕົນ.

ຜູ້ທີ່ຖືກສຳພາດ ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງໄດ້ລາຍງານຫຼາຍປະເພດຂອງຄວາມຮຸນແຮງທີ່ແຕກຕ່າງ ກັນ. ປະເພດຄວາມຮຸນແຮງທີ່ທັງແມ່ຍິງແລະຜູ້ຊາຍ ເຄີຍໄດ້ຮັບເລື້ອຍໆນັ້ນໄດ້ລຽງຕາມລຳດັບດັ່ງນີ້: ການໝິ່ນປະ

ໝາດ (ແມ່ຍິງ 150 ຄົນ, 35%; ຜູ້ຊາຍ 131 ຄົນ, 33%), ການໃຊ້ແສງຕາຂົ່ມຂູ່ (ແມ່ຍິງ 126 ຄົນ, 29%; ຜູ້ຊາຍ 103 ຄົນ, 26%) ແລະການຂົ່ມຂູ່ຄູ່ສົມລົດ (ແມ່ຍິງ 76 ຄົນ, 18%; ຜູ້ຊາຍ 36 ຄົນ, 9%) (ເບິ່ງ ຕາຕະລາງ 5. 17).

**ຕາຕະລາງ 5. 17 ປະເພດຄວາມຮຸນແຮງຊຶ່ງຜູ້ທີ່ຖືກສຳພາດເຄີຍໄດ້ຮັບ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ລວມ | ເຄີຍ | ບໍ່ເຄີຍ | ລວມ |
| ໝິ່ນປະໝາດ | 150 (35%) | 280 (65%) | 430 | 131 (33%) | 261 (77%) | 392 |
| ຂົ່ມຂູ່ ວ່າ ຈະໄປມີຄົນໃໝ່ | 76 (18%) | 353 (82%) | 429 | 36 (9%) | 355 (91%) | 391 |
| ຂົ່ມຂູ່ ວ່າຈະບໍ່ເບິ່ງແຍງອີກຕໍ່ໄປ | 70 (16%) | 359 (84%) | 429 | 28 (7%) | 361 (93%) | 389 |
| ໃຊ້ແສງຕາຂົ່ມຂູ່ | 126 (29%) | 309 (71%) | 435 | 103 (26%) | 289 (74%) | 392 |
| ທຸບຕີ (ທຳຮ້າຍຮ່າງກາຍ) | 65 (17%) | 310 (83%) | 375 | 21 (6%) | 326 (94%) | 347 |
| ຕົບໜ້າ (ທຳຮ້າຍຮ່າງກາຍ) | 44 (11%) | 343 (89%) | 387 | 18 (5%) | 335 (95%) | 353 |
| ຍູ້ (ທຳຮ້າຍຮ່າງກາຍ) | 40 (10%) | 344 (90%) | 388 | 17 (5%) | 333 (95%) | 350 |
| ເຕະ (ທຳຮ້າຍຮ່າງກາຍ) | 31 (8%) | 348 (82%) | 379 | 5 (1%) | 340 (99%) | 345 |
| ບີບຄໍ (ທຳຮ້າຍຮ່າງກາຍ) | 16 (4%) | 358 (96%) | 374 | 3 (1%) | 336 (99%) | 339 |

(ANOVA F = 7.982 Sig. = 0.000).

ຕາຕະລາງ 5. 18 ໄດ້ພັນລະນາເຖິງ ຄວາມຖີ່ ຂອງ ຄວາມຮຸນແຮງ ເຊິ່ງຜູ້ທີ່ຖືກສຳພາດເຄີຍໄດ້ຮັບຜ່ານມາ. ແມ່ຍິງ ຈຳນວນ 46 ຄົນ ໃນຈຳນວນທັງໝົດ 86 ຄົນທີ່ໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງ ໄດ້ຕອບວ່າພວກເພິ່ນໄດ້ຖືກເປັນເຫຍື່ອຂອງຄວາມຮຸນແຮງໃນໜຶ່ງປີຜ່ານມາ. ເມື່ອສົມທຽບໃສ່ກັບຜູ້ຊາຍແລ້ວ, ເຫັນວ່າຜູ້ຊາຍຈຳນວນ 7 ຄົນ ໃນຈຳນວນທັງໝົດ 31 ຄົນທີ່ໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງໄດ້ຕອບວ່າພວກເພິ່ນໄດ້ຖືກເປັນເຫຍື່ອຂອງຄວາມຮຸນແຮງໃນໜຶ່ງປີຜ່ານມາ. ໃນຈຳນວນປະມານເຄິ່ງໜຶ່ງຂອງກໍລະນີເຫຼົ່ານີ້, ຄວາມຮຸນແຮງແມ່ນເກີດຂຶ້ນພຽງຄັ້ງດຽວ (ແມ່ຍິງ 24 ຄົນ, ຜູ້ຊາຍ 4 ຄົນ). ແມ່ຍິງ ຈຳນວນ 16 ຄົນ ແລະ ຜູ້ຊາຍ 3 ຄົນ ຕອບວ່າພວກເພິ່ນໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງ ໃນລະຫວ່າງ 2 ຫາ 5 ເທື່ອ ໃນປີໜຶ່ງຜ່ານມາ. ແມ່ຍິງ 6 ຄົນ ໄດ້ຕອບວ່າພວກເພິ່ນ ໄດ້ຮັບບົດຮຽນກ່ຽວກັບ ຄວາມຮຸນແຮງ ເລື້ອຍໆ, ຊຶ່ງ ຫຼາຍກວ່າ 5 ຄັ້ງ ໃນຕະຫຼອດໜຶ່ງປີທີ່ຜ່ານມາ.

ເມື່ອເວລາຖາມວ່າ ພວກເພິ່ນເຄີຍໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງຜ່ານມາບໍ? (ໝາຍຄວາມວ່າ ປີກາຍນີ້), ສັງເກດເຫັນໄດ້ວ່າມີຕົວຢ່າງຂອງຄວາມຮຸນແຮງແທ້ຈິງ ຢູ່ໃນຊີວິດຂອງຜູ້ທີ່ຖືກສຳພາດ. ໃນບາງກໍລະນີ ຄວາມຮຸນແຮງ ອາດຈະບໍ່ເກີດຂຶ້ນເລື້ອຍໆ, ແຕ່ວ່າ ມັນເກີດຂຶ້ນ 2-3 ເທື່ອ ໃນແຕ່ລະປີ (ແມ່ຍິງ 17 ຄົນ, ຜູ້ຊາຍ 4 ຄົນ), ເຖິງຢ່າງໃດກໍ່ດີ, ມັນມີຈຳນວນໜ້ອຍໆໜຶ່ງ ທີ່ຖືກເປັນເຫຍື່ອຂອງຄວາມຮຸນແຮງຢ່າງສະໝ່ຳສະເໝີຕະຫຼອດຊ່ວງໄລຍະເວລາຍາວນານ (ແມ່ຍິງ 5 ຄົນ, ຜູ້ຊາຍ 3 ຄົນ). ການວິເຄາະ ໄດ້ເຜີຍໃຫ້ເຫັນວ່າຄວາມຖີ່ຂອງຄວາມຮຸນແຮງ ແມ່ນພົວພັນເຖິງການຕິດເຫຼົ້າຂອງຄູ່ສົມລົດ. ຄູ່ສົມລົດທີ່ເມົາເຫຼົ້າເລື້ອຍໆ ມັກຈະນຳໃຊ້ຄວາມຮຸນແຮງຫຼາຍຄັ້ງກວ່າ (ANOVA F = 7.982 Sig. = 0.000).

**ຕາຕະລາງ 5. 18 ຄວາມຖີ່ ຂອງ ເຫດການຄວາມຮຸນແຮງຕໍ່ຮ່າງກາຍ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ລວມ | ເຄີຍ | ບໍ່ເຄີຍ | ລວມ |
| ເຄີຍມີຄວາມຮຸນແຮງເກີດຂື້ນບໍໃນປີກາຍ? | 46 | 40 | 86 | 7 | 24 | 31 |
| ໃນປີນີ້ ມີຄວາມຮຸນແຮງເກີດຂື້ນຈັກເທື່ອ: | | | | | | |
| ເທື່ອໜຶ່ງ | 24 | | | 4 | | |
| 2-5 ເທື່ອ | 16 | | | 3 | | |
| ຫຼາຍກວ່າ 5 ເທື່ອ | 6 | | | | | |
| ປີກາຍນີ້ເດ ມີຄວາມຮຸນແຮງເກີດຂື້ນຈັກເທື່ອ: | | | | | | |
| ເທື່ອໜຶ່ງ | 17 | | | 9 | | |
| 2-5 ເທື່ອ | 17 | | | 4 | | |
| ຫຼາຍກວ່າ 5 ເທື່ອ | 5 | | | 3 | | |

ແມ່ຍິງ ຈຳນວນ 15 ຄົນ ໃນຈຳນວນທີ່ໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງ ໄດ້ລາຍງານວ່າ ຜົວຂອງພວກເພິ່ນໄດ້ບັງຄັບໃຫ້ມີເພດສຳພັນເມື່ອເວລາພວກເພິ່ນບໍ່ຕ້ອງການ (ເບິ່ງ ຕາຕະລາງ 5. 19). ແມ່ຍິງໄດ້ເນັ້ນໃຫ້ເຫັນວ່າການບັງຄັບໃຫ້ມີເພດສຳພັນ ແມ່ນມີສ່ວນກ່ຽວຂ້ອງກັບຄວາມຮຸນແຮງ. ສຳລັບຜູ້ຊາຍນັ້ນມີແຕ່ 4 ຄົນເທົ່ານັ້ນທີ່ຕອບວ່າເມຍຂອງພວກເພິ່ນບັງຄັບໃຫ້ມີເພດສຳພັນ. ANOVA ເປີດເຜີຍວ່າການບັງຄັບໃຫ້ມີເພດສຳພັນກໍ່ຄ້າຍໆກັບຄວາມຮຸນແຮງປະເພດອື່ນແມ່ນມັກຈະເກີດຂື້ນ ພ້ອມກັບການຕິດເຫຼົ້າເມົາຢາ ເລື້ອຍໆ (F = 10.784, Sig. = 0.000).

**ຕາຕະລາງ 5. 19 ການ ບັງຄັບໃຫ້ມີເພດສຳພັນ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ລວມ | ເຄີຍ | ບໍ່ເຄີຍ | ລວມ |
| ທ່ານເຄີຍຖືກບັງຄັບໃຫ້ມີເພດສຳພັນບໍ່ເມື່ອເວລາທ່ານບໍ່ຕ້ອງການ? | 15 | 53 | 68 | 4 | 26 | 30 |
| ໃນໄລຍະມີຄວາມຮຸນແຮງ ຫຼື ພາຍຫຼັງຄວາມຮຸນແຮງທ່ານເຄີຍຖືກບັງຄັບໃຫ້ມີເພດສຳພັນບໍ່? | 16 | 56 | 72 | 1 | 35 | 36 |

ະຖືພາ.

ຕາຕະລາງ 5. 20 ບັນທຶກໄວ້ວ່າມີແມ່ຍິງ ຈຳນວນ 19 ຄົນ ໃນຈຳນວນທັງໝົດ 108 ລາຍງານວ່າພວກເພິ່ນ ໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງເມື່ອເວລາຖືພາ. ສ່ວນໃຫຍ່, ລະດັບຂອງຄວາມຮຸນແຮງ ກ່ອນແລະໃນຊ່ວງໄລຍະ

ຖືພາ ແມ່ນຄືກັນ (ແມ່ຍິງ 12 ຄົນ) ຫຼື ຄວາມຮຸນແຮງຫຼຸດລົງໃນຊ່ວງໄລຍະຖືພາ (ແມ່ຍິງ 7 ຄົນ). ເຖິງຢ່າງໃດກໍດີ, ແມ່ຍິງຈຳນວນ 5 ຄົນ ລາຍງານວ່າ ລະດັບຂອງຄວາມຮຸນແຮງແມ່ນເພີ່ມຂື້ນໃນຊ່ວງໄລຍະຖືພາ.

**ຕາຕະລາງ 5. 20 ຄວາມຮຸນແຮງໃນຊ່ວງໄລຍະຖືພາ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ໄດ້ຮັບ | ບໍ່ໄດ້ຮັບ | ທັງໝົດ | ໄດ້ຮັບ | ບໍ່ໄດ້ຮັບ | ທັງໝົດ |
| ທ່ານເຄີຍໄດ້ຮັບຄວາມຮຸນແຮງບໍ່ ຢູ່ໃນຊ່ວງໄລຍະຖືພາ | 19 | 89 | 108 | 2 | 3 | 5 |
| ຄວາມຮຸນແຮງນີ້ ຕ່າງກັນຄືແນວໃດ ກ່ອນ ແລະຫຼັງຖືພາ ຖ້າທຽບໃສ່ໃນຊ່ວງໄລຍະຖືພາ | | | | | | |
| ຫຼຸດລົງ | 7 | | | 1 | | |
| ເໝືອນເດີມ | 12 | | | 2 | | |
| ເພີ່ມຂື້ນ | 5 | | | 1 | | |
| ບໍ່ແນ່ໃຈ | 2 | | | | | |

ຈຳນວນ 21 ຄົນ ຕອບວ່າ ພວກເພິ່ນເປັນຜູ້ເລີ່ມຕົ້ນຄວາມຮຸນແຮງຕໍ່ຄູ່ສົມລົດຂອງເພິ່ນ (ເບິ່ງ ຕາຕະລາງ 5. 21). ໃນຈຳນວນນີ້, ຜູ້ຊາຍແມ່ນມີຈຳນວນສອງສ່ວນສາມ (ແມ່ຍິງ 6 ຄົນ, ຜູ້ຊາຍ 15 ຄົນ).

**ຕາຕະລາງ 5. 21 ຕົນເອງໃຊ້ຄວາມຮຸນແຮງ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ທັງໝົດ | ເຄີຍ | ບໍ່ເຄີຍ | ທັງໝົດ |
| ທ່ານເຄີຍເລີ່ມຕົ້ນຄວາມຮຸນແຮງຕໍ່ຄູ່ສົມລົດ ບໍ່ ເມື່ອເວລາຄູ່ສົມລົດຂອງທ່ານ ບໍ່ໄດ້ ມີຄວາມຮຸນແຮງ? | 6 | 58 | 64 | 15 | 19 | 34 |
| ຈຳນວນຈັກເທື່ອ | | | | | | |
| 1-2 ເທື່ອ | 4 | | | 14 | | |
| 3-5 ເທື່ອ | 2 | | | 1 | | |
| ຫຼາຍກວ່າ 5 ເທື່ອ | 3 | | | 1 | | |

## *5.3.4 ຜົນກະທົບຂອງຄວາມຮຸນແຮງ*

ໃນຈຳນວນແມ່ຍິງທີ່ຖືກສຳພາດ, 25% (ແມ່ຍິງ 65 ຄົນ) ໄດ້ໃຫ້ການວ່າ ພວກເພິ່ນໄດ້ຮັບບາດເຈັບຍ້ອນຜົວ ໃຊ້ຄວາມຮຸນແຮງ. ກົງກັນຂ້າມ, ໃນຈຳນວນຜູ້ຊາຍທີ່ຖືກສຳພາດມີແຕ່ພຽງ 8% ເທົ່ານັ້ນ (ຜູ້ຊາຍ 22 ຄົນ) ໄດ້ເວົ້າວ່າ ເມຍຂອງພວກເພິ່ນ ເຮັດໃຫ້ພວກເພິ່ນໄດ້ຮັບບາດເຈັບ

ຕາຕະລາງ 5. 22). ເຄິ່ງໜຶ່ງ ຂອງ ຈຳນວນຜູ້ທີ່ໄດ້ຮັບບາດເຈັບຕອບວ່າ ພວກເພິ່ນໄດ້ຮັບບາດເຈັບໜຶ່ງ ຫຼື ສອງເທື່ອເທົ່ານັ້ນ (ແມ່ຍິງ 32 ຄົນ, ຜູ້ຊາຍ 5 ຄົນ). ແມ່ຍິງ ຈຳນວນ 13 ຄົນ ຕອບວ່າພວກເພິ່ນໄດ້ຮັບບາດເຈັບຫຼາຍຄັ້ງ, ແລະ 8 ຄົນ ບອກວ່າ ພວກເພິ່ນໄດ້ຮັບບາດເຈັບຫຼາຍກວ່າ 5 ເທື່ອ.

ຕາຕະລາງ 5. 22 ບາດເຈັບທີ່ໄດ້ຮັບຈາກຄູ່ສົມລົດ

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ທັງໝົດ | ເຄີຍ | ບໍ່ເຄີຍ | ທັງໝົດ |
| ທ່ານເຄີຍໄດ້ຮັບບາດເຈັບບໍ່ ສືບເນື່ອງມາຈາກ ຄູ່ສົມລົດໃຊ້ຄວາມຮຸນແຮງ | 65 (25%) | 259 (75%) | 324 | 22 (8%) | 268 (92%) | 290 |
| ທ່ານໄດ້ຮັບບາດເຈັບຈັກຄັ້ງ ຈາກຄູ່ ສົມລົດ | | | | | | |
| 1 ຫຼື 2 ເທື່ອ | 32 | | | 5 | | |
| ຫຼາຍເທື່ອ | 13 | | | 2 | | |
| ຫຼາຍກວ່າ 5 ເທື່ອ | 8 | | | 1 | | |

ການວິເຄາະທາງສະຖິຕິ ໄດ້ຊີ້ໃຫ້ເຫັນວ່າໄດ້ມີຄວາມແຕກຕ່າງກັນຫຼາຍທາງດ້ານອັດຕາສ່ວນຂອງຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງຢ່າງໜັກໜ່ວງ (ເຖິງຂັ້ນຮັບບາດເຈັບ) ໃນແຕ່ລະແຂວງ

(Rho= 0.102, Sig.= 0.011). ຜົນຂອງການວິເຄາະ ໄດ້ຊີ້ໃຫ້ເຫັນວ່າ ຄວາມຮຸນແຮງຢ່າງໜັກໜ່ວງໄດ້ເກີດຂຶ້ນຢູ່ ນະຄອນຫຼວງວຽງຈັນ ຫຼາຍກວ່າ ຢູ່ແຂວງອື່ນ (23.8% ຂອງຈຳນວນກໍລະນີຄວາມຮຸນແຮງທັງໝົດ (ເບິ່ງ ກຣາຟ 5.). ແຂວງສະຫວັນນະເຂດມີອັດຕາສ່ວນຄວາມຮຸນແຮງທີ່ໜັກໜ່ວງຕ່ຳກວ່າໝູ່ ຄື 3% ຂອງ ຈຳນວນກໍລະນີຄວາມຮຸນແຮງທັງໝົດ ທີ່ໄດ້ບັນທຶກໄວ້. ຕາມມາແມ່ນ ແຂວງບໍ່ແກ້ວ (13.3%), ແຂວງສາລະວັນ (13.5%) ແລະ ແຂວງຫຼວງພະບາງ (16.4%).




**ກຣາຟ 5.27 ຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງໜັກໜ່ວງ**

ທີມງານຄົ້ນຄວ້າ ໄດ້ທໍາການວິເຄາະທາງດ້ານສະຖິຕິ ກ່ຽວກັບ ຂໍ້ມູນເພື່ອຊອກຫາບັນດາປັດໃຈທີ່ອາດມີສ່ວນເຮັດໃຫ້ຄູ່ສົມລົດ ໃຊ້ຄວາມຮຸນແຮງໜັກໜ່ວງ (ເຖິງຂັ້ນພາໃຫ້ມີບາດເຈັບ). ຕາຕະລາງ 5. 23 ສະຫຼຸບສັງລວມ ຂໍ້ມູນເຫຼົ່ານີ້.ເຫັນວ່າມັນມີການພົວພັນກັນຫຼາຍທີ່ສຸດລະຫວ່າງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງໜັກໜ່ວງກັບເພດຂອງເຂົາເຈົ້າ (Rho= 0.179, Sig.= 0.000). ອັນນີ້ ໝາຍຄວາມວ່າ ສ່ວນຫຼາຍເຫຍື່ອຂອງຄວາມຮຸນແຮງໜັກໜ່ວງຈະແມ່ນແມ່ຍິງ. ຜົນຂອງການວິເຄາະຊີ້ໃຫ້ເຫັນວ່າໃນຈໍານວນແມ່ຍິງທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງທັງໝົດ 324 ຄົນ ມີ 65 ຄົນ (20%) ແມ່ນໄດ້ຮັບຄວາມຮຸນແຮງໜັກໜ່ວງ. ເມື່ອສົມທຽບໃສ່ກັບຜູ້ຊາຍ, ໃນຈໍານວນຜູ້ຊາຍທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ 290 ຄົນ, ມີແຕ່ພຽງ 22 ຄົນ (7.5%) ເທົ່ານັ້ນ ທີ່ໄດ້ຮັບຄວາມຮຸນແຮງໜັກໜ່ວງ.

ເຫັນວ່າ ມັນມີການພົວພັນກັນຫຼາຍລະຫວ່າງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ ກັບອາຍຸ ຂອງເຂົາເຈົ້າເມື່ອເວລາແຕ່ງງານ (Rho= 0.089, Sig.= 0.029). ອັນນີ້ກໍ່ຊວນໃຫ້ຄິດວ່າຜູ້ທີ່ແຕ່ງງານຕັ້ງແຕ່ຍັງໜຸ່ມມັກຈະຕົກເປັນເຫຍື່ອຂອງຄວາມຮຸນແຮງຈົນເຖິງຂັ້ນເຈັບປວດ.

ການວິເຄາະນີ້ ຊີ້ໃຫ້ເຫັນວ່າມັນມີການພົວພັນກັນຫຼາຍທີ່ສຸດລະຫວ່າງຄູ່ສົມລົດທີ່ໃຊ້ຄວາມຮຸນແຮງ ແລະ ການດື່ມເຫຼົ້າຂອງ ຄູ່ສົມລົດ (Rho= 0.188, Sig.= 0.000) ແລະ ການເມົາເຫຼົ້າຂອງຄູ່ສົມລົດ (Rho= 0.236, Sig.= 0.000). ອັນນີ້ ໄດ້ແນະນໍາໄວ້ວ່າ ຄູ່ສົມລົດທີ່ຕິດເຫຼົ້າ ແລະ ເມົາເຫຼົ້າເລື້ອຍໆ ມັກຈະໃຊ້ ຄວາມຮຸນແຮງໜັກໜ່ວງຫຼາຍກວ່າ ຄູ່ສົມລົດ ທີ່ບໍ່ຕິດເຫຼົ້າເມົາຢາ.

**ຕາຕະລາງ 5. 23 ປັດໃຈທີ່ພາໃຫ້ຄູ່ສົມລົດໃຊ້ຄວາມຮຸນແຮງຈົນເຖິງຂັ້ນເຈັບປວດ (ການລຽງລໍາດັບຕາມ Spearman)**

| ປັດໃຈ | Rho | ຕົວເລກຄວາມສໍາຄັນ | ຄວາມສໍາຄັນ* |
|---|---|---|---|
| **ເພດຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 614)** | **0.179** | **0.000** | **ຫຼາຍທີ່ສຸດ** |
| ອາຍຸຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 614) | 0.042 | 0.864 | ບໍ່ຫຼາຍ |
| ລະດັບການສຶກສາຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ(n = 600) | 0.061 | 0.139 | ບໍ່ຫຼາຍ |
| **ອາຍຸຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງເມື່ອແຕ່ງງານ (n = 608)** | **0.089** | **0.029** | **ຫຼາຍ** |
| ອາຊີບຂອງຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ (n = 611) | 0.032 | 0.434 | ບໍ່ຫຼາຍ |
| ຢູ່ນໍາກັບກັບຄອບຄົວໃຫຍ່ (n = 603) | 0.510 | 0.208 | ບໍ່ຫຼາຍ |
| ຈໍານວນຂອງເດັກນ້ອຍ (n = 590) | 0.053 | 0.197 | ບໍ່ຫຼາຍ |
| ແມ່ນໃຜເປັນຜູ້ປະກອບສ່ວນໃຫ້ແກ່ເສດຖະກິດຄອບຄົວຫຼາຍກວ່າໝູ່ (n = 614) | 0.052 | 0.201 | ບໍ່ຫຼາຍ |
| ຜູ້ທີ່ເຄີຍເປັນເຫຍື່ອຂອງຄວາມຮຸນແຮງ ເຂົ້າຮ່ວມໃນການຕັດສິນບັນຫາ (n = 614) | 0.004 | 0.925 | ບໍ່ຫຼາຍ |
| ອາຍຸຂອງຄູ່ສົມລົດ (n = 592) | 0.050 | 0.225 | ບໍ່ຫຼາຍ |
| ລະດັບການສຶກສາຂອງຄູ່ສົມລົດ (n = 595) | 0.033 | 0.427 | ບໍ່ຫຼາຍ |

| | | | |
|---|---|---|---|
| ອາຊີບຂອງຄູ່ສົມລົດ (n = 576) | 0.025 | 0.552 | ບໍ່ຫຼາຍ |
| **ຄູ່ສົມລົດດື່ມເຫຼົ້າເລື້ອຍສໍ່າໃດ (n = 601)** | **0.188** | **0.000** | **ຫຼາຍທີ່ສຸດ** |
| **ຄູ່ສົມລົດເມົາເຫຼົ້າເລື້ອຍສໍ່າໃດ (n = 390)** | **0.236** | **0.000** | **ຫຼາຍທີ່ສຸດ** |

*ຫຼາຍ = <0.05, ຫຼາຍທີ່ສຸດ = < 0.01*

ທີມງານຄົ້ນຄວ້າໄດ້ທໍາການວິເຄາະເພີ່ມເຕີມ ໂດຍນໍາໃຊ້ logistic regression ສ້າງຕົວແບບເພື່ອວິເຄາະເບິ່ງວ່າ ສະຖານະການຮຸນແຮງ ຈະເກີດຂຶ້ນໃນສະພາບການໃດຫຼາຍທີ່ສຸດ. ການວິເຄາະ ໄດ້ລວມເອົາແຕ່ພຽງໜຶ່ງປັດໃຈ ຈາກ ການເກັບກໍາຂໍ້ມູນເຂົ້າໃນຕົວແບບ. ປັດໃຈນີ້ແມ່ນຄູ່ສົມລົດເມົາເຫຼົ້າຫຼາຍເທື່ອສໍ່າໃດ (B= 0.467 Wald.= 15.688 Sig.= 0.000). ຕົວແບບນີ້ ວິເຄາະໃຫ້ເຫັນວ່າຜູ່ທີ່ເມົາເລື້ອຍໆ ຈະໃຊ້ຄວາມຮຸນແຮງໜັກຕໍ່ຄູ່ສົມລົດ (ເຖິງຂັ້ນວ່າ ຄູ່ສົມລົດ ໄດ້ຮັບບາດເຈັບ).

ບາດເຈັບທີ່ຄືກັນສ່ວນໃຫຍ່ ແມ່ນຮອຍຂູດ, ເຫຼື້ມ, ຊໍ້າ (ແມ່ຍິງ 30 ຄົນ ໃຫ້ການລາຍງານ), ຕາມມາດ້ວຍຮອຍບາດ, ຮອຍເຈາະ, ຮອຍກັດ (ແມ່ຍິງ 7 ຄົນ). ແມ່ຍິງ 5 ກໍລະນີໄດ້ລາຍງານວ່າໄດ້ຮັບການເຄັດ, ການຂັດ, ການຍອກຕາມຮ່າງກາຍ (ເບິ່ງ ).

ຕາຕະລາງ 5. 24).

ຕາຕະລາງ 5. 24 ບາດເຈັບທີ່ໄດ້ຮັບຈາກຄວາມຮຸນແຮງໜັກໜ່ວງ

| ປະເພດຂອງບາດເຈັບ | ແມ່ຍິງ | ຜູ້ຊາຍ |
|---|---|---|
| ຮອຍບາດ, ເຈາະ, ກັດ | 7 | 2 |
| ຮອຍຂູດ, ເຫຼື້ມ, ຊໍ້າ | 30 | 3 |
| ການເຄັດ, ຂັດ, ຍອກ | 5 | 1 |
| ຮອຍໃໝ້, ໄຟລວກ | 2 | 0 |
| ຮອຍແທງ, ບາດເລິກ | 1 | 1 |
| ເຈັບຫູຂາດ, ຕາຊໍ້າບວມ | 1 | 0 |
| ອື່ນ ໆ | 4 | 1 |

ຍ້ອນຄວາມຮຸນແຮງດັ່ງກ່າວ, ແມ່ຍິງ ຈໍານວນ 14 ຄົນ ແລະ ຜູ້ຊາຍ ຈໍານວນ 4 ຄົນໄດ້ຮັບບາດເຈັບສາຫັດ ເຖິງຂັ້ນໄດ້ຮັບການປິ່ນປົວ. ກໍລະນີ ທັງໝົດເຫຼົ່ານີ້ ແມ່ນໄດ້ຮັບການປິ່ນປົວ ບາດແຜ (ເບິ່ງ ຕາຕະລາງ 5. 25). ແມ່ຍິງ ຈໍານວນ 6 ຄົນ ຕອບວ່າ ພວກເພິ່ນ ຖືກຜົວ ຕີຈົນໝົດສະຕິ.

ຕາຕະລາງ 5. 25 ການປິ່ນປົວ

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ທັງໝົດ | ເຄີຍ | ບໍ່ເຄີຍ | ທັງໝົດ |

| | | | | | | |
|---|---|---|---|---|---|---|
| ທ່ານເຄີຍໄດ້ຮັບບາດເຈັບໜັກ ເຖິງຂັ້ນ ວ່າ ຈຳເປັນຕ້ອງໄດ້ຮັບການປິ່ນປົວບໍ່? | 14 | 43 | 57 | 4 | 8 | 12 |
| ທ່ານໄດ້ຮັບການປິ່ນປົວບາດແຜບໍ່? | 19 | 5 | 24 | 3 | 7 | 10 |
| ທ່ານເຄີຍບາດເຈັບເຖິງຂັ້ນໝົດສະຕິບໍ່? | 6 | 33 | 39 | 4 | 4 | 8 |

ຄືດັ່ງຊີ້ໃຫ້ເຫັນໃນ ຕາຕະລາງ 5. 26, ຄວາມຮຸນແຮງ ສົ່ງຜົນກະທົບກະເທືອນຕໍ່ ສຸຂະພາບ ທາງດ້ານຮ່າງກາຍ ແລະ ຈິດໃຈ ຂອງຜູ້ທີ່ເປັນເຫຍື່ອຂອງຄວາມຮຸນແຮງ. ແມ່ຍິງຈຳນວນເຄິ່ງໜຶ່ງ (31 ຄົນ) ທີ່ເປັນເຫຍື່ອ ຂອງຄວາມຮຸນແຮງ ເຊື່ອວ່າ ຄວາມຮຸນແຮງ ມີຜົນກະທົບຕໍ່ພວກເພິ່ນຢ່າງຫຼວງຫຼາຍ ແລະ ແມ່ຍິງຜູ້ອື່ນໆ ທີ່ຖືກສຳພາດ ເຊື່ອວ່າ ມັນມີຜົນກະທົບສ່ວນໃດສ່ວນໜຶ່ງ ຕໍ່ພວກເພິ່ນ (25 ຄົນ). ສ່ວນຜູ້ຊາຍ ທີ່ເຄີຍຖືກເປັນເຫຍື່ອຂອງຄວາມຮຸນແຮງນັ້ນ ພຽງແຕ່ເກີນເຄິ່ງໜຶ່ງໜ້ອຍດຽວເທົ່ານັ້ນທີ່ເຊື່ອວ່າ ຄວາມຮຸນແຮງ ກໍ່ມີຜົນກະທົບສ່ວນໃດສ່ວນໜຶ່ງຕໍ່ສຸຂະພາບຂອງເຂົາເຈົ້າ.

**ຕາຕະລາງ 5. 26 ຜົນກະທົບຕໍ່ສຸຂະພາບທາງກາຍແລະທາງຈິດ**

| ຄວາມຮຸນແຮງຈາກຄູ່ສົມລົດຂອງທ່ານ ມີຜົນກະທົບຕໍ່ສຸຂະພາບທາງຮ່າງກາຍ ແລະ ທາງຈິດໃຈ ຂອງ ທ່ານບໍ່? | ແມ່ຍິງ (n = 63) | ຜູ້ຊາຍ (n = 36) |
|---|---|---|
| ບໍ່ມີຜົນກະທົບ | 7 | 17 |
| ມີຜົນກະທົບໜ້ອຍໜຶ່ງ | 25 | 9 |
| ມີຜົນກະທົບຫຼາຍ | 31 | 10 |

ຕາຕະລາງ 5. 27 ບັນທຶກ ຜົນກະທົບຄວາມຮຸນແຮງ ມີຕໍ່ຄວາມອາດສາມາດໃນການທຳງານ ຫຼື ສ້າງລາຍຮັບຂອງຜູ້ທີ່ເປັນເຫຍື່ອຂອງຄວາມຮຸນແຮງ. ຜູ້ທີ່ຖືກສຳພາດຈຳນວນປະມານເຄິ່ງໜຶ່ງ ເວົ້າວ່າມັນບໍ່ມີຜົນກະທົບ ແລະ ວຽກງານກໍ່ບໍ່ໄດ້ຢຸດສະງັກ (ແມ່ຍິງ 24 ຄົນ, ຜູ້ຊາຍ 18 ຄົນ). ເຖິງຢ່າງໃດກໍ່ດີ, ແມ່ຍິງ 11 ຄົນ ແລະ ຜູ້ຊາຍ 5 ຄົນ ຕອບວ່າ ພວກເພິ່ນບໍ່ສາມາດຈະມີສະມາທິເຮັດວຽກໄດ້ ຍ້ອນເກີດມີຄວາມຮຸນແຮງ. ມີແຕ່ພຽງຈຳນວນໜ້ອຍດຽວທີ່ເວົ້າວ່າ ບໍ່ໄດ້ໄປເຮັດວຽກພາຍຫຼັງທີ່ໄດ້ຮັບຄວາມຮຸນແຮງ (ແມ່ຍິງ 6 ຄົນ, ຜູ້ຊາຍ 1 ຄົນ).

ຕາຕະລາງ 5. 27 ຜົນກະທົບຕໍ່ວຽກງານ ຫຼື ກິດຈະກຳຕ່າງ ໆ ທີ່ພາໃຫ້ມີລາຍຮັບ

| ຄວາມຮຸນແຮງໄດ້ກະທົບກະເທືອນຕໍ່ການເຮັດວຽກ ຫຼື ກິດຈະກຳທີ່ສ້າງລາຍຮັບ ຂອງທ່ານບໍ່? | ແມ່ຍິງ (n = 55) | ຜູ້ຊາຍ (n = 33) |
|---|---|---|
| ບໍ່ເປັນຫ່ວງເພາະບໍ່ໄດ້ເຮັດວຽກມີລາຍຮັບ | 7 | 5 |
| ບໍ່ມີຜົນກະທົບຕໍ່ການເຮັດວຽກ | 24 | 18 |
| ຄູ່ສົມລົດຂັດຂວາງການເຮັດວຽກ | 5 | 2 |
| ບໍ່ມີສະມາທິໃນການເຮັດວຽກ | 11 | 7 |
| ບໍ່ໄປເຮັດວຽກເພາະອາຍ | 6 | 1 |
| ອື່ນ ໆ | 2 | 0 |

## *5.3.5 ການໂຕ້ຕອບຄືນຕໍ່ຄວາມຮຸນແຮງ*

ຜູ້ທີ່ໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງ ຈຳນວນຕ່ຳກວ່າເຄິ່ງໜຶ່ງ ໄດ້ຕໍ່ສູ້ກັບຄືນ ແລະ ປ້ອງກັນຕົວເອງເມື່ອຖືກທຸບຕີ (ແມ່ຍິງ 24 ຄົນ, ຜູ້ຊາຍ 13 ຄົນ) (ເບິ່ງ ຕາຕະລາງ 5. 28). ໃນກໍລະນີທີ່ແມ່ຍິງ ສ່ວນໃຫຍ່ (ແມ່ຍິງ 16 ຄົນ), ໄດ້ໂຕ້ຕອບຄືນ ເພື່ອປ້ອງກັນຕົນເອງ ຜົວຂອງພວກເພິ່ນຊ້ຳພັດເພີ່ມຄວາມຮຸນແຮງຂຶ້ນຕື່ມອີກກວ່າເກົ່າ. ໃນບາງກໍລະນີທີ່ແມ່ຍິງຕອບໂຕ້ເພື່ອປ້ອງກັນຕົນເອງນັ້ນ, ໄດ້ເຮັດໃຫ້ຄວາມຮຸນແຮງຢຸດຕິລົງ (ແມ່ຍິງ 9 ຄົນ) ແລະບາງກໍລະນີ ລະດັບຄວາມຮຸນແຮງກໍ່ບໍ່ມີການປ່ຽນແປງ (ແມ່ຍິງ 7 ຄົນ). ໃນກໍລະນີທີ່ຜູ້ຊາຍໄດ້ຮັບຄວາມຮຸນແຮງນັ້ນ ສ່ວນໃຫຍ່ ຖ້າຜູ້ຊາຍໂຕ້ຕອບ(ຜູ້ຊາຍ 11 ຄົນ), ເມຍຈະຢຸດ ນຳໃຊ້ຄວາມຮຸນແຮງ.

**ຕາຕະລາງ 5. 28 ການໂຕ້ຕອບຄືນໂດຍກົງຕໍ່ຄວາມຮຸນແຮງ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ທັງໝົດ | ເຄີຍ | ບໍ່ເຄີຍ | ທັງໝົດ |
| ເມື່ອເວລາທ່ານຖືກຕີ, ທ່ານເຄີຍຕໍ່ສູ້ຄືນ/ປ້ອງກັນຕົນເອງບໍ່? | 24 | 45 | 69 | 13 | 21 | 34 |
| ທ່ານເຄີຍຕໍ່ສູ້ຄືນຈັກເທື່ອ | | | | | | |
| 1 ຫຼື 2 ເທື່ອ | 16 | | | 8 | | |
| ຫຼາຍເທື່ອ | 4 | | | 1 | | |
| ຫຼາຍກວ່າ 5 ເທື່ອ (5 <) | 1 | | | 1 | | |
| ເຮັດແນວນີ້ ມີການປ່ຽນແປງພຶດຕິກຳບໍ່? | | | | | | |
| ບໍ່ມີການປ່ຽນແປງ | 7 | | | 1 | | |
| ຄວາມຮຸນແຮງເພີ່ມຂຶ້ນ | 16 | | | 8 | | |
| ຄວາມຮຸນແຮງຫຼຸດລົງ | 2 | | | 2 | | |
| ຢຸດຕິຄວາມຮຸນແຮງ | 9 | | | 11 | | |

ຕາຕະລາງ 5. 29 ຊີ້ໃຫ້ເຫັນວ່າ ແມ່ຍິງ ຈຳນວນ ຫຼາຍກວ່າເຄິ່ງໜຶ່ງ (34 ຄົນ) ທີ່ເຄີຍໄດ້ຮັບບົດຮຽນກ່ຽວກັບ ຄວາມຮຸນແຮງຈາກຜົວຂອງຕົນໄດ້ໜີອອກຈາກເຮືອນໄປຢ່າງຕ່ຳໜຶ່ງຄືນ. ຜູ້ຊາຍ ຈຳນວນ 7 ຄົນ ກໍ່ເຊັ່ນດຽວກັນໄດ້ໜີອອກຈາກເຮືອນໄປ ໃນສະພາບຄືດຽວກັນນີ້. ເຫດຜົນຕົ້ນຕໍ ທີ່ໄດ້ຕັດສິນໃຈແບບນີ້ກໍ່ເພາະວ່າ ພວກເພິ່ນບໍ່ສາມາດຈະທົນຕໍ່ສະພາບການດັ່ງກ່າວໄດ້ອີກ (ແມ່ຍິງ 13 ຄົນ, ຜູ້ຊາຍ 3 ຄົນ). ແມ່ຍິງຈຳນວນ 7 ຄົນ ຖືກຜົວ ໄລ່ອອກຈາກເຮືອນ ແລະ ແມ່ຍິງ ຈຳນວນ 5 ຄົນ ໜີຈາກເຮືອນເພາະວ່າຖືກບາດເຈັບໜັກ. ເມື່ອເວລາ ໜີອອກຈາກເຮືອນໄປແລ້ວ, ສ່ວນຫຼາຍ ແມ່ນໄປພັກຢູ່ເຮືອນພີ່ນ້ອງຂອງຕົນເອງ (ແມ່ຍິງ 22 ຄົນ, ຜູ້ຊາຍ 9 ຄົນ).

ພາຍຫຼັງທີ່ໄດ້ໜີອອກຈາກເຮືອນໄປ ຍ້ອນວ່າ ຜົວໃຊ້ຄວາມຮຸນແຮງ, ແມ່ຍິງຈຳນວນຫຼາຍຄົນໄດ້ກັບຄືນເມືອເຮືອນຂອງຕົນຄືນ ເພາະວ່າ ຜົວຂອງພວກເພິ່ນ ຂໍຮ້ອງໃຫ້ກັບ (ແມ່ຍິງ 12 ຄົນ) (ເບິ່ງ ຕາຕະລາງ 5. 30). ເຫດຜົນອື່ນໆທີ່ຄືກັນແມ່ນວ່າພວກເພິ່ນ ບໍ່ຢາກໜີຈາກລູກ (ແມ່ຍິງ 7 ຄົນ, ຜູ້ຊາຍ 4 ຄົນ), ບໍ່ ຢາກໃຫ້ເກີດການຢ່າຮ້າງ (ແມ່ຍິງ 5 ຄົນ, ຜູ້ຊາຍ 1 ຄົນ) ແລະ ພວກເພິ່ນຄິດວ່າ ຄູ່ສົມລົດຂອງພວກ ເພິ່ນອາດຈະ ປ່ຽນແປງ (ແມ່ຍິງ 5 ຄົນ).

ຕາຕະລາງ 5. 31 ຊີ້ໃຫ້ເຫັນວ່າ ບຸກຄົນສ່ວນໃຫຍ່ ທີ່ ຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ ໄດ້ຂໍຄວາມຊ່ວຍເຫຼືອຈາກພີ່ນ້ອງຂອງເຂົາເຈົ້າເອງ ລວມທັງພໍ່ແມ່ ແລະ ອ້າຍນ້ອງ. ໃນເກືອບໝົດທຸກກໍລະນີ, ບຸກຄົນເຫຼົ່ານີ້ສາມາດຊ່ວຍຜູ້ທີ່ເປັນເຫຍື່ອຂອງຄວາມຮຸນແຮງ. ໜ້ອຍຄົນທີ່ໄປຫາຄົນພາຍນອກເຊັ່ນ ທ່ານໝໍ, ເຈົ້າໜ້າທີ່ສະຫວັດດີການ ຫຼືຜູ້ນຳໃນທ້ອງຖິ່ນ. ເຖິງຢ່າງໃດກໍ່ດີ, ຄາດວ່າເກືອບໜຶ່ງສ່ວນສາມຂອງຈຳນວນຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ ແມ່ນບໍ່ຕ້ອງການຄວາມຊ່ວຍເຫຼືອຈາກໃຜທັງນັ້ນ (ແມ່ຍິງ 17 ຄົນ, ຜູ້ຊາຍ 10 ຄົນ).

**ຕາຕະລາງ 5. 29 ການໜີອອກຈາກເຮືອນໄປ**

| | ແມ່ຍິງ | | | ຜູ້ຊາຍ | | |
|---|---|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ທັງໝົດ | ເຄີຍ | ບໍ່ເຄີຍ | ທັງໝົດ |
| *ທ່ານເຄີຍໜີອອກຈາກເຮືອນ ເນື່ອງ ມາຈາກຄວາມຮຸນແຮງບໍ່, ທັງ ໆ ທີ່ວ່າ ແມ່ນຍາມກາງຄືນ?* | 34 | 28 | 62 | 7 | 21 | 28 |
| ເປັນຫຍັງທ່ານຈຶ່ງອອກເຮືອນໄປ? | | | | | | |
| ບໍ່ມີເຫດຜົນສະເພາະ | 2 | | | 0 | | |
| ຄອບຄົວ/ໝູ່ເພື່ອນ ຊຸກຍູ້ | 3 | | | 0 | | |
| ບໍ່ສາມາດຈະທົນຕໍ່ໄປອີກ | 13 | | | 3 | | |
| ໄດ້ຮັບບາດເຈັບໜັກ | 5 | | | 1 | | |
| ຄູ່ສົມລົດນາບຂູ່ວ່າຈະຂ້າຖິ້ມ | 1 | | | 0 | | |
| ຄູ່ສົມລົດນາບຂູ່ວ່າຈະຂ້າ, ຕີລູກ | 1 | | | 0 | | |
| ເຫັນວ່າລູກໄດ້ຮັບຄວາມທໍລະມານ | 2 | | | 0 | | |
| ຖືກໄລ່ໜີອອກຈາກເຮືອນ | 7 | | | 1 | | |
| ຢ້ານກົວວ່າຈະຂ້າຄູ່ສົມລົດ | 1 | | | 1 | | |
| ອື່ນ ໆ | 2 | | | 0 | | |

| | | |
|---|---|---|
| ທ່ານໜີໄປໃສ? | | |
| ໄປຫາພີ່ນ້ອງຂອງຕົນເອງ | 22 | 9 |
| ພີ່ນ້ອງຂອງຄູ່ສົມລົດ | 6 | 0 |
| ໝູ່ເພື່ອນ/ບ້ານໃກ້ເຮືອນຄຽງ | 5 | 0 |
| ບ້ານພັກສຸກເສີນ | 1 | 0 |
| ອື່ນ ໆ | 2 | 0 |

### ຕາຕະລາງ 5. 30 ເຫດຜົນຂອງການກັບມາເຮືອນຄືນ

| ເປັນຫຍັງທ່ານຈຶ່ງກັບມາເຮືອນຄືນ? | ແມ່ຍິງ (n = 34) | ຜູ້ຊາຍ (n = 9) |
|---|---|---|
| ບໍ່ຢາກໜີຈາກລູກ | 7 | 4 |
| ແຕ່ງງານແລ້ວ ບໍ່ຢາກປະຮ້າງ | 5 | 1 |
| ເຫັນແກ່ຄອບຄົວ, ລູກ | 2 | 4 |
| ຍັງຮັກຄູ່ສົມລົດຢູ່ | 1 | |
| ຄູ່ສົມລົດຮ້ອງຂໍໃຫ້ກັບຄືນ | 12 | 0 |
| ອະໄພໃຫ້ຄູ່ສົມລົດ | 2 | 0 |
| ຄິດວ່າ ຄູ່ສົມລົດຈະມີການປ່ຽນແປງ | 5 | 0 |

### ຕາຕະລາງ 5. 31 ການເລົ່າສູ່ຄົນອື່ນຟັງກ່ຽວກັບຄວາມຮຸນແຮງ

| | ແມ່ຍິງ (n = 66) | | ຜູ້ຊາຍ (n = 35) | |
|---|---|---|---|---|
| | ໄດ້ເລົ່າ | ໄດ້ຮັບການຊ່ວຍເຫຼືອ | ໄດ້ເລົ່າ | ໄດ້ຮັບການຊ່ວຍເຫຼືອ |
| ທ່ານໄດ້ເລົ່າສູ່ໃຜຟັງແດ່ ກ່ຽວກັບຄວາມຮຸນແຮງ | | | | |
| ບໍ່ມີໃຜ | 17 | 19 | 10 | 10 |
| ໝູ່ເພື່ອນ | 1 | 2 | 3 | 4 |
| ພໍ່ແມ່ | 21 | 19 | 2 | 3 |
| ອ້າຍນ້ອງ | 13 | 11 | 7 | 6 |
| ຄອບຄົວຂອງຄູ່ສົມລົດ | 6 | 6 | 3 | 3 |
| ລູກ | 0 | 0 | 1 | 1 |
| ບ້ານໃກ້ເຮືອນຄຽງ | 4 | 5 | 4 | 9 |
| ທ່ານໝໍ | 1 | 0 | 0 | 0 |
| ເຈົ້າໜ້າທີ່ ທີ່ໃຫ້ຄໍາປຶກສາ | 1 | 0 | 1 | 0 |
| ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ/ ສະຫະພັນແມ່ຍິງລາວ | 0 | 0 | 1 | 1 |
| ອໍານາດການປົກຄອງທ້ອງຖິ່ນ | 2 | 4 | 1 | 3 |

ເຫດຜົນຕົ້ນຕໍ ວ່າເປັນຫຍັງ ຜູ້ທີ່ຖືກສຳພາດ ຕ້ອງການຄວາມຊ່ວຍເຫຼືອ ແມ່ນຍ້ອນວ່າ ພວກເພິ່ນ ບໍ່ສາມາດ ທົນຕໍ່ຄວາມຮຸນແຮງໄດ້ອີກຕໍ່ໄປ (ແມ່ຍິງ 31 ຄົນ, ຜູ້ຊາຍ 10 ຄົນ) (ຕາຕະລາງ 5. 32).

**ຕາຕະລາງ 5. 32 ເຫດຜົນ ຂອງ ການຂໍຄວາມຊ່ວຍເຫຼືອ**

| ເປັນຫຍັງຈຶ່ງຂໍຮ້ອງຄວາມຊ່ວຍເຫຼືອ | ແມ່ຍິງ (n = 48) | ຜູ້ຊາຍ (n = 15) |
|---|---|---|
| ຄອບຄົວ/ໝູ່ເພື່ອນຊຸກຍູ້ | 2 | 4 |
| ບໍ່ສາມາດຈະທົນຕໍ່ໄປອີກ | 31 | 10 |
| ໄດ້ຮັບບາດເຈັບໜັກ | 4 | 0 |
| ຄູ່ສົມລົດນາບຂູ່ວ່າຈະຕີ, ຂ້າລູກ | 3 | 0 |
| ເຫັນລູກເປັນທຸກ | 2 | 1 |
| ຖືກໄລ່ໜີອອກຈາກເຮືອນ | 4 | 0 |
| ຢ້ານກົວວ່າຈະຂ້າຄູ່ສົມລົດ | 1 | 0 |
| ອື່ນ ໆ | 1 | 0 |

ໃນຂະນະທີ່ ມີຈຳນວນໜ້ອຍຄົນ ທີ່ໃຫ້ເຫດຜົນວ່າບໍ່ໄດ້ຂໍຄວາມຊ່ວຍເຫຼືອແມ່ນຍ້ອນວ່າຂາດຂໍ້ມູນຂ່າວສານກ່ຽວກັບວ່າຈະໄປຫາໃຜດີ ແລະ ຂາດຄວາມຮູ້ກ່ຽວກັບສິດທິທາງດ້ານນິດຕິກຳ ແລະ ສິດທິຂອງມະນຸດ (ແມ່ຍິງ 4 ຄົນ, ຜູ້ຊາຍ 5 ຄົນ). ແມ່ຍິງຫຼາຍຄົນຢ້ານຈະມີຜົນສະທ້ອນກັບຄືນຫາກຂໍຄວາມຊ່ວຍເຫຼືອ ແລະ ຮູ້ສຶກລະອາຍຕໍ່ຜູ້ອື່ນໆນັ້ນ (ເບິ່ງ ຕາຕະລາງ 5. 33).

**ຕາຕະລາງ 5. 33 ເຫດຜົນ ຂອງການບໍ່ຂໍຄວາມຊ່ວຍເຫຼືອ**

| ເປັນຫຍັງທ່ານຈຶ່ງບໍ່ຮ້ອງຂໍຄວາມຊ່ວຍເຫຼືອ | ແມ່ຍິງ (n = 14) | ຜູ້ຊາຍ (n = 10) |
|---|---|---|
| ບໍ່ມີຂໍ້ມູນຂ່າວສານ | 4 | 5 |
| ຢ້ານມີຜົນສະທ້ອນກັບຄືນ | 3 | 0 |
| ຖືວ່າຄວາມຮຸນແຮງແມ່ນເລື່ອງປົກກະຕິ | 2 | 1 |
| ລະອາຍ | 3 | 3 |
| ຢ້ານຈະຂາດສາຍພົວພັນ | 1 | 0 |
| ຢ້ານເຮັດໃຫ້ຄອບຄົວເສຍຊື່ສຽງ | 1 | 1 |

ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງເກືອບທັງໝົດ ໄດ້ຕອບວ່າ ພວກເພິ່ນ ເລືອກຂໍຄວາມຊ່ວຍເຫຼືອຈາກຄອບຄົວ (ແມ່ຍິງ 15 ຄົນ, ຜູ້ຊາຍ 6 ຄົນ) ແລະ ບ້ານໃກ້ເຮືອນຄຽງ (ແມ່ຍິງ 10 ຄົນ, ຜູ້ຊາຍ 2 ຄົນ) (ເບິ່ງ ຕາຕະລາງ 5. 34). ຜູ້ທີ່ຕົກເປັນເຫຍື່ອຈຳນວນໜ້ອຍຄົນເວົ້າວ່າ ພວກເພິ່ນຢາກຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ເຊັ່ນ ຕຳຫຼວດ (ແມ່ຍິງ 1 ຄົນ), ຄູບາ (ແມ່ຍິງ 1 ຄົນ, ຜູ້ຊາຍ 1 ຄົນ) ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (ແມ່ຍິງ 2 ຄົນ).

ຕາຕະລາງ 5. 34 ຕ້ອງການໃຫ້ໃຜຊ່ວຍເຫຼືອ

| ທ່ານຢາກຂໍຄວາມຊ່ວຍເຫຼືອຈາກໃຜ? | ແມ່ຍິງ (n = 60) | ຜູ້ຊາຍ (n = 26) |
|---|---|---|
| ບໍ່ມີໃຜສະເພາະເຈາະຈົງ | 7 | 8 |
| ຄອບຄົວຂອງຕົນເອງ | 15 | 6 |
| ແມ່ຕົນເອງ | 10 | 3 |
| ແມ່ຂອງຄູ່ສົມລົດ | 4 | 3 |
| ຕຳຫຼວດ | 1 | 0 |
| ຄູບາ | 1 | 1 |
| ຄອບຄົວຂອງຄູ່ສົມລົດ | 7 | 2 |
| ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ | 2 | 0 |
| ບ້ານໃກ້ເຮືອນຄຽງ/ໝູ່ເພື່ອນ | 10 | 2 |
| ອື່ນ ໆ | 3 | 1 |

## ການຮັບຮູ້ຂອງຄົນອື່ນໆ ຕໍ່ຄວາມຮຸນແຮງ

ຕາຕະລາງ 5. 35 **ຊີ້ໃຫ້ເຫັນວ່າ ໃນເກືອບໝົດທຸກກໍລະນີ, ລູກ ໄດ້ເຫັນ ພໍ່ແມ່ຜິດກັນ ແລະ ຕີກັນ (74 ກໍລະນີ). ໃນຈຳນວນຄອບຄົວທີ່ຖືກສຳພາດ ມີເກືອບ 30 ຄອບຄົວ ເວົ້າວ່າ ລູກ ໄດ້ເຫັນຄວາມຮຸນແຮງ ລະຫວ່າງ ພໍ່ແມ່ທຸບຕີກັນ ຫຼາຍກວ່າ 3 ຄັ້ງ.**

ຕາຕະລາງ 5. 35 ຄວາມຮູ້ຂອງລູກກ່ຽວກັບຄວາມຮຸນແຮງ

| | ແມ່ຍິງ (n = 68) | | ຜູ້ຊາຍ (n = 36) | |
|---|---|---|---|---|
| | ເຄີຍ | ບໍ່ເຄີຍ | ເຄີຍ | ບໍ່ເຄີຍ |
| ລູກຮູ້ ເຫັນ ຫຼື ໄດ້ຍິນບໍ ເວລາ ທ່ານຖືກທຸບຕີ? | 49 | 19 | 25 | 11 |
| ລູກເຫັນທ່ານຖືກທຸບຕີຈັກເທື່ອ? | | | | |
| 1-2 ເທື່ອ | 20 | | 14 | |
| 3-5 ເທື່ອ | 14 | | 4 | |
| ຫຼາຍກວ່າ 5 ເທື່ອ | 9 | | 3 | |

ໃນເກືອບໝົດທຸກກໍລະນີ, ຄົນບ້ານໃກ້ເຮືອນຄຽງແລະຄອບຄົວ ໄດ້ຮູ້ວ່າມີຄວາມຮຸນແຮງລະຫວ່າງຜົວເມຍເກີດຂຶ້ນ. ຕົວຢ່າງ ຄົນບ້ານໃກ້ເຮືອນຄຽງ ສາມາດຊ່ວຍ ແລະ ປັບປຸງສະຖານະການຫຼາຍກວ່າ 65% ຂອງເວລາ (ຕາຕະລາງ 5. 36). ເຖິງຢ່າງໃດກໍ່ດີປະມານ 20% ຂອງກໍລະນີ, ຄົນບ້ານໃກ້ເຮືອນຄຽງບໍ່ສາມາດໃຫ້ການຊ່ວຍເຫຼືອເລີຍ.

**ຕາຕະລາງ 5. 36 ການຮັບຮູ້ຂອງຄົນອື່ນຕໍ່ຄວາມຮຸນແຮງ**

| | ແມ່ຍິງ (n = 62) | | ຜູ້ຊາຍ (n = 17) | |
|---|---|---|---|---|
| | ໄດ້ຍິນ | ບໍ່ໄດ້ຍິນ | ໄດ້ຍິນ | ບໍ່ໄດ້ຍິນ |
| ຄົນບ້ານໃກ້ເຮືອນຄຽງຂອງທ່ານ ໄດ້ຍິນ ຫຼື ຮູ້ ກ່ຽວກັບ ບັນຫາຂອງທ່ານບໍ່? | 51 | 11 | 16 | 1 |
| ຖ້າພວກເຂົາຮູ້, ເຂົາເຈົ້າເຮັດຫຍັງແດ່? | | | | |
| ຊ່ວຍ ແລະ ປັບປຸງ ໃຫ້ສະຖານະການດີຂື້ນ | 38 (68%) | | 13 (72%) | |
| ຊ່ວຍ ເຖິງແມ່ນວ່າ ສະຖານະການ ບໍ່ໄດ້ດີຂື້ນ | 6 (11%) | | 2 (11%) | |
| ບໍ່ເຮັດຫຍັງ? | 12 (21%) | | 3 (17%) | |

ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ ຈຳນວນຕ່ຳກວ່າເຄິ່ງໜຶ່ງ ໄດ້ບອກແພດໝໍ/ເຈົ້າໜ້າທີ່ສະຫວັດດີການສັງຄົມ ກ່ຽວກັບ ສາເຫດທີ່ແທ້ຈິງ ຂອງ ບາດແຜ (ແມ່ຍິງ 7 ຄົນ, ຜູ້ຊາຍ 5 ຄົນ)

(

ຕາຕະລາງ 5. 37). **ແພດໝໍ/ເຈົ້າໜ້າທີ່ ສະຫວັດດີການສັງຄົມ ກໍ່ຮັບຟັງ ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ (ແມ່ຍິງ 4 ຄົນ, ຜູ້ຊາຍ 2 ຄົນ) ແລະ ໃຫ້ຄຳແນະນຳ (ແມ່ຍິງ 4 ຄົນ, ຜູ້ຊາຍ 2 ຄົນ).**

**ຕາຕະລາງ 5. 37 ການຕອບສະໜອງຂອງແພດໝໍ/ພະນັກງານສະຫວັດດີການສັງຄົມ**

| | ແມ່ຍິງ (n = 19) | | ຜູ້ຊາຍ (n = 10) | |
|---|---|---|---|---|
| | ໄດ້ເລົ່າ | ບໍ່ໄດ້ເລົ່າ | ໄດ້ເລົ່າ | ບໍ່ໄດ້ເລົ່າ |
| ທ່ານໄດ້ເລົ່າສູ່ແພດໝໍ/ເຈົ້າໜ້າທີ່ສະຫວັດດີການ ສັງຄົມ ກ່ຽວກັບ ສາເຫດທີ່ແທ້ຈິງຂອງບາດແຜບໍ່? | 7 | 12 | 5 | 5 |
| ພວກເພິ່ນໃຫ້ການຊ່ວຍເຫຼືອແນວໃດ? | | | | |
| ຮັບຟັງ | 4 | | 2 | |
| ຮັບຟັງ ແລະ ໃຫ້ຄຳແນະນຳ | 4 | | 2 | |
| ອື່ນ ໆ | 2 | | 0 | |

# 6. ກໍລະນີສຶກສາ

## 6.1 ເມືອງສັງທອງ, ນະຄອນຫຼວງວຽງຈັນ

'ນາງ ກ' ນາມສົມມຸດ, ມີອາຍຸ 50 ປີ ແລະ ມີລູກ 5 ຄົນ. ລາວອາໃສຢູ່ບ້ານໜຶ່ງຂອງເມືອງສັງທອງ ແລະ ໄດ້ແຕ່ງງານ ເມື່ອລາວມີອາຍຸໄດ້ 18 ປີ. ເມື່ອເວລາ ລູກຍັງນ້ອຍ ການພົວພັນຄອບຄົວ ແມ່ນ ມີຄວາມອົບອຸ່ນສົມຄວນ, ແຕ່ວ່າ ພາຍຫຼັງຈາກ 'ກ' ມີອາຍຸໄດ້ 35 ປີ, ຜົວຂອງລາວເລີ່ມຕີລາວຫຼາຍເທື່ອ. ລາວກໍຍັງສືບຕໍ່ຢູ່ນຳກັນ, ແຕ່ຄິດວ່າ ຜົວມີບັນຫາເລື່ອງດື່ມເຫຼົ້າ ເພາະຜົວຈະຕີລາວເມື່ອເວລາເມົາເທົ່ານັ້ນ. ຜົວຂອງລາວກ່າວຫາວ່າ ລາວມີຊູ້ ກໍ່ເລີຍ

ທຸບຕີລາວຈົນໄດ້ຮັບບາດເຈັບ, ແລະ ເມື່ອເວລາ ຜົວຂອງລາວເຫັນວ່າລາວບໍ່ສະບາຍ ໃນມື້ຫຼັງຈາກການທຸບຕີ, ຜົວຂອງລາວ ເຮັດຄືວ່າບໍ່ເຂົ້າໃຈຫຍັງບໍ່ມີຫຍັງເກີດຂຶ້ນ.

ມື້ໜຶ່ງ 'ກ' ໄປຮັບຈ້າງກ່ຽວເຂົ້າ ເພື່ອໃຫ້ໄດ້ເງິນມາສູ່ຄອບຄົວ. ເມື່ອເວລາກັບມາຮອດເຮືອນພົບວ່າ ຜົວຂອງລາວເມົາເຫຼົ້າ. ຜົວຂອງລາວ ຖືມີດມາໃກ້ຕົວລາວ ແລະ ເວົ້າວ່າ "ມຶງມາແຕ່ໃສ? ເປັນຫຍັງຈຶ່ງມາເຮືອນຊ້າ? ກູຮູ້ວ່າມຶງໄປພົບໃຜຢູ່ໃສມາ!. ກູຈະຂ້າມຶງ!" ຜົວຂອງລາວ ເອົາມີດມາຈີ້ຄໍລາວແຕ່ໂຊກດີ ທີ່ລູກຂອງລາວຊ່ວຍລາວທັນ. ລາວໄດ້ແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດມາຈັບຜົວຂອງລາວ. ແລ້ວຫຼັງຈາກນັ້ນ 4 ເດືອນຕໍ່ມາ 'ກ' ຮູ້ສຶກສົງສານຜົວຂອງລາວ ແລະ ຫວັງວ່າຜົວຂອງລາວຈະປ່ຽນແປງ, ລາວຈຶ່ງໄດ້ຕັດສິນໃຈໄປຂໍຮ້ອງຕຳຫຼວດ ໃຫ້ປ່ອຍຜົວຂອງລາວກັບເຮືອນ. ແຕ່ກໍ່ໜ້າເສຍດາຍທີ່ລາວໂຊກບໍ່ດີ, ຜົວຂອງລາວບໍ່ໄດ້ປ່ຽນແປງຫຍັງເລີຍ ແລະ ຍັງສືບຕໍ່ທຸບຕີລາວເໝືອນເດີມ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ລາວຈຶ່ງໄດ້ໄປພົບນາຍບ້ານ ແລະອຳນາດການປົກຄອງເພື່ອປຶກສາຫາລື ແລະ ຕັດສິນໃຈຢ່າຮ້າງ. ປະຈຸບັນນີ້ລາວໄດ້ໃຊ້ຊີວິດຢູ່ກັບລູກ ແລະ ຮູ້ສຶກວ່າມີຄວາມສຸກດີ, ລູກສາວຂອງລາວສອງຄົນໄດ້ແຕ່ງງານ ແລ້ວລູກເຂີຍ ທັງສອງຄົນກໍ່ໄດ້ຊ່ວຍຄອບຄົວຂອງລາວຢ່າງດີ.

## 6.2 ແຂວງບໍ່ແກ້ວ

'ຂ' ມີອາຍຸ 30 ປີ ແລະ ຜົວຂອງລາວ 28 ປີ. 'ຂ' ແຕ່ງງານ ເມື່ອເວລາ ລາວມີອາຍຸໄດ້ 18 ປີ. ທັງສອງຄົນມາຈາກຊົນເຜົ່າ ອາຂ່າ. ເວລາລາວຖືພາຕັ້ງທຳອິດໄດ້ 8 ເດືອນນັ້ນ, ຜົວຂອງລາວ ຕີລາວບໍ່ຕ່ຳກວ່າ 5 ເທື່ອ ແຕ່ລາວກໍ່ຍັງມີຄວາມອົດທົນປອງດອງກັບຜົວຢູ່, ລາວເລົ່າວ່າຜົວຂອງລາວຕິດຝິ່ນ. ເມື່ອເວລາລາວຊວນຜົວລາວໄປເຮັດວຽກຜົວຂອງລາວຈະຮ້າຍແລະຕີລາວເລື້ອຍໆ. ເທື່ອໜຶ່ງຜົວຂອງລາວໄລ່ລາວໜີອອກຈາກເຮືອນ ແຕ່ລາວບໍ່ຮູ້ວ່າຈະໜີໄປໃສ ເພາະວ່າຄອບຄົວຂອງພໍ່ແມ່ລາວກໍ່ບໍ່ມີແລ້ວ. ລາວເຄີຍໄດ້ສະເໜີຕໍ່ອຳນາດການປົກຄອງບ້ານຫຼາຍເທື່ອ, ແຕ່ກໍ່ບໍ່ມີຫຍັງດີຂຶ້ນ.

## 6.3 ແຂວງບໍ່ແກ້ວ

'ຄ' ແມ່ນແມ່ຍິງອີກຄົນໜຶ່ງທີ່ໂຊກບໍ່ດີ, ລາວໄດ້ແຕ່ງງານຄັ້ງທຳອິດເມື່ອມີອາຍຸໄດ້ 15 ປີ. ປັດຈຸບັນນີ້ລາວມີອາຍຸໄດ້ 35 ປີ ແລະ ຜົວຄົນທີສອງຂອງລາວມີອາຍຸໄດ້ 30 ປີ; ພວກເຂົາເຈົ້າບໍ່ມີລູກນຳກັນຈັກຄົນ. ພາຍຫຼັງຈາກລາວແຕ່ງງານ ລາວບໍ່ເຄີຍມີຄວາມສຸກເລີຍ ເນື່ອງຈາກວ່າແຕ່ລະມື້ ລາວມີຄວາມກັງວົນກ່ຽວກັບອາຫານການກິນ ແລະ ເງິນທອງ. ຜົວຂອງລາວ ຂໍເງິນນຳລາວເກືອບທຸກວັນ ແລະ ຖ້າລາວເວົ້າວ່າບໍ່ມີ ຜົວຂອງລາວກໍ່ຈະຕົບ, ຍູ້, ຕີ ຫຼື ເຕະ ລາວເລື້ອຍໆ. ເວລາລາວຖືກຂົ່ມເຫງ ກໍ່ບໍ່ມີໃຜຈະສົນໃຈມາຊ່ວຍລາວເພາະຜົວຂອງລາວໄດ້ເວົ້າວ່າ "ນີ້ແມ່ນບັນຫາພາຍໃນຄອບຄົວຂອງເຮົາ, ຄົນອື່ນບໍ່ຕ້ອງມາຫຍຸ້ງກ່ຽວ". ເມື່ອເວລາລາວເລົ່າສູ່ທີມງານຂອງພວກເຮົາຟັງ, ລາວທັງຮ້ອງທັງໄຫ້ ແລະ ເວົ້າວ່າຜົວຂອງລາວ ຫ້າມບໍ່ໃຫ້ລາວເລົ່າບັນຫານີ້ສູ່ຄົນອື່ນຟັງ. ຜົວຂອງລາວຂູ່ວ່າ: "ຖ້າມຶງເລົ່າເລື່ອງຂອງຄອບຄົວສູ່ຄົນອື່ນຟັງ, ກູຈະຂ້າມຶງ".

ມີໄລຍະໜຶ່ງ "ຄ" ໄດ້ອອກຈາກເຮືອນໄປຢູ່ນຳເອື້ອຍຂອງລາວເປັນເວລາໜຶ່ງອາທິດ ເພາະວ່າຜົວຂອງລາວໄລ່ໜີ, ແຕ່ວ່າພາຍຫຼັງໄດ້ ໜຶ່ງ ອາທິດ ເອື້ອຍໄພ້ຂອງລາວມາ ຮ້ອງຂໍໃຫ້ລາວກັບຄືນເມືອເຮືອນ. ດຽວນີ້ລາວບໍ່ຮູ້ວ່າຈະເຮັດ ແນວໃດດົນອກຈາກອົດທົນ ຢູ່ຕໍ່ໄປໂດຍບໍ່ຮູ້ວ່າອະນາຄົດຈະເກີດຫຍັງຂຶ້ນ.

## 6.4 ແຂວງບໍ່ແກ້ວ

'ມານະ' (ນາມສົມມຸດ) ມີອາຍຸໄດ້ 29 ປີ ແລະ ເມື່ອລາວຍັງໜຸ່ມ ລາວອາໃສຢູ່ກັບເອື້ອຍເພາະວ່າແມ່ຂອງລາວຕາຍຕັ້ງແຕ່ເມື່ອລາວມີອາຍຸໄດ້ 7 ຂວບ. ລາວແຕ່ງງານຄັ້ງທຳອິດ ເມື່ອມີອາຍຸໄດ້ 20 ປີ ກັບຊາຍຜູ້ໜຶ່ງທີ່ເປັນຄົນເຜົ່າດຽວກັນ, ແຕ່ວ່າໄດ້ພຽງ 6 ປີ ເທົ່ານັ້ນ ລາວກໍ່ຢ່າຮ້າງເພາະວ່າ ຜົວຂອງລາວໄດ້ທຸບຕີລາວເລື້ອຍໆ ເມື່ອເວລາລາວບໍ່ມີເງິນໃຫ້ຜົວຂອງລາວຊື້ຝິ່ນ.

ພາຍຫຼັງຈາກຢ່າຮ້າງກັບຜົວຄົນທຳອິດໄດ້ປີໜຶ່ງ, ລາວກໍ່ໄດ້ແຕ່ງງານໃໝ່ກັບຊາຍອີກຄົນໜຶ່ງທີ່ມີອາຍຸແກ່ກວ່າລາວ 6 ປີ. ລາວຄິດວ່າ ຜົວໃໝ່ຂອງລາວຈະດີກວ່າຜົວເກົ່າ, ແຕ່ວ່າລາວຄິດຜິດ. ລາວແຕ່ງານກັບຜົວໃໝ່ໄດ້ພຽງ 3 ປີເທົ່ານັ້ນ, ລາວເຫັນວ່າຜົວຄົນນີ້ຍິ່ງຮ້າຍວ່າຜົວເກົ່າອີກເພາະວ່າ ຜົວໃໝ່ຂອງລາວຫຼິ້ນການພະນັນ ແລະ ເມື່ອເວລາເສຍເງິນມາ ຜົວຂອງລາວຈະຮ້າຍ ແລະຕີລາວ. ຄັ້ງສຸດທ້າຍຜົວຂອງລາວ ຕີໜ້າລາວ, ໃຊ້ກ້ອນຫີນທຸບ ແລະເຮັດໃຫ້ຂອບຕາເບື້ອງເທິງຂອງລາວບວມຊໍ້າ. ລາວຢາກຈະໜີແຕ່ວ່າບໍ່ຮູ້ຈະໜີໄປໃສ ຖ້າຈະໄປຫາເອື້ອຍຂອງລາວຊໍ້າພັດຢູ່ໄກຈາກລາວຫຼາຍ, ສະນັ້ນລາວຈຶ່ງໄດ້ອົດທົນຢູ່ກັບຜົວຕໍ່ໄປຍ້ອນ ຄິດຮອດລູກຂອງລາວທັງສອງຄົນ.

ພາຍຫຼັງຈາກເຫຼົ່າເລື່ອງຈົບ, ລາວກໍ່ຂໍຮ້ອງນຳທີມງານພວກເຮົາບໍ່ໃຫ້ເວົ້າສູ່ຜົວລາວຟັງກ່ຽວກັບເລື່ອງນີ້ຖ້າວ່າຜົວຂອງລາວຮູ້ ລາວຢ້ານຈະຖືກຕີຫຼາຍກວ່າເກົ່າ. ລາວຫວັງແຕ່ວ່າໃນອະນາຄົດຈະມີໃຜຜູ້ໜຶ່ງມາຊ່ວຍ ລາວໄດ້.

## 6.5 ແຂວງຫຼວງພະບາງ

'ມະນີ' (ນາມສົມມຸດ) ມີອາຍຸໄດ້ 19 ປີ ແລະ ແຕ່ງງານ ເມື່ອລາວມີອາຍຸໄດ້ 12 ປີ. ແມ່ ແລະ ລຸງຂອງລາວຢາກໃຫ້ລາວແຕ່ງງານ ໃນຂະນະທີ່ລາວຍັງຮຽນໜັງສືຢູ່. ໃນເວລາທີ່ລາວແຕ່ງງານ, ຜົວຂອງລາວມີອາຍຸໄດ້ 28 ປີ. ດຽວນີ້ ຜົວຂອງລາວມີອາຍຸ 35 ປີ, ຜົວຂອງລາວມັກດື່ມເຫຼົ້າກັບໝູ່ເພື່ອນເລື້ອຍໆ. ມີເທື່ອໜຶ່ງຜົວຂອງລາວເມົາເຫຼົ້າ ແລະ ກັບມາເຮືອນຂໍເງິນນຳລາວເພື່ອໄປຊື້ເຫຼົ້າຕື່ມ. ລາວຕອບວ່າ ບໍ່ມີເພາະວ່າໃນເວລານັ້ນລາວກໍ່ບໍ່ມີເງິນເລີຍ. ຜົວຂອງລາວຮ້າຍ ແລະ ໂດດໃສ່ລາວແລ້ວເຕະເຕັມແຮງ. ລາວເຈັບປວດຫຼາຍ, ແຕ່ວ່າບໍ່ຮູ້ຈະໂຕ້ຕອບແນວໃດເພາະວ່າ ລາວຢ້ານ. ສະນັ້ນ 'ມະນີ' ຈຶ່ງຕັດສິນໃຈກັບໄປຢູ່ກັບແມ່, ແຕ່ວ່າພາຍຫຼັງສອງສາມວັນ, ຜົວຂອງລາວກໍ່ມາຫາລາວ ແລະ ນຳເອົາລາວກັບຄືນເມືອເຮືອນ. ສອງຜົວເມຍໄດ້ເຊີນອຳນາດການປົກຄອງບ້ານມາປຶກສາຫາລືສະຖານະການຂອງເຂົາເຈົ້າ ແລະ ຈາກນັ້ນມາພຶດຕິກຳຂອງຜົວລາວກໍ່ດີຂຶ້ນ, ແຕ່ວ່າລາວກໍ່ຍັງຢ້ານຢູ່ຕະຫຼອດເວລາເມື່ອຜົວຂອງລາວເມົາເຫຼົ້າ.

## 6.6 ແຂວງຫຼວງພະບາງ

'ສາ' (ນາມສົມມຸດ) ມີອາຍຸໄດ້ 25 ປີ; ລາວແຕ່ງງານ ເມື່ອເວລາລາວມີອາຍຸໄດ້ 16 ປີ ແລະ ຜົວຂອງລາວມີອາຍຸໄດ້ 30 ປີ. ທັງສອງເປັນຊາວໄຮ່ ແລະ ມີລູກ 4 ຄົນ. ເມື່ອລາວຖືພາຄັ້ງທຳອິດ, ຜົວຂອງລາວ ເວົ້າວ່າລາວບໍ່ຢາກໄດ້ລູກ ແລະ ຕ້ອງການຢາກໃຫ້ລາວທຳແທ້ງ, ແຕ່ວ່າລາວຢ້ານ. ຜົວຂອງລາວຮູ້ວ່າລາວຢ້ານ, ຈຶ່ງຊື້ຢາມາໃຫ້ລາວ ແລະ ບັງຄັບໃຫ້ລາວກິນເພື່ອຢາກໃຫ້ແທ້ງລູກ. ພາຍຫຼັງຈາກແທ້ງລູກແລ້ວ,ລາວຮູ້ສຶກເມື່ອຍ ແລະໄປເຮັດວຽກຢູ່ໄຮ່ບໍ່ໄດ້, ແຕ່ວ່າຜົວຂອງລາວ ພັດບັງຄັບໃຫ້ລາວເຮັດວຽກຢູ່ເຮືອນແຕ່ງຢູ່ຄົວກິນ ແລະ ທຳຄວາມສະອາດເຮືອນຊານ. ລາວເມື່ອຍຫຼາຍເຕັມທີຈາກ ການໃຊ້ຊີວິດຢູ່ກັບຜົວແບບນີ້, ສະນັ້ນລາວຈຶ່ງຕັດສິນໃຈກັບຄືນບ້ານເດີມໄປຢູ່ນຳແມ່. ເຖິງຢ່າງໃດກໍ່ດີ, ຜົວຂອງລາວໄປຂໍຮ້ອງໃຫ້ລາວກັບຄືນ ແລະ ໃຫ້ຄຳໝັ້ນສັນຍາວ່າຈະປ່ຽນແປງ.

ພາຍຫຼັງຈາກກັບຄືນເມືອເຮືອນແລ້ວ, ກໍ່ບໍ່ໄດ້ດົນພໍປານໃດບັນຫາກໍ່ເກີດຂຶ້ນອີກ. ມື້ໜຶ່ງລາວເອົາເງິນໃຫ້ຜົວ 10,000 ກີບ ເພື່ອຊື້ສະຫວີງມາໃຫ້, ແຕ່ວ່າລາຄາສະຫວີງມີແຕ່ 9,000 ກີບ ເທົ່ານັ້ນ. ພາຍຫຼັງກັບມາເຮືອນ, ລາວເລີຍຖາມຫາເງິນທອນ 1,000 ກີບ. ລາວຖາມວ່າ: "ເຈົ້າຊື້ຫຍັງ?" ຜົວຂອງລາວໃຈຮ້າຍເຕັມທີ ແລະ ຈັບມີດແລ້ວໂດດເຂົ້າໃສ່ລາວທັງເວົ້າວ່າຈະຂ້າລາວ. ເມື່ອເວລາຕີກັນນັ້ນ, ແມ່ຂອງຜົວເຂົ້າມາ ແລະ ຊ່ວຍເຫຼືອລາວ, ແຕ່ວ່າໃນຊ່ວງຕໍ່ສູ້ກັນນັ້ນ ມີດກໍ່ເລີຍບາດແຂນຂອງລາວ.

ຕັ້ງແຕ່ນັ້ນມາ, ລາວຖືກຜົວທຳຮ້າຍຮ່າງກາຍຫຼາຍຄັ້ງ, ແຕ່ວ່າລາວບໍ່ເຄີຍເວົ້າເລື່ອງນີ້ສູ່ໃຜຟັງເພາະລາວຢ້ານວ່າຈະເປັນການເສື່ອມເສຍຊື່ສຽງຂອງຄອບຄົວ.

## 6.7 ແຂວງສະຫວັນນະເຂດ

'ໃສ' (ນາມສົມມຸດ) ມີລູກ 6 ຄົນ ແລະ ແຕ່ງງານ ເມື່ອລາວມີອາຍຸໄດ້ 17 ປີ. ປັດຈຸບັນນີ້ ລາວມີອາຍຸໄດ້ 39 ປີ ແລະ ຜົວຂອງລາວ 42 ປີ. ລາວເລົ່າສູ່ທີມງານຂອງພວກເຮົາຟັງວ່າ ຜົວຂອງລາວ ເມົາເຫຼົ້າຕະຫຼອດ ແລະ ມີເມຍ 3 ຄົນ, ລາວເອງເປັນເມຍກົກ. ເຫດການເຫຼົ່ານີ້ ແມ່ນເລີ່ມເກີດຂຶ້ນ ເມື່ອລາວຖືພາລູກຜູ້ທີສອງ, ໃນຂະນະນັ້ນຜົວຂອງລາວ ເລີ່ມທຳຮ້າຍ ຮ່າງກາຍ ລາວ ແລະ ກໍ່ໄດ້ເອົາເມຍ ຄົນທີສອງ ແລ້ວກໍ່ຄົນທີສາມຕື່ມອີກ. ດຽວນີ້ລາວຮູ້ສຶກວ່າ ຊີວິດລາວເອງດີຂຶ້ນກວ່າເກົ່າ ເພາະວ່າຜົວຂອງລາວໄດ້ໄປໃຊ້ຊີວິດຢູ່ກັບເມຍຜູ້ທີສາມ. 'ໃສ' ແລະ ຜົວຂອງລາວຍັງບໍ່ໄດ້ຢ່າຮ້າງກັນເທື່ອ, ເມື່ອສອງສາມປີຜ່ານມານີ້ ຜົວຂອງລາວກໍ່ຕີລາວອີກຈົນລາວຫົນບໍ່ໄດ້ເລີຍໜີອອກຈາກບ້ານ,ແຕ່ຫຼັງຈາກນັ້ນລາວກໍ່ໄດ້ກັບຄືນມາ ເພາະອຳນາດການປົກຄອງບ້ານໄດ້ລະດົມໂອ້ລົມທັງສອງຄົນໃຫ້ປອງດອງກັນຄືນເພື່ອໃຫ້ເຫັນແກ່ລູກ. 'ໃສ' ກໍ່ໄດ້ປະຕິບັດຕາມຄຳແນະນຳນັ້ນ ແລະ ດຽວນີ້ລາວກໍ່ຢູ່ກັບລູກລາວທັງ 6 ຄົນ ແລະ ມີຮ້ານຄ້ານ້ອຍ ໆຂາຍເຄື່ອງຍ່ອຍ ຢູ່ເຮືອນ. ລາວບໍ່ຕ້ອງເປັນຫ່ວງເປັນໄຍເລື່ອງຜົວອີກ; ລາວສຸມໃສ່ ແຕ່ຫາເງິນ ເພື່ອໃຫ້ລູກໄດ້ໄປໂຮງຮຽນ ແລະ ໃຊ້ຈ່າຍໃນສິ່ງທີ່ຈຳເປັນແກ່ຊີວິດຄອບຄົວ.

## 6.8 ແຂວງສະຫວັນນະເຂດ

ປາກົດວ່າຄອບຄົວ ຂອງ 'ສອນ'(ນາມສົມມຸດ) ມີຖານະດີກວ່າ ຄອບຄົວອື່ນໆ ຢູ່ໃນບ້ານເພາະວ່າພໍ່ແມ່ຂອງສອນມີຖານະດີ. ປັດຈຸບັນນີ້ລາວມີອາຍຸໄດ້ 45 ປີ; ລາວແຕ່ງງານເມື່ອເວລາລາວມີອາຍຸໄດ້ 20 ປີ. ດຽວນີ້ 'ສອນ' ມີລູກ

4 ຄົນ ແລະ ຜົວຂອງລາວມີອາຍຸໄດ້ 48 ປີ ແລ້ວ. ຜົວຂອງລາວ ຫຼິ້ນການພະນັນທຸກຢ່າງເຊັ່ນ: ຫຼິ້ນໄພ້, ລິງມວຍ, ຕີໄກ່ ແລະອື່ນໆ ນອກຈາກນັ້ນ, ຍັງມັກຫຼິ້ນສາວ. ແຕ່ລະເທື່ອ ທີ່ລາວກັບມາຈາກການ ເຄື່ອນໄຫວກິດຈະກໍາເຫຼົ່ານີ້, ສອງຜົວເມຍ ແມ່ນ ຜິດຖຽງກັນແລ້ວກໍ່ຕີກັນເລື້ອຍໆ. ທັງສອງ ໄດ້ຢ່າຮ້າງກັນ ສອງເທື່ອແລ້ວ: ແຕ່ພາຍຫຼັງການຢ່າຮ້າງຄັ້ງທໍາອິດ, ຜົວຂອງລາວກັບມາ ແລະ ໃຫ້ຄໍາໝັ້ນສັນຍາວ່າຖ້າແຕ່ງງານຄືນໃໝ່ຈະປ່ຽນແປງ. ລາວເຫັນດີໃຫ້ຜົວກັບຄືນ ແລະ ໃນໄລຍະທໍາອິດກໍ່ເບິ່ງຄືວ່າມີການປ່ຽນແປງ. ແຕ່ບໍ່ໄດ້ດົນນານພໍເທົ່າໃດ, ສະພາບກໍ່ກັບມາຄືນເປັນຄືເກົ່າ. ໃນໄລຍະສອງເດືອນຜ່ານມານີ້ເອງ, ຜົວຂອງລາວເສຍພະນັນ ແລະ ເອົາລົດຈັກຂອງຄອບຄົວໄປຂາຍ, 'ສອນ' ບໍ່ຮູ້ວ່າຜົວເຮັດແນວນັ້ນ, ສະນັ້ນເມື່ອເວລາຮູ້ລາວຈຶ່ງຮ້າຍ. ສອງຜົວເມຍຈຶ່ງໄດ້ຕີກັນ ແລະ ໃນຂະນະທີ່ຕີກັນນັ້ນ, ລາວເອົາຊວ້ານ ຕີຫົວຜົວຂອງລາວ. ພາຍຫຼັງຈາກການຕີກັນ, ລາວໄດ້ສະເໜີຕໍ່ອໍານາດການປົກຄອງບ້ານຊ່ວຍ ແລະພ້ອມທັງຂໍຢ່າຮ້າງກັບຜົວຂອງລາວ. ອໍານາດການປົກຄອງບ້ານກໍ່ໄດ້ເຫັນດີ ກັບລາວເພາະວ່າພວກເພິ່ນຮູ້ກ່ຽວກັບກໍລະນີ ນີ້ດີແລ້ວ. ເຖິງຢ່າງໃດກໍ່ດີ, ພາຍຫຼັງຈາກການຕັດສິນແລ້ວ, ຜົວຂອງລາວພັດບໍ່ຍອມໜີອອກຈາກເຮືອນ, ແລະ ຍັງສືບຕໍ່ຢູ່ເຮືອນກັບລາວ. ລາວບໍ່ຮູ້ວ່າ ຈະເຮັດແນວໃດຕໍ່ໄປລາວຄິດວ່າຈະໄປຮ້ອງທຸກ ຕໍ່ສານຫຼືບໍ່ກໍ່ຍັງລັງເລຢູ່.

## 7. ການປຶກສາຫາລື

ຢູ່ ສປປ ລາວ ຊີວິດຄອບຄົວແມ່ນພື້ນຖານຊີວິດຂອງແຕ່ລະຄົນ. ຜົວ ແລະ ເມຍ ເຮັດວຽກຮ່ວມກັນຢູ່ທົ່ງໄຮ່ທົ່ງນາ ເພື່ອລ້ຽງຄອບຄົວ. ລູກເມື່ອເວລາໃຫຍ່ກ້າໜ້າບານແລ້ວກໍ່ຊ່ວຍເຫຼືອພໍ່ແມ່ຢູ່ໄຮ່ຢູ່ນາເຊັ່ນດຽວກັນ. ໂດຍທົ່ວໄປແລ້ວ ລູກສາວກໍ່ຈະບໍ່ຄ່ອຍໄດ້ເຂົ້າໂຮງຮຽນ ເພາະວ່າຈະຕ້ອງໄດ້ຊ່ວຍລ້ຽງນ້ອງ. ມັນບໍ່ແມ່ນເລື່ອງ ແປກປະຫຼາດ ທີ່ເຫັນ ເດັກນ້ອຍໆ ຍິງ ອາຍຸພຽງ 5 ຂວບ ອຸ້ມນ້ອງຊາຍ ຫຼື ນ້ອງສາວ ແລະ ປ້ອນເຂົ້າປ້ອນນ້ຳ. ຄອບຄົວນ້ອຍບາງເທື່ອ ກໍ່ໄດ້ຮັບການຄ້ຳຊູຈາກຄອບຄົວໃຫຍ່, ຊຶ່ງບາງເທື່ອກໍ່ອາໃສ ຢູ່ໃນຄົວເຮືອນດຽວກັນ, ແຕ່ວ່າສ່ວນຫຼາຍແລ້ວ ແມ່ນ ອາໃສຢູ່ໃນບ້ານດຽວກັນ. ຂະໜາດສະເລ່ຍຂອງຫຼັງຄາເຮືອນ ຢູ່ ສປປ ລາວ ແມ່ນ 6.1 ຄົນ, ຢູ່ໃນຕົວເມືອງ ແມ່ນ 5.9 ຄົນ ຕໍ່ຫຼັງຄາເຮືອນ ແລະ 6.1 ຄົນຕໍ່ຫຼັງຄາເຮືອນ ໃນຊົນນະບົດ[16]. ການສຶກສາຢູ່ໃນ 5 ແຂວງນີ້, ໄດ້ພົບວ່າ ຈຳນວນເດັກນ້ອຍ ໃນແຕ່ລະຄອບຄົວແມ່ນຢູ່ໃນລະຫວ່າງ 0 ຫາ 11 ຄົນ, ຕົວເລກສະເລ່ຍ ແມ່ນ 3.6 ຄົນ. ນີ້ ແມ່ນ ຂະໜາດ ທີ່ນ້ອຍກວ່າໝູ່ຂອງຫຼັງຄາເຮືອນທີ່ໄດ້ບັນທຶກຂໍ້ມູນ ມາຈາກບ່ອນອື່ນ, ອາດຈະແມ່ນວ່າຂະໜາດຂອງ ຫຼັງຄາເຮືອນຂອງ ຄົນລຸ່ນໃໝ່ມີການປ່ຽນແປງ, ເພາະຂໍ້ມູນສຳລັບການສຶກສານີ້ແມ່ນໄດ້ຈຳກັດເອົາສະເພາະແມ່ຍິງ ທີ່ມີອາຍຸ ຢູ່ໃນລະຫວ່າງ 15 ປີ ຫາ 50 ປີ, ອາຍຸສະເລ່ຍ ແມ່ນ 33.9 ປີ.

ຢູ່ທົ່ວທະວີບອາຊີ, ແລະ ແມ້ກະທັ່ງຢູ່ພາຍໃນ ສປປ ລາວ ເອງ, ແມ່ນມີວັດທະນະທຳ ແລະ ວິຖີຊີວິດທີ່ແຕກຕ່າງກັນ ຫຼາຍ, ຊຶ່ງແຕ່ລະຢ່າງກໍ່ມີຮີດຄອງປະເພນີສະເພາະຂອງໃຜມັນ. ສ່ວນໃຫຍ່ຕາມຮີດຕາມຄອງແລ້ວ, ໂດຍທົ່ວໄປ ເລື່ອງບົດບາດຂອງຜູ້ຊາຍ ແລະ ແມ່ຍິງ ກ່ຽວກັບການແບກຫາບວຽກງານ, ປະເພດຂອງວຽກ ແລະ ຄວາມຮັບຜິດ ຊອບ ຕະຫຼອດຮອດ ບົດບາດໃນຄອບຄົວລວມທັງຄອບຄົວທີ່ເຕີບໃຫ່ຍທັງຫລາຍກໍເຊັ່ນດຽວກັນ. ຢູ່ ສປປ ລາວ, ວັດທະນະທຳ ແລະ ຮີດຄອງປະເພນີ ແມ່ນເລື່ອງສຳຄັນທີ່ສຸດສຳລັບວິຖີຊີວິດຂອງຄົນລາວ. ຮີດຄອງປະເພນີ ແລະ ພູມປັນຍາທ້ອງຖິ່ນມີບົດບາດສຳຄັນທີ່ສຸດ ຢູ່ໃນຊີວິດປະຈຳວັນຂອງຄົນສ່ວນໃຫຍ່ໃນຊຸມຊົນ. ຢູ່ ສປປ ລາວ, ມີ ຄຳສຸພາສິດກ່ຽວກັບຮີດຄອງປະເພນີຫຼາຍເລື່ອງ ທີ່ພັນລະນາເຖິງບົດບາດຂອງຜູ້ຊາຍ ແລະ ແມ່ຍິງ ຢູ່ໃນຄອບຄົວ; "ຜູ້ຊາຍເປັນແຫ, ແມ່ຍິງເປັນຂ້ອງ"; "ຜົວຄືຊ້າງເທົ້າໜ້າ, ເມຍຄືຊ້າງເທົ້າຫຼັງ"; ແລະ "ຜົວຄືນາຍ, ເມຍຄືແຫຼ້ງ".

ມຸມມອງເຫຼົ່ານີ້ ເສີມສ້າງຄວາມບໍ່ສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ສ້າງໃຫ້ມີຄວາມແຕກຕ່າງກັນລະຫວ່າງ ເພດ, ພາໃຫ້ຜູ້ຊາຍ ມີອຳນາດເໜືອກວ່າແມ່ຍິງ. ເຖິງຢ່າງໃດກໍ່ດີ, ພວກເພິ່ນຮັບຮູ້ວ່າແມ່ຍິງ ສາມາດ ມີພາລະບົດ ບາດ ເປັນກອງໜູນຊ່ວຍຜົວດັ່ງຄຳສຸພາສິດກ່າວວ່າ: "ແຫວນງາມຍ້ອນຫົວ, ຜົວດີຍ້ອນເມຍ". ເຖິງຢ່າງໃດກໍ່ດີ, ຄຳເວົ້າເຫຼົ່ານີ້ບັນລະຍາຍເຖິງ ຕົວແບບພາລະບົດບາດຂອງແມ່ຍິງ ໂດຍສະເພາະແມ່ນຢູ່ຊົນນະບົດແລ້ວສາມາດ ພາໃຫ້ເກີດຄວາມຮຸນແຮງ ແລະ ພາໃຫ້ມີຄວາມຮຸນແຮງຢູ່ຕະຫຼອດໄປ. ອັນນີ້ມັນໄດ້ສະທ້ອນໃຫ້ເຫັນຈາກຈຳນວນ ຂອງ ແມ່ຍິງ ທີ່ມີບົດບາດເປັນຜູ້ນຳພານັ້ນແມ່ນຍັງຕ່ຳ, ແລະ ລະດັບຄວາມບໍ່ຮູ້ໜັງສືກໍ່ຍັງຕ່ຳຫຼາຍຢູ່ໃນບັນດາ ແມ່ຍິງ ເມື່ອສົມທຽບໃສ່ກັບຜູ້ຊາຍ. ໂດຍທົ່ວໄປແລ້ວແມ່ຍິງ ເຮັດວຽກຄຽງຂ້າງກັບຜູ້ຊາຍຢູ່ໄຮ່ຢູ່ນາ, ນອກຈາກນັ້ນ ແມ່ຍິງຍັງຕ້ອງໄດ້ເຮັດວຽກເຮືອນການຊານນຳອີກ, ແຕ່ງຢູ່ຄົວກິນ ແລະ ເບິ່ງແຍງລູກເຕົ້າ. ຄວາມບໍ່ສະເໝີພາບ ລະຫວ່າງຍິງ-ຊາຍ ແມ່ນໄດ້ສະແດງອອກຢູ່ໃນຊີວິດປະຈຳວັນເຊັ່ນ: ສິ້ນ, ເຄື່ອງຊ້ອນໃນຂອງ ແມ່ຍິງ ຫ້າມບໍ່ໃຫ້

[16] ບົດລາຍງານກ່ຽວກັບ ການພັດທະນາມະຈະດແຫ່ງຊາດ ຂອງ ສປປ ລາວ (2001). ອົງການສະຫະປະຊາຊາດເພື່ອການພັດທະນາ

ຫ້ອຍຢູ່ເທິງເຄື່ອງນຸ່ງຜູ້ຊາຍ. ຖ້າຫາກວ່າລະເມີດກໍ່ໝາຍຄວາມວ່າແມ່ຍິງບໍ່ນັບຖືຜູ້ຊາຍ ແລະ ຊີວິດຂອງຄອບຄົວກໍ່ຈະພົບກັບຄວາມລໍາບາກໃນອະນາຄົດ. ຢູ່ ສປປ ລາວ, ໃນບາງຊົນເຜົ່າທີ່ນັບຖືຜີ ແມ່ຍິງ ທີ່ຈະເກີດລູກຕ້ອງອອກໄປ ເກີດລູກ ຢູ່ປ່າຜູ້ດຽວ, ຫຼືວ່າ ເກີດລູກຢູ່ຕະລ່າງເຮືອນ ຊຶ່ງແມ່ນຄອກສັດ, ແລະ ຫ້າມໃຫ້ເຂົ້າເຮືອນຈົນຄົບ 3 ວັນ ພາຍຫຼັງຈາກເກີດລູກ.

ແມ່ຍິງບໍ່ມີການສຶກສາພຽງພໍ ແລະ ໂອກາດໃນການປະກອບສ່ວນເຂົ້າໃນວຽກງານເສດຖະກິດ ແລະ ສັງຄົມ ແມ່ນໜ້ອຍເຕັມທີ ພາໃຫ້ເຂົາເຈົ້າບໍ່ເຫັນໄດ້ເຖິງຄວາມອາດສາມາດຂອງຕົນເອງ ແລະ ບໍ່ເຂົ້າໃຈບັນຫາສິດທິຂອງຕົນເອງທາງດ້ານກົດໝາຍຕ່າງໆ. ເຊັ່ນວ່າ: ແມ່ຍິງ ຮູ້ໜ້ອຍດຽວກ່ຽວກັບຄວາມໝາຍຂອງຄໍາວ່າ "ຄວາມຮຸນແຮງຢູ່ໃນຄອບຄົວ", ແລະ ມັກຈະເຊື່ອວ່າຜົວຂອງຕົນ ມີສິດທຸບຕີຕົນຫາກວ່າຕົນທໍາສິ່ງໃດໜຶ່ງໃຫ້ຜົວບໍ່ພໍໃຈ. ບັນຫານີ້ແມ່ນມາຈາກກົດລະບຽບ ຂອງສັງຄົມ ແລະ ວັດທະນະທໍາທ້ອງຖິ່ນ ແລະ ແມ່ຍິງ ທີ່ພະຍາຍາມຢາກຮັກສາກົດລະບຽບນີ້ ກໍ່ແມ່ນສະໜັບສະໜູນປະເພນີນີ້ຢ່າງແຮງກ້າ ແລ້ວ ກໍ່ອະໄພໃຫ້ແກ່ພຶດຕິກໍາຂອງຜູ້ຊາຍເລື້ອຍໆ. ການສຶກສາທີ່ໄດ້ດໍາເນີນຢູ່ປະເທດໃກ້ຄຽງເຊັ່ນ: ກໍາປູເຈຍ[17] ແລະ ປະເທດ ຫວຽດນາມ[18] ໄດ້ພົບເຫັນວ່າມີຫຼາຍການກະທໍາທີ່ມີຄວາມຮຸນແຮງເຊັ່ນ ຕົບ, ຕີ ຫຼື ເຕະ ຊຶ່ງພວກເພິ່ນຖືວ່າ ມັນແມ່ນເລື່ອງທໍາມະດາຢູ່ໃນຊີວິດຄອບຄົວ ແລະ ດ້ວຍເຫດນີ້ ພວກເພິ່ນ ຈິ່ງຖືວ່າ ມັນບໍ່ແມ່ນຄວາມຮຸນແຮງ ຫຼື ບໍ່ມີຄວາມຈໍາເປັນທີ່ຈະເອົາມາເວົ້າ.

ຄວາມຮຸນແຮງ ມີຫຼາຍປະເພດດ້ວຍກັນທັງຕໍ່ຮ່າງກາຍ ແລະ ຈິດໃຈ ທີ່ໄດ້ຮັບລາຍງານຈາກຜູ້ທີ່ຖືກສໍາພາດໃນເວລາທໍາການສໍາຫຼວດກ່ຽວກັບຄວາມຮຸນແຮງຢູ່ໃນຄອບຄົວ ຫຼື ຄວາມຮຸນແຮງຕໍ່ແມ່ຍິງທົ່ວໝົດທະວີບ ອາຊີ, ລວມທັງການສໍາຫຼວດທີ່ກໍາລັງດໍາເນີນ ຢູ່ໃນ ສປປ ລາວ ນີ້. ແມ່ຍິງສ່ວນໃຫຍ່ບໍ່ສາມາດທີ່ຈະຮູ້ໄດ້ວ່າ ຄວາມຮຸນແຮງແມ່ນຫຍັງ ນອກເໜືອໄປຈາກການທຸບຕີຮ່າງກາຍ. ເມື່ອເວລາຖືກຖາມວ່າ ພວກເພິ່ນເຄີຍໄດ້ຮັບຄວາມຮຸນແຮງປະເພດໃດແດ່ບໍ່ (ຕາມຄໍານິຍາມທີ່ໄດ້ໃຫ້ໄວ້ຢູ່ໃນບົດຖະແຫຼງການ ຂອງ ສະຫະປະຊາຊາດກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ປີ 1993), ຈໍານວນ ຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງແມ່ນຫຼວງຫຼາຍ. ໃນການສຶກສາທີ່ກໍາລັງດໍາເນີນຢູ່ນີ້, ໃນຈໍານວນແມ່ຍິງທີ່ຖືກສໍາພາດ ມີ 45% ໄດ້ບົ່ງບອກວ່າ ຜົວຂອງພວກເພິ່ນໄດ້ໃຊ້ຄວາມຮຸນແຮງ ຕໍ່ພວກເພິ່ນໃນຮູບແບບໃດໜຶ່ງ ຊຶ່ງເປັນການເຜີຍໃຫ້ເຫັນວ່າຈໍານວນເຫດການຄວາມຮຸນແຮງຢູ່ໃນຄອບຄົວແມ່ນສູງ. ເຫດການຄວາມຮຸນແຮງໃນຄອບຄົວ ຢູ່ໃນ ສປປ ລາວມີຈໍານວນຄ້າຍຄືກັນເມື່ອສົມທຽບໃສ່ກັບ ທີ່ໄດ້ພົບພໍ້ຢູ່ໃນການສຶກສາຢູ່ປະເທດໄທ (44%)[19], ແລະ ອິນເດຍ (45%)[20], ແຕ່ວ່າເກືອບສອງເທົ່າລະດັບທີ່ພົບພໍ້ຢູ່ປະເທດຫວຽດນາມ (22%)[19]. ໃນປັດຈຸບັນນີ້, ສະຖິຕິນີ້ອາດຈະຕໍ່າກວ່າຄວາມເປັນຈິງ. ການລາຍງານຕໍ່າກວ່າຄວາມເປັນຈິງແມ່ນ ມີຢູ່ທົ່ວໄປເພາະວ່າແມ່ຍິງບໍ່ຢາກລາຍງານກ່ຽວກັບຄວາມຮຸນແຮງ. ທັງນີ້ກໍ່ອາດ

---

[17] Zimmerman (1994). ຈານຢູ່ໃນກະຕ່າ ຍ່ອມດັບກັນ: ຄວາມຮຸນແຮງຢູ່ໃນປະເທດກໍາປູເຈຍ

[18] ການເລົ່າຄວາມຮຸນແຮງຢູ່ໃນຄົວເຮືອນ: ການຮັບຮອງເອົາເອກະສານແນະນໍາສໍາລັບຊຸມຊົນຊົນນະບົດ (2002). ສະພາປະຊາຊົນ, ສູນທີ່ປຶກສາຈິດະສາດ, ການສຶກສາ, ຄວາມຮັກ, ການສົມລົດ ແລະ ຄອບຄົວ. ນະຄອນຫຼວງ ໂຮຈີມິນ

[19] Achownitgun,K. Kanjonagitra, C.; Iimem, W. and U. Urtsrisantat (2001) ຜົນຂອງການຄົ້ນຄ້ວາ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ເປັນພາກສ່ວນໜຶ່ງ ຂອງ ຄູ່ຜົວເມຍ. ຂະໜາດຂອງບັນຫາ, ຜົນກະທົບຕໍ່ສຸຂະພາບ ແລະ ວິທີແກ້ໄຂ.

[20] Draft Indiasafe: ການສຶກສາ ກ່ຽວກັບ ການຂົ່ມເຫງ ຢູ່ໃນ ສິ່ງແວດລ້ອມຄອບຄົວ ຢູ່ປະເທດອິນເດຍ, ບົດລາຍງານສະຫຼຸບສັງລວມ (2000). ເຄືອຂ່າຍນັກຄວບຄຸມໂລກລະບາດສາກົນ

ຈະເປັນຍ້ອນວ່າ ແມ່ຍິງ ອຶດອັດໃຈ ແລະ ລະອາຍ ທີ່ຍັງມີຄວາມປອງດອງສືບຕໍ່ຢູ່ກັບຜົວທັງໆ ທີ່ວ່າຕົນຖືກຂົ່ມເຫງ ແລະ ອີກບັນຫາໜຶ່ງກໍ່ຍ້ອນວ່າ ແມ່ຍິງທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງນັ້ນກໍ່ຖືກນິນທາ ເລື້ອຍໆກ່ຽວກັບຄວາມຮຸນແຮງ ທີ່ພວກເພິ່ນໄດ້ອົດທົນຮັບ. ເຊັ່ນຕົວຢ່າງ, ມີແມ່ຍິງບາງຄົນທີ່ຖືກຂົ່ມເຫງ ໄດ້ຖືກກ່າວຫາວ່າເປັນເມຍບໍ່ດີ ແລະ ສະນັ້ນ ແມ່ຍິງເຫຼົ່ານີ້ສົມຄວນແລ້ວທີ່ຈະຕ້ອງຖືກຜົວຕີ. ບັນດາຂໍ້ຫ້າມຂອງສັງຄົມກ່ຽວກັບການລາຍງານຄວາມຮຸນແຮງ ແລະ ການຂາດການຊ່ວຍເຫຼືອຜູ້ທີ່ລອດຊີວິດ ຈາກຄວາມຮຸນແຮງກໍ່ແມ່ນເຫດຜົນໜຶ່ງທີ່ພາໃຫ້ມີການລາຍງານ ຕໍ່າກວ່າຄວາມເປັນຈິງ. ແມ່ຍິງບາງຄົນກໍ່ຍັງຢ້ານວ່າຖ້າພວກເພິ່ນເລົ່າສູ່ຜູ້ໃດຜູ້ໜຶ່ງຟັງກ່ຽວກັບຄວາມຮຸນແຮງ, ຜົວຂອງ ພວກເພິ່ນ ກໍ່ຈະຮ້າຍ ແລະ ຕີ ຮຸນແຮງຂຶ້ນຫຼາຍກວ່າເກົ່າ[21].

ຢູ່ ສປປ ລາວ, ໃນບັນດາແມ່ຍິງ ທີ່ເຄີຍມີປະສົບການກ່ຽວກັບຄວາມຮຸນແຮງມາແລ້ວ, ມີແມ່ຍິງຈຳນວນເຖິງ 35% ໄດ້ຊີ້ ບອກວ່າພວກເຂົາເຄີຍມີປະສົບການກ່ຽວກັບຄວາມຮຸນແຮງຕໍ່ຈິດໃຈ, ມີເຖິງ 17% ທີ່ເຄີຍມີ ປະສົບການກ່ຽວກັບຄວາມຮຸນແຮງຕໍ່ຮ່າງກາຍ. ໃນຈຳນວນທັງໝົດ 967 ຄົນທີ່ຖືກສຳພາດມີແມ່ຍິງ 15 ຄົນ (1.6%) ໄດ້ຕອບວ່າ ພວກເພິ່ນເຄີຍມີປະສົບການ ກ່ຽວກັບ ຄວາມຮຸນແຮງ ທາງເພດ ຈາກ ສາມີ. ຢູ່ໃນການສຶກສາເບື້ອງຕົ້ນ ທີ່ ດຳເນີນໂດຍ ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ສູນກາງສະຫະພັນແມ່ຍິງລາວ (GRID) ໂດຍໄດ້ຮັບການຮ່ວມມືຈາກ ສູນສະຖິຕິແຫ່ງຊາດ, ເຫັນວ່າ ການຂົ່ມເຫງ ທາງເພດ ທີ່ໄດ້ບັນທຶກເອົາໄວ້ ສຳລັບ 3 ແຂວງ ແລະ ກຳແພງນະຄອນວຽງຈັນ ຂອງ ສປປ ລາວ ແມ່ນມີລະດັບ ຄ້າຍ ໆ ກັນ. ຜົນຂອງການສຶກສາ ຊີ້ໃຫ້ເຫັນວ່າ ມີແມ່ຍິງຈຳນວນ 27 ຄົນ ຈາກ ຕົວຢ່າງ 2,339 ຄອບຄົວ (1.2%) ໄດ້ຮັບປະສົບການກ່ຽວກັບ ຄວາມຮຸນແຮງທາງເພດ. ລະດັບຄວາມຮຸນແຮງທາງເພດ ທີ່ແມ່ຍິງຫວຽດນາມໄດ້ຮັບແມ່ນຢູ່ໃນລະດັບທີ່ສູງກວ່າໜ້ອຍໜຶ່ງຄື 2.9%, ສ່ວນຄວາມຮຸນແຮງ ຕໍ່ ຈິດໃຈ ແລະ ຮ່າງກາຍນັ້ນ ແມ່ນຕໍ່າ ຄືຢູ່ໃນລະດັບ 17.1% ແລະ 14.1% ຕາມລຳດັບ. ເຖິງຢ່າງໃດກໍ່ດີ, ເຫດການຄວາມຮຸນແຮງທາງເພດ ທີ່ ໄດ້ຮັບ ການລາຍງານຈາກປະເທດໄທແມ່ນສູງຫຼາຍ, 16% ຂອງ ຈຳນວນແມ່ຍິງ 2,078 ຄົນ ແມ່ນໄດ້ຮັບປະສົບການກ່ຽວກັບຄວາມຮຸນແຮງທາງເພດ ແລະ 15% ໄດ້ຮັບຄວາມຮຸນແຮງຕໍ່ຮ່າງກາຍ[20]. ເຖິງແມ່ນວ່າຢູ່ ສປປ ລາວ ມີຄວາມເຊື່ອຖືວ່າແມ່ຍິງ ທີ່ຖືພາຈະຕ້ອງໄດ້ຮັບການເອົາໃຈໃສ່ຖະນຸຖະໜອມເປັນພິເສດກໍ່ຕາມ, ມີບາງກໍລະນີ, ຄວາມຮຸນແຮງຍັງສືບຕໍ່ຢູ່ທັງໆທີ່ວ່າແມ່ຍິງຍັງຖືພາຢູ່. ໃນຈຳນວນແມ່ຍິງທັງໝົດທີ່ຖືກສຳພາດ ມີ 19 ຄົນ (1.9%) ໄດ້ຕອບວ່າ ໃນຊ່ວງເວລາຖືພາພວກເພິ່ນກໍ່ຍັງໄດ້ຖືກຂົ່ມເຫງຢູ່ເໝືອນກັນ. ການແຜ່ລາມຂອງ ການຂົ່ມເຫງແມ່ຍິງທີ່ຖືພາ ຊຶ່ງໄດ້ລະບຸໄວ້ຢູ່ປະເທດໄທ ແມ່ນເກືອບສອງເທົ່າຕົວ (4%)[22]. ເຖິງຢ່າງໃດກໍ່ດີ, ອັດຕາສ່ວນເຫຼົ່ານີ້ແມ່ນຕໍ່າກວ່າອັດຕາສ່ວນຂອງແມ່ຍິງທີ່ຖືກຂົ່ມເຫງຢູ່ປະເທດອິນເດຍ. ພວກເຮົາໄດ້ຮັບການລາຍງານວ່າພວກເພິ່ນໄດ້ຮັບປະສົບການກ່ຽວກັບຄວາມຮຸນແຮງທາງເພດ ໃນຂະນະທີ່ພວກເພິ່ນກຳລັງຖືພາຢູ່[23] ແມ່ນມີເກືອບ 50%. ການສຶກສາຢູ່ປະເທດກຳປູເຈຍ[24] ກໍ່ໄດ້ລະບຸໄວ້ວ່າ ແມ່ຍິງທີ່ຖືກຂົ່ມເຫງແມ່ນ

[21] Pickup, F. Williams, S. and C. Sweetman (2001). ການສິ້ນສຸດຄວາມຮຸນແຮງຕໍ່ແມ່ຍິງ: ຄວາມຮູ້ສຶກຂອງຂອງຊຸມຊົນ ຕໍ່ລູກຂອງແມ່ຍິງທີ່ຖືກທຸບຕີ, Thousand Oakes CA: Sage Publications

[22] Achownitgun,K. Kanjonagitra, C.; Iimem, W. and U. Urtsrisantat (2001) ຜົນຂອງການຄົ້ນຄວ້າ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ເປັນພາກສ່ວນໜຶ່ງ ຂອງ ຄູ່ຜົວເມຍ. ຂະໜາດຂອງບັນຫາ, ຜົນກະທົບຕໍ່ສຸຂະພາບ ແລະ ວິທີແກ້ໄຂ.

[23] Draft Indiasafe: ການສຶກສາ ກ່ຽວກັບ ການຂົ່ມເຫງ ຢູ່ໃນ ສິ່ງແວດລ້ອມຄອບຄົວ ຢູ່ປະເທດອິນເດຍ, ບົດລາຍງານສະຫຼຸບສັງລວມ (2000). ເຄືອຂ່າຍນັກຄວບຄຸມໂລກລະບາດສາກົນ

ມີອັດຕາສ່ວນສູງ ແລະ ແມ່ຍິງເຫຼົ່ານີ້ສືບຕໍ່ຖືກຂົ່ມເຫງເມື່ອເວລາຖືພາ, ບາງເທື່ອກໍ່ບັງຄັບໃຫ້ທຳແທ້ງ. ໃນການສຶກສາດຽວກັນນີ້, ກໍ່ມີແມ່ຍິງຈຳນວນໜຶ່ງທີ່ຖືກຜົວຂົ່ມເຫງທັນທີໂລດພາຍຫຼັງຈາກເກີດລູກ, ຊຶ່ງເປັນຊ່ວງໄລຍະທີ່ພວກເພິ່ນຍັງບໍ່ທັນແຂງແຮງບໍ່ວ່າທາງ ດ້ານຮ່າງກາຍກໍ່ຄືດ້ານສະຕິອາລົມ ຊຶ່ງສົມຄວນທີ່ຈະໄດ້ຮັບການຖະນຸຖະໜອມ.

ມີປັດໃຈທີ່ແຕກຕ່າງກັນຈຳນວນໜຶ່ງ ທີ່ສາມາດພາໃຫ້ເກີດມີຄວາມຮຸນແຮງ, ຫຼື ສາມາດພາໃຫ້ຄວາມຮຸນແຮງເພີ່ມທະວີຂຶ້ນ. ຕາມການບອກເລົ່າ ຂອງແມ່ຍິງທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ ຢູ່ ສປປ ລາວ, ບັນດາປັດໃຈທີ່ຄືກັນ ສ່ວນຫຼາຍ ຊຶ່ງກະທົບກະເທືອນເຖິງ ພຶດຕິກຳທີ່ມີຄວາມຮຸນແຮງ ແມ່ນ ການເມົາເຫຼົ້າ ເຊິ່ງມີເຖິງ(31%), ບັນຫາ ທີ່ພົວພັນເຖິງເງິນ (13%) ແລະ ບັນຫາທີ່ພົວພັນເຖິງວຽກເຮັດງານທຳກໍ່ (13%). ຖ້າວິເຄາະເຖິງພູມຫຼັງຂອງບັນຫານີ້ຈະເຫັນໄດ້ວ່າ ຄວາມຮຸນແຮງ ມັກຈະເກີດຂຶ້ນ ເມື່ອ ຄູ່ສົມລົດເມົາເຫຼົ້າເລື້ອຍໆ. ການຕິດເຫຼົ້າ ເມົາສຸລາກໍ່ແມ່ນນອນຢູ່ໃນ ບັນດາສາເຫດຕົ້ນຕໍ ທີ່ພາໃຫ້ເກີດມີຄວາມຮຸນແຮງ ຢູ່ໃນປະເທດໄທ (35%)[23] ແລະ ໃນປະເທດວຽດນາມ (86%)[25]. ເຖິງຢ່າງໃດກໍ່ດີ, Zimmerman[26] ໄດ້ຊີ້ໃຫ້ເຫັນວ່າການຕິດເຫຼົ້າເມົາສຸລາ ແມ່ນວິທີການໜີລອດຈາກຄວາມຮັບຜິດຊອບຕໍ່ຄວາມຮຸນແຮງ ຫຼືວ່າ ເປັນປັດໃຈໜຶ່ງທີ່ພາໃຫ້ຄວາມຮຸນແຮງ ເພີ່ມທະວີຂຶ້ນແທນທີ່ຈະເປັນການຢືນຢັນເຫດຜົນຢູ່ເບື້ອງຫຼັງຂອງຄວາມຮຸນແຮງ. ຍັງບໍ່ທັນໄດ້ມີການວິເຄາະເພື່ອປະເມີນເບິ່ງເຫດຜົນຢູ່ເບື້ອງຫຼັງ ຂອງການຕິດເຫຼົ້າເມົາສຸລາເທື່ອ. ຜູ້ຊາຍອາດດື່ມເຫຼົ້າຫຼາຍເກີນໄປເພາະວ່າມີຄວາມຮ້າຍ ຫຼືວ່າຖືກກົດດັນ. ຜູ້ຊາຍ ອາດຈະຖືວ່າການດື່ມເຫຼົ້າແມ່ນເສັ້ນທາງແກ້ໄຂບັນດາປັດໃຈອື່ນໆ ທີ່ກະທົບກະເທືອນເຖິງຄວາມຮຸນແຮງ ເຊັ່ນບັນຫາການເງິນ. ຢູ່ປະເທດວຽດນາມ[26], ຜູ້ຊາຍທີ່ມີພຶດຕິກຳດື່ມເຫຼົ້າ ອ້າງເຫດຜົນແກ້ຕົວວ່າເມຍເປັນຜູ້ເຮັດໃຫ້ຜູ້ຊາຍ ສ້າງຄວາມຮຸນແຮງເພາະວ່າເມຍມີພຶດຕິກຳ ແລະ ທ່າທີບໍ່ດີຕຳນິຕິຕຽນຜົວ ເມື່ອຜົວດື່ມເຫຼົ້າ. ຢູ່ປະເທດ ອິນເດຍ[24], ແມ່ຍິງເຂົ້າໃຈວ່າປັດໃຈສ່ວນໃຫຍ່ ທີ່ຍຸຍົງສົ່ງເສີມໃຫ້ເກີດມີຄວາມຮຸນແຮງຕໍ່ພວກເພິ່ນ ແມ່ນບັນຫາ ທີ່ພົວພັນເຖິງ ສິ່ງທີ່ເຂົ້າໃຈວ່າເປັນການລະເລີຍຕໍ່ຄວາມຮັບຜິດຊອບຂອງຕົນ ໃນຖານະທີ່ເປັນພັນລະຍາ ເຊັ່ນຕົວຢ່າງ ການອົບຮົມສັ່ງສອນລູກ (37%), ບໍ່ເຮັດວຽກເຮືອນການຊານ (33%) ແລະ ອື່ນໆ. ເນື່ອງຈາກວ່າແມ່ຍິງທີ່ຢູ່ໃນການສຳຫຼວດນັ້ນ ບໍ່ໄດ້ເວົ້າເຖິງວ່າເຫຼົ້າແມ່ນໜຶ່ງໃນບັນດາປັດໃຈທີ່ກະທົບກະເທືອນເຖິງຄວາມຮຸນແຮງ, ການວິເຄາະມີຫຼາຍຕົວແປໄດ້ເຜີຍ ໃຫ້ເຫັນວ່າລະດັບຂອງການຕິດເຫຼົ້າເມົາຢາກໍ່ແມ່ນໜຶ່ງໃນບັນດາປັດໃຈຫຼັກທີ່ອາດພາໃຫ້ເກີດມີ ພຶດຕິກຳກໍ່ຄວາມຮຸນແຮງ.

ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ທາງດ້ານເສດຖະກິດຄອບຄົວກໍ່ແມ່ນປັດໃຈໜຶ່ງທີ່ມີຜົນກະທົບກະເທືອນເຖິງຄວາມຮຸນແຮງຢູ່ໃນຄອບຄົວຫຼາຍທີ່ສຸດ. ການວິເຄາະຜົນຂອງການສຳຫຼວດນີ້ເຜີຍໃຫ້ເຫັນວ່າ ຄວາມຮຸນແຮງມັກຈະເກີດຂຶ້ນ ໃນກໍລະນີທີ່ແມ່ຍິງຫາເງິນໄດ້ໜ້ອຍກວ່າຜູ້ຊາຍ. ຈຸດນີ້ແມ່ນຄືກັນກັບຜົນທີ່ຮັບຈາກການສຶກສາຢູ່ປະເທດໄທ, ຊຶ່ງໄດ້ພົບເຫັນວ່າຄວາມຮຸນແຮງຈະມີຈຳນວນລົດໜ້ອຍຖອຍລົງ ຖ້າວ່າລາຍຮັບຂອງແມ່ຍິງເທົ່າທຽມກັນກັບຜູ້ຊາຍ. ເຖິ່ງຢ່າງໃດກໍ່ດີ, ຄວາມຮຸນແຮງ ສາມາດເພີ່ມຂຶ້ນໄດ້ເໝືອນກັນ ເມື່ອແມ່ຍິງມີລາຍຮັບຫຼາຍກວ່າ ຫຼື

---

[24] Zimmerman (1994). ຈານຢູ່ໃນກະຕ່າ ຍ່ອມດັບກັນ: ຄວາມຮຸນແຮງຢູ່ໃນປະເທດກຳປູເຈຍ

[25] ການເລົ່າຄວາມຮຸນແຮງຢູ່ໃນຄົວເຮືອນ: ການຮັບຮອງເອົາເອກະສານແນະນຳສຳລັບຊຸມຊົນຊົນນະບົດ (2002). ສະພາປະຊາຊົນ, ສູນທີ່ປຶກສາຈິດຕະສາດ, ການສຶກສາ, ຄວາມຮັກ, ການສົມລົດ ແລະ ຄອບຄົວ. ນະຄອນຫຼວງ ໂຮຈິມິນ

[26] Zimmerman, C. (1994). ຈານຢູ່ໃນກະຕ່າ ຍ່ອມດັບກັນ: ຄວາມຮຸນແຮງຢູ່ໃນປະເທດກຳປູເຈຍ

ໜ້ອຍກວ່າ ຜົວຂອງຕົນ23. ການຄົ້ນຄວ້າຈາກປະເທດອິນເດຍ ໄດ້ແນະນໍາໄວ້ເຊັ່ນດຽວກັນວ່າ ບັນຫາເສດຖະກິດ-ສັງຄົມ ກໍ່ອາດເປັນປັດໃຈໜຶ່ງທີ່ສໍາຄັນ, ຊຶ່ງສັງເກດເຫັນໄດ້ວ່າ ຄວາມຮຸນແຮງມັກຈະເກີດຂຶ້ນຫຼາຍກວ່າເກົ່າເມື່ອເວລາຜົວ ຫຼື ເມຍ ບໍ່ມີວຽກເຮັດງານທໍາ, ຊຶ່ງໄດ້ແນະນໍາໄວ້ວ່າບົດບາດຍິງ-ຊາຍລະຫວ່າງຄູ່ຜົວ-ເມຍກໍ່ມີການປ່ຽນແປງດ້ວຍການເພີ່ມ ຫຼື ຫຼຸດອໍານາດລະຫວ່າງ ຜົວ-ເມຍ27. ການສຶກສາທັງສອງຈາກປະເທດໄທ28 ແລະ ສປປ ລາວ ໄດ້ພົບເຫັນວ່າຜູ້ຊາຍ ມັກຈະນໍາໃຊ້ຄວາມຮຸນແຮງຫຼາຍຂຶ້ນ ຖ້າວ່າເພິ່ນຕົກຢູ່ໃນສະພາບທີ່ບໍ່ມີຄວາມໝັ້ນຄົງເຊັ່ນຕົວຢ່າງ, ຫວ່າງງານ, ມີຍິງອື່ນ(ເມຍນ້ອຍ), ມີລູກກັບຍິງອື່ນ, ການຜິດຖຽງກັນແລະອື່ນໆ. ຢູ່ປະເທດ ກໍາປູເຈຍ, ໄດ້ສັງເກດເຫັນວ່າການຜິດຖຽງກັນຫຼາຍ ຢ່າງກ່ອນການເກີດມີຄວາມຮຸນແຮງ ແມ່ນກ່ຽວຂ້ອງກັບເສດຖະກິດຂອງຄອບຄົວ25, ສ່ວນຫຼາຍ ແມ່ນຍ້ອນວ່າ ເມຍຕ້ອງການຢາກໃຫ້ຜົວອອກໄປຫາເງິນ.

ມັນບໍ່ມີພຽງແຕ່ຄວາມແຕກຕ່າງ ທາງດ້ານຄວາມອາດສາມາດໃນການຫາເງິນ ຫຼື ສະພາບທີ່ກະທົບກະເທືອນ ເຖິງຄວາມຮຸນແຮງເທົ່ານັ້ນ, ການສຶກສາກໍ່ສາມາດເປັນປັດໃຈໜຶ່ງທີ່ພາໃຫ້ເກີດມີຄວາມຮຸນແຮງໃນຄອບຄົວ ໄດ້ເຊັ່ນດຽວກັນ. ໂດຍທົ່ວໄປແລ້ວ ຢູ່ໃນປະເທດນີ້, ມັນມີຄວາມແຕກຕ່າງກັນຫຼາຍ ລະຫວ່າງລະດັບການສຶກສາຂອງຜູ້ຊາຍ ແລະ ແມ່ຍິງ. ທົ່ວ ສປປ ລາວ, ຈໍານວນ ແມ່ຍິງທີ່ຮູ້ໜັງສື ມີແຕ່ພຽງ 55% ເທົ່ານັ້ນ, ສ່ວນຜູ້ຊາຍ ແມ່ນມີເຖິງ 82%. ການສຶກສາທີ່ກໍາລັງດໍາເນີນຢູ່ໃນເຂດຊົນນະບົດຂອງ ສປປ ລາວ ໃນປັດຈຸບັນນີ້ເຫັນວ່າໃນຈໍານວນຜູ້ທີ່ຖືກສໍາພາດມີຫຼາຍກວ່າ 70% ທີ່ມີການສຶກສາດ້ານໃດດ້ານໜຶ່ງ. ເຖິງຢ່າງໃດກໍ່ດີ, ຄ້າຍໆກັບອັດຕາສ່ວນຄວາມຮູ້ໜັງສື, ຈໍານວນແມ່ຍິງ ທີ່ບໍ່ໄດ້ຮັບການສຶກສາເລີຍ ແມ່ນມີຫຼາຍກວ່າຜູ້ຊາຍ (36% ແລະ 17% ຕາມລໍາດັບ) ແລະ ຜູ້ຊາຍ ມີໂອກາດໄດ້ຮັບການສຶກສາໃນລະດັບສູງຫຼາຍກວ່າແມ່ຍິງ. ການວິເຄາະຜົນຂອງການສໍາຫຼວດຢູ່ ສປປ ລາວ ໄດ້ຊວນໃຫ້ຄິດເຖິງການພົວພັນລະຫວ່າງການສຶກສາ ແລະ ຄວາມຮຸນແຮງ, ແມ່ຍິງທີ່ໄດ້ຮັບການສຶກສາຈະໄດ້ຮັບບົດຮຽນກ່ຽວກັບຄວາມຮຸນແຮງຫຼາຍກວ່າ ແມ່ຍິງ ທີ່ມີການສຶກສາໜ້ອຍກວ່າ. ສິ່ງເຫຼົ່ານີ້ ອາດຈະມີການພົວພັນກັນກັບເຫດການທີ່ວ່າ ແມ່ຍິງທີ່ໄດ້ຮັບການສຶກສາຈະມີປະສົບການຫຼາຍກວ່າ ແລະ ມີການສໍາຜັດກັບໂລກພາຍນອກ (ຢູ່ນອກເຮືອນ ແລະ ບ້ານຂອງຕົນ) ຫຼາຍກວ່າ ແຕ່ມັກຈະມີປາກມີສຽງ, ບໍ່ມີຄວາມສະຫງົບສະຫງ່ຽມ ແລະ ອ່ອນຫວານກັບຜົວ. ເຖິງຢ່າງໃດກໍ່ດີ, ຜົນຂອງການສຶກສາເຫຼົ່ານີ້ ອາດຈະເປັນບົດຮຽນໃຫ້ແມ່ຍິງທີ່ໄດ້ຮັບການສຶກສາມີຄວາມເຊື່ອໝັ້ນໃນຕົວເອງ ແລະ ມີການສົນທະນາແບບເປີດເຜີຍກ່ຽວກັບຄວາມຮຸນແຮງ ຫຼາຍກວ່າແມ່ຍິງ ທີ່ມີການສຶກສາໜ້ອຍ. ການຄົ້ນຄວ້າຢູ່ປະເທດອິນເດຍໄດ້ພົບເຫັນວ່າແມ່ຍິງທີ່ໄດ້ຮັບການສຶກສາພະເຊີນໜ້າກັບຄວາມສ່ຽງຕໍ່ຄວາມຮຸນແຮງໜ້ອຍກວ່າ ແມ່ຍິງທີ່ບໍ່ໄດ້ຮັບການສຶກສາ, ບາງທີອາດຈະເປັນເພາະວ່າແມ່ຍິງທີ່ໄດ້ຮັບການສຶກສາ ມີຄວາມຮູ້ຫຼາຍ ແລະ ເຂົ້າໃຈດີກ່ຽວກັບສິດທິຂອງແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ[28].

---

[27] Draft Indiasafe: ການສຶກສາ ກ່ຽວກັບ ການຂົ່ມເຫງ ຢູ່ໃນ ສິ່ງແວດລ້ອມຄອບຄົວ ຢູ່ປະເທດອິນເດຍ, ບົດລາຍງານສະຫຼຸບສັງລວມ (2000). ເຄືອຂ່າຍນັກຄວບຄຸມໂລກລະບາດສາກົນ

[28] Achownitgun,K. Kanjonagitra, C.; Iimem, W. and U. Urtsrisantat (2001) ຜົນຂອງການຄົ້ນຄ້ວາ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ເປັນພາກສ່ວນໜຶ່ງ ຂອງ ຄູ່ຜົວເມຍ. ຂະໜາດຂອງບັນຫາ, ຜົນກະທົບຕໍ່ສຸຂະພາບ ແລະ ວິທີແກ້ໄຂ.

ຄວາມຮຸນແຮງຢູ່ໃນຄອບຄົວ ໄດ້ເຮັດໃຫ້ແມ່ຍິງບໍ່ສາມາດໄດ້ເຂົ້າຮ່ວມໃນວຽກງານເສດຖະກິດ ແລະ ສັງຄົມໄດ້ຢ່າງເຕັມເມັດເຕັມໜ່ວຍ ຍ້ອນວ່າຂາດຄວາມເຊື່ອໝັ້ນໃນຕົນເອງ, ສຸຂະພາບ ແລະ ກຳລັງວັງຊາຂອງເຂົາເຈົ້າກໍ່ຫຼຸດລົງນຳ. ທະນາຄານໂລກຍັງຢຶດໝັ້ນວ່າ "ແມ່ຍິງບໍ່ສາມາດໃຫ້ແຮງງານ ຫຼື ແນວຄິດທີ່ສ້າງສັນໄດ້ຢ່າງເຕັມເມັດເຕັມໜ່ວຍເມື່ອເວລາພວກເຂົາຖືກຂົ່ມເຫງໃຫ້ມີບາດແຜທາງຮ່າງກາຍແລະຈິດໃຈ"29. ທະນາຄານໂລກໄດ້ປະເມີນໄວ້ເຊັ່ນດຽວອີກວ່າ ຄວາມຮຸນແຮງ ຕໍ່ແມ່ຍິງ ແມ່ນ ສາເຫດອັນໜຶ່ງທີ່ພາໃຫ້ສຸຂະພາບຂອງແມ່ຍິງບໍ່ສົມບູນຫຼາຍກວ່າ ທີ່ເກີດຈາກ ອຸປະຕິເຫດບົນທ້ອງຖະໜົນ ແລະ ໄຂ້ມາລາເລຍປະສົມກັນ.

ຜົນກະທົບ ຂອງຄວາມຮຸນແຮງຢູ່ໃນຄອບຄົວທີ່ເຫັນຫຼາຍກວ່າໝູ່ ແລະ ທີ່ສາມາດເຫັນໄດ້ຊັດເຈນແມ່ນການທຳຮ້າຍຮ່າງກາຍ. ຢູ່ ສປປ ລາວ, 25% ຂອງ ແມ່ຍິງທີ່ຖືກຂົ່ມເຫງແມ່ນຖືກ ທຳຮ້າຍຕໍ່ຮ່າງກາຍ. ເກືອບໝົດທຸກກໍລະນີທີ່ໄດ້ລະບຸໄວ້ໃນຊ່ວງເວລາດຳເນີນການສຶກສານີ້, ຜູ້ທີ່ຖືກເຄາະຮ້າຍມີຮອຍຊໍ້າ ແລະ ຮອຍຂູດ. 14 ກໍລະນີຈາກ 57 ຄົນທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງຖືກທຳຮ້າຍ ເຖິງຂັ້ນຕ້ອງໄດ້ຮັບການປິ່ນປົວ ແລະ ແມ່ຍິງຈຳນວນ 6 ຄົນຖືກທຸບຕີຈົນໝົດສະຕິ. ການສຶກສາຢູ່ປະເທດວຽດນາມ30 ແລະປະເທດໄທ29 ໄດ້ລະບຸວ່າ ຈຳນວນຜູ້ທີ່ໄດ້ຮັບບາດເຈັບ ມີ 27% ແລະ 47% ຂອງຈຳນວນແມ່ຍິງທີ່ຖືກຂົ່ມເຫງຕາມລຳດັບ. ການສຶກສາຢູ່ປະເທດ ກຳປູເຈຍໄດ້ຮຽນຮູ້ວ່າ ມີບໍ່ຕໍ່າກວ່າ 10 ກໍລະນີ ທີ່ຄວາມຮຸນແຮງໄດ້ເພີ່ມທະວີຂຶ້ນເຖິງຂັ້ນເຮັດໃຫ້ຜູ້ທີ່ຕົກເປັນເຫຍື່ອເສຍຊີວິດຈາກການທຸບຕີ ແລະ ກະທຳຄວາມຮຸນແຮງ31.

ນອກຈາກການທຳຮ້າຍຮ່າງກາຍແລ້ວ, ມັນຍັງມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ສຸຂະພາບຈິດຂອງແມ່ຍິງອີກ. ພວກເຂົາອາດກາຍເປັນຄົນຂວັນອ່ອນ, ກັງວົນໃຈ, ຢ້ານຜົວ, ໜັກໃຈໃນການຕັດສິນບັນຫາ, ບໍ່ມີຄວາມໄວ້ວາງໃຈຕໍ່ຜົວຂອງຕົນອີກແລ້ວ ແລະ ຕີລາຄາຕົວເອງຕໍ່າ. ແມ່ຍິງ ອາດຈະຄິດຂ້າຕົວເອງຕາຍແຕ່ວ່າບໍ່ເຮັດເພາະຍັງຮັກ ແລະ ເປັນຫວ່ງລູກ.

ຜົນກະທົບຂອງຄວາມຮຸນແຮງ ຍັງກະທົບກະເທືອນເຖິງຄວາມຮູ້ສຶກ, ສຸຂະພາບທາງດ້ານຮ່າງກາຍ ແລະ ຄວາມຢູ່ດີກິນດີຂອງສະມາຊິກຄົນອື່ນໆຂອງຄອບຄົວ. ການສຶກສາໜຶ່ງຢູ່ ປະເທດອິນເດຍ ໄດ້ພະຍາຍາມກຳນົດມູນຄ່າຂອງຄວາມຮຸນແຮງຢູ່ໃນຄອບຄົວ. ໂດຍສະເລ່ຍ, ແມ່ຍິງ ແມ່ນສູນເສຍເວລາ 6.88 ວັນ ທີ່ເຮັດວຽກຫາເງິນ ແລະ 6.87 ວັນທີ່ເຮັດວຽກໃນຄອບຄົວຍ້ອນວ່າ ມີຄວາມຮຸນແຮງເກີດຂຶ້ນແກ່ຕົນ. ໃນເວລາດຽວກັນ, ແມ່ຍິງໃຫ້ຂໍ້ສັງເກດວ່າຜົວຂອງພວກເພິ່ນກໍ່ຂາດ ຫຼື ຫຼົບຫຼີກວຽກໃນຊ່ວງເວລາໃດໜຶ່ງພາຍຫຼັງຈາກເກີດຄວາມ ຮຸນແຮງ[32]. ນອກຈາກນີ້, ກໍ່ຍັງມີສ່ວນກ່ຽວຂ້ອງກັບຄ່າໃຊ້ຈ່າຍເຊັ່ນດຽວກັນ ຖ້າຫາກວ່າແມ່ຍິງໄດ້ຮັບບາດເຈັບໜັກ ແລະ ຕ້ອງໄດ້ຮັບການ

[29] World Bank (1993) ບົດລາຍງານກ່ຽວກັບການພັດທະນາຂອງໂລກ 1993: ການລົງທຶນໃສ່ວຽກງານສາທາລະນະສຸກ, ນິວຢອກ: Oxford University Press.

[30] ການເລົ່າຄວາມຮຸນແຮງຢູ່ໃນຄົວເຮືອນ: ການຮັບຮອງເອົາເອກະສານແນະນຳສຳລັບຊຸມຊົນຊົນນະບົດ (2002). ສະພາປະຊາຊົນ, ສູນທີ່ປຶກສາຈິດຕະສາດ, ການສຶກສາ, ຄວາມຮັກ, ການສົມລົດ ແລະ ຄອບຄົວ. ນະຄອນຫຼວງ ໂຮຈິ່ມິນ

[31] Zimmerman, C. (1994). ຈານຢູ່ໃນກະຕ່າ ຍ່ອມດັບກັນ: ຄວາມຮຸນແຮງຢູ່ໃນປະເທດກຳປູເຈຍ

[32] Draft Indiasafe: ການສຶກສາ ກ່ຽວກັບ ການຂົ່ມເຫງ ຢູ່ໃນ ສິ່ງແວດລ້ອມຄອບຄົວ ຢູ່ປະເທດອິນເດຍ, ບົດລາຍງານສະຫຼຸບສັງລວມ (2000). ເຄືອຂ່າຍນັກຄວບຄຸມໂລກລະບາດສາກົນ

ປົ່ນປົວ. ການສູນເສຍວຽກ ແລະ ຄ່າໃຊ້ຈ່າຍອື່ນໆ ອາດຈະສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ສະພາບເສດຖະກິດຂອງຄອບຄົວ, ໂດຍສະເພາະຖ້າວ່າ ເຫດການຄວາມຮຸນແຮງເກີດມີຂຶ້ນເລື້ອຍໆ.

ເດັກນ້ອຍ ຫຼາຍຄົນຖືກແທ້ງອອກ ຫຼື ເກີດມາພ້ອມກັບບາດແຜເນື່ອງຈາກວ່າ ແມ່ຖືກຕີເມື່ອເວລາຖືພາ. ການສຶກສາໜຶ່ງ ຢູ່ປະເທດ ມາເລເຊຍ ໄດ້ຊີ້ໃຫ້ເຫັນວ່າໃນຈຳນວນ ແມ່ຍິງທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງມີ 68% ກຳລັງຖືພາໃນເວລານັ້ນ33. ຄວາມສາມາດໃນການເບິ່ງແຍງດູແລລູກໃຫ້ເຕັມເມັດເຕັມໜ່ວຍຂອງ ແມ່ຍິງທີ່ຖືກຂົ່ມເຫງແມ່ນຖືກນາບຂູ່ຈາກຄວາມຮຸນແຮງຢູ່ໃນຄົວເຮືອນ. ນັກຄົ້ນຄວ້າ ກໍ່ໄດ້ພົບເຫັນເຊັ່ນດຽວກັນວ່າເດັກນ້ອຍທີ່ໄດ້ພົບເຫັນຄວາມຮຸນແຮງຢູ່ໃນຄອບຄົວກໍ່ໄດ້ຮັບການກະທົບກະເທືອນຕໍ່ຄວາມຮູ້ສຶກ ແລະ ພຶດຕິກຳ ເຊັ່ນດຽວກັນເປັນຕົ້ນການຫຼົບຊ່ອນຕົວ, ການຕີລາຄາຕົວເອງຕໍ່າ, ຝັນຮ້າຍ, ຕຳນິຕົວເອງ ແລະ ມີພຶດຕິກຳກ້າວລ້າວຕໍ່ຜູ້ໃຫຍ່, ຕໍ່ສະມາຊິກຄອບຄົວ ແລະ ຕໍ່ຊັບສິນ34. ການສຶກສາ ຢູ່ປະເທດ ປາປົວນິວກິນເນຍໄດ້ພົບວ່າ ເດັກນ້ອຍ ທີ່ພົບເຫັນຄວາມຮຸນແຮງ ມັກຈະມີຄວາມຫຍຸ້ງຍາກ ໃນການປະພຶດຕົວຢູ່ໂຮງຮຽນໃຫ້ໄດ້ດີເຊັ່ນ ດຽວກັນ35.

ຜູ້ຊາຍ ທີ່ກໍ່ເຫດຄວາມຮຸນແຮງຕໍ່ເມຍຂອງຕົນອາດຈະເລີ່ມຕົ້ນມີຄວາມຮູ້ສຶກເຫີນຫ່າງຈາກຄອບຄົວຂອງຕົນເພາະວ່າສູນເສຍຄວາມຮັກ ແລະ ຄວາມນັບຖືຈາກເມຍຂອງຕົນ. ບາງກໍລະນີ ກໍ່ພະເຊີນໜ້າກັບການຢ່າຮ້າງ, ຖືກຈຳກັດທາງດ້ານກົດໝາຍບໍ່ໃຫ້ພົບຄອບຄົວ ຫຼື ມີຄວາມລະອາຍໃຈຢູ່ໃນຊຸມຊົນ. ບາງກໍລະນີກໍ່ອາດໄດ້ພະເຊີນໜ້າກັບການຈັບກຸມ ແລະ ຈຳຄຸກ.

ຄອບຄົວ ແມ່ນຫົວໃຈຂອງຊີວິດມະນຸດ, ໂດຍສະເພາະຢູ່ໃນ ສປປ ລາວ. ຄອບຄົວແມ່ນສະຖານທີ່ ທີ່ມະນຸດສາມາດແບ່ງປັນຄວາມຮັກໃຫ້ແກ່ກັນ ແລະ ໃຫ້ຄວາມດູແລເບິ່ງແຍງ ເຊິ່ງກັນແລະກັນ. ອັນນີ້ພັດພາໃຫ້ແມ່ຍິງຕົກຢູ່ໃນສະພາບຫຍຸ້ງຍາກ ເມື່ອເວລາເຂົາເຈົ້າພົບກັບຄວາມຮຸນແຮງ ຢູ່ໃນສະຖາບັນທີ່ຕົນຖືວ່າເປັນບ່ອນທີ່ຈະໄດ້ຮັບການເບິ່ງແຍງດູແລໃຫ້ດີທີ່ສຸດ. ຄຳຕອບຕໍ່ບັນຫາດັ່ງກ່າວສາມາດເປັນສິ່ງທີ່ທ້າທາຍເປັນພິເສດສຳລັບ ສປປ ລາວເພາະທຳມະດາແລ້ວຄອບຄົວແມ່ນບ່ອນທີ່ສາມາດແກ້ໄຂໄດ້ທຸກໆບັນຫາ. ກໍລະນີສຶກສາທີ່ໄດ້ລະບຸໄວ້ໃນໂຄງການນີ້ຊີ້ໃຫ້ເຫັນວ່າ ແມ່ຍິງ ມັກຈະກັບໄປຫາສະມາຊິກຄອບຄົວເດີມຂອງຕົນເພື່ອຊ່ວຍແກ້ໄຂບັນຫາຄວາມຮຸນແຮງຢູ່ໃນຄອບຄົວ. ຜູ້ອາວຸໂສຢູ່ໃນຄອບຄົວສ່ວນໃຫຍ່ຈະຮັບຜິດຊອບຊອກຫາ ຊ່ອງທາງເພື່ອສະສາງບັນຫາ. ແນ່ນອນ ບາງຄັ້ງການເຄົາລົບນັບຖືຄອບຄົວ ໂດຍທົ່ວໄປສາມາດພາໃຫ້ແມ່ຍິງຖືເບົາຕໍ່ຄວາມຮຸນແຮງ-ຫຼາຍຄົນຍັງຢ້ານຖືກວິພາກວິຈານວ່າເປັນເມຍ ຫຼື ສະມາຊິກຄອບຄົວທີ່ບໍ່ດີ, ຊົ່ວຊ້າສາມານ.

---

[33] Pickup, F. Williams, S. and C. Sweetman (2001). ການສິ້ນສຸດຄວາມຮຸນແຮງຕໍ່ແມ່ຍິງ: ຄວາມຮູ້ສຶກຂອງຂອງຊຸມຊົນ ຕໍ່ລູກຂອງແມ່ຍິງທີ່ຖືກທຸບຕີ, Thousand Oakes CA: Sage Publications

[34] Peled, I. Jasse, P and J. Edleson (eds) (1995). ການສິ້ນສຸດວົງຈອນຂອງຄວາມຮຸນແຮງ: ຄວາມຮູ້ສຶກຂອງຂອງຊຸມຊົນ ຕໍ່ລູກຂອງແມ່ຍິງທີ່ຖືກທຸບຕີ, Thousand Oaks CA: Sage Publications

[35] Bradley, C. (1994). ເປັນຫຍັງຄວາມຮຸນແຮງຂອງຜູ້ຊາຍຕໍ່ແມ່ຍິງຈຶ່ງແມ່ນບັນຫາການພັດທະນາ: reflections from Papua New Guinea. In M. Davies (ed) ແມ່ຍິງ ແລະ ຄວາມຮຸນແຮງ: ຄວາມເປັນຈິງ ແລະ ຄວາມຮູ້ສຶກຈາກທົ່ວໂລກ, London; Zed books.

ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ ມີພຽງແຕ່ຈຳນວນໜ້ອຍດຽວເທົ່ານັ້ນ ທີ່ຂໍຮ້ອງຄວາມຊ່ວຍເຫຼືອຈາກອຳນາດ ການປົກຄອງບ້ານ. ຂໍ້ມູນທີ່ໄດ້ຈາກການຄົ້ນຄວ້າຫວ່າງມໍ່ໆມານີ້ກ່ຽວກັບ “ການເຂົ້າຮ່ວມຂອງແມ່ຍິງ ໃນຄະນະກຳມະການຕ່າງໆຂອງບ້ານ”, (GRID, 2003) ຊີ້ໃຫ້ເຫັນວ່າ “ຄະນະກຳມະການໄກ່ເກ່ຍ” ຂອງບ້ານຊຶ່ງມີຕົວແທນຂອງສະຫະພັນແມ່ຍິງລາວເຂົ້າຮ່ວມເປັນສະມາຊິກຫຼັກເຊິ່ງໄດ້ມີບົດບາດທີ່ສຳຄັນໃນການແກ້ໄຂບັນຫາກໍລະນີ ຄວາມຮຸນແຮງຢູ່ໃນຄອບຄົວ. ອີງຕາມການສຳຫຼວດອັນດຽວກັນນີ້, ໃນຈຳນວນແມ່ຍິງທີ່ຖືກສຳພາດມີພຽງແຕ່ເຄິ່ງໜຶ່ງ (15 ຄົນ ໃນ ຈຳນວນ 29 ຄົນ) ໄດ້ລາຍງານເຫດການ: ແມ່ຍິງ 11 ຄົນ ລາຍງານໃຫ້ແກ່ອຳນາດການປົກຄອງບ້ານ, 2 ຄົນ ລາຍງານ ໃຫ້ ເຈົ້າໜ້າທີ່ຕຳຫຼວດ, ແລະ 2 ຄົນ ໄດ້ລາຍງານໃຫ້ຂັ້ນສານ. ອັນນີ້ສະແດງໃຫ້ເຫັນເຖິງ ບົດບາດ ອັນສຳຄັນ ແລະຄວາມອາດສາມາດ ຂອງ ອຳນາດ ການ ປົກຄອງບ້ານ.

ວັດທະນະທຳຂອງລາວ ມີຄຳສຸພາສິດກ່າວວ່າ: “ຍິງບໍ່ມີຜົວນີ້ຄືແຫວນທົວເປົ່າ, ພອຍບໍ່ມີຢູ່ຄ້າງເຂົາຊິເອີ້ນວ່າກົ່ວຊືນ”. ອັນນີ້ ສະແດງໃຫ້ເຫັນເຖິງການບັງຄັບໃຫ້ແມ່ຍິງຕ້ອງແຕ່ງງານ ແລະ ສືບຕໍ່ຢູ່ກັບສາມີຕະຫຼອດໄປບໍ່ວ່າສະພາບການຈະເປັນໄປຄືແນວໃດກໍ່ຕາມ. ອັນນີ້ຊ່ວຍອະທິບາຍໃຫ້ເຂົ້າໃຈວ່າເປັນຫຍັງແມ່ຍິງຈຶ່ງສືບຕໍ່ຢູ່ກັບສາມີທີ່ໃຊ້ຄວາມຮຸນແຮງ. ໃນຈຳນວນຜູ້ທີ່ເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງ ຢູ່ ສປປ ລາວ, ຫຼາຍກວ່າເຄິ່ງໜຶ່ງໃຫ້ການວ່າ ພວກເຂົາໜີຈາກເຮືອນໄປ ຍ້ອນພົບກັບຄວາມຮຸນແຮງ, ສ່ວນໃຫຍ່ແມ່ນຍ້ອນວ່າ ພວກເຂົາ ບໍ່ສາມາດທີ່ຈະທົນຢູ່ເຮືອນຕໍ່ໄປໄດ້ອີກ, ແຕ່ວ່າແມ່ຍິງເຫຼົ່ານີ້ ເກືອບທັງໝົດພັດກັບຄືນມາຫາສາມີຂອງຕົນອີກໃນທີ່ສຸດ. ໃນກໍລະນີ ຂອງ ຄວາມຮຸນແຮງຢູ່ໃນຄອບຄົວ, ເມື່ອເວລາແມ່ຍິງໄດ້ຮັບການຊ່ວຍເຫຼືອຈາກຄົນໃນຄອບຄົວ ຫຼື ຈາກຄະນະບ້ານ, ໂດຍທົ່ວໄປແລ້ວ ແມ່ຍິງຈະໄດ້ຮັບຄຳແນະນຳໃຫ້ສືບຕໍ່ ຢູ່ກັບສາມີ, ໃຫ້ປຶກສາຫາລືກັນກັບສາມີກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບຂອງທັງສອງຝ່າຍ ແລະ ພະຍາຍາມປັບປຸງນິໄສໃຈຄໍຂອງທັງສອງຝ່າຍໃຫ້ເຂົ້າຫາກັນ.

## 8. ຂໍ້ສະຫຼຸບ ແລະ ຄໍາແນະນໍາ ຈາກທີມງານຄົ້ນຄວ້າ

ຂໍ້ມູນທີ່ເກັບກໍາໄດ້ຈາກການສຶກສານີ້ ແລະ ຈາກການຄົ້ນຄວ້າອື່ນໆ ຈະເປັນພື້ນຖານອັນແໜ້ນແກ່ນ ໃຫ້ແກ່ບັນດາອົງການຕ່າງໆ ທີ່ມີຄວາມສົນໃຈຢາກພັດທະນາເຄື່ອງມືຂອງຕົນຕື່ມເຊັ່ນ ສະຖິຕິທີ່ແຍກເພດ, ການບັນທຶກ, ການລວບລວມ ແລະ ລາຍງານ ກໍລະນີ ຄວາມຮຸນແຮງຕໍ່ແມ່ຍິງ, ການຍົກລະດັບຈິດສໍານຶກໃຫ້ແກ່ປະຊາຊົນກ່ຽວກັບບັນຫາດັ່ງກ່າວ ແລະ ໃນເວລາດຽວກັນ ກໍ່ຊ່ວຍສະຖາບັນກົດໝາຍໃນການຈັດຕັ້ງປະຕິບັດບັນດາ ກົດໝາຍທີ່ມີຢູ່ແລ້ວ ຢ່າງມີປະສິດທິຜົນ ແລະ ຊ່ວຍລັດຖະບານສ້າງນະໂຍບາຍ ແລະ ກອບວຽກນິຕິກໍາເພີ່ມເຕີມ ເພື່ອແກ້ໄຂບັນຫາດັ່ງກ່າວນີ້ ແລະ ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການທີ່ຈໍາເປັນຂອງແມ່ຍິງກ່ຽວກັບການປົກປ້ອງ ສິດທິຂອງເຂົາເຈົ້າ. ບົດຄົ້ນຄວ້ານີ້ຍັງໃຫ້ພື້ນຖານອັນແໜ້ນແກ່ນສໍາລັບການສຶກສາຄົ້ນຄ້ວາລະອຽດກວ່າເກົ່າໃນພາຍໜ້າ ກ່ຽວກັບຄວາມຮຸນແຮງໃນຄອບຄົວ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ຊຶ່ງອາດຈະລວມເຖິງການສົມທຽບການແຜ່ລາມ ແລະ ສາຍເຫດ ຂອງຄວາມຮຸນແຮງລະຫວ່າງພື້ນທີ່ຊົນນະບົດ ແລະ ຕົວເມືອງ, ແຂວງ ແລະ ຊົນຊາດຊົນເຜົ່າ.

ການສຶກສານີ້ ໄດ້ຢືນຢັນວ່າແມ່ຍິງຖືວ່າຄວາມຮຸນແຮງ ແມ່ນເຫດການທໍາມະດາ ແລະ ຮັບວ່າມັນແມ່ນພາກສ່ວນໜຶ່ງໃນຊີວິດເຂົາເຈົ້າ ແລະ ແມ່ຍິງ ເປັນຜູ້ຮັບເຄາະ. ການສຶກສານີ້ ໄດ້ຊີ້ໃຫ້ເຫັນວ່າຢູ່ໃນ ສປປ ລາວ ຄວາມຮຸນແຮງຢູ່ໃນຄອບຄົວໄດ້ແຜ່ລາມໃນລະດັບສູງ ແລະ ມີຫຼາຍຮູບແບບທີ່ແຕກຕ່າງກັນ. ການສໍາຫຼວດຍັງໄດ້ເນັ້ນໃຫ້ເຫັນວ່າການຕິດເຫຼົ້າເມົາສຸລາ ແມ່ນປັດໃຈທີ່ໜັກກວ່າໝູ່ ຊຶ່ງພາໃຫ້ເກີດມີຄວາມຮຸນແຮງຕໍ່ແມ່ຍິງ. ມັນຍັງສົ່ງຜົນກະທົບກະເທືອນເຖິງບົດບາດຍິງ-ຊາຍ ແລະ ຊ່ອງຫວ່າງທາງດ້ານ ເສດຖະກິດ-ສັງຄົມ ລະຫວ່າງຄູ່ຜົວ-ເມຍ. ເຊັ່ນຕົວຢ່າງລາຍຮັບທີ່ແຕ່ລະຝ່າຍຫາໄດ້, ການສຶກສາ ແລະ ການປະຕິບັດໜ້າທີ່ວຽກເຮືອນການຊານ.

ການແກ້ໄຂບັນຫາຄວາມຮຸນແຮງຢູ່ໃນຄອບຄົວຈະຕ້ອງມີການປູກຈິດສໍານຶກໃຫ້ຮູ້ວ່າ ຄວາມຮຸນແຮງ ບໍ່ແມ່ນພາກສ່ວນໜຶ່ງ ຂອງຊີວິດຄູ່ຜົວ-ເມຍ. ແມ່ຍິງຕ້ອງການໂອກາດໃນການສຶກສາ ແລະ ທາງເລືອກອື່ນທາງດ້ານເສດຖະກິດຫຼາຍກວ່າເກົ່າເພື່ອໃຫ້ເຂົາເຈົ້າມີລາຍຮັບທີ່ໝັ້ນຄົງ, ປະກອບສ່ວນທາງດ້ານລາຍຮັບໃຫ້ແກ່ຄອບຄົວ, ເພື່ອບໍ່ຈໍາເປັນຕ້ອງຂຶ້ນກັບຜູ້ຊາຍ, ແຕ່ຍັງຫາຊ່ອງທາງຊ່ວຍເຫຼືອຕົນເອງໄດ້ໃນກໍລະນີ ທີ່ວ່າມີຄວາມຈໍາເປັນຕ້ອງໄດ້ໜີຈາກກັນລະຫວ່າງຄູ່ຜົວເມຍ. ສິ່ງເສີມໃຫ້ຄອບຄົວ ແລະ ອໍານາດການປົກຄອງທ້ອງຖິ່ນມີບົດບາດຫຼັກໃນການດໍາລົງຊີວິດຂອງຊາວບ້ານ, ຢູ່ໃນອໍານາດການປົກຄອງບ້ານ, ໂດຍສະເພາະແມ່ນນາຍບ້ານ ແລະ ສະຫະພັນແມ່ຍິງບ້ານຈໍາເປັນຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການຊອກຫາຂໍ້ມູນຄວາມຮຸນແຮງຢູ່ໃນຄອບຄົວ ແລະ ການໃຫ້ຄໍາປຶກສາທາງດ້ານວິຊາການ ເພື່ອວ່າພວກເພິ່ນຈະອາດສາມາດ ຊ່ວຍເຫຼືອ ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງໄດ້.

ຕໍ່ລົງໄປນີ້ ແມ່ນ ຄໍາແນະນໍາ ເພື່ອຊ່ວຍແກ້ໄຂບັນຫາ ຄວາມຮຸນແຮງຢູ່ໃນຄອບຄົວ ຢູ່ ສປປ ລາວ:

**ລະດັບທ້ອງຖິ່ນ**

- ⇒ ໃຫ້ນາຍບ້ານ ບັນທຶກໝົດທຸກໆ ກໍລະນີ ຄວາມຮຸນແຮງຢູ່ໃນຄອບຄົວທີ່ໄດ້ຮັບການລາຍງານ ແລະ ປຶກສາຫາລືກັບ ສະຫະພັນແມ່ຍິງໃນແຕ່ລະຂັ້ນ.
- ⇒ ຄະນະກຳມະການປົກຄອງບ້ານ ແລະ ສະຫະພັນແມ່ຍິງບ້ານ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການຊອກຫາຂໍ້ມູນ ຄວາມຮຸນແຮງຢູ່ໃນຄອບຄົວ ແລະ ວິທີການໃຫ້ຄຳປຶກສາຕໍ່ຜູ້ຮ້ອງທຸກ.
- ⇒ ຊຸມຊົນ ຈະຕ້ອງໄດ້ຮັບການຝຶກອົບຮົມ ກ່ຽວກັບ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມເຂົ້າໃຈທາງດ້ານກົດໝາຍທີ່ພົວພັນກັບສິດທິຂອງແມ່ຍິງ ແລະ ສິດທິມະນຸດ.
- ⇒ ສຶກສາອົບຮົມໃຫ້ແກ່ຊຸມຊົນກ່ຽວກັບວິທີການຊ່ວຍເຫຼືອຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ. ການເອົາຊະນະຄວາມຮຸນແຮງຕໍ່ແມ່ຍິງ ເບິ່ງຄືວ່າຈະມີຜົນຍາວນານກວ່າ ເມື່ອເວລາສະມະຊິກຊຸມຊົນມີສ່ວນຮ່ວມໃນການແກ້ໄຂ ແລະ ລົງໂທດຜູ້ທີ່ກະທຳຜິດ.
- ⇒ ວາງກົດລະບຽບ ແລະ ປັບໃໝ ຜູ້ທີ່ດື່ມເຫຼົ້າເມົາສຸລາແລ້ວກະທຳຜິດ
- ⇒ ຕ້ອງຊຸກຍູ້ສົ່ງເສີມແມ່ຍິງຊົນເຜົ່າໃຫ້ຮຽນເວົ້າ, ອ່ານ ແລະ ຂຽນພາສາລາວ, ຕ້ອງຊຸກຍູ້ສົ່ງເສີມໃຫ້ເດັກນ້ອຍຍິງໄດ້ເຂົ້າໂຮງຮຽນ.
- ⇒ ແມ່ຍິງ ຕ້ອງມີໂອກາດໄດ້ເຂົ້າຮ່ວມໃນບັນດາກິດຈະກຳ ການເງິນຈຸລະພາກ ແລະ ການສ້າງລາຍຮັບ ຊຶ່ງເປັນວິທີການເພີ່ມທັກສະຂອງເຂົາເຈົ້າ, ປະກອບສ່ວນເຂົ້າໃນການຫາເງິນມາໃຫ້ຄອບຄົວ ແລະ ມີຊ່ອງທາງຊ່ວຍເຫຼືອ ຕົນເອງ.

<u>**ລະດັບຊາດ**</u>

- ⇒ ສະຫະພັນແມ່ຍິງ ຕ້ອງສ້າງສຳນັກງານໜຶ່ງສຳລັບເປັນທີ່ເພິ່ງໃຫ້ແກ່ແມ່ຍິງທີ່ຖືກຂົ່ມເຫັງ ຫຼື ແມ່ຍິງທີ່ປະເຊີນໜ້າກັບຄວາມຮຸນແຮງຢູ່ໃນຄອບຄົວ ໃຫ້ສາມາດເວົ້າ ແລະ ຂໍຄຳປຶກສາ.
- ⇒ ຄວນຫາທີ່ພັກພາອາໃສຊົ່ວຄາວສຳລັບແມ່ຍິງທີ່ມາຮ້ອງທຸກເພື່ອໃຫ້ເປັນສະຖານທີ່ ທີ່ປອດໄພແລະໃຫ້ຄວາມຊ່ວຍເຫຼືອ, ລວມທັງການປິ່ນປົວ, ການຊ່ວຍເຫຼືອທາງດ້ານຈິດໃຈ ແລະ ທາງດ້ານກົດໝາຍ, ພ້ອມທັງໃຫ້ການຝຶກອົບຮົມ ທາງດ້ານ ວິຊາຊີບ.
- ⇒ ຊ່ວຍເຫຼືອແມ່ຍິງໃຫ້ໄດ້ຮັບການປົກປ້ອງຈາກກົດໝາຍ ແລະ ໄດ້ຮັບຄວາມຍຸຕິທຳ.
- ⇒ ຄົ້ນຄວ້າກ່ຽວກັບສາເຫດ ແລະ ຜົນກະທົບ ຂອງການຕິດເຫຼົ້າເມົາສຸລາ ເພື່ອໃຫ້ເປັນພື້ນຖານໃຫ້ແກ່ການສ້າງກົດໝາຍ ແລະ ຂໍ້ກຳນົດກົດລະບຽບກ່ຽວກັບການຕິດເຫຼົ້າເມົາສຸລາ.

## 9. ໃບຊ້ອນທ້າຍ 1- ແບບຟອມສຳພາດ

# ແບບສອບຖາມ ຄວາມອົບອຸ່ນພາຍໃນຄອບຄົວ ຂອງຍິງ - ຊາຍ

<u>ພາກແນະນຳຕົນເອງຂອງຜູ້ສະພາດ</u>

ສະບາຍດີ ຂ້າພະເຈົ້າຊື່ ..............................ມາຈາກ ກຸ່ມພັດທະນາ ບົດບາດ ຍິງ-ຊາຍ ໃນປະຈຸບັນນີ້ ພວກເຮົາກຳລັງສຳຫຼວດຂໍ້ມູນເລື່ອງ ຄວາມອົບອຸ່ນພາຍໃນຄອບຄົວຂອງຍິງ-ຊາຍ ທີ່ອາໃສຢູ່ໃນ ແຂວງ ສະວັນນະເຂດ, ຫຼວງພະບາງ ແລະບໍ່ແກ້ວ.
ທ່ານເປັນຜູ້ໜຶ່ງທີ່ຖືກຈັບສະຫຼາກເລືອກໃຫ້ເປັນຜູ້ໃຫ້ຂໍ້ມູນໃນການສຳຫຼວດຄັ້ງນີ້.

ຂ້າພະເຈົ້າຂໍຢືນຢັນໃຫ້ທ່ານແນ່ໃຈວ່າຄຳຕອບທັງໝົດທີ່ທ່ານໃຫ້ຂໍ້ມູນຄັ້ງນີ້ເຮົາຈະເກັບເປັນຄວາມລັບຢ່າງເຄັ່ງຄັດ ຂ້າພະເຈົ້າຈະບໍ່ບັນທຶກຊື່ ແລະ ທີ່ຢູ່ຂອງທ່ານແຕ່ຢ່າງໃດ ທ່ານມີສິດ ທີ່ຈະຢຸດໃຫ້ການສຳພາດໄດ້ຕະຫຼອດເວລາ ຫຼື ເລືອກບໍ່ຂໍຕອບຄຳຖາມບາງຂໍ້ທີ່ທ່ານບໍ່ຕ້ອງການຕອບ ແບບສອບຖາມນີ້ ບໍ່ມີຄຳຕອບວ່າ ຂໍ້ໃດ ຖືກຫຼືຜິດ

ການໃຫ້ຄວາມຮ່ວມມືໃນການຕອບແບບສອບຖາມຄັ້ງນີ້ຂື້ນຢູ່ກັບຄວາມສະໝັກໃຈຂອງທ່ານເອງ ເຖິງຢ່າງໃດກໍ່ຕາມຄຳຕອບຈາກປະສົບການຂອງທ່ານ ແມ່ນຈະເປັນປະໂຫຍດຢ່າງໃຫ່ຍຫຼວງຕໍ່ກັບຄົນອື່ນທີ່ປະສົບກັບບັນຫານີ້ ໃນປະເທດຂອງພວກເຮົາຫຼາຍ.

ທ່ານມີຂໍ້ສົງໃສໃດທີ່ຕ້ອງການຖາມ ຫຼືບໍ່?.

(ການສຳພາດທັງໝົດຈະໃຊ້ເວລາປະມານ 1 ຊົ່ວໂມງ) ທ່ານຍິນດີທີ່ຈະໃຫ້ສຳພາດຫຼືບໍ່?

ບັນທຶກ ວ່າໃຫ້ສຳພາດຫຼືບໍ່

( ບໍ່ໃຫ້ສຳພາດ ກ່າວຄຳ ຂອບໃຈທີ່ທ່ານກະລຸນາສະຫຼະເວລາ (ຈົບການສຳພາດ).

( ອະນຸຍາດໃຫ້ສຳພາດ )

ທ່ານສະດວກທີ່ຈະໃຫ້ສຳພາດເວລານີ້ເລີຍບໍ່?ຫຼືທ່ານສະດວກຕອນໃດ?

**ໝາຍເຫດ** ຖ້າຜູ້ໃຫ້ສຳພາດຫາກຮ້ອງຂໍຄວາມຊ່ວຍເຫຼືອ ໃຫ້ທ່ານເອົາເບີຂອງສະຫະພັນແມ່ຍິງ ທີ່ໃຫ້ຄຳປຶກສາກ່ຽວກັບແມ່ຍິງ (Tel: 241916) ໃຫ້ເຂົາເຈົ້າ ແຕ່ຈະໃຫ້ສະເພາະ ເບີໂທເທົ່ານັ້ນ ບໍ່ໃຫ້ຂຽນວ່າແມ່ນເບີໂທຫຍັງ.

ຜູ້ສຳພາດ ------------------------
ຊົນເຜົ່າຂອງຜູ້ໃຫ້ສຳພາດ-----------
ບ້ານ -----------------------------
ວັນທີສຳພາດ ---------------------
ສຳພາດຜົວ ( ) ສຳພາດເມຍ ( )

## ພາກທີ່ 1 ຂໍ້ມູນພື້ນຖານ

| ລ/ດ | ຄຳຖາມ | ຕົວເລືອກ | ບັນທຶກຂອງຜູ້ສຳພາດ |
|---|---|---|---|
| 1 | ດຽວນີ້ ເຈົ້າອາຍຸເທົ່າໃດແລ້ວ? | | |
| 2 | ເຈົ້າຈົບການສຶກສາໃນລະດັບໃດ?<br>( ລະບຸຊັ້ນລະອຽດ ເຊັ່ນ:<br>ປະຖົມ ປໍ 1, ປໍ 2, ປໍ 3, ປໍ 4, ປໍ 5<br>ຈົບຫ້ອງໃດ ? ) | 1 ປະຖົມ<br>2 ມັດທະຍົມຕົ້ນ<br>3 ມັດທະຍົມປາຍ<br>4 ວິທະຍາໄລ/ມະຫາວິທະ ຍາໄລ<br>5 ບໍ່ເຄີຍເຂົ້າໂຮງຮຽນເລີຍ | |
| 3 | ເຈົ້າແຕ່ງງານ ຕອນເຈົ້າອາຍຸເທົ່າໃດ? | | |
| 4 | ວຽກຫຼັກໆຂອງເຈົ້າແມ່ນຫຍັງ? | 1 ຊາວນາ<br>2 ຄ້າຂາຍນ້ອຍ<br>3 ອາຈານ<br>4 ພະນັກງານລັດ<br>5 ພະນັກງານເອກະຊົນ<br>6 ອື່ນໆ ( ລະບຸ ລະອຽດ ) | |
| 5 | ໃນຄອບຄົວຂອງເຈົ້າມີໃຜແດ່ທີ່ຢູ່ກັບເຈົ້າ? | 1 ຄອບຄົວຂອງຜົວ<br>2 ຄອບຄົວຂອງເມຍ<br>3 ບໍ່ມີ<br>4 ອື່ນໆ( ລະບຸ ລະອຽດ ) | |
| 6 | ເຈົ້າມີລູກຈັກຄົນ? | | |
| 7 | ແມ່ນໃຜເປັນຜູ້ຫາເງິນມາລ້ຽງຄອບຄົວ? | 1 ຜົວ<br>2 ເມຍ<br>3 ຜົວ-ເມຍ<br>4 ຜູ້ອື່ນໆ ( ລະບຸ ລະອຽດ ) | |
| 8 | ແມ່ນໃຜເປັນຜູ້ສ້າງລາຍໄດ້ມາສູ່ຄອບຄົວ<br>ຫຼາຍກວ່າກັນລະຫວ່າງ<br>ຜົວ /ເມຍ /ຜູ້ອື່ນໆໃນຄອບຄົວ? | 1 ຜົວ<br>2 ເມຍ<br>3 ຜົວ-ເມຍ<br>4 ຜູ້ອື່ນໆ ( ລະບຸ ລະອຽດ ) | |

## ພາກທີ່ 2 ການຕັດສິນໃຈພາຍໃນຄອບຄົວ

| | | | |
|---|---|---|---|
| 1 | ເຈົ້າໄດ້ມີສ່ວນຮ່ວມໃນການຕັດສິນໃຈຢູ່ໃນຄອບຄົວບໍ?<br>ຖ້າຕອບວ່າ: ມີ ຖາມຕໍ່ຂໍ້ ທີ່ 2<br>ຖ້າຕອບວ່າ: ບໍ່ມີ ຖາມຕໍ່ຂໍ້ທີ່ 4 | 1 ມີ<br>2 ບໍ່ມີ | |
| 2 | (ຖ້າມີ) ເຈົ້າໄດ້<br>ມີສ່ວນຮ່ວມໃນການຕັດສິນໃຈ | 1ສິ່ງຂອງທີ່ຈຳເປັນຕ່າງໆສຳລັບຄອບຄົວ<br>2 ການສຶກສາຂອງລູກ<br>3 ການແຕ່ງງານຂອງລູກ | |

| | | | |
|---|---|---|---|
| | ກ່ຽວກັບຫຍັງແດ່?<br>( ຕອບໄດ້ຫຼາຍກວ່າ 1 ຄຳຕອບ ) | 4 ການຊື້ແລະຂາຍຊັບສິນ<br>5 ບັນຫາຂອງການເຮັດວຽກ<br>6 ການຜິດຖຽງກັບເພື່ອນບ້ານ<br>7 ລາຍຈ່າຍທີ່ສຳຄັນ<br>8 ທັງໝົດ ( ແຕ່ຂໍ້ 1-7 )<br>10 ອື່ນໆ ( ລະບຸ ລະອຽດ ) | |
| 3 | ມີຫຍັງແດ່ ທີ່ຂຶ້ນກັບການ<br>ຕັດສິນໃຈຂອງເຈົ້າພຽງຜູ້ດຽວ?<br>( ຕອບໄດ້ຫຼາຍກວ່າ 1 ຄຳຕອບ ) | 1ສິ່ງຂອງທີ່ຈຳເປັນຕ່າງໆສຳລັບຄອບຄົວ<br>2 ການສຶກສາຂອງລູກ<br>3 ການແຕ່ງງານຂອງລູກ<br>4 ການຊື້ແລະຂາຍຊັບສິນ<br>5 ບັນຫາຂອງການເຮັດວຽກ<br>6 ການຜິດຖຽງກັບເພື່ອນບ້ານ<br>7 ລາຍຈ່າຍທີ່ສຳຄັນ<br>8 ທັງໝົດ ( ແຕ່ຂໍ້ 1-7 )<br>10 ອື່ນໆ ( ລະບຸ ລະອຽດ ) | |
| 4 | (ຖ້າບໍ່ມີ) ແມ່ນໃຜ/ຍາດພີ່ນ້ອງ ຝ່າຍ<br>ໃດ (ຜົວຫຼືເມຍ)ເປັນຜູ້ທີ່ມາຊ່ວຍ<br>ຕັດສິນໃຈຢູ່ໃນຄອບຄົວ?<br>( ຕອບໄດ້ 1 ຄຳຕອບ ) | 1 ປູ່ທວດ/ຍ່າທວດ<br>2 ປູ່ ຍ່າ<br>3 ພໍ່ເຖົ້າ ແມ່ເຖົ້າ<br>4 ຄູ່ຜົວເມຍ<br>5 ພີ່ນ້ອງຂອງຜົວ<br>6 ພີ່ນ້ອງຂອງເມຍ | |
| 5 | ເຈົ້າຄິດວ່າ ແມ່ຍິງຄວນຈະມີສິດ<br>ໃນການຕັດສິນໃຈໃນຄອບຄົວຫຼາຍ<br>ກວ່າທີ່ເປັນຢູ່ໃນປະຈຸບັນນີ້ ບໍ? | 1 ແມ່ນແລ້ວ<br>2 ບໍ່ແມ່ນ | |
| 6 | ຖ້າແມ່ນ ເປັນຫຍັງເຈົ້າຈິ່ງ<br>ຄິດແບບນັ້ນ? | 1 ແມ່ຍິງກໍ່ມີຄວາມສຳຄັນໃນຄອບຄົວ<br>2 ແມ່ຍິງສາມາດຕັດສິນໃຈໄດ້<br>ດີຄືກັນກັບຜູ້ຊາຍ<br>3 ແມ່ຍິງໄດ້ເລີ່ມອອກໄປເຮັດວຽກ<br>ນອກບ້ານ /ນອກເຮືອນ<br>4 ອື່ນໆ ( ລະບຸ ລະອຽດ ) | |
| 7 | ຄອບຄົວຂອງເຈົ້າ ເຄີຍມີບັນຫາ<br>ຍ້ອນ/ເພາະເລື່ອງຂອງການຕັດສິນ<br>ໃຈບໍ? ຖ້າຕອບວ່າເຄີຍ ຖາມຕໍ່ຂໍ້ທີ 8<br>ຖ້າຕອບວ່າບໍ່ເຄີຍ ຖາມຕໍ່ຂໍ້ທີ 9 | 1 ເຄີຍ<br>2 ບໍ່ເຄີຍ | |
| 8 | ຖ້າເຄີຍ ປົກກະຕິແລ້ວ ແມ່ນຫຍັງ<br>ເປັນສາເຫດຂອງບັນຫາ(ການຕັດສິນ<br>ໃຈ) | 1 ບັນຫາຄອບຄົວ<br>2 ການເພີ່ມຂຶ້ນຂອງວຽກເຮືອນ<br>3 ບັນຫາເສດຖະກິດ<br>4 ວຽກງານ | |

| | | | |
|---|---|---|---|
| | ໃນຄອບຄົວຂອງເຈົ້າ?<br>( ຕອບໄດ້ຫຼາຍກວ່າ 1 ຄຳຕອບ ) | 5 ການສຶກສາຂອງລູກ<br>6 ສຸຂະພາບຂອງລູກ<br>7 ລູກ<br>8 ບັນຫາເມຍນ້ອຍ<br>10 ການຫຼັບນອນນຳກັນຂອງຄູ່ຜົວເມຍ<br>11 ການມີນປະມາດ<br>12 ອື່ນໆ ( ລະບຸ ລະອຽດ ) | |
| 9 | ເຈົ້າເຄີຍຍ້ານຜົວ/ເມຍຮ້າຍ,ຕີເຈົ້າ ຖ້າເຈົ້າບໍ່ເຫັນດີໃນເລື່ອງໃດໜຶ່ງ ຢູ່ໃນຄອບຄົວ? | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຈື | |
| 10 | ເຈົ້າຈະເຮັດແນວໃດ/ຕັດສິນໃຈ ແນວໃດ?<br>ຖ້າຜົວ/ເມຍຂອງເຈົ້າຕີເຈົ້າ? | 1 ບໍ່ມີຫຍັງ<br>2 ບອກລາວວ່າບໍ່ຕ້ອງເຮັດແບບນີ້ອີກ<br>3 ຂໍຄວາມຊ່ວຍເຫຼືອຈາກຜູ້ອື່ນ<br>4 ໄປຈາກລາວ<br>5 ຕີລາວຄືນ<br>6 ອື່ນໆ ( ລະບຸ ລະອຽດ )<br>7 ບໍ່ຮູ້ | |
| 11 | ເຈົ້າເຄີຍຕີເມຍ/ຜົວຂອງເຈົ້າບໍ?<br>ຖ້າລາວບໍ່ເຫັນດີກັບເຈົ້າ | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຈື | |

## ພາກທີ່ 3 ສຸຂະພາບຈະເລີນພັນ

| | | | |
|---|---|---|---|
| 1 | ເຈົ້າເຄີຍໃຊ້ວິທີການໃດໜຶ່ງເພື່ອ ບໍ່ໃຫ້ຖືພາແດ່ ຫຼື ບໍ່ ?<br>ຖ້າຕອບວ່າ: ເຄີຍ ຖາມຕໍ່ຂໍ້ 2<br>ຖ້າຕອບວ່າ: ບໍ່ເຄີຍ ຖາມຕໍ່ພາກທີ 4 | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຕອບ | |
| 2 | ເຄີຍໃຊ້ວິທີການໃດແດ່?<br>(ຕອບໄດ້ 1 ຄຳຕອບ) | ຢາເມັດຄຸມກຳເນີດ ......................1<br>ຢາສັກຄຸມກຳເນີດ.........................2<br>ຟັງຢາຄຸມກຳເນີດ.........................3<br>ໃສ່ຫ່ວງ.....................................4<br>ໂຟມ/ເຢັຍລີ່/ ໝວກຄອບມົດລູກ .....5<br>ນັບວັນປອດໄພ/ເບິ່ງມູກຂາວ..........6<br>ເຮັດໝັນຍິງ.................................7<br>ຖົງຢາງອານາໄມ..........................8<br>ເຮັດໝັນຊາຍ.............................10<br>ຫຼັ່ງພາຍນອກ.............................11<br>ໃຊ້ຢາພື້ນເມືອງ..........................12 | |

| | | | |
|---|---|---|---|
| | | ອື່ນໆ (ລະບຸ ລະອຽດ )................13 | |
| 3 | ຫຼັງຈາກທີ່ໃຊ້ວິທີການໃດໜຶ່ງເພື່ອບໍ່ໃຫ້ຖືພາແລ້ວ ຜົວ/ເມຍຂອງເຈົ້າເຄີຍຕ້ອງການທີ່ຈະຢຸດໃຊ້ຫຼືບໍ?<br>**ຖ້າຕອບວ່າເຄີຍ ຖາມຕໍ່ຂໍ້ທີ່ 4**<br>**ຖ້າຕອບວ່າບໍ່ເຄີຍ ຖາມຕໍ່ ພາກທີ່ 4** | 1 ເຄີຍ<br>2 ບໍ່ເຄີຍ | |
| 5 | ເປັນຍ້ອນຫຍັງ ຫຼື ຍ້ອນສາເຫດຫຍັງຈິ່ງຢຸດໃຊ້ ? | 1 ຢາກມີລູກ<br>2 ບໍ່ເປັນທຳມະຊາດ<br>3 ອື່ນໆ ລະບຸລະອຽດ | |

## ພາກທີ່ 4 ລູກ

| | | | |
|---|---|---|---|
| 1 | ລູກກົກຂອງເຈົ້າ, ເຈົ້າເຄີຍຄິດຢາກມີລູກຍິງຫຼືລູກຊາຍກ່ອນ? | 1 ລູກຊາຍ<br>2 ລູກສາວ<br>3 ລູກສາວຫຼືລູກຊາຍກໍ່ໄດ້ | |
| 2 | ເມື່ອບໍ່ໄດ້ຕາມຄວາມຕ້ອງການ ຜົວ/ເມຍຂອງເຈົ້າຮູ້ສຶກ ແລະ ປະຕິບັດຕົນແນວໃດ? | 1 ໃຈຮ້າຍ<br>2 ບໍ່ເປັນຫຍັງ | |
| 3 | ລູກຂອງເຈົ້າມີຍິງຈັກຄົນຊາຍຈັກຄົນທີ່ກຳລັງເຂົ້າໂຮງຮຽນໃນປະຈຸບັນນີ້? | 1 ຍິງ ຄົນ<br>2 ຊາຍ ຄົນ<br>3 ບໍ່ໄດ້ເຂົ້າເລີຍ | |
| 4 | ລູກຂອງເຈົ້າເຄີຍອອກໂຮງຮຽນບໍ?<br>ຖ້າເຄີຍ ຖາມຕໍ່ຂໍ້ທີ 5<br>ຖ້າບໍ່ເຄີຍ ຖາມຕໍ່ພາກທີ 5 | 1 ເຄີຍ<br>2 ບໍ່ເຄີຍ<br><br>ຖ້າເຄີຍອອກ<br>1 ຊາຍ ຄົນ<br>2 ຍິງ ຄົນ | |
| 5 | ຍ້ອນຫຍັງ/ເປັນຫຍັງ ລູກຂອງເຈົ້າຈິ່ງອອກໂຮງຮຽນ?<br>( ຕອບໄດ້ 1 ຄຳຕອບ ) | 1 ສະພາບເສດຖະກິດຂອງຄອບຄົວ<br>2 ໂຮງຮຽນຢູ່ໄກ<br>3 ບໍ່ມີໂຮງຮຽນ<br>4 ລູກບໍ່ຢາກຮຽນ | |
| 6 | ຖ້າກໍລະນີ ທີ່ມີແຕ່ລູກຊາຍທີ່ຍັງເຂົ້າໂຮງຮຽນ ໃຫ້ຖາມຕໍ່ວ່າ:ເປັນ | 1 ແມ່ຍິງ ບໍ່ຈຳເປັນຕ້ອງຮຽນຫຼາຍ<br>2 ສະພາບຂອງເສດຖະກິດ<br>3 ເພື່ອຊ່ວຍລ້ຽງຄອບຄົວ | |

| | | | |
|---|---|---|---|
| | ຫຍັງ ຈິ່ງມີແຕ່ລູກຊາຍໄດ້ເຂົ້າໂຮງຮຽນ ແລ້ວເປັນຫຍັງລູກສາວຈິ່ງບໍ່ໄດ້ເຂົ້າ ?**(ຕອບໄດ້ 1 ຄຳຕອບ)** | 4 ອື່ນໆ ( ລະບຸ ລະອຽດ ) | |

## ພາກທີ່ 5 ຄູ່ຜົວ/ເມຍ

| | | | |
|---|---|---|---|
| 1 | ຜົວ/ເມຍຂອງເຈົ້າດຽວນີ້ອາຍຸເທົ່າໃດແລ້ວ? | | |
| 2 | ຜົວ/ເມຍຂອງເຈົ້າເຄີຍເຂົ້າໂຮງຮຽນບໍ່?<br>( ຖ້າຕອບວ່າບໍ່ເຄີຍ ຖາມຕໍ່ຂໍ້ທີ່ 4 ) | 1 ເຄີຍ<br>2 ບໍ່ເຄີຍ | |
| 3 | ຜົວ/ເມຍຂອງເຈົ້າຈົບການສຶກສາສູງສຸດລະດັບໃດ? ( ລະບຸລະອຽດວ່າຈົບຫ້ອງໃດ ? ) | 1 ປະຖົມ<br>2 ມັດທະຍົມຕົ້ນ<br>3 ມັດທະຍົມປາຍ<br>4 ວິທະຍາໄລ/ມະຫາວິທະຍາໄລ | |
| 5 | ວຽກປະເພດໃດທີ່ລາວເຮັດໃນປະຈຸບັນ? | 1 ຊາວນາ 4 ພະນັກງານລັດ<br>2 ຄ້າຂາຍນ້ອຍ 5 ພະນັກງານເອກະຊົນ<br>3 ອາຈານ 6 ອື່ນໆ(ລະບຸ ລະອຽດ ) | |
| 6 | ຜົວ/ເມຍຂອງເຈົ້າດື່ມເຫຼົ້າເລື່ອຍໆບໍ? (ດື່ມຈົນເມົາ) | 1 ທຸກມື້<br>2 2-3 ຄັ້ງຕໍ່ອາທິດ<br>3 1-3ຄັ້ງຕໍ່ເດືອນ<br>4 1 ຄັ້ງຕໍ່ເດືອນ<br>5 ບາງໂອກາດທີ່ສຳຄັນ<br>6 ບໍ່ເຄີຍ | |
| 7 | ໃນໄລຍະ 1ປີ ຜ່ານມາ<br>ເຈົ້າພົບເຫັນວ່າ ຜົວ/ເມຍຂອງເຈົ້າເມົາເລື້ອຍປານໃດ? | 1 ເກືອບທຸກມື້ .<br>2 ທຸກອາທິດ<br>3 ເດືອນລະເທື່ອ<br>4 ໜ້ອຍກ່ວາກວ່າເດືອນລະເທື່ອ.<br>5 ບາງໂອກາດທີ່ສຳຄັນ<br>6 ບໍ່ເຄີຍເມົາເລີຍ | |
| 8 | ໃນໄລຍະ1 ປີທີ່ຜ່ານມາ ເມື່ອຜົວ/ເມຍ ຂອງເຈົ້າດື່ມເຫຼົ້າ ແລ້ວເຮັດໃຫ້ເກີດບັນຫາຕໍ່ໄປນີ້ ຫຼື ບໍ່? | 1 ເຄີຍ<br>2 ບໍ່ເຄີຍ | |

| | | | |
|---|---|---|---|
| 9 | ຜົວ/ເມຍຂອງເຈົ້າເຄີຍມີການຜິດຖຽງ ຈົນເຖິງຂັ້ນຕີບຕີກັບຄົນອື່ນໆ ຫຼື ບໍ່?<br>ຖ້າຕອບວ່າ ເຄີຍ ຖາມຕໍ່ຂໍ້ທີ່ 10<br>ຖ້າຕອບວ່າບໍ່ເຄີຍ ຫຼືບໍ່ຮູ້ ຖາມຕໍ່ຂໍ້ທີ່ 11 | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຮູ້ | |
| 10 | (ຖ້າເຄີຍ) ເກີດຂຶ້ນເລື້ອຍ/ຖີ່ປານໃດ | 1. 1-2ເທື່ອ<br>2. 3-5 ເທື່ອ<br>3. ຫຼາຍໆເທື່ອ(ຫຼາຍກວ່າ5ເທື່ອ)<br>4. ບາງໂອກາດ ,<br>5. ບໍ່ຮູ້ | |
| 11 | ຜົວ/ເມຍຂອງເຈົ້າເຄີຍຮ່ວມຫຼັບນອນນຳຄົນອື່ນ ຫຼື ບໍ່?<br>ຖ້າຕອບວ່າ: ເຄີຍ ຖາມຕໍ່ຂໍ້ 12<br>ຖ້າຕອບວ່າ: ບໍ່ເຄີຍ ຫຼືບໍ່ຮູ້<br>ຖາມຕໍ່ຂໍ້ ພາກທີ່ 6 | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຮູ້ | |
| 12 | ຜົວ/ເມຍຂອງ ເຈົ້າເຄີຍມີລູກກັບຄົນອື່ນໃນຂະນະທີ່ເຈົ້າຍັງເປັນຜົວ/ເມຍກັນຢູ່ ຫຼື ບໍ່?<br>( ຖ້າເຄີຍ ເຈົ້າເຮັດແນວໃດ ຕໍ່ກັບບັນຫານີ້?) | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຮູ້ | |

## ພາກທີ່ 6 ທັດສະນະຄະຕິຕໍ່ກັບບົດບາດຍິງ-ຊາຍ

| | | | |
|---|---|---|---|
| 1 | ເມຍທີ່ດີ ຕ້ອງ ເຊື່ອຟັງຜົວທຸກໆເລື່ອງ ເຖິງແມ່ນວ່າ ຕົນເອງຈະບໍ່ເຫັນດີກໍ່ຕາມ! | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ | |
| 2 | ບັນຫາຄອບຄົວຄວນປຶກສາກັນສະເພາະຄົນໃນຄອບຄົວເທົ່ານັ້ນ ! | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ | |
| 3 | ຜູ້ຊາຍຄວນຈະສະແດງຄວາມເປັນຜູ້ນຳໃນເຮືອນໃຫ້ເມຍໄດ້ຮູ້ ! | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ) | |

| | | | |
|---|---|---|---|
| | | 3 ບໍ່ແນ່ໃຈ | |
| 4 | ແມ່ຍິງມີສິດເລືອກພົບເພື່ອນ ເຖິງວ່າເພື່ອນຄົນນັ້ນຈະເປັນບຸກຄົນທີ່ຜົວບໍ່ເຫັນດີກໍ່ຕາມ ! | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ | |
| 5 | ເປັນໜ້າທີ່ຂອງເມຍ ທີ່ຈະຕ້ອງຕອບສະໜອງທາງເພດໃຫ້ແກ່ຜົວເຖິງວ່າຈະບໍ່ໄດ້ຕ້ອງການກໍ່ຕາມ ! | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ | |
| 6 | ຖ້າຜົວປະຕິບັດ/ເຮັດບໍ່ດີຕໍ່ເມຍ, ຄົນນອກຄອບຄົວຄວນມາກ່ຽວຂ້ອງ ! | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ | |
| 7 | ໃນຄວາມຄິດເຫັນຂອງເຈົ້າຜົວມີເຫດຜົນພຽງພໍທີ່ຈະ**ທຸບຕີ** ເມຍໄດ້ໃນກໍ່ລະນີຕໍ່ໄປນີ້.<br>ກ ເມຍເຮັດວຽກເຮືອນບໍ່ຄົບຖ້ວນ/ບໍ່ເປັນທີ່ພໍໃຈຂອງຜົວ<br>ຂ ເມຍບໍ່ເຊື່ອຟັງຜົວ<br>ຄ ເມຍປະຕິເສດບໍ່ນອນນຳຜົວ<br>ງ ເມຍຖາມຜົວວ່າ ມີຍິງອື່ນອີກຫຼືບໍ່<br>ຈ ຜົວສົງໃສວ່າເມຍນອກໃຈ<br>ສ ຜົວພົບວ່າເມຍນອກໃຈໄປມີຜູ້ຊາຍຄົນອື່ນ | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ<br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ<br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ<br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ<br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ<br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ແນ່ໃຈ | |

| | | | |
|---|---|---|---|
| 8 | ໃນຄວາມຄິດຂອງທ່ານ ຜູ້ຍິງທີ່ແຕ່ງງານ ແລ້ວຈະ**<u>ປະຕິເສດ</u>**ບໍ່ນອນ ກັບຜົວໄດ້ຫຼືບໍ່ ໃນກໍລະນີຕໍ່ໄປນີ້.<br>ກ ຖ້າເມຍບໍ່ຕ້ອງການມີເພດ ສຳພັນ/ ນອນນຳຜົວ<br><br>ຂ ຖ້າຜົວເມົາເຫຼົ້າ<br><br>ຄ ຖ້າເມຍບໍ່ສະບາຍ/ເຈັບປ່ວຍ<br><br>ງ ຖ້າຜົວເຮັດບໍ່ດີຕໍ່ເມຍ | 1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ຮູ້<br><br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ຮູ້<br><br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ຮູ້<br><br>1 ເຫັນດີ<br>2 ບໍ່ເຫັນດີ ( ເຫັນດີບາງເລື່ອງ)<br>3 ບໍ່ຮູ້ | |

## ພາກທີ່ 7 ສາຍສຳພັນລະຫວ່າງຜົວເມຍ

| | | | |
|---|---|---|---|
| 1 | ຕາມແນວຄິດຂອງເຈົ້າ ຄວາມຮຸນແຮງແມ່ນຫຍັງ?<br>**( ຕອບໄດ້ຫຼາຍກວ່າ 1 ຄຳຕອບ )** | 1 ຮ້າຍ,ດ່າ, ປ້ອຍ 4 ບໍ່ຮູ້<br>2 ໃຊ້ແສງຕາຂົ່ມຂູ່<br>3 ຕີບຕີ 6 ອື່ນໆລະບຸລະອຽດ | |
| 2 | ຖ້າເມຍບໍ່ຕ້ອງການນອນນຳຜົວ ແຕ່ ຜົວບັງຄັບ ນັ້ນແມ່ນຄວາມຮຸນ ແຮງບໍ? | 1 ແມ່ນ<br>2 ບໍ່ແມ່ນ | |
| 3 | ເຈົ້າກັບ ຜົວ/ເມຍຂອງເຈົ້າ ຜິດຖຽງກັນເລື້ອຍໆບໍ? | 1 ບໍ່ເຄີຍ ( 0% )<br>2 ໜ້ອຍທີ່ສຸດ ( 20 % )<br>3 ບາງຄັ້ງ ( 50% )<br>4 ເລື້ອຍໆ ( 100 % ) | |
| 4 | ຜົວ/ເມຍຂອງທ່ານ ເຄີຍເຮັດສິ່ງຕໍ່ໄປນີ້ | **ເຈົ້າເຄີຍຖືກ** | **ເຈົ້າເຄີຍເຮັດ** |

| | | | |
|---|---|---|---|
| | ກັບທ່ານຫຼື ບໍ່:<br>1 ເວົ້າໃສ່/ເວົ້າສຽດສີ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 2 ໃຊ້ແສງຕາຂົ່ມຂູ່ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 3 ຂູ່ວ່າຈະມີຄົນອື່ນ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 4 ຂູ່ວ່າຈະບໍ່ລ້ຽງດູທ່ານ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| 5 | ເຈົ້າເຄີຍຕີຜົວ/ເມຍຂອງເຈົ້າບໍ? | 1 ເຄີຍ<br>2 ບໍ່ເຄີຍ | |
| 6 | ຜົວ/ເມຍຂອງເຈົ້າ ເຄີຍຕີເຈົ້າບໍ? | 1 ເຄີຍ<br>2 ບໍ່ເຄີຍ | |
| 7 | ເພື່ອນບ້ານໄດ້ຍິນແລະຮູ້ບັນຫາ ຂອງຄອບຄົວເຈົ້າບໍ? | 1 ຮູ້ 3 ບໍ່ແນ່ໃຈ<br>2 ບໍ່ຮູ້ | |
| 8 | ຖ້າຮູ້ເຂົາເຈົ້າ ໄດ້ຊ່ວຍຫຍັງ ເຈົ້າແດ່ບໍ? | 1 ຊ່ວຍໃຫ້ດີຂື້ນ<br>2 ຊ່ວຍ ແຕ່ບໍ່ມີຫຍັງດີຂື້ນ<br>3 ບໍ່ໄດ້ຊ່ວຍຫຍັງ | |
| 9 | ເຈົ້າເຄີຍພົບກັບຄວາມຮຸນແຮງ ຢູ່ນອກບ້ານຫຼືນອກເຮືອນບໍ? | 1 ເຄີຍ<br>2 ບໍ່ເຄີຍ | |
| 10<br>ສໍາລັບ<br>ແມ່ຍິງ<br>ເທົ່ານັ້ນ | ເຈົ້າຄິດແນວໃດ ຖ້າຜົວຂອງເຈົ້າ ເວົ້າວ່າ:<br>1 ບໍ່ໃຫ້ພົບປະກັບໝູ່ເພື່ອນ | 1 ຕອບໂຕ້ ( ໃຈຮ້າຍ )<br>2 ບໍ່ເປັນຫຍັງ | |
| | 2 ບໍ່ໃຫ້ເຈົ້າຕິດຕໍ່ກັບຄອບຄົວ ຂອງພໍ່ແມ່ຂອງເຈົ້າ | 1 ຕອບໂຕ້ ( ໃຈຮ້າຍ )<br>2 ບໍ່ເປັນຫຍັງ | |
| | 3 ລາວຕ້ອງການໃຫ້ເຈົ້າ ຂໍອານຸຍາດຈາກລາວ ທຸກໆຄັ້ງກ່ອນເຈົ້າຈະອອກໄປໃສ ? | 1 ຕອບໂຕ້ ( ໃຈຮ້າຍ )<br>2 ບໍ່ເປັນຫຍັງ | |
| | 4 ບໍ່ເອົາໃຈໃສ່ແລະບໍ່ລ້ຽງດູເຈົ້າ | 1 ຕອບໂຕ້ ( ໃຈຮ້າຍ )<br>2 ບໍ່ເປັນຫຍັງ | |
| | 5 ລາວຈະຮ້າຍເມື່ອເຈົ້າເວົ້າກັບ | 1 ຕອບໂຕ້ ( ໃຈຮ້າຍ ) | |

| | | | |
|---|---|---|---|
| | ຜູ້ຊາຍຄົນອື່ນ<br><br>6 ລາວສົງໃສວ່າເຈົ້າບໍ່ຊື່ສັດ ຢູ່ເລື້ອຍ ໆ | 2 ບໍ່ເປັນຫຍັງ<br><br>1 ຕອບໂຕ້ ( ໃຈຮ້າຍ )<br>2 ບໍ່ມີຫຍັງ | |
| 11 | ຜົວ/ເມຍຂອງເຈົ້າເຄີຍ: | **ເຈົ້າເຄີຍຖືກ** | **ເຈົ້າເຄີຍເຮັດ** |
| | 1 ຕົບໜ້າຫຼືໂຍນສິ່ງຂອງທີ່ອາດຈະເຮັດໃຫ້ເຈົ້າໄດ້ຮັບບາດເຈັບ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 2 ຍູ້ ຫຼື ກະແທກເຈົ້າ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 3 ຕີເຈົ້າດ້ວຍມືຫຼື ຕີດ້ວຍ ສິ່ງຂອງ ອື່ນໆ ທີ່ອາດເຮັດໃຫ້ເຈົ້າໄດ້ ຮັບບາດເຈັບ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 4 ເຕະ ລາກ ຫຼືຊ້ອມເຈົ້າ | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| | 5 ບີບຄໍ ຮັດຄໍເຮັດໃຫ້ໂພງ/ໃໝ້, ຂູ່ວ່າຈະໃຊ້ອາວຸ ຫຼື ລົງມືໃຊ້ອາວຸດ ເຊັ່ນມີດ ປືນ ຫຼື ອາວຸດອື່ນໆທຳຮ້າຍເຈົ້າ<br>( ຂໍ້ທີ 1-5 ຖ້າມີຂໍ້ໃດໜຶ່ງ ຕອບວ່າ **ເຄີຍ** ຖາມຕໍ່ຂໍ້ທີ 14, ຖ້າທຸກຂໍ້ ຕອບວ່າ **ບໍ່ເຄີຍ** ຖາມຕໍ່ຂໍ້ທີ 15 ) | 1 ເຄີຍ<br>2 ບໍ່ເຄີຍ | 1 ເຄີຍ<br>2 ບໍ່ເຄີຍ |
| 12 | ຖ້າເຄີຍ: ເກີດຂຶ້ນໃນໄລຍະ 1 ປີ ທີ່ຜ່ານມານີ້ ຫຼື ບໍ່?<br><br>ຖ້າແມ່ນ ເຫດການນີ້ເກີດ ຂຶ້ນຖີ່ປານໃດ ?<br><br>***ກ່ອນໄລຍະ*** 1ປີທີ່ຜ່ານມາເຫດ ການນີ້ເກີດ ຂຶ້ນຖີ່ປານໃດ | 1 ແມ່ນແລ້ວ 2 ບໍ່ແມ່ນ<br>3 ບໍ່ຕອບ<br><br>1 ເທື່ອດຽວ<br>2 2 2-5ເທື່ອ<br>3 ຫຼາຍກວ່າ 5 ເທື່ອ<br><br>1 ເທື່ອດຽວ<br>2 2-5 ເທື່ອ<br>3 ຫຼາຍກວ່າ 5 ເທື່ອ | |
| 13<br>ສຳລັບແມ່ຍິງ ເທົ່ານັ້ນ | ຈາກທີ່ທ່ານເຄີຍຖືພາມາທັງໝົດ ----ເທື່ອ ຜົວຂອງເຈົ້າເຄີຍທຸບຕີ, | 1 ເຄີຍ<br>2 ບໍ່ເຄີຍ | |

| | | | |
|---|---|---|---|
| | ທຳຮ້າຍຮ່າງກາຍຂອງເຈົ້າໃນ<br>ເວລາທີ່ເຈົ້າກຳລັງຖືພາບໍ? | **ຖ້າເຄີຍ ຈຳນວນຈັກຄັ້ງ -------** | |
| 14<br>ສຳລັບແມ່ຍິງ<br>ເທົ່ານັ້ນ | ປຽບທຽບກັນກ່ອນຖືພາ ແລະຫຼັງຖືພາ ຄວາມຮຸນແຮງທີ່ເກີດຂຶ້ນກັບເຈົ້າ<br>ເມື່ອ ເຈົ້າຖືພາເປັນແນວໃດ | 1 ນ້ອຍລົງ<br>2 ເໝືອນເດີມ<br>3 ຮຸນແຮງຫຼາຍຂຶ້ນ<br>4 ບໍ່ຮູ້ | |

## ພາກທີ່ 8 ການໄດ້ຮັບຄວາມເຈັບປວດ

| | | | |
|---|---|---|---|
| 1 | ເຈົ້າເຄີຍໄດ້ຮັບບາດເຈັບຈາກການກະທຳຄວນຮຸນແຮງ/ ການທາລຸນຂອງຜົວ/ເມຍຂອງເຈົ້າ ຫຼື ບໍ່?<br>ຖ້າຕອບວ່າເຄີຍ ຖາມຕໍ່ຂໍ້ທີ່ 2<br>ຖ້າຕອບວ່າບໍ່ເຄີຍ ຖາມຕໍ່ຂໍ້ພາກທີ່ 9 | 1 ເຄີຍ<br>2 ບໍ່ເຄີຍ<br>3 ບໍ່ຕອບ | |
| 2 | ( ຖ້າເຄີຍ )<br>ຈຳນວນ ຈັກຄັ້ງ? | 1 1-2 ຄັ້ງ<br>2 3-5 ຄັ້ງ<br>3 ຫຼາຍກວ່າ 5 ຄັ້ງ | |
| 3 | ໃນຊ່ວງຊີວິດຂອງເຈົ້າການບາດເຈັບທີ່ເກີດຂຶ້ນໃນລັກສະນະໃດແດ່?<br>ຖາມ: ມີການບາດເຈັບຢ່າງອື່ນແດ່ບໍ່?<br>( ຕອບໄດ້1 ຄຳຕອບ ) | 1 ບາດ/ເຈາະ/ກັດ<br>2 ເຫຼັ້ນ/ຮອຍຊູດ/ຊ້ຳ<br>3 ເຄັດ/ເຄື່ອນ/ຍອກ<br>4 ໃໝ້/ໄຟລວກ/ໂພງ<br>5 ຖືກແທງ/ບາດເລິກ<br>6 ເຈ້ຍຫູແຕກ,ຕາຊ້ຳບວມ<br>7 ກະດູກແຕກ/ແຕກ<br>8 ແຂ້ວຫັກ<br>10 ອື່ນໆ: ລະບຸລະອຽດ | |
| 4 | ການບາດເຈັບ ເລົ່ານັ້ນເຖິງຂັ້ນຕ້ອງໄປໂຮງໝໍບໍ ?<br>ຖ້າຕອບວ່າ ແມ່ນແລ້ວ ຖາມຕໍ່ຂໍ້ທີ່ 5<br>ຖ້າຕອບວ່າບໍ່ເຖິງຂັ້ນນັ້ນ ຖາມຕໍ່ຂໍ້ທີ່ 9 | 1 ແມ່ນແລ້ວ<br>2 ບໍ່ເຖິງຂັ້ນນັ້ນ | |
| 5 | ຈາກການບາດເຈັບທີ່ເຈົ້າຄິດວ່າຈຳເປັນຕ້ອງໄປໂຮງໝໍ ເຈົ້າເຄີຍໄປໂຮງໝໍ ແທ້ໆ ຫຼືບໍ? | 1 ບໍ່ເຄີຍໄປ ( 0% )<br>2 ໄປເປັນບາງຄັ້ງ ( 50% )<br>3 ໄປທຸກຄັ້ງ ( 100% ) | |
| 6 | ເຈົ້າຕ້ອງການນອນພັກປິ່ນປົວໃນໂຮງ | | |

| | | | |
|---|---|---|---|
| | ໝໍເພາະໄດ້ຮັບບາດເຈັບລວມທັງໝົດ ຈັກຄືນ.ໃນແຕ່ລະຄັ້ງ?<br>( ໂດຍສະເລ່ຍ ) | | |
| 7 | ເຈົ້າເຄີຍບອກແພດ/ນາຍໝໍ ເຖິງ ສາເຫດທີ່ແທ້ ຈິງຂອງການໄດ້ຮັບບາດ ເຈັບຫຼື ບໍ່<br>ຖ້າຕອບວ່າ ເຄີຍຖາມຕໍ່ຂໍ້ທີ່ 8<br>ຖ້າຕອບວ່າ ບໍ່ເຄີຍ ຖາມຕໍ່ຂໍ້ທີ່ 9 | 1 ເຄີຍ<br>2 ບໍ່ເຄີຍ | |
| 8 | (ຖ້າເຄີຍບອກ) ພວກເພິ່ນໄດ້ຊ່ວຍ ແນວໃດແດ່ ? | 1 ຮັບຟັງ ບັນຫາ<br>2 ຮັບຟັງບັນຫາ ແລະໃຫ້ຄໍາແນະນໍາ<br>3 ອື່ນໆ | |
| 9 | ຈາກການໄດ້ຮັບບາດເຈັບ ໃນແຕ່ ລະຄັ້ງ ເຈົ້າເຄີຍໝົດສະຕິຫຼືບໍ ? | 1 ເຄີຍ<br>2 ບໍ່ເຄີຍ | |

## ພາກທີ່ 9 ຜົນກະທົບ ແລະການຈັດການ

| | | | |
|---|---|---|---|
| 1 | ແມ່ນຫຍັງ ເປັນສາເຫດທີ່ພາໃຫ້ເກີດ ການຮ້າຍດ່າ, ຕີບຕີ ຢູ່ໃນຄອບຄົວ ?<br>**( ຕອບໄດ້ 1 ຄໍາຕອບ )** | 1 ບໍ່ມີເຫດຜົນ<br>2 ເມື່ອດື່ມເຫຼົ້າ<br>3 ເມື່ອມີບັນຫາການເງິນ<br>4 ເມື່ອມີບັນຫາໃນການ ເຮັດວຽກ<br>5 ເມື່ອຫວ່າງງານ<br>6 ເມື່ອບໍ່ໄດ້ກຽມອາຫານໄວ້<br>7 ເມື່ອມີບັນຫາກັບຄອບຄົວ<br>8 ເມື່ອຖືພາ<br>10 ເມື່ອມີຄວາມຫຶງຫວງ<br>11 ເມື່ອປະຕິເສດ ບໍ່ນອນນໍາ<br>12 ເມື່ອທ່ານບໍ່ເຊື່ອຟັງ<br>13 ເມື່ອໃຊ້ຢາເສບຕິດ<br>14 ເມື່ອຫຼິ້ນການພະນັນ<br>15 ອື່ນໆ(ລະບຸ ລະອຽດ) | |
| 2 | ລູກຂອງເຈົ້າ ຮູ້, ເຫັນບໍ່ວ່າ ພໍ່ແມ່ ຜິດຖຽງ, ຕີບຕີກັນ ?<br>ຖ້າຮູ້,ເຫັນ ຈັກຄັ້ງ ? | 1 ຮູ້, ເຫັນ 3 ບໍ່ແນ່ໃຈ<br>2 ບໍ່ຮູ້ ບໍ່ເຫັນ<br><br>1 1-2 ຄັ້ງ<br>2 3-5 ຄັ້ງ<br>3 ຫຼາຍກວ່າ 5 ຄັ້ງ | |

| | | | |
|---|---|---|---|
| 3 | ໃນຂະນະທີ່ເກີດ ຫຼື ຫຼັງຈາກເຫດການຮ້າຍດ່າ,ຕີບຕີ ຜົວ/ເມຍ ຂອງເຈົ້າ ເຄີຍບັງຄັບທີ່ຈະນອນກັບເຈົ້າ ຫຼື ບໍ່ ?<br><br>ຜົວ/ເມຍຂອງເຈົ້າເຄີຍບັງຄັບທີ່ຈະນອນກັບເຈົ້າ ໃນຂະນະທີ່ເຈົ້າບໍ່ຕ້ອງການ ຫຼືບໍ? | **1 ເຄີຍ**<br>**2 ບໍ່ເຄີຍ**<br><br>**1 ເຄີຍ**<br>**2 ບໍ່ເຄີຍ** | |
| 4 | ເມື່ອຖືກທຸບຕີເຈົ້າເຄີຍຕໍ່ສູ້ກັບຄືນ(ຕອບໂຕ້) ຫຼື ເຮັດຫຍັງ ເພື່ອປ້ອງກັນຕົນເອງ ຫຼື ບໍ່?<br><br>ຖ້າເຄີຍເກີດຂຶ້ນຈັກເທື່ອ ? | 1 ເຄີຍ<br>2 ບໍ່ເຄີຍ<br><br>1 1-2ເທື່ອ<br>2 3-5ເທື່ອ<br>3 ຫຼາຍກວ່າ 5 ເທື່ອ | |
| 5 | ເມື່ອເຈົ້າຕໍ່ສູ້, ຕອບໂຕ້ ຫຼື ປ້ອງກັນໂຕ ມີຜົນກະທົບ ຕໍ່ກັບ ການຮ້າຍດ່າ, ຕີບຕີ ແນວໃດ? | 1 ບໍ່ປ່ຽນ/ບໍ່ມີຜົນ<br>2 ຄວາມຮຸນແຮງຫຼາຍຂຶ້ນ<br><br>3 ຄວາມຮຸນແຮງນ້ອຍລົງ<br>4 ຢຸດຄວາມຮຸນແຮງ | |
| 6 | ເຈົ້າເຄີຍເປັນຝ່າຍທຳຮ້າຍ ຫຼື ທຸບຕີ ຜົວ/ ເມຍຂອງເຈົ້າໂດຍທີ່ ຜົວ/ເມຍຂອງເຈົ້າບໍ່ໄດ້ທຸບຕີ ຫຼື ທຳຮ້າຍເຈົ້າແຕ່ປະການໃດ ?<br><br>ຖ້າເຄີຍ ເກີດຂຶ້ນຈັກເທື່ອ? | **1 ເຄີຍ**<br>**2 ບໍ່ເຄີຍ**<br><br>**1 1-2ເທື່ອ**<br>**2 3-5ເທື່ອ**<br>**3 ຫຼາຍກວ່າ 5 ເທື່ອ** | |
| 7 | ເຈົ້າຄິດວ່າການຮ້າຍດ່າ, ຕີບຕີ ຂອງຜົວ/ເມຍເຈົ້າມີຜົນກະທົບຕໍ່ ສຸຂະພາບກາຍ ຫຼື ສຸຂະພາບຈິດຂອງທ່ານແດ່ຫຼືບໍ່ ? | 1 ບໍ່ມີຜົນກະທົບ<br>2 ກະທົບເລັກນ້ອຍ<br>3 ກະທົບຫຼາຍ | |
| | | 1 ບໍ່ກ່ຽວຂ້ອງເພາະບໍ່ໄດ້ເຮັດ | |

| | | | |
|---|---|---|---|
| 8 | ແລ້ວຜົນຂອງການຮ້າຍດ່າ, ຕົບຕີ ນີ້ສົ່ງຜົນໃຫ້ວຽກ ຢຸດຊະງັກ ຫຼື ເຮັດໃຫ້ກິດຈະກຳທີ່ເຮັດໃຫ້ເກີດລາຍໄດ້ນັ້ນຫາຍໄປແດ່ ຫຼື ບໍ່?<br>( ຕອບໄດ້ 1 ຄຳຕອບ ) | ວຽກທີ່ມີລາຍໄດ້<br>2 ບໍ່ມີຜົນກະທົບຕໍ່ການເຮັດວຽກໃດໆເລີຍ<br>3 ຜົວ/ເມຍຂັດຂວາງການ ເຮັດວຽກ.<br>4 ບໍ່ມີສະມາທິໃນການເຮັດວຽກ<br>5 ສູນເສຍຄວາມໝັ້ນໃຈໃນຄວາມສາມາດຂອງຕົນ<br>6 ບໍ່ໄປເຮັດວຽກເພາະອາຍ<br>7 ອື່ນໆ (ລະບຸ ລະອຽດ) | |
| 9 | ເຈົ້າເລົ່າ ຫຼື ປຶກສາເລື່ອງທີ່ເຈົ້າຖືກຮ້າຍດ່າ, ຕົບຕີນີ້ ໃຫ້ໃຜຟັງ ແດ່ ?<br>(ຕອບໄດ້ 1 ຄຳຕອບ ຕາມທີ່ເປັນຈິງ) | 1 ບໍ່ມີໃຜເລີຍ<br>2 ເພື່ອນຂອງເຈົ້າ<br>3 ພໍ່ແມ່ຂອງເຈົ້າ<br>4 ພີ່ນ້ອງ<br>5 ຄອບຄົວຂອງຜົວ/ເມຍຂອງເຈົ້າ<br>6 ລູກຂອງເຈົ້າ<br>7 ເພື່ອນບ້ານ<br>8 ຕຳຫຼວດ<br>10 ແພດ / ຈິດຕະແພດ<br>11 ຄູບາ<br>12 ເຈົ້າໜ້າທີ່ໃຫ້ຄຳປຶກສາ<br>13 ອົງກອນເອກະຊົນ/ອົງກອນແມ່ຍິງ<br>14 ຜູ້ນຳທ້ອງຖິ່ນ<br>15 ໝໍດູ<br>16 ອື່ນໆ(ລະບຸ) , | |
| 10 | ມີໃຜເຄີຍພະຍາຍາມມາຊ່ວຍເຈົ້າເພື່ອໃຫ້ສະຖານະການດີຂື້ນແດ່ ຫຼື ບໍ່ ຖ້າມີ ໃຜແດ່ ?<br>(ຕອບໄດ້ຫຼາຍກວ່າ 1 ຄຳຕອບ)<br>( ຊັກຖາມມີຄົນອື່ນອີກບໍ່ ) | 1 ບໍ່ມີໃຜເລີຍ<br>2 ເພື່ອນຂອງເຈົ້າ<br>3 ພໍ່ແມ່ຂອງເຈົ້າ<br>4 ພີ່ນ້ອງ<br>5 ຄອບຄົວຂອງຜົວ/ເມຍ ຂອງເຈົ້າ<br>6 ລູກຂອງເຈົ້າ<br>7 ເພື່ອນບ້ານ<br>8 ຕຳຫຼວດ<br>10 ແພດ/ຈິດຕະແພດ<br>11 ຄູບາ | |

| | | | |
|---|---|---|---|
| | | 12 ເຈົ້າໜ້າທີ່ໃຫ້ຄຳປຶກສາ<br><br>13 ອົງກອນເອກະຊົນ/ອົງກອນແມ່ຍິງ<br>14 ຜູ້ນຳທ້ອງຖິ່ນ<br>15 ໝໍດູ<br>16 ອື່ນໆ(ລະບຸ ລະອຽດ) | |
| 11 | ມີເຫດຜົນຫຍັງທີ່ເຮັດໃຫ້ເຈົ້າ ກ້າຕັດສິນໃຈໄປຂໍຄວາມຊ່ວຍເຫຼືອ<br><br>(ຕອບໄດ້ 1 ຄຳຕອບ) | 1 ເພື່ອນ/ຄອບຄົວສະນັບສະໜູນ<br>2 ບໍ່ສາມາດອົດທົນຕໍ່ໄປອີກ/ເບື່ອ<br>3 ໄດ້ຮັບບາດເຈັບຫຼາຍຢ້ານວ່າຈະຖືກ ຂ້າ<br>4 ຜົວ/ເມຍຂູ່ຫຼືພະຍາຍາມຈະຂ້າເຈົ້າ<br>5 ຜົວ/ເມຍຂູ່ຈະທຳຮ້າຍຫຼື ທຸບຕີລູກ<br>6 ເຫັນວ່າລູກໄດ້ຮັບຄວາມ ທຸກທໍລະມານຫຼາຍ<br>7 ຖືກໄລ່ອອກຈາກເຮືອນ<br>8 ຢ້ານວ່າຈະຕ້ອງຂ້າຜົວ/ເມຍ<br>10 ອື່ນໆ(ລະບຸ ລະອຽດ) | |
| 12 | ມີເຫດຜົນສຳຄັນອັນໃດແດ່ ທີ່ເຮັດໃຫ້ ເຈົ້າບໍ່ໄດ້ໄປຂໍຄວາມຊ່ວຍເຫຼືອ<br><br>(ຕອບໄດ້ 1 ຄຳຕອບ) | 1 ບໍ່ຮູ້/ບໍ່ມີຂໍ້ມູນ<br>2 ຢ້ານວ່າຈະຖືກຂູ່ບັງຄັບ/ເກີດຜົນ ຕາມມາ/ມີຄວາມຮຸນແຮງຫຼາຍຂຶ້ນ<br>3 ຄວາມຮຸນແຮງເປັນເລື່ອງປົກກະຕິ ບໍ່ ແມ່ນເລື່ອງໃຫຍ່<br>4 ອັບອາຍ/ທົດທູ່ໃຈ/ຢ້ານຄົນບໍ່ ເຊື່ອ/ຢ້ານຖືກຕຳນິ<br>5 ຄິດວ່າຄົງຈະຊ່ວຍຫຍັງບໍ່ໄດ້/ຮູ້ມາວ່າ ຍິງອື່ນກໍ່ບໍ່ໄດ້ຮັບຄວາມຊ່ວຍເຫຼືອ<br>6 ຢ້ານວ່າອາດຈະເຮັດໃຫ້ກະທົບເຖິງ ຄວາມສຳພັນ ລະຫວ່າງຜົວ-ເມຍ<br>7 ຢ້ານວ່າຈະຕ້ອງສູນເສຍລູກ<br>8 ເຮັດໃຫ້ຄອບຄົວເສຍຊື່ສຽງ<br><br>10 ອື່ນໆ (ລະບຸ ລະອຽດ) | |
| 13 | ມີໃຜແດ່ຫຼືບໍ່ ທີ່ເຈົ້າຢາກໄດ້ຮັບຄວາມ ຊ່ວຍເຫຼືອ<br><br>( ຫຼືຢາກໃຫ້ຊ່ວຍເຈົ້າຫຼາຍຂຶ້ນ) | 1 ບໍ່ມີ<br>2 ຄອບຄົວຕົນເອງ<br>3 ແມ່ຂອງຕົນເອງ<br>4 ແມ່ຂອງຜົວ/ເມຍ<br>5 ໂຮງໝໍ/ສຸກສາລາ | |

| | | | |
|---|---|---|---|
| | (ຕອບໄດ້ 1 ຄໍາຕອບ) | 6 ຕໍາຫຼວດ<br>7 ຄູບາ/ຜູ້ນໍາສາດສະໜາ<br>8 ຄອບຄົວຂອງຜົວ<br>10 ອົງກອນທີ່ບໍ່ສັງກັດລັດ(NGO)<br>11 ໝູ່ຄູ່/ເພື່ອນບ້ານ<br>12 ອື່ນໆ(ລະບຸ ລະອຽດ) | |
| 14 | ເຈົ້າເຄີຍໜີອອກຈາກເຮືອນແດ່ບໍ່?<br>ຈາກເຫດການຮ້າຍດ່າ, ຕີບຕີ ນີ້<br><u>ຖ້າເຄີຍ</u> ໄປຈັກເທື່ອ-------- | **1 ເຄີຍ**<br>**2 ບໍ່ເຄີຍ** | |
| 15 | ມີເຫດຜົນໃດທີ່ເຮັດໃຫ້ເຈົ້າຕັດສິນໃຈອອກໄປຈາກເຮືອນໃນຄັ້ງສຸດທ້າຍ?<br>(ຕອບໄດ້ 1 ຄໍາຕອບ) | 1 ບໍ່ມີເຫດຜົນ/ສະຖານະການສະເພາະໜ້າ<br>2 ເພື່ອນ/ຄອບຄົວສະໜັບສະໜູນ<br>3 ບໍ່ສາມາດທົນໄດ້ຕໍ່ໄປອີກ<br>4 ໄດ້ຮັບບາດເຈັບຫຼາຍ/ຢ້ານຈະຖືກຂ້າ<br>5 ຜົວ/ເມຍຂູ່/ພະຍາຍາມຈະຂ້າເຈົ້າ<br>6 ຜົວ/ເມຍຂູ່ຈະທໍາຮ້າຍຫຼື ທຸບຕີລູກ<br>7 ເຫັນວ່າລູກໄດ້ຮັບຄວາມທຸກຫຼາຍ<br>8 ຖືກໄລ່ອອກຈາກບ້ານ<br>10 ຢ້ານວ່າຈະຕ້ອງຂ້າເມຍ/ຜົວ<br>11 ໄດ້ຮັບການສະໜັບສະໜູນຈາກອົງການ (ລະບຸຊື່)<br>12 ອື່ນໆ(ລະບຸ ລະອຽດ) | |
| 16 | ເມື່ອເຈົ້າອອກຈາກເຮືອນ ຄັ້ງສຸດທ້າຍເຈົ້າອອກໄປຢູ່ໃສ?<br>(ຕອບໄດ້ພຽງ 1 ຄໍາຕອບ) | 1 ພີ່ນ້ອງຂອງທ່ານ<br>2 ພີ່ນ້ອງຂອງຜົວ/ເມຍ<br>3 ເພື່ອນ/ເພື່ອນບ້ານຂອງທ່ານ<br>4 ໂຮງແຮມ/ຫ້ອງເຊົ່າ/ຖະໜົນຫົນທາງ.<br>5 ວັດ/ໂບດ<br>6 ບ້ານພັກຂອງມູນລະນິທິໃດໜຶ່ງ<br>7 ອື່ນໆ(ລະບຸ ລະອຽດ) | |
| 17 | ຫຼັງຈາກທີ່ອອກໄປຢູ່ບ່ອນອື່ນແລ້ວເປັນຫຍັງເຈົ້າຈຶ່ງກັບມາເຮືອນອີກ<br>(ຕອບໄດ້ 1 ຄໍາຕອບ) | 1 ບໍ່ຕ້ອງການຖິ້ມລູກໄປ<br>2 ເພາະແຕ່ງງານແລ້ວບໍ່ຄວນປະ/ຮ້າງ<br>3 ເພື່ອຄອບຄົວ/ລູກ<br>4 ບໍ່ສາມາດລ້ຽງດູລູກໄດ້<br>5 ຍັງຮັກຜົວ/ເມຍ<br>6 ຜົວ/ເມຍຂໍໃຫ້ກັບບ້ານ | |

| | | | |
|---|---|---|---|
| | | 7 ຍົກໂທດໃຫ້ຜົວ/ເມຍ<br>8 ຄິດວ່າຜົວ/ເມຍຈະປ່ຽນແປງໄດ້<br>10 ຜົວ/ເມຍຂູ່ຈະທຳຮ້າຍທ່ານຫຼືລູກ<br>11 ອື່ນໆ(ລະບຸ ລະອຽດ) | |

<u>ຄຳແນະນຳ</u>:

ຖ້າສິ້ນສຸດການສຳພາດແລ້ວ ກາລຸນາກ່າວຄຳຂອບໃຈ ແກ່ຜູ້ໃຫ້ສຳພາດດ້ວຍຄວາມເປັນມິດ

*** ຂໍຂອບໃຈນຳທ່ານຜູ້ເກັບກຳຂໍ້ມູນ ແລະຜູ້ໃຫ້ຂໍ້ມູນໃນຄັ້ງນີ້ດ້ວຍ ***

ຖ້າຫາກ ບຸກຄົນໃດ ພົບຜູ້ໃຫ້ຂໍ້ມູນ ມີຄວາມຮຸນແຮງ ກາລຸນຂຽນລາຍລະອຽດລົງຂ້າງລຸ່ມນີ້ ຂຽນຕາມຂໍ້ມູນ ( ຕາມການບອກເລົ່າຂອງຜູ້ໃຫ້ຂໍ້ມູນ) ແລະບໍ່ຈຳເປັນຕ້ອງຂຽນ ຊື່ ທີ່ຢູ່ ແຕ່ປະການໃດ ແຕ່ກ່ອນຂຽນ ຄວນຂໍອານຸຍາດຈາກຜູ້ໃຫ້ຂໍ້ມູນເສຍກ່ອນ.

------------------------------------------------------------------------------------------------------------

------------------------------------------------------------------------------------------------------------

--------------------------------------------------------------------------------

------------------------------------------------------------------------------------------------------------

------------------------------------------------------------------------------------------------------------

--------------------------------------------------------------------------------

------------------------------------------------------------------------------------------------------------

------------------------------------------------------------------------------------------------------------

--------------------------------------------------------------------------------

------------------------------------------------------------------------------------------------------------

------------------------------------------------------------------------------------------------------------

--------------------------------------------------------------------------------

------------------------------------------------------------------------------------------------------------

------------------------------------------------------------------------------------------------------------

--------------------------------------------------------------------------------

# 10. ໃບຊ້ອນທ້າຍ 2- ໝູ່ບ້ານເປົ້າໝາຍ

## 10.1 ໝູ່ບ້ານໃນແຂວງບໍ່ແກ້ວ

### ບ້ານຫ້ວຍສານ, ເມືອງເມິງ

ບ້ານນີ້ຕັ້ງຢູ່ຫ່າງຈາກ ຕົວເມືອງ ປະມານ 28 ກມ, ມີຊາຍແດນທິດເໜືອຕິດກັບ ບ້ານຜາຂາວ, ທິດໃຕ້ຕິດກັບບ້ານປຸ່ງເລາະ, ທິດຕາເວັນອອກຕິດກັບ ບ້ານ ພູຫຍ້າຄາ, ແລະ ມີຊາຍແດນສາກົນຮ່ວມກັບປະເທດມຽນມາ ທາງທິດຕາເວັນຕົກ ຕາມແມ່ນ້ຳຂອງ. ບ້ານນີ້ໄດ້ຖືກສ້າງຂື້ນໃນປີ 1991, ເມື່ອເວລາປະຊາຊົນຍ້າຍລົງມາຈາກ 6 ບ້ານຢູ່ເຂດພູດອຍ. ກ່ອນຈະຍ້າຍມາຢູ່ທີ່ນີ້ ເຂົາເຈົ້າທຳມາຫາກິນ ດ້ວຍການຖາງປ່າເຮັດໄຮ່. ດ້ວຍເຫດນີ້, ພວກເຂົາເຈົ້າໄດ້ຍ້າຍລົງມາທີ່ນີ້ ເພື່ອຫາພື້ນທີ່ດິນຕ່ຳ ສຳລັບ ເຮັດນາ. ໃນບ້ານນີ້ມີ 103 ຫຼັງຄາ ແລະ 141 ຄອບຄົວ. ພົນລະເມືອງທັງໝົດ ມີຈຳນວນ 610 ຄົນ ໃນນີ້ແມ່ຍິງ 305 ຄົນ. ບ້ານນີ້ແບ່ງອອກເປັນ 6 ໜ່ວຍ; ບໍ່ມີແມ່ຍິງຈັກຄົນຢູ່ໃນຄະນະບ້ານ. ບ້ານນີ້ ປະກອບດ້ວຍຊົນເຜົ່າລາຣູຂາວ. ເຂົາເຈົ້າເຊື່ອຖືຜີ. ອາຊີບຕົ້ນຕໍຂອງແມ່ຍິງໃນບ້ານນີ້ແມ່ນເປັນຊາວສວນເພື່ອລ້ຽງຊີບປູກພືກຜົນ ແລະ ລ້ຽງສັດ. ບັນຫາລວມທີ່ຊາວບ້ານລາຍງານ ແມ່ນວ່າ ແມ່ຍິງມີລູກຫຼາຍຄົນ ແລະ ອາຫານການກິນທີ່ຫາໄດ້ ແມ່ນບໍ່ພຽງພໍ ສຳລັບ ຄອບຄົວ.

### ບ້ານຈອມແຈ້ງ, ເມືອງເມິງ

ຊົນເຜົ່າທຳອິດທີ່ເດີນທາງມາ ແລະ ຕັ້ງບ້ານເຮືອນຢູ່ທີ່ນີ້ ແມ່ນຊົນເຜົ່າອາຂ່າ ໃນປີ 1998. ປະຈຸບັນບ້ານນີ້ມີສອງຊົນເຜົ່າດ້ວຍກັນຄື: ເຜົ່າອາຂ່າ ແລະ ເຜົ່າລາຣູຂາວ. ບ້ານນີ້ຕັ້ງຢູ່ຫ່າງຈາກ ຕົວເມືອງປະມານ 21 ກມ. ປະຊາຊົນທີ່ມາຕັ້ງຖິ່ນຖານຢູ່ບ້ານນີ້ແມ່ນມາຊອກຫາໄມ້ໄຜ່ ເພາະວ່າໄມ້ໄຜ່ນັບມື້ນັບຫາຍາກຍ້ອນວ່າມີການຖາງປ່າ ແລະຈູດປ່າເພື່ອເຮັດໄຮ່. ພວກເຂົາເຈົ້າຕິດຕາມຫາແຫຼ່ງຂອງໄມ້ໄຜ່ ແລະ ປ່າຈົນເຖິງທີ່ ທີ່ເຂົາເຈົ້າຢູ່ດຽວນີ້. ປັດຈຸບັນນີ້, ເຂົາເຈົ້າສາມາດສືບຕໍ່ປູກເຂົ້າໄຮ່ ແລະ ປູກຝັງຕາມລະດູການຊຶ່ງແມ່ນອາຊີບຂອງຊາວບ້ານສ່ວນໃຫຍ່. ຢູ່ໃນບ້ານນີ້ມີ 82 ຫຼັງຄາ ແລະ 85 ຄອບຄົວ ສຳລັບພົນລະເມືອງທັງໝົດຈຳນວນ 344 ຄົນ (ໃນນີ້ແມ່ຍິງ 159 ຄົນ). ບັນຫາສ່ວນໃຫຍ່ຂອງແມ່ຍິງ ໃນບ້ານນີ້ແມ່ນວ່າຜູ້ຊາຍໃນບ້ານບໍ່ຊ່ວຍແມ່ຍິງ ກ່ຽວກັບວຽກຄອບຄົວ, ໂດຍສະເພາະແມ່ນເຮືອນ. ເຂົາເຈົ້າຍັງນັບຖືຮີດຄອງປະເພນີ, ວັດທະນະທຳ, ກົດລະບຽບ ແລະ ຂໍ້ຫ້າມຕ່າງໆ ຂອງເຂົາເຈົ້າແຕ່ດັ້ງເດີມ. ເຊັ່ນ: ຫ້າມແກ້ເສື້ອ, ຫ້າມສູບຢາຫິ້ວເກີບແຕະເຂົ້າບ້ານ; ຫ້າມຂີ່ມ້າເຂົ້າບ້ານ; ຫ້າມແຕະຕ້ອງປະຕູບ້ານ; ຫ້າມແຕະຕ້ອງ ໂລ້ຊິງຊ້າ ທີ່ເພິ່ນນຳໃຊ້ໃນພິທີ ຖ້າບໍ່ແມ່ນມື້ບຸນປະຈຳປີ ແລະ ຫ້າມຈູດເຟືອງ.

### ບ້ານຜາດຳ, ເມືອງເມິງ

ຊົນເຜົ່າລື້ ເປັນຜູ້ສ້າງຕັ້ງບ້ານນີ້ຂຶ້ນເມື່ອປີ 1975. ພວກເພິ່ນຍ້າຍມາຈາກແຂວງຫຼວງນ້ຳທາແຕ່ວ່າຕໍ່ມາພວກເພິ່ນໄດ້ອົບພະຍົບໄປແຂວງບໍ່ແກ້ວຍ້ອນສົງຄາມ. ບ້ານນີ້ມີ 41 ຫຼັງຄາ ແລະ 45 ຄອບຄົວສຳລັບ ພົນລະເມືອງທັງໝົດຈຳນວນ 196 ຄົນ (ແມ່ຍິງ 98 ຄົນ). ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ ພຽງ 19 ກມ ເທົ່ານັ້ນ. ຢູ່ທີ່ນີ້, ປະຊາຊົນນັບຖືສາດສະໜາພຸດ ແລະມີລະບຽບຂໍ້ຫ້າມເຊັ່ນຕົວຢ່າງ, ເມື່ອເວລາວັນສິນດັບຫຼືສິນເພັງ, ຫ້າມຊາວບ້ານແບກໄມ້ ຫຼືແບກຟືນເຂົ້າບ້ານແລະຫ້າມຂ້າສັດທຸກຊະນິດ; ໃນມື້ເພັງພະຈັນເຕັມດວງເພິ່ນມີພິທີເສັ້ນໄຫວ້ຜີ. ໃນປັດຈະບັນນີ້,

ແມ່ຍິງ ແມ່ນຕົກຢູ່ໃນສະພາບຄ້າຍໆກັນກັບແມ່ຍິງຢູ່ໃນບ້ານອື່ນໆຄືເຮັດວຽກໜັກ ແລະມີຫຼາຍໜ້າທີ່. ເຊັ່ນຕົວຢ່າງ, ແມ່ຍິງຕ້ອງເກືອສັດ, ເບິ່ງແຍງລູກ, ແຕ່ງຢູ່ຄົວກິນ, ແລະ ເຮັດວຽກຢູ່ທົ່ງນາ. ມີແມ່ຍິງບາງຄົນເລົ່າວ່າ ຄວາມຮຸນແຮງຢູ່ໃນຄອບຄົວ ສ່ວນຫຼາຍແມ່ນເກີດຂຶ້ນລະຫວ່າງຄູ່ຜົວ-ເມຍ ແລະມັກເກີດເມື່ອເວລາຜົວເມົາເຫຼົ້າ. ສິ່ງທີ່ບັນດາຄອບຄົວ ໃນບ້ານ ຜາດຳເປັນຫ່ວງເປັນໄຍ ແມ່ນການຂາດແຄນ ສິ່ງທີ່ຈຳເປັນອັນພື້ນຖານຕໍ່ການດຳລົງຊີວິດ.

**ບ້ານ ຫວ້ຍໂມງ, ເມືອງປາກທາ**

ທາງດ້ານພູມສາດແລ້ວ, ບ້ານຫ້ວຍໂມງ ມີຊາຍແດນທິດເໜືອຕິດກັບບ້ານ ພູຫຍ້າຄາ, ທິດໃຕ້ຕິດກັບບ້ານ ມົກປ່າໄປ່, ທິດຕາເວັນອອກຕິດກັບບ້ານມົກໄປ່ເທິງ ແລະ ທິດຕາເວັນຕົກຕິດກັບບ້ານ ມົກກະຈອກ. ຊົນເຜົ່າທຳອິດ ທີ່ມາສ້າງຕັ້ງບ້ານນີ້ແມ່ນ ເຜົ່າກຶມມຸ ເມື່ອປີ 1998. ພວກເພິ່ນ ຍ້າຍມາຈາກ ບ້ານຫ້ວຍໂມງເກົ່າ ຊຶ່ງຢູ່ຫ່າງໄກຈາກບ່ອນຢູ່ປັດຈຸບັນນີ້ຫຼາຍສົມຄວນ. ຊາວບ້ານນີ້ເຊື່ອຖືຜີ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 40 ກມ. ພົນລະເມືອງທັງໝົດໃນບ້ານມີ ຈຳນວນ 515 ຄົນ ໃນນີ້ແມ່ຍິງ ມີຈຳນວນ 232 ຄົນ, 89 ຫຼັງຄາ ແລະ 99 ຄອບຄົວ. ມີແຕ່ພຽງຜູ້ດຽວເທົ່ານັ້ນ ທີ່ເປັນລັດຖະກອນ. ບ້ານນີ້ແບ່ງອອກເປັນ 5 ໜ່ວຍ ແລະ ບໍ່ມີແມ່ຍິງຈັກຄົນ ບັນຈຸຢູ່ໃນອົງການຈັດຕັ້ງຂອງບ້ານ. ຢູ່ໃນບ້ານນີ້ມີບາງກົດລະບຽບ ເຊັ່ນ: ຫ້າມເຮັດສຽງດັງໃນຍາມກາງຄືນ; ຫ້າມທຳລາຍຫ້ອງຜີ. ອາຊີບຕົ້ນຕໍຢູ່ໃນບ້ານແມ່ນເປັນຊາວນາ, ຊາວສວນ ແລະ ພວກເພິ່ນມີພື້ນທີ່ໄຮ່ ແລະ ທົ່ງນາ. ແມ່ຍິງ ມີຫຼາຍໜ້າທີ່ເຊັ່ນດຽວກັນ; ພວກເພິ່ນເບິ່ງແຍງຄອບຄົວ, ລູກ, ແຕ່ງຢູ່ຄົວກິນສຳລັບຄອບຄົວ, ຕັກນ້ຳ, ຕຳເຂົ້າ, ເອົາຟືນ, ເກືອສັດ ແລະ ຮັບຜິດຊອບໝົດທຸກສິ່ງທຸກຢ່າງ ທີ່ແມ່ນວຽກໃນຄອບຄົວ. ທີມງານຂອງກຸ່ມພັດທະນາບົດບາດຍິງຊາຍສັງເກດເຫັນວ່າ ແມ່ຍິງ ໃນບ້ານນີ້ເຮັດວຽກໜັກຫຼາຍ, ຖືກຜູ້ຊາຍກົດຂີ່ໜັກສົມຄວນ ແລະກໍ່ເກີດມີບັນຫາຄວາມຮຸນແຮງຢູ່ໃນຄອບຄົວ.

**ບ້ານ ມົກກະຈອກ, ເມືອງປາກທາ**

ບ້ານນີ້ເປັນບ້ານເກົ່າແກ່ສົມຄວນ, ສ້າງຕັ້ງຂຶ້ນໃນປີ 1913 ເຊິ່ງແມ່ນພໍ່ເຖົ້າແສນກວ່າງ ເດີນທາງຈາກ ບ້ານ ພູຫຼວງເມືອງຮຸນ, ແຂວງອຸດົມໄຊເປັນຜູ້ມາຢູ່ກ່ອນໝູ່. ສາເຫດໃນການຍ້າຍມາ ແມ່ນເພື່ອມາຊອກຫາ ບ່ອນປູກເຂົ້າ ແລະແຫຼ່ງທຳມາຫາກິນ. ເຊິ່ງບ່ອນນີ້ມີແຫຼ່ງຊັບພະຍາກອນທຳມະຊາດ ແລະ ນ້ຳ ທີ່ອຸດົມສົມບູນ ນອກຈາກນີ້, ລາວຍັງໄດ້ເລືອກສະຖານທີ່ ຊຶ່ງເປັນພື້ນທີ່ສະດວກສະບາຍ ສຳລັບການຄົມມະນາຄົມ ແລະ ການປູກຝັງ. ບ້ານເກົ່າຂອງລາວນັ້ນບໍ່ມີທີ່ງພຽງພໍທີ່ຈະໄດ້ປູກຝັງ ແລະ ການປູກເຂົ້າກໍ່ບໍ່ພໍຢູ່ພໍກິນ. ພາຍຫຼັງທີ່ມາຢູ່ບ້ານມົກກະຈອກນີ້ໄດ້ສອງສາມປີ, ຄອບຄົວອື່ນໆ ກໍ່ໄດ້ເຄື່ອນຍ້າຍມາຢູ່ນຳລາວ. ບ້ານມົກກະຈອກຕັ້ງຢູ່ ຫ່າງຈາກຕົວເມືອງປະມານ 33 ກມ. ຊາວບ້ານທັງໝົດທີ່ອາໃສຢູ່ໃນບ້ານນີ້ ແມ່ນຄົນເຜົ່າລາວສູງ (ມົ້ງຂາວ) ແລະ ເຊື່ອຖືຜີ. ບ້ານນີ້ມີພົນລະເມືອງທັງໝົດ ຈຳນວນ 197 ຄົນ (ແມ່ຍິງ 112 ຄົນ), 33 ຫຼັງຄາ ແລະ 35 ຄອບຄົວ. ອາຊີບຕົ້ນຕໍຂອງແມ່ຍິງ ແມ່ນເຮັດນາ, ເຮັດໄຮ່ ນອກຈາກນັ້ນຍັງເຮັດວຽກເຮືອນນຳອີກເຊັ່ນ: ລ້ຽງສັດ, ເອົາຟືນ, ແຕ່ງກິນ ແລະລ້ຽງລູກ. ຊາວບ້ານມີຄວາມເຊື່ອຖື ໃນມີຮີດຄອງປະເພນີ ແລະກົດລະບຽບຂອງບ້ານບາງຢ່າງ ເຊັ່ນ: ລູກໄພ້ ຫ້າມເຂົ້າໄປໃນຫ້ອງຂອງປູ່, ຍ່າ (ພວກເພິ່ນເຊື່ອວ່າ ລູກໄພ້ຈະຕາບອດ ຫາກລາວເຂົ້າໄປໃນຫ້ອງຂອງພໍ່ແມ່ຜົວ). ບັນຫາຕົ້ນຕໍຂອງແມ່ຍິງຢູ່ໃນບ້ານນີ້ ແມ່ນວ່າ ຜູ້ຊາຍບໍ່ຊ່ວຍເຫຼືອຄອບຄົວທາງດ້ານຈິດໃຈ ແລະ ບໍ່ຄ່ອຍມີຄວາມສະຫງົບສຸກລະຫວ່າງຄູ່ຜົວ-ເມຍ.

**ບ້ານແຄ, ເມືອງປາກທາ**

ບ້ານແຄໄດ້ສ້າງຕັ້ງຂຶ້ນໃນປີ 1977, ເຊິ່ງຍ້າຍມາຈາກບ້ານຫ້ວຍແຄ. ລັດຖະບານໄດ້ຈັດສັນສະຖານທີ່ສຳລັບບ້ານນີ້ ເພື່ອປັບປຸງຊີວິດການເປັນຢູ່ຂອງຊາວບ້ານ. ບ້ານນີ້ມີພົນລະເມືອງທັງໝົດຈຳນວນ 330 ຄົນ (ແມ່ຍິງ 130 ຄົນ), ມີ 44 ຫຼັງຄາ ແລະ 59 ຄອບຄົວ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 28 ກມ. ປະຊາຊົນທີ່ອາໃສຢູ່ໃນບ້ານນີ້ປະກອບດ້ວຍ ສອງຊົນເຜົ່າດ້ວຍກັນຄື: ເຜົ່າກຶມມຸ ແລະ ເຜົ່າລາວລຸ່ມ. ພວກເພິ່ນເຊື່ອຖືຜີ. ປະເພນີ ແລະ ກົດລະບຽບ ຂອງບ້ານບາງຕົວຢ່າງມີຄື: ຫ້າມຄົນນອກເຂົ້າໄປໃນຫ້ອງຜີ (ຫ້ອງນ້ອຍໆທີ່ເພິ່ນຮັກສາໄວ້ສຳລັບຜີ), ຫ້າມຂ້າສັດຢູ່ໃນເຮືອນ, ຫ້າມຄົນນອກເຂົ້າໄປໃນຫ້ອງນອນ, ຫ້າມເຮັດສຽງດັງໃນເວລາກາງຄືນ ໂດຍສະເພາະແມ່ນສຽງປືນ, ແລະຫ້າມບໍ່ໃຫ້ເອົາໄມ້ດິບມາຝັງແຄມເຮືອນເຖິງວ່າຈະສັ້ນຫຼືຍາວກໍ່ຕາມ. ວຽກຫຼັກຂອງແມ່ຍິງແມ່ນຄ້າຍໆກັບບ້ານອື່ນ. ແມ່ຍິງຮັບຜິດຊອບບັນດາໜ້າວຽກໃນຄອບຄົວ ຊຶ່ງລວມມີ: ຕັກນໍ້າ, ຕໍາເຂົ້າ, ເອົາຟືນ, ເບິ່ງແຍງລູກ, ເກືອສັດ, ແຕ່ງຢູ່ຄົວກິນສຳລັບຄອບຄົວ. ຊາວບ້ານມີຄວາມຮູ້ສຶກວ່າ ຄວາມຮຸນແຮງຢູ່ໃນຄອບຄົວລະຫວ່າງຄູ່ຜົວ-ເມຍ ແມ່ນເກີດ ມາຈາກຄວາມຂາດເຂີນຢູ່ໃນຄອບຄົວ.

## 10.2 ໝູ່ບ້ານຢູ່ແຂວງຫຼວງພະບາງ

**ບ້ານສີລາເລກ**

ໃນປີ 1974, ມີປະມານ 40 ຄອບຄົວ ໄດ້ຍ້າຍຈາກແຂວງຊຽງຂວາງມາຕັ້ງຖິ່ນຖານຢູ່ບ້ານ ສີລາເລກ ຍ້ອນເສິກສົງຄາມ. ພວກເພິ່ນມາຈາກສອງຊົນເຜົ່າດ້ວຍກັນຄືເຜົ່າມົ້ງຂາວ ແລະ ເຜົ່າກຶມມຸ, ເຊິ່ງນັບຖືຜີ. ຊື່ຂອງບ້ານ ແມ່ນໄດ້ມາຈາກຄຳວ່າ ‘ສາລາ’, ຊຶ່ງແມ່ນກະຕູບນ້ອຍໆ ເພື່ອໃຫ້ຄົນຊົ້ນຝົນຢູ່ເທິງພູ. ບ້ານສີລາເລກຕັ້ງຢູ່ຫ່າງຈາກຕົວເມືອງ 26 ກມ, ມີ ພົນລະເມືອງທັງໝົດຈຳນວນ 857 ຄົນ (ແມ່ຍິງ 399 ຄົນ), 140 ຄອບຄົວ. ບ້ານນີ້ແບ່ງອອກເປັນ 12 ໜ່ວຍ; ຢູ່ໃນອົງການຈັດຕັ້ງບ້ານແມ່ນບໍ່ມີແມ່ຍິງສັງກັດຢູ່ເລີຍ. ອາຊີບຕົ້ນຕໍຂອງຊາວບ້ານແມ່ນເຮັດໄຮ່ ແລະເຮັດສວນຢູ່ເທິງພູ. ກຸ່ມພັດທະນາບົດບາດຍິງ-ຊາຍ ສັງເກດເຫັນວ່າບັນຫາຂອງແມ່ຍິງແມ່ນເຮັດວຽກໜັກ ແລະອີກບັນຫາໜຶ່ງແມ່ນການກີກໜັງສື. ເຫດການຄວາມຮຸນແຮງ ຢູ່ໃນຄອບຄົວລະຫວ່າງ ຄູ່ຜົວ-ເມຍ ແມ່ນມີສາເຫດມາຈາກ ການຂາດແຄນຢູ່ໃນຄອບຄົວ, ເຊັ່ນ ອາຫານການກິນ ບໍ່ພຽງພໍຢູ່ໃນຄອບຄົວ.

**ບ້ານ ຫ້ວຍຈອງ**

ບ້ານນີ້ ຖືກສ້າງຕັ້ງຂຶ້ນເມື່ອປີ 1993. ຊາວບ້ານຍ້າຍມາຈາກບ້ານ ນໍ້າຈັນ ເພາະວ່າມັນໄກຈາກເສັ້ນທາງຫຼາຍ ແລະອີກປະການໜຶ່ງ ແມ່ນເພື່ອຢາກໃຫ້ເດັກນ້ອຍໄດ້ເຂົ້າໂຮງຮຽນຈຶ່ງຍ້າຍມາຢູ່ໃກ້ເສັ້ນທາງ. ບ້ານນີ້ແມ່ນຊົນເຜົ່າ ກຶມມຸ ເຊິ່ງທັງໝົດເຊື່ອຖືຜີ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 19 ກມ, ມີ ພົນລະເມືອງທັງໝົດຈຳນວນ 309 ຄົນ (ແມ່ຍິງ 148 ຄົນ), 48 ຄົວເຮືອນ ແລະ 48 ຄອບຄົວ. ຈຸດພິເສດຂອງບ້ານນີ້ ແມ່ນໃນຊ່ວງເວລາສະເຫຼີມສະຫຼອງງານປະເພນີຂອງບ້ານ ຫ້າມບໍ່ໃຫ້ຄົນນອກໝາຍເຖິງຄົນບ້ານອື່ນເຂົ້າຮ່ວມງານນຳໃນເວລາກາງຄືນ. ຕົວຢ່າງອັນໜຶ່ງຂອງຂໍ້ຫ້າມ ແມ່ນວ່າຫ້າມທຳລາຍຫຼືຂຸດຄົ້ນປ່າຊ້າ. ບັນຫາສຳລັບແມ່ຍິງຢູ່ໃນບ້ານນີ້ ແມ່ນວ່າພວກເພິ່ນມີລູກຫຼາຍ

ຄົນ. ຄວາມຮຸນແຮງຢູ່ໃນຄອບຄົວ ໂດຍສະເພາະລະຫວ່າງຄູ່ຜົວ-ເມຍ ແມ່ນມີສາເຫດມາຈາກຄວາມບໍ່ເຂົ້າອົກເຂົ້າໃຈຊຶ່ງກັນແລະກັນ ຫຼື ບາງເທື່ອກໍ່ເກີດ ມາຈາກ ຄວາມຫຶງຫວງຂອງຜູ້ເປັນຜົວ.

**ບ້ານ ຖິ່ນແກ້ວ**

ຊົນເຜົ່າທຳອິດທີ່ເຂົ້າມາຢູ່ບ້ານນີ້ ແມ່ນເຜົ່າກຶມມຸ. ສອງປີຕໍ່ມາຄົນເຜົ່າລາວລຸ່ມ ແລະ ຄົນເຜົ່າມົ້ງກໍ່ຕາມມາ. ເພາະສະນັ້ນ, ຢູ່ໃນບ້ານນີ້ຈຶ່ງມີສາມຊົນເຜົ່າ ອາໃສຢູ່ນຳກັນ. ເຊິ່ງໄລຍະທຳອິດນັ້ນແມ່ນມີ 13 ຄອບຄົວ ຍ້າຍມາຈາກບ້ານຫ້ວຍໂຄດ ເຊິ່ງໄດ້ປະມານ 100 ປີມາແລ້ວ. ພວກເພິ່ນຕັ້ງບ້ານຢູ່ທີ່ນີ້ກໍ່ເພາະວ່າພື້ນທີ່ນີ້ ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນດີ. ບ້ານຖິ່ນແກ້ວ ຕັ້ງຢູ່ຫ່າງຈາກຕົວເມືອງ 12 ກມ ແລະ ມີພົນລະເມືອງທັງໝົດຈຳນວນ 784 ຄົນ (ແມ່ຍິງ 399 ຄົນ), 140 ຄອບຄົວ. ບ້ານນີ້ແບ່ງອອກເປັນ 11 ໜ່ວຍ ແລະ ມີອຳນາດປົກຄອງບ້ານຢູ່ 3 ທ່ານ. ຢູ່ໃນຄະນະປົກຄອງບ້ານ ແມ່ນບໍ່ມີແມ່ຍິງຈັກຄົນເລີຍ. ໃນບ້ານມີ ລັດຖະກອນ ຈຳນວນ 7 ຄົນ. ປະຊາຊົນຈຳນວນເຄິ່ງໜຶ່ງນັບຖື ສາດສະໜາພຸດ ແລະ ສ່ວນທີ່ເຫຼືອເຊື່ອຖືຜີ. ບັນດາກົດລະບຽບແລະຂໍ້ຫ້າມຕ່າງໆຂອງບ້ານລວມມີ: ຫ້າມເອົາຄົນຕາຍຢູ່ນອກບ້ານເຂົ້າມາໃນບ້ານ, ຫ້າມແຕ່ງງານກັບພີ່ນ້ອງຮ່ວມສາຍເລືອດດຽວກັນ, ຫ້າມຕັດ ຫຼື ທຳລາຍຕົ້ນໄມ້ ຢູ່ປ່າຊ້າ. ອາຊີບຕົ້ນຕໍແມ່ນເຮັດໄຮ່ ເພື່ອປູກເຂົ້າ ແລະ ພືດຜົນອື່ນໆ. ບັນຫາສ່ວນໃຫຍ່ແມ່ນ: ເຂົ້າກິນບໍ່ພຽງພໍ, ແມ່ຍິງເຮັດວຽກໜັກ, ແລະ ມີລູກຫຼາຍຄົນຢູ່ໃນຄອບຄົວ.

**ບ້ານ ໂພນໄຊ**

ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1973. ໃນເບື້ອງຕົ້ນແມ່ນເຜົ່າລາວລຸ່ມມາຢູ່ກ່ອນຈຳນວນ 2 ຄອບຄົວ ແລ້ວຫຼັງຈາກນັ້ນຈຶ່ງມີ ເຜົ່າກຶມມຸຍ້າຍມາຢູ່ນຳກັນ, ປະຊາຊົນບ້ານນີ້ ແມ່ນຍ້າຍມາຈາກຫຼາຍບ່ອນເຊັ່ນ: ຍ້ານມາຈາກບ້ານຫ້ວຍໂຄດ, ມາຈາກເມືອງພູຄູນ ແລະບ່ອນອື່ນໆ ມາລວມກັນ. ເຊິ່ງສາເຫດຂອງການຍ້າຍແມ່ນຍ້ອນເສິກສົງຄາມ. ບ້ານໂພນໄຊ ຕັ້ງຢູ່ຫ່າງຈາກຕົວເມືອງ 11 ກມ, ມີ ພົນລະເມືອງທັງໝົດ ຈຳນວນ 611 ຄົນ (ແມ່ຍິງ 312 ຄົນ), 98 ຄົວເຮືອນ ແລະ 98 ຄອບຄົວ. ຢູ່ໃນບ້ານນີ້ມີລັດຖະກອນທັງໝົດ 6 ຄົນ. ບ້ານນີ້ແບ່ງອອກເປັນ 8 ໜ່ວຍ. ຊາວບ້ານຈຳນວນໜຶ່ງແມ່ນ ນັບຖືສາດສະໜາພຸດ ແລະ ອີກຈຳນວນໜຶ່ງແມ່ນເຊື່ອຖືຜີ. ຕົວຢ່າງຂອງກົດລະບຽບບ້ານມີຄື: ຫ້າມທຳລາຍຕົ້ນໄມ້ຢູ່ບໍລິເວນປ່າຊ້າ. ຖ້າແມ່ຍິງທີ່ຖືພາບໍ່ມີພໍ່ (ມານທາງ) ຕ້ອງຍິນຍອມຕາມກົດລະບຽບຂອງບ້ານ ລວມມີເສຍເຫຼົ້າ, ໝູ ຫຼື ໄກ່ ໃຫ້ແກ່ອຳນາດການປົກຄອງບ້ານ. ອາຊີບຕົ້ນຕໍຂອງຊາວບ້ານແມ່ນການເຮັດນາ ແລະ ເຮັດສວນ. ບັນຫາທີ່ພົບເຫັນພາຍໃນບ້ານ ແລະ ຄອບຄົວແມ່ນການຂາດແຄນເຂົ້າກິນ. ສະພາບຄວາມຮຸນແຮງ ຢູ່ໃນ ຄອບຄົວທີ່ເກີດຂື້ນ ສ່ວນໃຫຍ່ແມ່ນເມື່ອເວລາຜູ້ຊາຍເມົາເຫຼົ້າ.

**ບ້ານ ຫ້ວຍໂຄດ**

ບ້ານ ຫ້ວຍໂຄດ ໄດ້ຖືກສ້າງຕັ້ງຂື້ນມາໄດ້ຫຼາຍປີແລ້ວຈົນບໍ່ມີໃຜຈຳໄດ້ວ່າແມ່ນມື້ໃດວັນໃດ. ໃນເບື້ອງຕົ້ນບ້ານນີ້ມີແຕ່ ຄົນເຜົ່າລາວລຸ່ມທີ່ຍ້າຍຄອບຄົວມາຈາກ ແຂວງຊຽງລາຍ, ປະເທດໄທ. ຍ້ອນວ່າພື້ນທີ່ນີ້ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ດິນກໍດີສຳລັບການປູກຝັງ, ດັ່ງນັ້ນຊາວບ້ານຈຶ່ງພາກັນຍ້າຍມາຢູ່ບ່ອນນີ້. ບ້ານນີ້ມີພົນລະເມືອງທັງໝົດຈຳນວນ 449 ຄົນ (ແມ່ຍິງ 214 ຄົນ), 88 ຄອບຄົວ. ປະກອບມີລັດຖະກອນຈຳນວນ 20

ຄົນ ແລະ ບ້ານແບ່ງອອກເປັນ 6 ໜ່ວຍ. ຄະນະບ້ານມີຢູ່3 ທ່ານດ້ວຍກັນ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 6 ກມ. ດຽວນີ້, ມີ 3 ຊົນເຜົ່າດ້ວຍກັນທີ່ອາໃສຢູ່ໃນບ້ານນີ້ຄື: ເຜົ່າລາວລຸ່ມ, ເຜົ່າກຶມມຸ ແລະ ເຜົ່າຍວນ, ແຕ່ວ່າ ທັງໝົດແມ່ນນັບຖືສາດສະໜາພຸດ. ອາຊີບຕົ້ນຕໍຂອງຊາວບ້ານ ແມ່ນເປັນຊາວນາ ແລະ ຊາວສວນ ປູກພືດຜົນທີ່ເປັນສິນຄ້າ. ປັດຈະບັນນີ້, ຊາວບ້ານຍັງບໍ່ທັນມີຄວາມຮູ້ສຶກວ່າບົດບາດຍິງ-ຊາຍ ຫຼື ຄວາມຮຸນແຮງ ແມ່ນບັນຫາໃຫຍ່ຢູ່ໃນບ້ານ ເພາະວ່າພວກເພິ່ນໄດ້ຮັບການຝຶກອົບຮົມກ່ຽວກັບບົດບາດຍິງ-ຊາຍ ຈາກອົງການຈັດຕັ້ງອື່ນໆມາແລ້ວ ແລະອີກປະການໜຶ່ງສະພາບເສດຖະກິດຂອງບ້ານກໍ່ປາກົດວ່າດີຂື້ນກວ່າແຕ່ກ່ອນ. ເຊິ່ງໃນເມື່ອກ່ອນ, ຊາວບ້ານມີບາງບັນຫາ, ແຕ່ວ່າດຽວນີ້ພວກເພິ່ນຮູ້ສຶກວ່າສະພາບດີຂື້ນກວ່າເກົ່າ. ບ້ານນີ້ມີໜ່ວຍອອມຊັບ ແລະ ມີທີມງານຄຸ້ມຄອງທີ່ເຂັ້ມແຂງ ເຊິ່ງນອນໃນນັ້ນກໍ່ມີແມ່ຍິງ ໜຶ່ງທ່ານທີ່ເປັນສະຫະພັນແມ່ຍິງບ້ານເປັນຜູ້ຮັບຜິດຊອບບັນຊີ. ເງິນທັງໝົດຢູ່ໃນລະດັບບ້ານ ແມ່ນຫຼາຍກວ່າໜຶ່ງຮ້ອຍຫ້າສິບລ້ານກີບ (ປະມານ 14,500 ໂດລາສະຫະລັດ).

**ບ້ານ ໂພນສະຫວ່າງ.**

ເຜົ່າລາວລຸ່ມ ແລະ ເຜົ່າກຶມມຸ ໄດ້ພາກັນຍ້າຍມາຢູ່ບ້ານນີ້ກ່ອນໝູ່ ໃນປີ 1973. ເຊິ່ງໄລຍະນັ້ນແມ່ນແຂວງ ແລະ ເມືອງ ເປັນຜູ້ຈັດສັນໃຫ້, ສາເຫດຂອງການຍ້າຍມາຢູ່ບ່ອນນີ້ແມ່ນຍ້ອນເສິກສົງຄາມ. ບ້ານ ໂພນສະຫວ່າງ ຕັ້ງຢູ່ຫ່າງຈາກຕົວເມືອງ 8 ກມ. ຊາວບ້ານສ່ວນໜຶ່ງນັບຖືສາດສະໜາພຸດ ແລະສ່ວນໜຶ່ງແມ່ນນັບຖືຜີ. ບ້ານນີ້ມີພົນລະເມືອງທັງໝົດຈຳນວນ 425 ຄົນ (ແມ່ຍິງ 215 ຄົນ), ມີ 73 ຫຼັງຄາ ແລະ 73 ຄອບຄົວ, ມີ ລັດຖະກອນ 16 ຄົນ. ຢູ່ໃນບ້ານນີ້ມີກົດລະບຽບບາງຢ່າງ ເຊັ່ນ: ຫ້າມທຳລາຍປ່າຊ້າ ແລະ ຫ້າມມ້າງເຮືອນຜີ (ຕູບນ້ອຍໆທີ່ເພິ່ນສ້າງຂື້ນໄວ້ໃຫ້ຜີຢູ່). ອາຊີບຕົ້ນຕໍຂອງຊາວບ້ານແມ່ນເຮັດນາ, ເຂົ້າໄຮ່ ແລະ ປູກພືດຜົນເປັນສິນຄ້າ. ໂດຍທົ່ວໄປແລ້ວ ຄວາມຮຸນແຮງ ຢູ່ໃນຄອບຄົວ ແມ່ນເກີດມາຈາກຄູ່ຜົວເມຍ ທີ່ບໍ່ມີຄວາມເຂົ້າອົກ ເຂົ້າໃຈ ຊຶ່ງກັນແລະກັນ.

## 10.3 ໝູ່ບ້ານໃນເມືອງສັງທອງ

**ບ້ານ ສຳພັນນາ**

ບ້ານນີ້ ໄດ້ຖືກສ້າງຕັ້ງມາດົນນານແລ້ວ ຈົນບໍ່ມີໃຜຈຳໄດ້ເລີຍວ່າປີໃດ. ຜູ້ທີ່ມາຢູ່ກ່ອນໝູ່ ແມ່ນຄົນເຜົ່າລາວລຸ່ມທີ່ຍ້າຍມາຈາກເມືອງເຟືອງ. ສາເຫດຂອງການຍ້າຍມາຢູ່ບ່ອນນີ້ຊອກພື້ນທີ່ເພື່ອທຳມາຫາກິນ, ປູກເຂົ້າ ແລະ ມາຮອດບ່ອນນີ້ ເຫັນວ່າຊັບພະຍາກອນທຳມະຊາດອຸດົມສົມບູນ ແລະ ມີແຫຼ່ງນ້ຳ, ດັ່ງນັ້ນຈຶ່ງພາກັນຕັດສິນໃຈຕັ້ງບ້ານຢູ່ບ່ອນນີ້. ບ້ານສຳພັນນາ ຫ່າງຈາກຕົວເມືອງ 26 ກມ ແລະ ມີຄວາມສະດວກສະບາຍສຳລັບການ ຄົມມະນາຄົມ ແລະ ການປູກຝັງ. ບ້ານສຳພັນນາ ມີ ພົນລະເມືອງ ທັງໝົດ ຈຳນວນ 1,539 ຄົນ (ແມ່ຍິງ 877 ຄົນ), 314 ຫຼັງຄາ ແລະ 351 ຄອບຄົວ. ການປູກເຂົ້າ ແມ່ນອາຊີບຕົ້ນຕໍຂອງຊາວບ້ານ. ແມ່ຍິງເກືອບໝົດທຸກຄົນຢູ່ໃນບ້ານນີ້ເຮັດນາ, ເຮັດສວນ ຄືກັນກັບຜູ້ຊາຍ ແລະນອກນັ້ນກໍ່ຍັງເຮັດວຽກເຮືອນການຊານເຊັ່ນ ເບິ່ງແຍງລູກ, ແຕ່ງຢູ່ຄົວກິນ, ປູກຜັກ, ເກືອສັດ, ແລະ ອື່ນໆ. ຕາມປະເພນີແລ້ວ, ປະຊາຊົນຢູ່ໃນບ້ານນັບຖືສາດສະໜາພຸດ. ສຳລັບຄວາມຮຸນແຮງຢູ່ໃນຄອບຄົວ, ຄົນສ່ວນໃຫຍ່ໃຫ້ການລາຍງານວ່າເຄີຍມີ ແລະ ມັນແມ່ນຍ້ອນຜົວເມົາເຫຼົ້າຫຼືວ່າຜົວບາງຄົນນອກໃຈເມຍຂອງຕົນ.

**ບ້ານ ໜອງບົວ**

ບ້ານ ໜອງບົວ ຖືກສ້າງຕັ້ງຂຶ້ນ ເມື່ອປີ 1910. ຊາວບ້ານກຸ່ມທຳອິດ ຍ້າຍມາຈາກທິດຕະເວັນອອກສ່ຽງເໜືອຂອງປະເທດໄທ (ອີສານ). ພວກເພິ່ນ ເລືອກເອົາສະຖານທີ່ນີ້ ເພາະວ່າມັນອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ນ້ຳ, ເຊິ່ງມັນແມ່ນພື້ນທີ່ ທີ່ດີສຳລັບການປູກເຂົ້າ. ຢູ່ໃນບ້ານນີ້ມີແຕ່ຊົນເຜົ່າດຽວເທົ່ານັ້ນຄື ເຜົ່າລາວລຸ່ມ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 21 ກມ, ມີພົນລະເມືອງທັງໝົດຈຳນວນ 263 ຄົນ (ແມ່ຍິງ 117 ຄົນ), 51 ຫຼັງຄາ ແລະ 58 ຄອບຄົວ. ປະຊາຊົນນັບຖືສາດສະໜາພຸດເປັນສ່ວນໃຫຍ່. ບ້ານນີ້ແບ່ງອອກເປັນ 4 ໜ່ວຍ ແລະ ມີແມ່ຍິງແຕ່ພຽງຄົນດຽວຢູ່ໃນຄະນະອຳນາດການປົກຄອງບ້ານ. ຢູ່ໃນບ້ານນີ້ການເຮັດນາ ແລະ ປູກເຂົ້າໄຮ່ ແມ່ນອາຊີບຕົ້ນຕໍ. ແມ່ຍິງທັງໝົດຢູ່ໃນບ້ານແມ່ນເຮັດນາ, ເຮັດໄຮ່ ແລະ ເຮັດວຽກເຮືອນການຊານ. ບັນຫາຕົ້ນຕໍທີ່ພົວພັນເຖິງຄວາມຮຸນແຮງຕໍ່ແມ່ຍິງ ຕາມທີ່ແມ່ຍິງໃນບ້ານລາຍງານແມ່ນເນື່ອງມາຈາກຄວາມບໍ່ເຂົ້າອົກເຂົ້າໃຈຊຶ່ງກັນ ແລະກັນ ລະຫວ່າງ ຄູ່ຜົວ-ເມຍ ຊຶ່ງເກີດຂຶ້ນ ຍ້ອນການຂາດເຂີນຢູ່ໃນຄອບຄົວ.

**ບ້ານ ນາປໍ**

ບ້ານນາປໍ ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1910. ໃນເບື້ອງຕົ້ນມີຄົນເຜົ່າລາວລຸ່ມຈຳນວນໜຶ່ງຍ້າຍມາຈາກບ້ານ ຫ້ວຍຕົມ. ເຫດຜົນໃນການຍົກຍ້າຍ ແມ່ນວ່າຢູ່ບ້ານເກົ່າຂອງເຂົາເຈົ້ານັ້ນມີເນື້ອທີ່ດິນຈຳກັດສຳລັບການປູກຝັງ, ແລະ ເຂົາເຈົ້າມີຄວາມຮູ້ສຶກວ່າຈະບໍ່ສາມາດຜະລິດສະບຽງອາຫານພຽງພໍສຳລັບຄອບຄົວ. ເມື່ອໄດ້ພົບສະຖານທີ່ໃໝ່ນີ້ເຕັມໄປດ້ວຍຊັບພະຍາກອນທຳມະຊາດ ແລະ ມີດິນດີສຳລັບການປູກເຂົ້າ, ດັ່ງນັ້ນຈິ່ງພາກັນຕັດສິນໃຈຕັ້ງບ້ານຢູ່ບ່ອນນີ້. ບ້ານນີ້ ມີແຕ່ພຽງເຜົ່າລາວລຸ່ມເຜົ່າດຽວເທົ່ານັ້ນ. ບ້ານນາປໍ ຕັ້ງຢູ່ຫ່າງຈາກຕົວເມືອງ 25 ກມ ແລະ ມີພົນລະເມືອງທັງໝົດ ຈຳນວນ 381 ຄົນ (ແມ່ຍິງ196 ຄົນ), 75 ຫຼັງຄາ ແລະ 70 ຄອບຄົວ. ປະຊາຊົນໃນບ້ານນັບຖືສາດສະໜາພຸດ. ບ້ານນີ້ແບ່ງອອກເປັນ 6 ໜ່ວຍ ແລະ ບໍ່ມີແມ່ຍິງຈັກຄົນ ຢູ່ໃນຄະນະ ອຳນາດ ການປົກຄອງບ້ານ.

**ບ້ານ ໄຮ່ໃຕ້**

ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນມາໄດ້ປະມານ 400 ປີ ແລ້ວ ເຊິ່ງແມ່ນເຜົ່າລາວພວນມາຢູ່ກ່ອນໝູ່ຍ້ອນ ໜີເສິກສົງຄາມມາຈາກ ແຂວງຊຽງຂວາງ. ໃນປັດຈຸບັນ, ບ້ານນີ້ ມີ 3 ຊົນເຜົ່າດ້ວຍກັນຄື: ເຜົ່າລາວພວນ, ເຜົ່າມົ້ງ ແລະ ເຜົ່າກຶມມຸ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ ປະມານ 5 ກມ. ຕາມປະເພນີແລ້ວ ຊາວບ້ານສ່ວນຫຼາຍນັບຖືສາດສະໜາພຸດ ແຕ່ກໍ່ມີສ່ວນໜຶ່ງເຊື່ອຖືຜີ. ມີ ພົນລະເມືອງທັງໝົດຈຳນວນ 986 ຄົນ ເກືອບເຄິ່ງໜຶ່ງແມ່ນ ແມ່ຍິງ (497 ຄົນ), 178 ຫຼັງຄາ ແລະ 198 ຄອບຄົວ. ບ້ານນີ້ແບ່ງອອກເປັນ 15 ໜ່ວຍ, ບໍ່ມີແມ່ຍິງຈັກຄົນ ເປັນພະນັກງານບ້ານ. ເຊິ່ງຄືດຽວກັນກັບຢູ່ບ້ານອື່ນ, ກິດຈະກຳອັນຕົ້ນຕໍຂອງຊາວບ້ານ ແມ່ນການເຮັດໄຮ່ ແລະ ເຮັດນາ. ແມ່ຍິງທັງໝົດແມ່ນເຮັດວຽກທັງຢູ່ໄຮ່ຢູ່ນາ ແລະ ເຮັດວຽກເຮືອນການຊານ. ນອກນີ້, ຊາວບ້ານຍັງປູກພືດຜົນທີ່ເປັນສິນຄ້າເປັນຕົ້ນໝາກແຕງ, ໝາກເຜັດ ແລະ ໝາກນັດ. ບັນຫາ ຂອງ ແມ່ຍິງ ຢູ່ໃນບ້ານນີ້ ແມ່ນຄວາມບໍ່ເຂົ້າອົກເຂົ້າໃຈກັນ ລະຫວ່າງຄູ່ຜົວເມຍຍ້ອນບັນຫາຂາດເຂີນຢູ່ໃນຄອບຄົວ.

**ບ້ານ ທ່ານາຂາມ**

ບ້ານ ທ່ານາຂາມ ໄດ້ຖືກສ້າງຕັ້ງມາໄດ້ຫຼາຍກວ່າ 100 ປີ ມາແລ້ວ. ຜູ້ທີ່ມາຢູ່ທຳອິດ ແມ່ນຄົນເຜົ່າລາວພວນ ເຊິ່ງຍ້າຍມາຈາກແຂວງຊຽງຂວາງ ຍ້ອນໜີເສິກສົງຄາມ. ໃນປັດຈຸບັນ, ບ້ານນີ້ມີ 2 ຊົນເຜົ່າດ້ວຍກັນຄື: ເຜົ່າລາວພວນ ແລະ ເຜົ່າກຶມມຸ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງປະມານ 2 ກມ ແລະ ມີພົນລະເມືອງທັງໝົດຈຳນວນ 523 ຄົນ (ແມ່ຍິງ 252 ຄົນ), 97 ຫຼັງຄາ ແລະ 100 ຄອບຄົວ. ບ້ານນີ້ ແບ່ງອອກເປັນ 58 ໜ່ວຍ ແລະ ບໍ່ມີແມ່ຍິງຈັກຄົນເປັນພະນັກງານບ້ານ. ກິດຈະກຳຕົ້ນຕໍຂອງຊາວບ້ານ ແມ່ນ ເຮັດນາ. ຈາກການສຳພາດປະຊາຊົນ ໄດ້ໃຫ້ການວ່າ ບັນຫາຄວາມຮຸນແຮງຢູ່ໃນຄອບຄົວ ບາງເທື່ອ ກໍ່ມີບັນຫາເກີດຂື້ນເນື່ອງມາຈາກຄວາມບໍ່ເຂົ້າອົກເຂົ້າໃຈຊຶ່ງກັນແລະກັນ ລະຫວ່າງ ຄູ່ຜົວເມຍ, ແຕ່ວ່າ ນີ້ມັນບໍ່ແມ່ນບັນຫາຕົ້ນຕໍສຳລັບເຂົາເຈົ້າ.

**ບ້ານ ເພຍລາດ**

ພວກຊົນເຜົ່າລາວລຸ່ມພູມ ໄດ້ສ້າງຕັ້ງບ້ານນີ້ມາໄດ້ຫຼາຍກວ່າ 115 ປີ ແລ້ວ. ຊົນເຜົ່ານີ້ຍ້າຍມາຈາກບ້ານ ທ່າທຸງ ເພາະພວກເຂົາເຈົ້າ ເຊື່ອວ່າຜີ ຢູ່ບ້ານເກົ່າເຂົາເຈົ້າຂໍ ກິນງົວ ກິນຄວາຍຫຼາຍໂພດ. ໃນປັດຈຸບັນ, ບ້ານນີ້ມີ 2 ຊົນເຜົ່າດ້ວຍກັນຄື: ເຜົ່າລາວພວນ ແລະ ເຜົ່າກຶມມຸ. ບ້ານນີ້ ຕັ້ງຢູ່ໃຈກາງເມືອງສັງທອງ. ປະຊາຊົນ ໃນບ້ານເກືອບໝົດທຸກຄົນ ນັບຖືສາດສະໜາພຸດ. ບ້ານ ເພຍລາດ ມີ ພົນລະເມືອງທັງໝົດຈຳນວນ 1,677 ຄົນ (ແມ່ຍິງ 839 ຄົນ), 314 ຫຼັງຄາ ແລະ 312 ຄອບຄົວ. ບ້ານນີ້ແບ່ງອອກເປັນ 21 ໜ່ວຍ, ມີຄະນະບໍລິຫານບ້ານ 12 ທ່ານ ແຕ່ວ່າບໍ່ມີແມ່ຍິງ ຈັກຄົນສັງກັດຢູ່ໃນນັ້ນ. ຢູ່ໃນບ້ານນີ້, ການປູກເຂົ້າ ແມ່ນອາຊີບຕົ້ນຕໍ ແລະ ການລ້ຽງສັດແມ່ນກິດຈະກຳສຳຮອງ. ແມ່ຍິງຢູ່ໃນບ້ານສ່ວນຫຼາຍ ແມ່ນເຮັດນາ ແລະ ຄ້າຂາຍຍ່ອຍຢູ່ຕະຫລາດຂອງບ້ານ, ນອກນັ້ນແມ່ຍິງຍັງຕ້ອງເຮັດວຽກເຮືອນການຊານນຳອີກ. ບັນຫາຂອງແມ່ຍິງ ໃນບ້ານນີ້ແມ່ນຄວາມບໍ່ເຂົ້າອົກເຂົ້າໃຈຊຶ່ງກັນແລະກັນ ລະຫວ່າງ ຜົວ-ເມຍ ທີ່ເກີດມາຈາກການຂາດເຂີນຢູ່ໃນຄອບຄົວ, ຫຼື ບາງຄົນກໍ່ເກີດມາຈາກຜົວເມົາເຫຼົ້າ ແລະ ຫຼິ້ນການພະນັນ.

**ບ້ານ ຫີນສິ່ວ**

ຄົນເຜົ່າກຳມຸ ເປັນຜູ້ທຳອິດທີ່ມາຢູ່ທີ່ນີ້ແຕ່ບໍ່ມີໃຜຮູ້ວ່າ ບ້ານນີ້ຖືກສ້າງຕັ້ງໃນປີໃດ. ໃນປັດຈຸບັນບ້ານນີ້ມີ 2 ຊົນເຜົ່າດ້ວຍກັນຄື ເຜົ່າກຶມມຸ ແລະ ເຜົ່າລາວລຸ່ມ. ບ້ານຫີນສິ່ວ ຕັ້ງຢູ່ຫ່າງຈາກຕົວເມືອງ 4 ກມ. ປະຊາຊົນໃນບ້ານ ເກືອບໝົດທຸກຄົນ ນັບຖືສາດສະໜາພຸດ. ບ້ານນີ້ພົນລະເມືອງທັງໝົດຈຳນວນ 579 ຄົນ (ແມ່ຍິງ 269 ຄົນ), 101 ຫຼັງຄາ ແລະ 105 ຄອບຄົວ. ບ້ານນີ້ໄດ້ແບ່ງອອກເປັນ 9 ໜ່ວຍ, ມີຄະນະບ້ານ 3 ທ່ານ, ແຕ່ວ່າໃນນັ້ນບໍ່ມີແມ່ຍິງຈັກຄົນສັງກັດຢູ່. ເນື່ອງຈາກວ່າບ້ານນີ້ຕັ້ງຢູ່ພື້ນທີ່ຕ່ຳ, ການປູກເຂົ້າ ຈຶ່ງແມ່ນອາຊີບຕົ້ນຕໍຂອງຊາວບ້ານ. ແມ່ຍິງຢູ່ໃນບ້ານມີຄວາມຮູ້ສຶກວ່າການດື່ມເຫຼົ້າ ແລະ ການຫຼິ້ນພະນັນ ຂອງຜົວແມ່ນສາເຫດຕົ້ນຕໍທີ່ພາໃຫ້ເກີດມີຄວາມຮຸນແຮງ ຢູ່ໃນຄອບຄົວ.

**ບ້ານ ປາກແທບ**

ບ້ານ ປາກແທບ ຖືກສ້າງຕັ້ງຂື້ນເມື່ອປີ 1982. ປະຊາຊົນໃນບ້ານນີ້ແມ່ນຄົນເຜົ່າລາວລຸ່ມ ແລະ ຍ້າຍມາຈາກບ້ານ ນາຕານ, ເນື່ອງຈາກວ່າບ້ານ ນາຕານ ມີທີ່ດິນຈຳກັດສຳລັບນຳໃຊ້ເພື່ອການປູກຝັງ ແລະ ພວກເຂົາ ມີຄວາມຮູ້ສຶກວ່າພວກເຂົາຈະບໍ່ສາມາດຜະລິດສະບຽງອາຫານໄດ້ພຽງພໍສຳລັບຄອບຄົວ. ໃນປັດຈຸບັນ, ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 12 ກມ, ມີພົນລະເມືອງທັງໝົດ ຈຳນວນ 531 ຄົນ (ແມ່ຍິງ 265 ຄົນ), 102 ຫຼັງຄາ ແລະ 104 ຄອບຄົວ. ປະຊາຊົນ ສ່ວນໃຫຍ່ ໃນບ້ານນີ້ ນັບຖື ສາດສະໜາພຸດ. ບັນຫາຕົ້ນຕໍທີ່ພົບເຫັນຢູ່ໃນບ້ານນີ້ແມ່ນວ່າບາງຄອບຄົວຍັງຂາດເຂີນ ເຊັ່ນວ່າ ບໍ່ມີ ອາຫານການກິນພຽງພໍສຳລັບຄອບຄົວ.

**ບ້ານ ນາສາວນາງ**

ບ້ານ ນາສາວນາງ ຖືກສ້າງຕັ້ງຂື້ນເມື່ອປີ 1987. ໃນເບື້ອງຕົ້ນແມ່ນຊົນເຜົ່າກຶມມຸ ຍ້າຍຈາກເມືອງນາຊາຍທອງມາຢູ່ທີ່ນີ້, ແຕ່ວ່າໃນປັດຈຸບັນບ້ານນີ້ ມີ 2 ຊົນເຜົ່າດ້ວຍກັນຄື ເຜົ່າກຶມມຸ ແລະ ເຜົ່າລາວລຸ່ມ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 9 ກມ, ມີ ພົນລະເມືອງທັງໝົດຈຳນວນ 344 ຄົນ (ແມ່ຍິງ 164 ຄົນ), 63 ຫຼັງຄາ ແລະ 79 ຄອບຄົວ. ປະຊາຊົນໃນບ້ານນີ້ນັບຖືສາດສະໜາພຸດ. ບ້ານນາສາວນາງ ແບ່ງອອກເປັນ 5 ໜ່ວຍ, ມີຄະນະປົກຄອງບ້ານ 3 ທ່ານ, ແຕ່ວ່າບໍ່ມີແມ່ຍິງຈັກຄົນສັງກັດຢູ່ໃນນັ້ນ. ຢູ່ໃນບ້ານນີ້, ການເຮັດນາແມ່ນອາຊີບຕົ້ນຕໍ ແລະ ສ່ວນອາຊີບສຳຮອງແມ່ນເຮັດໄຮ່, ເຮັດສວນ. ບັນຫາໃນບ້ານນີ້ແມ່ນບາງຄອບຄົວຍັງຂາດເຂີນສິ່ງທີ່ຈຳຢູ່ໃນຄອບຄົວ ແລະ ບັນຫາຄວາມຮຸນແຮງມັກເກີດເມື່ອຜົວດື່ມເຫຼົ້າເມົາ.

### 10.4 ໝູ່ບ້ານທີ່ແຂວງສະຫວັນນະເຂດ

**ບ້ານ ເຄືອເຂົາກາດ**

ບ້ານນີ້ ມີອາຍຸໄດ້ປະມານ 130 ປີ ແລ້ວ ແລະ ຖືກສ້າງຂື້ນໂດຍ ຊາວນາ ທີ່ອົບພະຍົບມາຈາກບ້ານໂພສີ ທີ່ຢູ່ໃກ້ໆກັນນີ້ມາເຫັນວ່າຢູ່ບ່ອນນີ້ມີດິນອຸດົມສົມບູນ ແລະໃຫ້ຜົນຜະລິດດີຫຼາຍ ດັ່ງນັ້ນຈຶ່ງຕັດສິນໃຈຍ້າຍມາຢູ່. ຊື່ຂອງບ້ານ ເຄືອເຂົາກາດ ເຊິ່ງມາຈາກບໍລິເວນນີ້ໄດ້ມີເຄືອເຂົາກາດຊຶ່ງເກີດຂື້ນຢ່າງຫຼວງຫຼາຍ ດັ່ງນັ້ນຈຶ່ງພາກັນເອີ້ນວ່າບ້ານເຄືອເຂົາກາດຈົນເຖິງທຸກວັນນີ້. ປະຊາຊົນສ່ວນໃຫຍ່ ແມ່ນຄົນເຜົ່າລາວລຸ່ມ ແລະ ນັບຖືສາດສະໜາພຸດ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງຄັນທະບູລີ ປະມານ 20 ກມ ໄປທາງທິດຕາເວັນອອກຂອງຕົວເມືອງ, ມີພົນລະເມືອງທັງໝົດຈຳນວນ 1,347 ຄົນ (ແມ່ຍິງ 692 ຄົນ), 218 ຫຼັງຄາ ແລະ 254 ຄອບຄົວ. ລັດຖະກອນທີ່ອາໃສຢູ່ໃນບ້ານນີ້ມີຈຳນວນ 27 ຄົນ, ໃນນີ້ມີແມ່ຍິງ 14 ຄົນ. ເພື່ອຄວາມສະດວກໃນການປົກຄອງ ເພິ່ນແບ່ງບ້ານນີ້ອອກເປັນ15 ໜ່ວຍພາຍໃຕ້ການດູແລຂອງ ຄະນະປົກຄອງບ້ານ 3 ທ່ານ, ແຕ່ວ່າບໍ່ມີແມ່ຍິງຈັກຄົນຢູ່ໃນທີມງານດັ່ງກ່າວ. ເນື່ອງຈາກວ່າປະຊາຊົນສ່ວນໃຫຍ່ນັບຖືສາດສະໜາພຸດ ບ້ານນີ້ຈຶ່ງມີວັດໜຶ່ງແຫ່ງ ແລະນອກຈາກນັ້ນຍັງມີກົດລະບຽບແລະຂໍ້ຫ້າມຕ່າງໆເຊັ່ນ: ຫ້າມບໍ່ໃຫ້ ບ່າວ ແລະ ສາວຢູ່ນອນນຳກັນກ່ອນແຕ່ງງານ ແລະຫ້າມເອົາຄົນຕາຍຢູ່ນອກບ້ານ ຫຼືຕາຍຢູ່ບ່ອນອື່ນເຂົ້າມາໃນບ້ານ. ຢູ່ໃນບ້ານນີ້ແມ່ຍິງ ແມ່ນຊາວໄຮ່ຊາວນາ ແລະ ຊາວສວນເປັນຕົ້ນຕໍ ແລະ ຍັງຕ້ອງຮັບຜິດຊອບວຽກເຮືອນການຊານນຳອີກ ເຊັ່ນ ເບິ່ງແຍງລູກ ແລະ ແຕ່ງຢູ່ຄົວກິນ. ກ່ຽວກັບຄວາມຮຸນແຮງ

ຢູ່ໃນ ຄອບຄົວໃນບ້ານນີ້ກໍ່ມີຫຼາຍຕົວຢ່າງ ຊຶ່ງເບິ່ງແລ້ວປາກົດວ່າມີສາເຫດມາຈາກຄວາມບໍ່ເຂົ້າອົກເຂົ້າໃຈກັນລະຫວ່າງ ຄູ່ຜົວ-ເມຍ ເຊັ່ນ: ຜູ້ຊາຍ ໄປມີເມຍນ້ອຍ ແລະ ໃຊ້ເວລາຢູ່ນອກເຮືອນ ໃນຂະນະທີ່ແມ່ຍິງເຮັດວຽກ.

**ບ້ານ ໂນນວິໄລ**

ບ້ານນີ້ ໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 1983 ເຊິ່ງຍ້າຍມາຈາກບ້ານ ເລົ່າໃຫຍ່ຊຶ່ງເປັນບ້ານແຄບ ແລະ ເປື້ອນເປີໃນເວລານັ້ນ ພອ້ມທັງມີຄວາມຫຍຸ້ງຍາກສໍາລັບການປູກຝັງ ແລະ ການຄົມມະນາຄົມ ດັ່ງນັ້ນຈິ່ງຕັດສິນໃຈຍ້າຍມາຢູ່ບ່ອນນີ້. ບ້ານໂນນວິໄລ ມີພົນລະເມືອງທັງໝົດ ຈໍານວນ 523 ຄົນ (ແມ່ຍິງ 278 ຄົນ) ປະກອບດ້ວຍ 70 ຫຼັງຄາ, 91 ຄອບຄົວ ແລະ ມີລັດຖະກອນທັງໝົດ 50 ຄົນ. ປະຊາຊົນໃນບ້ານນີ້ສ່ວນໃຫຍ່ ນັບຖືສາດສະໜາພຸດ. ທິດເໜືອຕິດກັບ ບ້ານ ເລົ່າໃຫຍ່ ແລະ ບ້ານ ໂພນນາຄູນ, ທິດໃຕ້ຕິດກັບທົ່ງນາບ້ານທົ່ງ, ທິດຕາເວັນອອກຕິດກັບບ້ານກຸດກະໂຊກ ແລະທິດຕາເວັນຕົກຕິດກັບ ບ້ານ ດອນໝີ ແລະ ບ້ານ ໜອງບົວທອງ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 15 ກມ. ແມ່ຍິງຢູ່ໃນບ້ານນີ້ ມີອາຊີບ ຕົ້ນຕໍແມ່ນ ເຮັດນາ. ຊາວໜຸ່ມ ຫຼາຍຄົນ ໄດ້ໜີໄປຫາວຽກເຮັດງານທໍາຢູ່ ປະເທດໄທ. ອໍານາດການປົກຄອງບ້ານ ເວົ້າວ່າຄວາມຮຸນແຮງຢູ່ໃນຄອບຄົວ ເກືອບໝົດທຸກກໍລະນີທີ່ເກີດຂຶ້ນແມ່ນ ເມື່ອເວລາຜູ້ຊາຍເມົາເຫຼົ້າ.

**ບ້ານ ທົ່ວເມືອງ**

ບ້ານນີ້ຫາກໍ່ໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 1997, ໂດຍແຍກມາຈາກບ້ານ ສະໜາມໄຊ ຊຶ່ງນັບມື້ນັບໃຫຍ່ຂຶ້ນຫຼາຍ ແລະຍາກທີ່ຈະປົກຄອງ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 3 ກມ ແລະ ແບ່ງອອກເປັນ6 ໜ່ວຍ, ມີ 128 ຫຼັງຄາ ແລະ 139 ຄອບຄົວ. ພົນລະເມືອງ ທັງໝົດ ມີ ຈໍານວນ 874 ຄົນ (ແມ່ຍິງ 425 ຄົນ), ລັດຖະກອນທັງໝົດມີ 44 ຄົນ. ຊາວບ້ານເກືອບທັງໝົດນັບຖືສາດສະໜາພຸດ ແລະ ມີວັດທະນະທໍາແບບລາວລຸ່ມ. ແມ່ຍິງສ່ວນໃຫຍ່ເປັນຊາວນາ ແລະ ນອກນີ້ຍັງຊອກຫາຜະລິດພັນຈາກປ່າ ແລະ ແຕ່ງຢູ່ຄົວກິນແຕ່ລະວັນ. ມີການລາຍງານວ່າ ຊາວໜຸ່ມບາງຄົນໄດ້ໜີໄປເຮັດວຽກຢູ່ປະເທດໃກ້ຄຽງ. ຄວາມຮຸນແຮງຢູ່ໃນຄອບຄົວແມ່ນຜູ້ຊາຍດື່ມເຫຼົ້າຫຼາຍ ແລະ ພາໃຫ້ເກີດບັນຫາ.

## 10.5 ໝູ່ບ້ານທີ່ແຂວງສາລະວັນ

**ບ້ານ ເລີນໂຫນ**

ບ້ານນີ້ ປະກອບດ້ວຍ 2 ຊົນເຜົ່າໃຫຍ່ຄື ເຜົ່າກະຕາງ ແລະ ເຜົ່າຕະໂອ້ຍ. ມັນແມ່ນບ້ານທີ່ເກົ່າແກ່ ແລະ ບໍ່ມີໃຜຮູ້ຂໍ້ມູນກ່ຽວກັບປະຫວັດສາດຂອງບ້ານນີ້. ບ້ານ ເລີນໂຫນ ມີພົນລະເມືອງທັງໝົດ ຈໍານວນ 229 ຄົນ (ແມ່ຍິງ 129 ຄົນ), 40 ຫຼັງຄາ. ລັດຖະກອນມີແຕ່ພຽງຄົນດຽວເທົ່ານັ້ນ. ບ້ານນີ້ແບ່ງອອກເປັນ 4 ໜ່ວຍ. ປະຊາຊົນຫຼາຍກວ່າ 50% ເຊື່ອຖືຜີ ແລະ ສ່ວນທີ່ເຫຼືອແມ່ນນັບຖືສາດສະໜາພຸດ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 23 ກມ, ບາງປະເພນີທີ່ຊາວບ້ານຍັງຍຶດຖືຢູ່ ເຊັ່ນບໍ່ອະນຸຍາດໃຫ້ຄົນນອກເຂົ້າໄປໃນຫ້ອງນອນ ແລະ ຄົນທີ່ຕາຍຢູ່ນອກບ້ານກໍ່ບໍ່ໃຫ້ເອົາຜ່ານເຂົ້າໄປໃນບ້ານ. ທີ່ດິນໃນບ້ານນີ້ຫຼາຍກວ່າເຄິ່ງໜຶ່ງແມ່ນນໍາໃຊ້ສໍາລັບປູກເຂົ້າໄຮ່ ແລະ ສ່ວນທີ່ເຫຼືອແມ່ນນໍາໃຊ້ສໍາລັບປູກກ້ວຍ ແລະ ໝາກຖົ່ວດິນ. ແມ່ຍິງເຮັດວຽກຢູ່ໄຮ່ຄືດຽວກັນກັບຜູ້ຊາຍແຕ່ວ່ານອກນີ້ຍັງຕ້ອງຮັບຜິດ

ຊອບວຽກເຮືອນການຊານນຳອີກ. ມາດຕະຖານຊີວິດການເປັນຢູ່ ຢູ່ໃນບ້ານນີ້ແມ່ນຕ່ຳຫຼາຍເນື່ອງຈາກວ່າຊາວບ້ານມີເຂົ້າກິນບໍ່ກຸ້ມປີ.

**ບ້ານ ແສນວັງນ້ອຍ**

ບ້ານນີ້ໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 1938 ເມື່ອເວລານັ້ນປະຊາຊົນໄດ້ຍ້າຍມາຈາກບ້ານແສນວັງເດີມຍ້ອນມີຫຼາຍຄົນໄດ້ເສຍຊີວິດຢູ່ພາຍໃນບ້ານ. ປະຈຸບັນນີ້, ມີ 2 ຊົນເຜົ່າໃຫຍ່ດ້ວຍກັນຄື ເຜົ່າຕະໂອ້ຍ ແລະ ເຜົ່າສ່ວຍ. ຊາວບ້ານສ່ວນໃຫຍ່ນັບຖືສາດສະໜາພຸດ. ບ້ານແສນວັງນ້ອຍ ຕັ້ງຢູ່ຫ່າງຈາກຕົວເມືອງ 27 ກມ ແລະ ມີພົນລະເມືອງທັງໝົດຈຳນວນ 598 ຄົນ (ແມ່ຍິງ 290 ຄົນ), 91 ຫຼັງຄາ ແລະ 96 ຄອບຄົວ. ບ້ານນີ້ແບ່ງອອກເປັນ 4 ໜ່ວຍ ແລະ ບໍ່ມີແມ່ຍິງຈັກຄົນສັງກັດຢູ່ໃນຄະນະບົກຄອງບ້ານ. ຊາວບ້ານເກືອບໝົດທຸກຄົນແມ່ນເຮັດນາ, ເຮັດໄຮ່. ຜູ້ຊາຍ ແລະ ແມ່ຍິງ ມີຄວາມຮັບຜິດຊອບເທົ່າທຽມກັນ ສຳລັບວຽກນີ້. ສາເຫດຕົ້ນຕໍຂອງຄວາມຮຸນແຮງຢູ່ໃນຄອບຄົວແມ່ນ ຄວາມຂາດເຂີນຢູ່ໃນຄອບຄົວ ເຊັ່ນ: ອາຫານ ການກິນບໍ່ພຽງພໍ, ສຸຂະພາບບໍ່ແຂງແຮງ ແລະອີກປະການໜຶ່ງແມ່ນຍ້ອນຜູ້ຊາຍໃນບ້ານນີ້ຍັງມັກເມົາເຫຼົ້າເລື້ອຍໆ ເມື່ອເມົາແລ້ວ ກໍ່ມັກຈະສ້າງຄວາມຮຸນແຮງ.

**ບ້ານ ດົງໂກະເໜືອ**

ບ້ານນີ້ໄດ້ຖືກສ້າງຕັ້ງຂຶ້ນ ເມື່ອປີ 1954, ໂດຍການຍ້າຍມາຈາກບ້ານເດີມຊຶ່ງຫ່າງໄກຈາກບ່ອນນີ້ປະມານ 1 ກມ, ສາເຫດການຍ້າຍ ຍ້ອນວ່າຢາກມາຢູ່ໃກ້ເສັ້ນທາງ ເພື່ອວ່າຈະສາມາດທຳການຄ້າຂາຍຕາມແຄມທາງໄດ້. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 24 ກມ, ແລະ ມີພົນລະເມືອງທັງໝົດ ຈຳນວນ 416 ຄົນ (ແມ່ຍິງ 216 ຄົນ), 57 ຫຼັງຄາ ແລະ 78 ຄອບຄົວ. ປະຊາຊົນໃນບ້ານນີ້ແມ່ນຊົນເຜົ່າ ກະຕາງ ຮີດຄອງປະເພນີແມ່ນເຊື່ອຖືຜີ. ກົດລະບຽບອັນໜຶ່ງຂອງບ້ານ ແມ່ນບໍ່ໃຫ້ເຮັດສຽງດັງໃນຍາມກາງຄືນ ແລະ ຫ້າມບໍ່ໃຫ້ໃຜຕົບມືຢູ່ໃນບ້ານ. ປະຊາຊົນໃນບ້ານນີ້ທຳການປູກຝັງ ເພື່ອຫາລ້ຽງຊີບແຕ່ວ່າແມ່ຍິງ ຍັງຕ້ອງເຮັດວຽກເຮືອນການຊານນຳອີກ. ຄວາມຮຸນແຮງໃນຄອບຄົວແມ່ນເກີດຂຶ້ນ ເລື້ອຍ ໆ ຍ້ອນຄວາມຂາດເຂີນສິ່ງທີ່ຈຳເປັນອັນພື້ນຖານເພື່ອການດຳລົງຊີວິດໂດຍລວມ.

**ບ້ານ ແບ່ງເຊເສັດ**

ບ້ານແບ່ງເຊເສັດ ມີແຕ່ພຽງຊົນເຜົ່າດຽວເທົ່ານັ້ນຄືເຜົ່າ ສ່ວຍ. ບ້ານນີ້ໄດ້ເລີ່ມສ້າງຕັ້ງບ້ານນີ້ຂຶ້ນເມື່ອປີ 1991; ເດີມແທ້ພວກເພິ່ນ ແມ່ນມາຈາກບ້ານ ນາເຕີ. ບ້ານນີ້ຕັ້ງຢູ່ໃກ້ກັບທົນທາງຊຶ່ງເປັນທີ່ຕັ້ງທີ່ດີສຳລັບ ການເຮັດທຸລະກິດ ແລະ ການຄ້າຊຶ່ງແມ່ນເຫດຜົນອັນໜຶ່ງທີ່ສຳຄັນທີ່ເຮັດໃຫ້ປະຊາຊົນຍ້າຍມາຢູ່ທີ່ນີ້. ຊາວບ້ານແບ່ງເຊເສັດນັບຖືສາດສະໜາພຸດ ແລະ ເຊື່ອຖືຜີ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 31 ກມ, ແລະ ມີພົນລະເມືອງທັງໝົດຈຳນວນ 202 ຄົນ (ແມ່ຍິງ 111 ຄົນ), ມີ 33 ຫຼັງຄາ ແລະ 33 ຄອບຄົວ. ບ້ານນີ້ໄດ້ແບ່ງອອກເປັນ 2 ໜ່ວຍ ແລະ ບໍ່ມີ ແມ່ຍິງຈັກຄົນສັງກັດຢູ່ໃນຄະນະບົກຄອງບ້ານ. ບ້ານນີ້ມີປະເພນີ ແລະ ກົດລະບຽບເປັນຂອງຕົນເອງ. ຕົວຢ່າງອັນໜຶ່ງແມ່ນວ່າພວກເພິ່ນບໍ່ອະນຸຍາດໃຫ້ຊາວບ້ານເອົາຄົນຕາຍ ຫຼື ຄົນທີ່ເຈັບໜັກຈາກບ້ານອື່ນເຂົ້າມາໃນບ້ານນີ້. ວຽກງານຕົ້ນຕໍຂອງຊາວບ້ານ ແມ່ນການເຮັດໄຮ່. ແມ່ຍິງ ເຮັດວຽກຫຼາຍ, ໂດຍສະເພາະແມ່ນວຽກເຮືອນການຊານ. ບັນຫາໃຫຍ່

ທີ່ໄດ້ພົບເຫັນກ່ຽວກັບສະພາບຂອງແມ່ຍິງແມ່ນວ່າ ແມ່ຍິງ ໂດຍທົ່ວໄປມີລູກຫຼາຍຄົນ, ແຕ່ວ່າພວກເພິ່ນບໍ່ມີຊັບພະຍາກອນພຽງພໍ ເພື່ອຈະສາມາດຕອບສະໜອງໄດ້ ຄວາມຕ້ອງການຂອງຄອບຄົວ.

**ບ້ານ ດອນຂາວ**

ບ້ານນີ້ໄດ້ຖືກສ້າງຕັ້ງຂື້ນ ເມື່ອປີ 1945. ທຳອິດມີຈຳນວນ 2 ຄອບຄົວ ຍ້າຍຈາກບ້ານດົງໂກະກາງ ສາເຫດຂອງການຍ້າຍມາທີ່ນີ້ ເພື່ອຢາກມີທີ່ດິນເພີ່ມເຕີມສຳລັບການເຮັດນາ. ໃນປັດຈຸບັນນີ້ບ້ານ ດອນຂາວ ມີພົນລະເມືອງທັງໝົດຈຳນວນ 208 ຄົນ (ແມ່ຍິງ 105 ຄົນ) 29 ຫຼັງຄາ ແລະ 36 ຄອບຄົວ. ປະຊາຊົນທັງໝົດໃນບ້ານແມ່ນຊົນເຜົ່າກະຕາງ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 22 ກມ, ແບ່ງອອກເປັນ 2 ໜ່ວຍ ແລະ ບໍ່ມີແມ່ຍິງຈັກຄົນສັງກັດຢູ່ໃນຄະນະປົກຄອງບ້ານ. ຊາວບ້ານນັບຖືຜີ ແລະ ກົດລະບຽບ ອັນໜຶ່ງຂອງບ້ານ ແມ່ນຫ້າມເດັດຂາດບໍ່ໃຫ້ແຕະຕ້ອງກອງຂອງບ້ານໃນຊ່ວງເວລາເຮັດພິທີ. ຊາວນາເກືອບໝົດທຸກຄົນເຮັດນາ ແລະ ແມ່ຍິງ ເຮັດວຽກຫຼາຍກວ່າຜູ້ຊາຍຫຼາຍ, ໂດຍສະເພາະແມ່ນວຽກເຮືອນການຊານ. ບັນຫາອັນຕົ້ນຕໍຂອງຊາວບ້ານແມ່ນມີລູກຫຼາຍໂພດ ແລະພາໃຫ້ແມ່ ພົບກັບຄວາມຫຍຸ້ງຍາກ ໃນການຕອບສະໜອງຄວາມ ຕ້ອງການ ອັນພື້ນຖານ ເພື່ອການດຳລົງຊີວິດ.

**ບ້ານ ລະນົງ**

ບ້ານນີ້ປະກອບມີ ສາມ ຊົນເຜົ່າດ້ວຍກັນ ຄື: ເຜົ່າກະຕູ, ເຜົ່າສ່ວຍ ແລະ ເຜົ່າຕະໂອ້ຍ. ຊາວບ້ານເຊື່ອຖືຜີ. ບ້ານນີ້ໄດ້ຖືກສ້າງຕັ້ງຂື້ນເມື່ອປີ 1982. ເດີມແທ້ຊາວບ້ານຍ້າຍມາຈາກບ້ານ ແສນວັງນ້ອຍ ແລະ ບ້ານ ນາເຕີ. ສາເຫດຂອງການຍ້າຍຍ້ອນສະພາບການຂາດເຂີນຂອງປະຊາຊົນ ເພາະເນື້ອທີ່ການຜລິດບໍ່ພຽງພໍ.

ບ້ານນີ້ ຕັ້ງຢູ່ ຫ່າງຈາກຕົວເມືອງ 36 ກມ ແລະ ມີ ພົນລະເມືອງທັງໝົດຈຳນວນ 374 ຄົນ (ແມ່ຍິງ 181 ຄົນ), 61 ຫຼັງຄາ ແລະ 68 ຄອບຄົວ. ບ້ານນີ້ແບ່ງອອກເປັນ 3 ໜ່ວຍ ແລະ ບໍ່ມີແມ່ຍິງຈັກຄົນສັງກັດຢູ່ໃນຄະນະປົກຄອງບ້ານ. ບັນຫາສັງຄົມອັນຕົ້ນຕໍອັນໜຶ່ງ ແມ່ນວ່າ ແຕ່ລະຄອບຄົວມີລູກຫຼາຍໂພດ, ສະນັ້ນ ແມ່ຍິງຕ້ອງເຮັດວຽກໜັກໃນການເຮັດນາ, ເຮັດໄຮ່ ແລະ ໃຊ້ເວລາທີ່ເຫຼືອຫາຟືນ, ຕັກນ້ຳ, ຕຳເຂົ້າ ແລະ ເບິ່ງແຍງລູກ. ອຳນາດການປົກຄອງບ້ານໄດ້ໃຫ້ຂໍ້ມູນວ່າມີຄວາມຮຸນແຮງໃນຄອບຄົວ ແຕ່ວ່າພວກເພິ່ນເຮັດຫຍັງບໍ່ໄດ້ເພາະວ່າສາເຫດຕົ້ນຕໍແມ່ນຍ້ອນສະພາບການຂາດເຂີນຢູ່ໃນຄອບຄົວ.

**ບ້ານ ລະວາງ**

ຢູ່ໃນບ້ານນີ້ມີ 3 ຊົນເຜົ່າດ້ວຍກັນຄື ເຜົ່າຕະໂອ້ຍ, ເຜົ່າອາລັກ ແລະ ເຜົ່າລາວລຸ່ມ. ບ້ານນີ້ມີອາຍຸໄດ້ຫຼາຍກວ່າ 60 ປີແລ້ວ. ເດີມແທ້ປະຊາຊົນຍ້າຍມາຈາກບ້ານ ນາເຕີ ເພາະວ່າປະຊາຊົນຕາຍຫຼາຍ ຈຶ່ງຈຳເປັນຕ້ອງຍ້າຍບ້ານເພື່ອຫາທີ່ຢູ່ໃໝ່. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 32 ກມ. ປະຊາຊົນຈຳນວນຫຼາຍກວ່າເຄິ່ງໜຶ່ງນັບຖືຜີ ແລະ ສ່ວນທີ່ເຫຼືອນັບຖືສາດສະໜາພຸດ. ພົນລະເມືອງທັງໝົດໃນບ້ານ ມີ 751 ຄົນ (ແມ່ຍິງ 375 ຄົນ), ມີ 131 ຫຼັງຄາ ແລະ 143 ຄອບຄົວ. ພືດຜົນທີ່ປູກສ່ວນໃຫຍ່ແມ່ນເຂົ້າ, ແລະ ລອງລົງມາແມ່ນກະເຟ. ພາຍໃນບ້ານປະກອບມີ 4 ໜ່ວຍ, ບ້ານໄດ້ມີກົດລະບຽບ ແລະຂໍ້ຫ້າມຂອງບ້ານເຊັ່ນວ່າ: ຫ້າມຕັດໄມ້ ຫຼືຂຸດຄົ້ນປ່າຊ້າ. ແມ່ຍິງ ແລະ ຜູ້ຊາຍເຮັດວຽກ

ຢ່າງສະເໝີພາບກັນໃນການເຮັດນາ, ເຮັດສວນແຕ່ວ່າສຳລັບວຽກເຮືອນການຊານນັ້ນ ສ່ວນໃຫຍ່ແມ່ນແມ່ຍິງເປັນຜູ້ເຮັດ. ສະພາບຊີວິດການເປັນຢູ່ຂອງປະຊາຊົນແມ່ນຍັງຂາດເຂີນ. ສາເຫດຕົ້ນຕໍຂອງຄວາມຮຸນແຮງຢູ່ໃນຄອບຄົວແມ່ນ ເມື່ອເວລາຜູ້ຊາຍເມົາເຫຼົ້າ ແລະ ບໍ່ຊ່ວຍແມ່ຍິງເຮັດວຽກຄອບຄົວ.

**ບ້ານ ຄຽງໂຄ້ງ**

ບໍ່ມີໃຜຮູ້ວ່າບ້ານນີ້ ມີອາຍຸໄດ້ຈັກປີແລ້ວ, ຮູ້ແຕ່ພຽງວ່າແມ່ນຊົນເຜົ່າແງະເປັນຜູ້ມາຢູ່ທຳອິດເຊິ່ງຍ້າຍມາຈາກເມືອງ ຕະໂອ້ຍ ມາຢູ່ທີ່ນີ້ກ່ອນໝູ່ສາເຫດຂອງການຍ້າຍແມ່ນເພື່ອຊອກຫາສະຖານທີ່ທຳການຜລິດ. ບ້ານ ຄຽງໂຄ້ງ ບໍ່ຫ່າງໃກສອກຫຼີກຫຼາຍປານໃດ ເມື່ອທຽບໃສ່ກັບບ້ານເດີມຂອງເຂົາເຈົ້າ. ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ 27 ກມ. ມີພົນລະເມືອງທັງໝົດ ໃນບ້ານ 514 ຄົນ (ແມ່ຍິງ 272 ຄົນ), ປະກອບມີ 79 ຫຼັງຄາ ແລະ 95 ຄອບຄົວ. ໃນບ້ານນີ້ມີ 2 ຊົນເຜົ່າດ້ວຍກັນຄື ເຜົ່າແງະ ແລະ ເຜົ່າຕະໂອ້ຍ. ແມ່ຍິງເກືອບໝົດທຸກຄົນແມ່ນເຮັດນາ, ເຮັດໄຮ່ ແລະ ເຮັດວຽກເຮືອນການຊານທັງໝົດ. ບ້ານນີ້ມີບາງຮີດຄອງປະເພນີເຊັ່ນດຽວກັນ ເຊັ່ນຖ້າວ່າ ແມ່ຍິງ ຖືພາກ່ອນແຕ່ງງານຕ້ອງໄດ້ເສຍຄວາຍ ໃຫ້ແກ່ອຳນາດການປົກຄອງບ້ານ. ມີບັນຫາເກີດຂື້ນເລື້ອຍໆ ທີ່ວ່າຜູ້ຊາຍບໍ່ສາມາດຄ້ຳຊູຄອບຄົວຂອງຕົນໄດ້ ແລະ ຄວາມສາມັກຄີລະຫວ່າງຄູ່ຜົວ-ເມຍ ກໍ່ບໍ່ມີຫຼາຍ.

**ບ້ານ ຄອນແລ້ງ**

ບ້ານນີ້ໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 1977 ແລະໃນເບື້ອງຕົ້ນມີແຕ່ພຽງ 11 ຄອບຄົວ ເທົ່ານັ້ນທີ່ຍ້າຍມາຈາກເມືອງຕະໂອ້ຍ. ໃນປັດຈຸບັນບ້ານນີ້ ມີ 3 ຊົນເຜົ່າ ຄື ເຜົ່າຕະໂອ້ຍ, ເຜົ່າແງະ ແລະ ເຜົ່າລາວລຸ່ມ. ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 33 ກມ. ປະຊາຊົນສ່ວນໃຫຍ່ ເຊື່ອຖືຜີ. ພົນລະເມືອງທັງໝົດ ມີ 254 ຄົນ (ແມ່ຍິງ 117 ຄົນ), ປະກອບມີ 36 ຫຼັງຄາແລະ 46 ຄອບຄົວ. ການເຮັດໄຮ່ ແລະ ປູກໝາກຖົ່ວດິນແມ່ນອາຊີບຕົ້ນຕໍຂອງປະຊາຊົນໃນທີ່ນີ້. ແມ່ຍິງທັງໝົດເຮັດວຽກຢູ່ໃນໄຮ່ກໍ່ຄືເບິ່ງແຍງລູກ ແລະ ແຕ່ງຢູ່ຄົວກິນ. ກົດລະບຽບອັນໜຶ່ງຂອງບ້ານແມ່ນວ່າຖ້າວ່າ ແມ່ຍິງ ຖືພາກ່ອນແຕ່ງງານຕ້ອງໄດ້ເສຍຄວາຍໃຫ້ແກ່ອຳນາດການປົກຄອງບ້ານ. ບັນຫາຕົ້ນຕໍຢູ່ໃນບ້ານນີ້ ແມ່ນວ່າ ແມ່ຍິງ ມີລູກຫຼາຍຄົນ.

**ບ້ານ ຜັກຂະ**

ບ້ານນີ້ ຕັ້ງຢູ່ຫ່າງຈາກຕົວເມືອງ 13 ກມ ແລະ ມີອາຍຸໄດ້ປະມານ 350 ປີ ແລ້ວ, ປະຊາຊົນບ້ານນີ້ ຍ້າຍມາຈາກບ້ານ ຜັກຂະ ເກົ່າ ແລະ ບ້ານ ໄລ່ນາວັນ. ໃນເບື້ອງຕົ້ນ, ບ້ານນີ້ ມີແຕ່ພຽງ 10 ຫຼັງຄາເຮືອນ ເທົ່ານັ້ນ, ດຽວນີ້ ມີ 83 ຫຼັງຄາ ແລະ 89 ຄອບຄົວ. ພົນລະເມືອງ ທັງໝົດ ໃນບ້ານ ມີ 470 ຄົນ (ແມ່ຍິງ 247 ຄົນ). ປະຊາຊົນ ໃນບ້ານນີ້ ເຊື່ອຖືຜີ ແລະ ນັບຖືສາດສະໜາພຸດ.

.ບ້ານ ສະພາດ

ບ້ານນີ້ຕັ້ງຢູ່ຫ່າງຈາກຕົວເມືອງ ປະມານ 10 ກມ. ຊາວບ້ານເດີມຍ້າຍມາຈາກພື້ນທີ່ພູດອຍທີ່ຢູ່ອ້ອມແອ້ມເຂດນີ້ ຍ້ອນວ່າຂາດທີ່ດິນເຮັດນາ, ເຮັດສວນຈຶ່ງພາກັນຍ້າຍມາບ່ອນນີ້. ໃນເບື້ອງຕົ້ນ, ປະມານ 105 ປີ ກ່ອນບ້ານນີ້ມີແຕ່ພຽງ 7 ຄອບຄົວເທົ່ານັ້ນ. ປັດຈຸບັນນີ້ມີ 148 ຫຼັງຄາ ແລະ 159 ຄອບຄົວ. ພົນລະເມືອງ ທັງໝົດມີຈຳນວນ 759 ຄົນ ໃນນີ້ແມ່ຍິງ 380 ຄົນ. ປະຊາຊົນເກືອບໝົດທຸກຄົນແມ່ນມາຈາກຊົນເຜົ່າລາວລຸ່ມ. ບາງຄົນກໍ່ມີຮີດຄອງປະເພນີ ເຊື່ອຖືຜີ ແລະ ບາງຄົນ ກໍ່ນັບຖືສາດສະໜາພຸດ. ຊາວບ້ານມີອາຊີບຕົ້ນຕໍແມ່ນເຮັດນາ ປູກເຂົ້າ, ສຳຮອງລົງມາແມ່ນການຕຳ່ຫູກສຳລັບກຸ່ມແມ່ຍິງ. ບັນຫາຕົ້ນຕໍສຳລັບແມ່ຍິງແມ່ນວ່າ ຜົວ ມັກເມົາເຫຼົ້າເລື້ອຍໆແລະພວກເພິ່ນມີຄວາມຮູ້ສຶກວ່າສະພາບຂາດເຂີນຢູ່ໃນຄອບຄົວ ເປັນສາເຫດທີ່ພາໃຫ້ເກີດມີຄວາມຮຸນແຮງ ລະຫວ່າງຄູ່ຜົວ-ເມຍຢູ່ໃນຄອບຄົວ.